ສຶກສາ-ກິລາ

# ຄູ່ມືຄູ

## ແຊກຊ້ອນການສຶກສາພົນລະເມືອງໂລກ ເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາຕອນປາຍ




ກະຊວງສຶກສາທິການ ແລະ ກິລາ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

2023

# ຄູ່ມືຄູ

# ແຊກຊ້ອນການສຶກສາພົນລະເມືອງໂລກ ເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາຕອນປາຍ


ຮຽບຮຽງໂດຍ: ພັນສອນ ທັນນະວົງ
ຊໍ່ເນັ່ງ ຢົງເນັ່ງຊົ່ງ
ເມັດແກ້ວ ພົມວົງສາ
ລຳມອນ ສີຊານົນ

ກວດແກ້ໂດຍ: ອານຸລົມ ວິໄລພອນ
ອ່ອນແກ້ວ ນວນນະວົງ
ອຸທິດ ທິບມະນີ
ແສງເງິນ ໄວຍາກອນ

ພິມເຂົ້າໜ້າໂດຍ: ເມັດແກ້ວ ພົງວົງສາ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2023

**ດ້ວຍການຮ່ວມມືກວດຜ່ານ ແລະ ປະກອບຄຳເຫັນຈາກ:**

ເດຊານຸລາດ ແສນດວງເດດ

ລີຈາວ ໄຊເຍຍຊ່າງ

ໄຊຍະເດດ ຊີງມີໄຊ

ວົງເດືອນ ໂອໃສ

ວິລາ ແສງສະຫວ່າງ

ທອງແດງ ສົມຈັນມະວົງ

ສຸກສັນ ໄຊຍະວົງ

ບົວເພັດ ອິນທະວົງ

ຂັນກາບ ພົງອຸດົມ

ວຽງອາທິດ ຂາວປະເສີດ

ແສງປະພາ ໂຫລານຸພາບ

ອິດທິດາ ຍັງນຸວົງ

# ຄຳນຳ

ປຶ້ມຄູ່ມືຄູແຊກຊ້ອນເນື້ອໃນສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາຕອນປາຍ ຮຽບຮຽງຂຶ້ນໂດຍອີງໃສ່ຫຼັກສູດວິຊາສຶກສາພົນລະເມືອງ ດ້ວຍການແຊກຊ້ອນເນື້ອໃນສຶກສາພົນລະເມືອງໂລກເຂົ້າບາງເນື້ອໃນທີ່ມີຄວາມກ່ຽວຂ້ອງກັນ, ມີຈຸດປະສົງເພື່ອຊ່ວຍຄູໃນການຈັດການຮຽນການສອນ ຊຶ່ງປະກອບມີ 2 ພາກຄື:

ພາກທີ I ແນະນຳລວມປະກອບມີ: ຄວາມເປັນມາ, ຈຸດປະສົງ, ວິທີການນຳໃຊ້ປຶ້ມຄູ່ມືຄູ.

ພາກທີ II ແນະນຳການສອນແຕ່ລະບົດ: ບົດທີ່ແຊກຊ້ອນ, ຈຸດປະສົງ, ເນື້ອໃນ, ສື່ການຮຽນການສອນ, ກິດຈະກຳການຮຽນການສອນ, ການວັດ ແລະ ປະເມີນຜົນ.

ປຶ້ມຄູ່ມືຄູເຫຼັ້ມນີ້ໄດ້ຮັບການສະໜັບສະໜູນຈາກສູນການສຶກສາເພື່ອຄວາມເຂົ້າໃຈສາກົນໃນພາກພື້ນອາຊີ-ປາຊີຟິກ (APCEIU) ພາຍໃຕ້ໂຄງການພັດທະນາຫຼັກສູດ ແລະ ແຊກຊ້ອນການສຶກສາພົນລະເມືອງໂລກຄັ້ງທີ 3 (2021-2023) ໄດ້ຮຽບຮຽງຂຶ້ນໂດຍວິຊາການພັດທະນາຫຼັກສູດ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ຄູ່ຮ່ວມງານຈາກພາກສ່ວນທີ່ກ່ຽວຂ້ອງລວມມີ ກົມຮ່ວມມືກັບຕ່າງປະເທດ, ກົມສ້າງຄູ, ກົມສາມັນສຶກສາ, ມະຫາວິທະຍາໄລແຫ່ງຊາດ, ພາຍໃຕ້ການໃຫ້ຄຳປຶກສາຈາກຊ່ຽວຊານຂອງສູນການສຶກສາເພື່ອຄວາມເຂົ້າໃຈສາກົນໃນພາກພື້ນອາຊີ-ປາຊີຟິກ (APCEIU).

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ຫວັງວ່າ ປຶ້ມເຫຼັ້ມນີ້ຈະເປັນປະໂຫຍດໃຫ້ແກ່ຄູ ແລະ ຜູ້ບໍລິຫານການສຶກສາ. ເຖິງຢ່າງໃດກໍຕາມ, ການຮຽບຮຽງປຶ້ມເຫຼັ້ມນີ້ ກໍຄົງບໍ່ປາສະຈາກຂໍ້ຂາດຕົກບົກພ່ອງໄດ້. ສະນັ້ນ, ຈຶ່ງຂໍຮ່ວມມືນຳທ່ານຜູ້ທີ່ນຳໃຊ້ປຶ້ມເຫຼັ້ມນີ້ ຈົ່ງຊ່ວຍເບິ່ງຈຸດບົກພ່ອງ ຫຼື ຈຸດຜິດພາດ ແລ້ວສົ່ງຄຳຄິດເຫັນຂອງທ່ານໄປຍັງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. ພວກເຮົາຈະຖືວ່າທຸກຄຳຄິດເຫັນຂອງທ່ານເປັນຂໍ້ມູນທີ່ມີຄຸນຄ່າ ແລະ ເປັນການຊ່ວຍປັບປຸງແກ້ໄຂ ເຮັດໃຫ້ການພິມເນື້ອໃນຄັ້ງຕໍ່ໄປມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

## ສາລະບານ

**I. ແນະນຳລວມ....................................................................................1**

1. ຄວາມເປັນມາ....................................................................................1
2. ຈຸດປະສົງ.........................................................................................2
3. ວິທີການນຳໃຊ້ຄູ່ມື...............................................................................2
4. ກ່ຽວກັບສຶກສາພົນລະເມືອງໂລກ (GCED)....................................................3
5. ຂອບຫຼັກສູດການແຊກຊ້ອນສຶກສາພົນລະເມືອງໂລກ (GCED)............................4
6. ຫຼັກການສອນ.....................................................................................6
7. ການຈັດການຮຽນການສອນ.....................................................................8
8. ສື່ການຮຽນການສອນ............................................................................9
9. ການວັດ ແລະ ປະເມີນຜົນ.......................................................................9

**II. ແນະນຳການສອນແຕ່ລະບົດ..................................................................11**

**1. ຊັ້ນມັດທະຍົມສຶກສາ ປີທີ 5....................................................................11**

ບົດທີ 4 ຕົ້ນກຳເນີດການເຄື່ອນເໜັງການຂະຫຍາຍຕົວຂອງໂລກວັດຖຸ..................12

ບົດທີ 10 ຄວາມສຳນຶກກ່ຽວກັບຄຸນສົມບັດ......................................................18

ບົດທີ 11 ພັນທະພື້ນຖານ ແລະ ຄຸນສົມບັດ......................................................23

ບົດທີ 12 ການພັດທະນາຕົນເອງໃຫ້ສົມບູນ......................................................30

ບົດທີ 14 ຊຸມຊົນ..........................................................................................36
ບົດທີ 16 ບາງບັນຫາຈະຕ້ອງແກ້ໄຂໃນສັງຄົມໂລກ........................................40
**2. ຊັ້ນມັດທະຍົມສຶກສາ ປີທີ 6.......................................................................46**
ບົດທີ 7 ການສ້າງເສດຖະກິດຫຼາຍພາກສ່ວນ ແລະ ເພີ່ມທະວີບົດບາດການຄຸ້ມຄອງຂອງລັດ ..47
ພາກທີ II ຄວາມຮູ້ພື້ນຖານກ່ຽວກັບການເມືອງ, ວັດທະນະທຳ-ສັງຄົມ....................55
ບົດທີ 8 ລັດທິສັງຄົມນິຍົມ.............................................................................. 55
ບົດທີ 9 ລັດສັງຄົມນິຍົມ..................................................................................62
ບົດທີ 10 ສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ...........................71
ບົດທີ 11 ນະໂຍບາຍດ້ານປະຊາກອນ ແລະ ການແກ້ໄຂວຽກເຮັດງານທຳ..............75
ບົດທີ 12 ນະໂຍບາຍດ້ານຊັບພະຍາກອນ ແລະ ການປົກປັກຮັກສາສິ່ງແວດລ້ອມ....82
ບົດທີ 13 ນະໂຍບາຍການສຶກສາ, ວິທະຍາສາດເຕັກໂນໂລຊີ ແລະ ວັດທະນະທຳ...91
**3. ຊັ້ນມັດທະຍົມສຶກສາ ປີທີ 7.......................................................................99**
ບົດທີ 2 ການປະຕິບັດກົດໝາຍ......................................................................100
ບົດທີ 4 ກົດໝາຍຕໍ່ກັບການພັດທະນາປະເທດຊາດ..........................................110
ບົດທີ 5 ກົດໝາຍຕໍ່ກັບສັນຕິພາບ ແລະ ການພັດທະນາຄວາມກ້າວໜ້າຂອງມວນມະນຸດ 119
ພາກທີ II ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ.......................................131
ບົດທີ 6 ສິດສະເໝີພາບຂອງພົນລະເມືອງໃນຂົງເຂດຊີວິດສັງຄົມ........................131
ບົດທີ 8 ສິດສະເໝີພາບລະຫວ່າງບັນດາຊົນເຜົ່າ ແລະ ສາສະໜາ.......................139

# I. ແນະນຳລວມ

## 1. ຄວາມເປັນມາ

ໂລກປັດຈຸບັນແມ່ນໂລກແຫ່ງຍຸກໂລກາພິວັດ ຊຶ່ງມີການປ່ຽນແປງທາງດ້ານເສດຖະກິດ, ການເມືອງ, ສັງຄົມ ແລະ ວັດທະນະທຳ ຫຼາຍປະເທດໄດ້ຮັບຜົນກະທົບຈາກການຫັນເປັນອຸດສາຫະກຳ, ການຫັນເປັນຕົວເມືອງ, ວິທະຍາສາດສະໄໝໃໝ່, ການປະຕິວັດດີຈິຕອນໄດ້ຫັນປ່ຽນໂຄງລ່າງພື້ນຖານ, ການຂົນສົ່ງ, ການສື່ສານ ແລະ ຄວາມກ້າວໜ້າທາງດ້ານເຕັກໂນໂລຊີກຳລັງນຳເຂົ້າສູ່ການປະຕິວັດອຸດສາຫະກຳຄັ້ງທີສີ່. ຈາກການປ່ຽນແປງດັ່ງກ່າວເຮັດໃຫ້ເກີດມີບັນຫາຕ່າງໆຕາມມາ ເຊັ່ນ: ໂລກລະບາດ, ສົງຄາມ, ການລະເມີດສິດທິມະນຸດ, ບັນຫາສິ່ງແວດລ້ອມ, ໂລກບໍ່ມີພົມແດນ ແລະ ອື່ນໆ. ຕົວຢ່າງ ບັນຫາການລະບາດຂອງພະຍາດໂຄວິດ-19 ເຖິງວ່າເລີ່ມຕົ້ນຈະເກີດໃນເຂດໃດໜຶ່ງ ແຕ່ມັນໄດ້ຂະຫຍາຍພ້ອມທັງສົ່ງຜົນກະທົບໄປທົ່ວປະເທດ, ພາກພື້ນ ແລະ ທົ່ວໂລກ. ຄວາມຂັດແຍ່ງ ແລະ ຄວາມບໍ່ສະເໝີພາບທີ່ເພີ່ມຂຶ້ນເປັນສາເຫດທີ່ກໍ່ໃຫ້ເກີດສົງຄາມ ເຖິງແມ່ນວ່າສົງຄາມລະຫວ່າງປະເທດຈະມີໜ້ອຍລົງກວ່າອະດີດທີ່ຜ່ານມາ ແຕ່ວ່າການປະທະກັນດ້ວຍກຳລັງປະກອບອາວຸດຢູ່ພາຍໃນປະເທດໄດ້ເພີ່ມຂຶ້ນສິ່ງນີ້ໄດ້ສົ່ງຜົນໃຫ້ຈຳນວນຜູ້ອົບພະຍົບ ແລະ ຜູ້ເຄື່ອນຍ້າຍຖິ່ນຖານພາຍໃນປະເທດເພີ່ມຂຶ້ນຢ່າງຫຼວງຫຼາຍ. ນອກນັ້ນ, ຍັງມີຄວາມຮຸນແຮງໃນຮູບແບບອື່ນ ເຊັ່ນ: ຄວາມຮຸນແຮງໃນຄອບຄົວ, ການກໍ່ອາຊະຍາກຳ, ການທາລຸນເດັກ, ການຂົ່ມເຫັງລວມທັງຊ່ອງທາງອິນເຕີເນັດທີ່ກຳລັງເປັນບັນຫາທີ່ເພີ່ມຂຶ້ນຢູ່ໃນຫຼາຍສັງຄົມ ຊຶ່ງເຮັດໃຫ້ເກີດປາກົດການຫຍໍ້ທໍ້ຕ່າງໆ ໂດຍສະເພາະແມ່ນດ້ານການສຶກສາທີ່ບໍ່ສາມາດບັນລຸໄດ້ຕາມໂຄງການຫຼັກສູດເຮັດໃຫ້ປະສິດທິພາບຂອງການຮຽນການສອນຫຼຸດລົງ ຍ້ອນການຮຽນບໍ່ປົກກະຕິ, ການພົວພັນທາງສັງຄົມຖືກຈຳກັດ, ຂາດເງື່ອນໄຂດ້ານປັດໄຈສີ່ທີ່ສົ່ງຜົນໃຫ້ຂາດໂອກາດທາງການສຶກສາ ແລະ ບັນຫາອື່ນໆ.

ສປປ ລາວ ກໍເປັນປະເທດໜຶ່ງທີ່ໄດ້ຮັບຜົນກະທົບຈາກການປ່ຽນແປງດັ່ງກ່າວເປັນຕົ້ນແມ່ນການຫັນເປັນອຸດສາຫະກຳ, ການຫັນເປັນຕົວເມືອງ, ວິທະຍາສາດສະໄໝໃໝ່, ການປະຕິວັດດີຈິຕອນໄດ້ຫັນປ່ຽນໂຄງລ່າງພື້ນຖານ, ການຂົນສົ່ງ, ການສື່ສານ ແລະ ຄວາມກ້າວໜ້າທາງດ້ານເຕັກໂນໂລຊີກຳລັງນຳເຂົ້າສູ່ການປະຕິວັດອຸດສາຫະກຳຄັ້ງທີສີ່. ສະນັ້ນ, ກະຊວງສຶກສາທິການ ແລະ ກິລາຈຶ່ງໄດ້ວາງນະໂຍບາຍການຈັດຕັ້ງປະຕິບັດການສຶກສາພົນລະເມືອງໂລກໃນສະຖານການສຶກສາ ເປັນບູລິມະສິດໜຶ່ງທີ່ສ້າງໂອກາດໃຫ້ຜູ້ຮຽນເຂົ້າເຖິງເນື້ອໃນຂອງຫຼັກສູດ, ສະພາບແວດລ້ອມການຮຽນ, ການປະຕິບັດການສອນ ແລະ ການປະເມີນຜົນ. ການ

ຈັດກິດຈະກຳການຮຽນການສອນການສຶກສາພົນລະເມືອງໂລກມີຫຼາຍຮູບແບບ ເຊັ່ນ: ສອດແຊກເຂົ້າໃນວິຊາສຶກສາພົນລະເມືອງເຂົ້າໃນຊັ້ນມັດທະຍົມສຶກສາ ໂດຍນຳໃຊ້ວິທີການຮຽນແບບມີສ່ວນຮ່ວມ, ຈັດກິດຈະກຳໃນວັນສຳຄັນຕ່າງໆຂອງໂລກ, ການປູກຈິດສຳນຶກ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ການສ້າງສາຍພົວພັນກັບໂຮງຮຽນແຫ່ງຕ່າງໆ.

ກະຊວງສຶກສາທິການ ແລະ ກິລາ ໄດ້ມອບໝາຍໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາຮ່ວມມືກັບສູນການສຶກສາເພື່ອຄວາມເຂົ້າໃຈສາກົນໃນພາກພື້ນອາຊີປາຊີຟິກ (APCEIU) ໃນການຈັດຕັ້ງປະຕິບັດໂຄງການພັດທະນາຫຼັກສູດແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນຫຼັກສູດວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກ ສາ ໂດຍການສ້າງຫຼັກສູດ ແລະ ປຶ້ມຄູ່ມືຄູເພື່ອປະກອບການຮຽນການສອນ.

## 2. ຈຸດປະສົງ

- ເພື່ອໃຫ້ຄູສອນນຳໃຊ້ໃນການຈັດການຮຽນການສອນທີ່ແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນຫຼັກສູດວິຊາສຶກສາພົນລະເມືອງຊັ້ນມັດທະຍົມສຶກສາຕອນປາຍ.
- ເພື່ອສ້າງຄ່ານິຍົມ ແລະ ປູກຝັງການເຄົາລົບສິດທິມະນຸດ, ຄວາມຍຸຕິທຳທາງສັງຄົມ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມຍືນຍົງທາງດ້ານສິ່ງແວດລ້ອມເຂົ້າໃນການຈັດການຮຽນການສອນແຊກຊ້ອນການສຶກສາພົນລະເມືອງໂລກສຳລັບຊັ້ນມັດທະຍົມສຶກສາຕອນປາຍ.

**ເພື່ອໃຫ້ຄູໄດ້**:

- ຮູ້ວິທີການແນະນຳຂໍ້ມູນ ແລະ ແນວຄວາມຄິດພື້ນຖານກ່ຽວກັບການແຊກຊ້ອນເນື້ອໃນຂອງການສຶກສາພົນລະເມືອງໂລກເຂົ້າໃນບົດທີ່ຈະສອດແຊກໄດ້.
- ສາມາດນຳໃຊ້ເນື້ອໃນ ແລະ ວິທີການກ່ຽວກັບການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ.
- ເຫັນຄຸນຄ່າ ແລະ ບົດບາດຂອງການເປັນພົນລະເມືອງໂລກ.

## 3. ວິທີການນຳໃຊ້ຄູ່ມື

### 1) ແນະນຳວິທີການນຳໃຊ້ແຕ່ລະພາກ

- ພາກທີ I ສາມາດນຳໃຊ້ເປັນຂໍ້ມູນອ້າງອີງທົ່ວໄປ ເພື່ອໃຫ້ຄູໄດ້ທຳຄວາມເຂົ້າໃຈກ່ຽວກັບສຶກສາພົນລະເມືອງໂລກ.
- ພາກທີ II ແມ່ນນຳໃຊ້ເນື້ອໃນບົດທີ່ແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນ

ວິຊາສຶກສາພົນລະເມືອງ ໂດຍມີເນື້ອໃນແຕ່ລະບົດທີ່ມີກິດຈະກຳການສອນ, ບົດບາດ, ສົມມຸດທີ່ແຕກຕ່າງກັນ.

**ໝາຍເຫດ**: ຖ້າຂໍ້ມູນໃນປຶ້ມຄູ່ມືຄູເຫຼັ້ມນີ້ບໍ່ພຽງພໍຄູສາມາດຄົ້ນຫາຂໍ້ມູນຕ່າງໆມາເພີ່ມເຕີມຈາກໜັງສືພິມ, ສື່ອິນເຕີເນັດ, ຢູທູບ... ສຳລັບໂຮງຮຽນທີ່ບໍ່ມີເງື່ອນໄຂທາງດ້ານອິນເຕີເນັດຄູສາມາດຊອກຫາອຸປະກອນທີ່ມີໃນທ້ອງຖິ່ນ, ການສ້າງບົດບາດສົມມຸດທີ່ສອດຄ່ອງ ແລະ ເໝາະສົມກໍສາມາດນຳມາໃຊ້ແທນໄດ້.

## 4. ກ່ຽວກັບສຶກສາພົນລະເມືອງໂລກ (Global Citizenship Education: GCED)

ການສຶກສາພົນລະເມືອງໂລກ (ສພລ ຫຼື GCED) ແມ່ນການສຶກສາແບບຫັນປ່ຽນທີ່ສາ ມາດພັດທະນາຄວາມຮູ້, ທັກສະ, ຄ່ານິຍົມ ແລະ ທັດສະນະຄະຕິທີ່ຈຳເປັນໃຫ້ແກ່ນັກຮຽນເພື່ອສ້າງໃຫ້ໂລກມີຄວາມຍຸຕິທຳ, ມີສັນຕິພາບ ແລະ ມີຄວາມຍືນຍົງຫຼາຍຂຶ້ນ ໂດຍອີງໃສ່ຫຼັກການສາກົນດ້ານສິດທິມະນຸດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ບໍ່ມີການຈຳແນກ, ບໍ່ເລືອກປະຕິບັດ, ບໍ່ໃຊ້ຄວາມຮຸນແຮງ ແລະ ການເຄົາລົບຕໍ່ທຸກຄົນ. ການຫັນປ່ຽນທາງດ້ານແນວຄວາມຄິດທີ່ສອດຄ່ອງດ້ານການສຶກສາເພື່ອສ້າງຄວາມເຂົ້າໃຈ ແລະ ແກ້ໄຂບັນຫາຂອງໂລກທາງດ້ານສັງຄົມ, ການເມືອງ, ວັດທະນະທຳ, ເສດຖະກິດ ແລະ ສິ່ງແວດລ້ອມ.

ເພື່ອຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການໃຫ້ມີການສຶກສາທີ່ກ່ຽວຂ້ອງຫຼາຍຂຶ້ນໂດຍສຶກສາໃຫ້ພົນລະເມືອງມີສ່ວນຮ່ວມເລີ່ມຈາກການກະທຳສ່ວນຕົວ, ສັງຄົມຢ່າງຫ້າວຫັນ, ມີຄວາມຮັບຜິດຊອບໃນການພັດທະນາສັງຄົມ, ເຄົາລົບຄວາມຫຼາກຫຼາຍທາງດ້ານວັດທະນະທຳ, ສົ່ງເສີມຄວາມຮູ້ ແລະ ຄວາມເຂົ້າໃຈທີ່ສຳຄັນກ່ຽວກັບສາເຫດຂອງຄວາມຂັດແຍ່ງ. ເພື່ອສ້າງໂລກໃຫ້ມີຄວາມຍຸຕິທຳ, ສະຫງົບສຸກ, ຜ່ອນສັ້ນຜ່ອນຍາວ, ທົ່ວເຖິງ ແລະ ມີຄວາມຍືນຍົງໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ

ເນື້ອໃນທີ່ຈະສອນໃນການສຶກສາພົນລະເມືອງໂລກເປັນແນວທາງການສຶກສາແບບຫັນປ່ຽນ ເພື່ອສົ່ງເສີມຄ່ານິຍົມຕ່າງໆ ເຊັ່ນ: ຄວາມຍຸຕິທຳ, ການເຄົາລົບໃນຄວາມຫຼາກຫຼາຍ ແລະ ຄວາມສາມັກຄີເພື່ອມະນຸດສະທຳ, ທັງເປັນການຊຸກຍູ້ໃຫ້ຜູ້ຮຽນກາຍເປັນພົນລະເມືອງທີ່ຫ້າວຫັນ. ດັ່ງນັ້ນ, ເນື້ອໃນຫຼັກສຳລັບການສອນການສຶກສາພົນລະເມືອງໂລກປະກອບດ້ວຍສິດທິມະນຸດ, ສັນຕິພາບ ແລະ ຄວາມຂັດແຍ່ງ, ການເຄົາລົບຄວາມຫຼາກຫຼາຍ, ໂລກາພິວັດ, ການພັດທະນາແບບຍືນຍົງ ແລະ ສິດທິມະນຸດ.

ວິທີການສອນສຶກສາພົນລະເມືອງໂລກ (ສພລ) ແມ່ນອີງໃສ່ 6 ຫຼັກການສອນ ຄື: ການສົນທະນາ ແລະ ການມີສ່ວນຮ່ວມ, ການສອນແບບເຊື່ອມໂຍງ ແລະ ແບບກ່ຽວຂ້ອງກັບຄວາມຮູ້ຫຼາຍສາຂາ, ການສອນແບບວິທີທີ່ຫຼາກຫຼາຍ, ການສອນແບບການສ້າງຄ່ານິຍົມ, ການສອນແບບການສ້າງຄວາມເຂັ້ມແຂງທີ່ສຳຄັນ ແລະ ການສອນແບບສາມາດນຳໃຊ້ປະໂຫຍດໄດ້ ແລະ ມີຄວາມກ່ຽວຂ້ອງ (ຢູ່ໃນທ້ອງຖິ່ນ ແລະ ທົ່ວໂລກ). ການສອນສຶກສາພົນລະເມືອງໂລກ (ສພລ) ມີຍຸດທະສາດ ແລະ ວິທີການສອນຄື: ການທັບປ່ຽນການສອນທີ່ຈຳເປັນ ແລະ ການສອນສຶກສາພົນລະເມືອງໂລກ; ຄູເປັນຜູ້ອຳນວຍຄວາມສະດວກ, ການຮຽນຮູ້ແບບມີສ່ວນຮ່ວມ ແລະ ວິທີການສອນແບບສ້າງສັນ.

## 5. ຂອບຫຼັກສູດການແຊກຊ້ອນສຶກສາພົນລະເມືອງໂລກ (GCED)

- **ໂຄງສ້າງຫຼັກສູດ**

ຕາຕະລາງລຸ່ມນີ້ແມ່ນພາບລວມຂອງໂຄງສ້າງຫຼັກສູດທີ່ແຊກຊ້ອນເນື້ອໃນ ສພລ ເຂົ້າໃນວິຊາສຶກສາພົນລະເມືອງຂອງຊັ້ນມັດທະຍົມສຶກສາຕອນປາຍ.

**ໂຄງສ້າງຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍ**

| ຫົວຂໍ້ ສພລ ທີ່ແຊກຊ້ອນໃນຫຼັກສູດ | ມ. 5 | | | ມ.6 | | | ມ.7 | | |
|---|---|---|---|---|---|---|---|---|---|
| | ບົດທີ | ບົດທີ່ແຊກຊ້ອນ | ຊົ່ວໂມງ | ບົດທີ | ບົດທີ່ແຊກຊ້ອນ | ຊົ່ວໂມງ | ບົດທີ | ບົດທີ່ແຊກຊ້ອນ | ຊົ່ວໂມງ |
| ຫົວຂໍ້ທີ 1 | 11, 15 | 11 | 3 | 6, 7, 9 | 7 | 2 | | | |
| ຫົວຂໍ້ທີ 2 | 8, 16 | 16 | 3 | 1, 11, 12 | 12 | 2 | 5, 6, 8 | 8 | 5 |
| ຫົວຂໍ້ທີ 3 | 4, 7 | 4 | 2 | 8, 13 | 8 | 2 | | | |
| ຫົວຂໍ້ທີ 4 | 2, 10 | 10 | 2 | | | | | | |

| | | | | | | | | | |
|---|---|---|---|---|---|---|---|---|---|
| ຫົວຂໍ້ທີ 5 | 9, 14 | 14 | 2 | 3, 5, 10, 13 | 13 | 3 | 6, 8 | 6 | 7 |
| ຫົວຂໍ້ທີ 6 | | | | 10 | 10 | 2 | 5, 8 | 5 | 5 |
| ຫົວຂໍ້ທີ 7 | | | | | | | | | |
| ຫົວຂໍ້ທີ 8 | | | | 4, 8, 12, 9 | 9 | 3 | 1, 2, 7 | 2 | 7 |
| ຫົວຂໍ້ທີ 9 | 12 | 12 | 1 | 11 | 11 | 3 | 2, 3, 4, 9 | 4 | 8 |

- **9 ຫົວຂໍ້ຂອງ ສພລ (GCED)**:
  1. ລະບົບ ແລະ ໂຄງປະກອບໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ
  2. ບັນຫາທີ່ມີຜົນກະທົບຕໍ່ການພົວພັນ ແລະ ສາຍພົວພັນລະຫວ່າງຊຸມຊົນໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ
  3. ແນວຄິດພື້ນຖານ ແລະ ອິດທິພົນທາງອໍານາດ
  4. ລະດັບຄວາມແຕກຕ່າງດ້ານເອກະລັກຂອງຄວາມເປັນມະນຸດ
  5. ຄວາມແຕກຕ່າງ ແລະ ສາຍພົວພັນລະຫວ່າງຊຸມຊົນ
  6. ຄວາມແຕກຕ່າງ ແລະ ການເຄົາລົບຄວາມຫຼາກຫຼາຍ
  7. ການລົງມືປະຕິບັດທີ່ສາມາດດໍາເນີນການດ້ວຍຕົນເອງ ແລະ ຮ່ວມກັນ
  8. ພຶດຕິກໍາທີ່ມີຄວາມຮັບຜິດຊອບຢ່າງມີຈະລິຍະທໍາ
  9. ການເຂົ້າມາມີສ່ວນຮ່ວມ ແລະ ການລົງມືປະຕິບັດ

## 6. ຫຼັກການສອນ

ເພື່ອໃຫ້ບັນລຸເປົ້າໝາຍຂອງການສຶກສາພົນລະເມືອງໂລກ ຈະຕ້ອງໃຊ້ວິທີການສອນແບບທັນປ່ຽນໄປຕາມການປ່ຽນແປງໃນແຕ່ລະໄລຍະ ແລະ ພັດທະນາຫຼັກສູດໃຫ້ສອດຄ່ອງກັບພາກພື້ນ ແລະ ສາກົນ. ໃນນີ້ ໄດ້ນໍາສະເໜີຫຼັກການສອນສຶກສາພົນລະເມືອງໂລກທີ່ສໍາຄັນ 6 ຫຼັກການ ດັ່ງນີ້:

**ຫຼັກການສອນທີ 1: ການສົນທະນາ ແລະ ການມີສ່ວນຮ່ວມ**

ການຈັດຕັ້ງປະຕິບັດການສອນສຶກສາພົນລະເມືອງໂລກໃຫ້ໄດ້ດີທີ່ສຸດແມ່ນຄວນຈັດຢູ່

ພາຍໃຕ້ສະພາບແວດລ້ອມທີ່ເນັ້ນນັກຮຽນເປັນໃຈກາງ (Learner-centered) ຊຶ່ງນັກຮຽນ ແລະ ຄູສາມາດສົນທະນາບັນຫາ ແລະ ຮຽນຮູ້ສິ່ງຕ່າງໆຮ່ວມກັນ. ຄູຄວນມີສ່ວນຮ່ວມໃນການສົນທະນາກັບນັກຮຽນ ແລະ ຊຸກຍູ້ໃຫ້ພວກເຂົາມີສ່ວນຮ່ວມໃນການສົນທະນາຮ່ວມກັນ. ການສົນທະນາເປີດໂອກາດໃຫ້ນັກຮຽນໄດ້ແລກປ່ຽນຄວາມຄິດເຫັນຂອງຕົນ, ການຕັ້ງຄຳຖາມ, ການຮັບຟັງຄວາມຄິດເຫັນຂອງກັນ ແລະ ກັນ ທັງສະທ້ອນໃຫ້ເຫັນທັດສະນະໃໝ່ຫຼາຍອັນທີ່ພວກເຂົາໄດ້ຮຽນຮູ້. ໂດຍການຊຸກຍູ້ໃຫ້ນັກຮຽນມີສ່ວນຮ່ວມຢ່າງຫ້າວຫັນໃນຂະບວນການຮຽນຜ່ານການສົນທະນາກັບຄູ ແລະ ໝູ່ເພື່ອນ ສິ່ງເຫຼົ່ານີ້ຈະຊ່ວຍໃຫ້ພວກເຂົາເກີດການຮຽນຮູ້ໃນປະເດັນຕ່າງໆທີ່ພວກເຂົາກຳລັງຮຽນໃນຫ້ອງຮຽນໄດ້ຫຼາຍຂຶ້ນ.

**ຫຼັກການສອນທີ 2: ແບບເຊື່ອມໂຍງ ແລະ ແບບກ່ຽວຂ້ອງກັບການດຳລົງຊີວິດປະຈຳວັນ**

ການສຶກສາພົນລະເມືອງໂລກຮຽກຮ້ອງໃຫ້ມີການຮຽນຮູ້ແບບເຊື່ອມໂຍງ ຫຼື ຮຽນຮູ້ບັນຫາຈາກຫຼາຍມຸມມອງທີ່ແຕກຕ່າງກັນ ໂດຍໃຊ້ວິທີການຮຽນຮູ້ທີ່ຫຼາກຫຼາຍ. ວິທີທີ່ດີສຳລັບການຮຽນຮູ້ແບບເຊື່ອມໂຍງຮອບດ້ານແມ່ນການມີສ່ວນຮ່ວມກັບຊຸມຊົນ, ການຮຽນຮູ້ທີ່ກ້າວຂ້າມຂໍ້ຈຳກັດສະເພາະໃນຫ້ອງຮຽນ ໂດຍການໃຫ້ນັກຮຽນມີການພົວພັນ ແລະ ສົນທະນາກັບຜູ້ທີ່ມີຄວາມຮູ້ທີ່ແຕກຕ່າງກັນໃນທ້ອງຖິ່ນຂອງຕົນ. ພວກເຂົາຈະໄດ້ຮັບການຊຸກຍູ້ໃຫ້ເກີດການຄົ້ນຫາ, ການສ້າງຄວາມເຂົ້າໃຈ ແລະ ການເຄົາລົບນັບຖືເຊິ່ງກັນ ແລະ ກັນ. ຄູເປັນຜູ້ອຳນວຍຄວາມສະດວກ, ສາມາດສ້າງວິທີໃຫ້ນັກຮຽນເຂົ້າໃຈວ່າ ບັນຫາຕ່າງໆມີການເຊື່ອມໂຍງກ່ຽວຂ້ອງກັນແນວໃດ ເພື່ອເປີດກວ້າງທັດສະນະຂອງພວກເຂົາໄປສູ່ການສ້າງຄວາມເຂົ້າໃຈໂລກທີ່ຕົນອາໄສຢູ່.

**ຫຼັກການສອນທີ 3: ແບບວິທີທີ່ຫຼາກຫຼາຍ**

ຄູຄວນມີສ່ວນຮ່ວມກັບນັກຮຽນແບບເຊື່ອມໂຍງຮອບດ້ານ, ບໍ່ວ່າຈະເປັນທາງດ້ານຮ່າງກາຍ ແລະ ຈິດໃຈ. ດັ່ງນັ້ນ, ການໃຊ້ຍຸດທະສາດເຕັກນິກການຮຽນຮູ້ແບບຕ່າງໆທີ່ກ່ຽວຂ້ອງກັບປະສາດຮັບຮູ້ ເຊັ່ນ: ການເບິ່ງເຫັນ, ສຽງ, ກິ່ນ, ລົດຊາດ ແລະ ການສຳຜັດ, ໃນເວລາສອນຈຶ່ງເປັນສິ່ງສຳຄັນ. ຮູບແບບການຮຽນຮູ້ທີ່ສ້າງສັນເຫຼົ່ານີ້ ປະກອບດ້ວຍການໂຕ້ວາທີ, ການຈຳລອງເຫດການ, ສິລະປະກຳ, ການສະແດງບົດບາດສົມມຸດ ແລະ ການເລົ່າເລື່ອງດ້ວຍຮູບພາບ. ບັນດາເຕັກນິກເຫຼົ່ານີ້ຈະຊ່ວຍໃຫ້ນັກຮຽນເຂົ້າໃຈໃນສິ່ງທີ່ໄດ້ຮຽນຮູ້ເພາະພວກເຂົາມີສ່ວນຮ່ວມໃນຫຼາຍລະດັບທັງດ້ານຄວາມຮູ້, ພຶດຕິກຳ, ສັງຄົມ-ອາລົມ.

**ຫຼັກການສອນທີ 4: ການສ້າງຄ່ານິຍົມ**

ຄູບໍ່ຄວນແຕ່ສຸມໃສ່ການສອນກ່ຽວກັບຄວາມເປັນຈິງ, ຄວາມຮູ້ ແລະ ໃຫ້ຂໍ້ມູນກັບນັກຮຽນເທົ່ານັ້ນ ແຕ່ຍັງຊ່ວຍໃຫ້ພວກເຂົາໄດ້ພັດທະນາຄ່ານິຍົມຕ່າງໆ ເຊັ່ນ: ການເຫັນອົກເຫັນໃຈກັນ, ຄວາມຍຸຕິທຳ, ຄວາມເມດຕາ, ການເຄົາລົບຜູ້ອື່ນ ແລະ ການບໍ່ໃຊ້ຄວາມຮຸນແຮງ. ໃນຖານະເປັນຜູ້ອຳນວຍຄວາມສະດວກ, ຄູສາມາດສອນນັກຮຽນກ່ຽວກັບວິທີການກວດສອບຄ່ານິຍົມ ແລະ ຫຼັກການຕ່າງໆ, ວິທີການປະເມີນຄວາມຄາດຫວັງ ແລະ ການປະຕິບັດ/ການກະທຳຂອງຕົນ, ວິທີການພັດທະນາຄ່ານິຍົມ ແລະ ນິດໄສທີ່ດີ. ນັກຮຽນສາມາດນຳໃຊ້ຄວາມຮູ້ທີ່ໄດ້ຮຽນໃນຫ້ອງຮຽນໄປໃຊ້ເພື່ອປະໂຫຍດຕໍ່ສ່ວນລວມໄດ້ ຖ້າຫາກພວກເຂົາມີຄ່ານິຍົມ, ທັດສະນະຄະຕິ ແລະ ແນວຄວາມຄິດທີ່ຖືກຕ້ອງຕາມທີ່ໄດ້ຮັບການສົ່ງເສີມຈາກການສຶກສາພົນລະເມືອງໂລກ.

**ຫຼັກການສອນທີ 5: ການສ້າງຄວາມເຂັ້ມແຂງ**

ນັກຮຽນບໍ່ຄວນຮັບຮູ້ແຕ່ສະເພາະສະພາບການຂອງໂລກເທົ່ານັ້ນ ແຕ່ຍັງຕ້ອງສາມາດຕອບສະໜອງໄດ້ຕໍ່ກັບສິ່ງທ້າທາຍໃນລະດັບທ້ອງຖິ່ນ ແລະ ລະດັບຊາດ ໂດຍການລົງມືປະຕິບັດຕົວຈິງ ເຊັ່ນ: ຖ້ານັກຮຽນມີສ່ວນຮ່ວມໃນການເຄື່ອນໄຫວ ແລະ ຄວາມພະຍາຍາມໃນການສະແຫວງຫາວິທີແກ້ໄຂບັນຫາຕ່າງໆກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ການຄ້າມະນຸດໄດ້ຫຼາຍເທົ່າໃດ ພວກເຂົາຍິ່ງຮັບຮູ້ເຖິງບັນດາສາເຫດທີ່ກໍ່ໃຫ້ຄວາມບໍ່ສະເໝີພາບ ແລະ ຄວາມບໍ່ຍຸຕິທຳໄດ້ຫຼາຍເທົ່ານັ້ນ. ຄວາມຮູ້ເພີ່ມເຕີມກ່ຽວກັບບັນຫາເຫຼົ່ານີ້ຈະກະຕຸ້ນໃຫ້ນັກຮຽນກາຍເປັນຕົວແທນຂອງການປ່ຽນແປງໃນທາງບວກ, ໂດຍການນຳໃຊ້ຄວາມຮູ້, ທັກສະ ແລະ ຄ່ານິຍົມຂອງພວກເຂົາເຂົ້າມາມີບົດບາດຢ່າງຫ້າວຫັນໃນການປ່ຽນແປງຊຸມຊົນ, ທ້ອງຖິ່ນ, ຊາດ ແລະ ໂລກໃຫ້ດີຂຶ້ນ.

**ຫຼັກການສອນທີ 6: ສາມາດໃຊ້ປະໂຫຍດໄດ້ ແລະ ມີຄວາມກ່ຽວຂ້ອງ (ຢູ່ໃນທ້ອງຖິ່ນ ແລະ ທົ່ວໂລກ)**

ເພື່ອໃຫ້ນັກຮຽນກາຍເປັນຕົວແທນແຫ່ງການປ່ຽນແປງໃນອະນາຄົດທີ່ມີປະສິດທິພາບ ເນື້ອໃນການຮຽນຮູ້ຄວນອີງໃສ່ບັນຫາໃນຊີວິດຈິງ ແລະ ປະສົບການໂດຍກົງທີ່ຜ່ານການລົງມືປະຕິບັດ. ຄວາມຮູ້ ແລະ ທັກສະ ການປະຕິບັດທີ່ກ່ຽວຂ້ອງຈະຊ່ວຍໃຫ້ນັກຮຽນສາມາດນຳສິ່ງທີ່ພວກເຂົາໄດ້ຮຽນຮູ້ມາໝູນໃຊ້ເຂົ້າໃນຊີວິດປະຈຳວັນຂອງຕົນໄດ້.

## 7. ການຈັດການຮຽນການສອນ

ວິທີຈັດຕັ້ງການຮຽນການສອນກ່ຽວກັບການສຶກສາພົນລະເມືອງໂລກຈະໃຊ້ວິທີບູລະນາ

ການໃນວິຊາສຶກສາພົນລະເມືອງຂອງຊັ້ນມັດທະຍົມສຶກສາຕອນປາຍ ໂດຍເລີ່ມຈາກຊັ້ນ ມ.5-ມ.7 ຊຶ່ງພິຈາລະນາຈາກຜົນການວິເຄາະເນື້ອໃນຫຼັກສູດໂດຍສົມທຽບໃສ່ກັບ 9 ຫົວຂໍ້ຂອງການສຶກສາພົນລະເມືອງໂລກທີ່ສາມາດແຊກຊ້ອນຄວາມຮູ້ໃນແຕ່ລະຂັ້ນຕາມຄວາມເໝາະສົມ ໂດຍບໍ່ໄດ້ແຕະຕ້ອງເວລາທີ່ກຳນົດໄວ້ໃນຫຼັກສູດແຫ່ງຊາດ ພຽງແຕ່ຈັດບູລິມະສິດຫົວຂໍ້ທີ່ຈະແຊກຊ້ອນ ຫຼື ຮູບແບບກິດຈະກຳການສອນຄວາມຮູ້ໃນເລື່ອງນີ້ ເພື່ອໃຫ້ນັກຮຽນໄດ້ມີຄວາມຮູ້, ທັກສະ ແລະ ປັບປ່ຽນພຶດຕິກຳໄປໃນທາງບວກໂດຍເນັ້ນການຢູ່ຮ່ວມກັນໂດຍສັນຕິ, ບໍ່ຈຳແນກຄວາມແຕກຕ່າງ, ເຫັນຄຸນຄ່າ ແລະ ເຄົາລົບນັບຖືວັດທະນະທຳເຊິ່ງກັນ ແລະ ກັນ ຢູ່ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ.

ການສອນຄວາມຮູ້ກ່ຽວກັບສຶກສາພົນລະເມືອງຊັ້ນມັດທະຍົມສຶກສາຕອນປາຍ ສຳລັບຂັ້ນ ມ.5-ມ.6 ກຳນົດສອນ 1 ຊົ່ວໂມງຕໍ່ອາທິດ, 1 ສົກຮຽນມີ 34 ອາທິດ ລວມທັງໝົດເປັນ 34 ຊົ່ວໂມງ, ສຳລັບຂັ້ນ ມ.7 ກຳນົດສອນ 2 ຊົ່ວໂມງຕໍ່ອາທິດ, 1 ສົກຮຽນມີ 34 ອາທິດລວມທັງໝົດເປັນ 68 ຊົ່ວໂມງ.

## 8. ສື່ການຮຽນການສອນ

ການນຳໃຊ້ສື່ການຮຽນການສອນແມ່ນສິ່ງທີ່ຈຳເປັນສຳລັບການນຳໃຊ້ຫຼັກສູດ ເພື່ອສົ່ງເສີມຄວາມຮູ້ ແລະ ທັກສະຕ່າງໆຂອງນັກຮຽນໃຫ້ເປັນໄປຕາມຈຸດປະສົງທີ່ໄດ້ກຳນົດໄວ້ໃນຫຼັກສູດ. ສື່ການຮຽນການສອນປະກອບດ້ວຍປຶ້ມແບບຮຽນ, ຄູ່ມືຄູ, ປຶ້ມອ່ານເສີມ, ອຸປະກອນປະຈັກຕາ ແລະ ອື່ນໆ.

ນອກຈາກນີ້, ຄູມີຄວາມຈຳເປັນຕ້ອງໄດ້ຜະລິດສື່ການຮຽນການສອນເພີ່ມຕື່ມຕາມເນື້ອໃນຂອງແຕ່ລະບົດຮຽນໂດຍນຳໃຊ້ວັດສະດຸທີ່ຫາໄດ້ໃນທ້ອງຖິ່ນ. ຄູ ແລະ ຜູ້ອຳນວຍການໂຮງຮຽນໃນທົ່ວປະເທດມີໜ້າທີ່ຮັບຜິດຊອບໃນການຮັບປະກັນໃຫ້ໂຮງຮຽນຂອງຕົນມີອຸປະກອນ ຫຼື ແຫຼ່ງການຮຽນທີ່ພຽງພໍ ແລະ ຫຼາກຫຼາຍ ເພື່ອທີ່ຈະສາມາດບັນລຸຕາມຈຸດປະສົງ, ເນື້ອໃນຫຼັກສູດ ແລະ ຄວາມຕ້ອງການຂອງນັກຮຽນໃນທ້ອງຖິ່ນຂອງຕົນ. ຄູຄວນຄຳນຶງເຖິງການຜະລິດສື່ການຮຽນການສອນທີ່ມີຄວາມຍືນຍົງໂດຍອີງໃສ່ຄວາມຕ້ອງການຂອງນັກຮຽນ ແລະ ສາມາດດັດປັບອຸປະກອນເຫຼົ່ານັ້ນໄດ້ຕາມຄວາມເໝາະສົມ.

## 9. ການວັດ ແລະ ປະເມີນຜົນ

ການວັດຜົນ ໝາຍເຖິງການເກັບກຳຂໍ້ມູນຕ່າງໆ ຂອງນັກຮຽນຢູ່ໃນຂະບວນການຮຽນ

ການສອນໂດຍໃຊ້ເຄື່ອງມືຢ່າງໃດຢ່າງໜຶ່ງມາປະຕິບັດ.

ການປະເມີນຜົນ ໝາຍເຖິງການນຳເອົາຜົນຂອງການວັດຜົນການສຶກສາມາຕີລາຄາ ແລະ ວິນິດໄສ ແລ້ວຕັດສິນໃຈໂດຍອາໄສຫຼັກການຢ່າງໃດຢ່າງໜຶ່ງ.

ການວັດ ແລະ ການປະເມີນຜົນ ແມ່ນເປັນສ່ວນໜຶ່ງຂອງຂະບວນການຮຽນການສອນ ແລະ ເປັນຂໍ້ມູນທີ່ສຳຄັນໃນການປະເມີນຄວາມຄືບໜ້າທາງດ້ານການຮຽນຂອງນັກຮຽນຕາມມາດຕະຖານຜົນສຳເລັດທີ່ກຳນົດໄວ້.

**ວິທີການວັດຜົນ**:

- ການສັງເກດ ເຊັ່ນ: ແບບກວດສອບລາຍການ, ປະເມີນຕາມລະດັບ, ການປະເມີນແບບບັນທຶກ.
- ການສຳພາດ ເຊັ່ນ: ແບບສຳພາດຕາມຄຳຖາມ, ຄຳຖາມເຈາະຈີ້ມ.
- ການທົດສອບພາກປະຕິບັດ: ແບບທົດສອບພາກປະຕິບັດ.
- ການໃຊ້ແຟ້ມສະສົມຜົນງານ: ແບບປະເມີນຊຶ່ງມີເກນການໃຫ້ຄະແນນແບບຣູບຣິກ (Rubric).

**ວິທີການປະເມີນຜົນ**:

ສຳລັບນັກຮຽນ, ຜູ້ປົກຄອງ, ຄູ ແລະ ພາກສ່ວນທີ່ກ່ຽວຂ້ອງ ການປະເມີນຜົນການຮຽນມີສອງຮູບແບບ ຄື: ການປະເມີນເພື່ອປັບປຸງການຮຽນ ແລະ ການປະເມີນເພື່ອສະຫຼຸບຜົນການຮຽນ.

**1. ການປະເມີນເພື່ອປັບປຸງການຮຽນ (Formative Assessment)**

ການປະເມີນເພື່ອປັບປຸງການຮຽນແມ່ນການປະເມີນລະຫວ່າງການຮຽນທີ່ມີການດຳເນີນການຢ່າງຕໍ່ເນື່ອງຕະຫຼອດການຮຽນການສອນ ແລະ ເປັນການເກັບກຳຂໍ້ມູນການຮຽນຂອງນັກຮຽນຢ່າງບໍ່ເປັນທາງການດ້ວຍ. ໃນຂະນະທີ່ໃຫ້ນັກຮຽນປະຕິບັດກິດຈະກຳ, ຄູກໍສັງເກດ, ສອບຖາມ, ຈົດບັນທຶກແລ້ວວິເຄາະຂໍ້ມູນວ່ານັກຮຽນຮູ້, ເຂົ້າໃຈ ຫຼື ບໍ່ ຈະຕ້ອງໃຫ້ນັກຮຽນປັບປຸງຈຸດໃດ ຫຼື ຜູ້ສອນຈະຕ້ອງປັບປຸງຈຸດໃດ ເພື່ອໃຫ້ເກີດຄວາມກ້າວໜ້າໃນການຮຽນຕາມມາດຕະຖານຜົນສຳເລັດ. ການປະເມີນລະຫວ່າງການຮຽນດຳເນີນການໄດ້ຫຼາຍຮູບແບບ ເຊັ່ນ: ການໃຫ້ຂໍ້ແນະນຳ, ຂໍ້ສັງເກດໃນການນຳສະເໜີຜົນງານ, ການສົນທະນາລະຫວ່າງຜູ້ສອນກັບນັກຮຽນທັງແບບກຸ່ມ ແລະ ແບບລາຍບຸກຄົນ, ການສຳພາດເປັນຕົ້ນ.

ຜົນທີ່ໄດ້ຈາກການປະເມີນໃນຂະນະທີ່ຮຽນນີ້ ສາມາດຊ່ວຍໃຫ້ຄູຮູ້ວ່າ ຕົນເອງຄວນ

ປັບປຸງວິທີການສອນຂອງຕົນແນວໃດ ເພື່ອໃຫ້ນັກຮຽນທຸກຄົນບັນລຸຕາມຈຸດປະສົງການຮຽນໃຫ້ຫຼາຍທີ່ສຸດ.

**2. ການປະເມີນເພື່ອສະຫຼຸບຜົນການຮຽນ (Summative Assessment)**

ການປະເມີນເພື່ອສະຫຼຸບຜົນການຮຽນ ເປັນການປະເມີນທີ່ດຳເນີນການເມື່ອສິ້ນສຸດບົດຮຽນ ເພື່ອກວດສອບຜົນການຮຽນຂອງນັກຮຽນຕາມຕົວຊີ້ວັດ ແລະ ຍັງໃຊ້ເພື່ອເປັນຂໍ້ມູນໃນການປຽບທຽບກັບການປະເມີນກ່ອນຮຽນ, ການປະເມີນເພື່ອສະຫຼຸບຜົນການຮຽນຍັງໃຊ້ເພື່ອກວດສອບຜົນສຳເລັດຂອງນັກຮຽນຕອນທ້າຍພາກຮຽນ ຫຼື ທ້າຍປີຮຽນອີກດ້ວຍ. ການປະເມີນເພື່ອສະຫຼຸບຜົນການຮຽນສາມາດນຳໃຊ້ວິທີການ ແລະ ເຄື່ອງມືປະເມີນໄດ້ຢ່າງຫຼາກຫຼາຍ ແລະ ມັກດຳເນີນການຢ່າງເປັນທາງການຫຼາຍກວ່າການປະເມີນລະຫວ່າງການຮຽນ.

## II. ແນະນຳການສອນແຕ່ລະບົດ

**1. ຊັ້ນມັດທະຍົມສຶກສາ ປີທີ 5**

ການແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາ ປີທີ 5 ສາມາດແຊກຊ້ອນໄດ້ 6 ບົດ ຄື: ບົດທີ 4, 10, 11,12,14 ແລະ 16.

- ບົດທີ 4 ຊົ່ວໂມງທີ 2 ຫົວຂໍ້ທີ 3.2 ຂໍ້ຂັດແຍ່ງຕ້ອງແກ້ໄຂດ້ວຍການຕໍ່ສູ້ ໃຫ້ຄູນຳໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 1 ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 10 ຊົ່ວໂມງທີ 1 ຫົວຂໍ້ທີ 1.2 ຈຳແນກຄຸນລົມບັດກັບກົດໝາຍ ແລະ ຮີດຄອງປະເພນີ ໃຫ້ຄູນຳໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 2 ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 11 ຊົ່ວໂມງທີ 1 ຫົວຂໍ້ທີ 1 ຄວາມສຳນຶກກ່ຽວກັບພັນທະ ໃຫ້ຄູນຳໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 2 ແລະ 3 ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 12 ຫົວຂໍ້ທີ 1.2 ການຮັບຮູ້ຕົນເອງ ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ເຫຼັ້ມນີ້ສອນເລີຍ.
- ບົດທີ 14 ຊົ່ວໂມງທີ 2, ຫົວຂໍ້ທີ 2. ຄວາມຮັບຜິດຊອບຂອງພົນລະເມືອງຕໍ່ຊຸມຊົນ ໃຫ້ຄູນຳໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 1 ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 16 ຊົ່ວໂມງທີ 1 ຫົວຂໍ້ທີ 1 ການເສື່ອມໂຊມ ແລະ ການປົກປັກຮັກສາສະພາບແວດລ້ອມ ໃຫ້ຄູນຳໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 2 ແລະ 3 ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.

# ບົດທີ 4 ຕົ້ນກຳເນີດການເຄື່ອນເໜັງການຂະຫຍາຍຕົວຂອງໂລກວັດຖຸ

## ແຊກຊ້ອນເຂົ້າຫົວຂໍ້ທີ 3.2 ຂໍ້ຂັດແຍ່ງຕ້ອງແກ້ໄຂດ້ວຍການຕໍ່ສູ້

ເວລາ1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຂໍ້ຂັດແຍ່ງແມ່ນຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ.
- ອະທິບາຍຫຼັກການແກ້ໄຂຂໍ້ຂັດແຍ່ງ, ຫາສາເຫດທີ່ກໍ່ໃຫ້ເກີດຂໍ້ຂັດແຍ່ງປໍລະປັກກັນຢູ່ໃນຂົງເຂດຕ່າງໆ.
- ເຫັນຄຸນຄ່າຂອງຄວາມຫຼາກຫຼາຍ ເພື່ອສົ່ງເສີມວັດທະນະທຳແຫ່ງສັນຕິພາບສຳລັບທຸກຊຸມຊົນໃນທົ່ວໂລກ.
- ສະໜັບສະໜູນການແກ້ຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ, ເຈລະຈາ ແລະ ຊີ້ແຈງເຫດຜົນເພື່ອສົ່ງເສີມວັດທະນະທຳແຫ່ງສັນຕິພາບຂອງໂລກ ແລະ ເພື່ອຢູ່ຮ່ວມກັນຢ່າງສັນຕິ.

## II. ເນື້ອໃນ

ສິ່ງວັດຖຸ ແລະ ປາກົດການລ້ວນແຕ່ມີຂໍ້ຂັດແຍ່ງທີ່ແຕກຕ່າງກັນ, ຂໍ້ຂັດແຍ່ງທີ່ໄດ້ຮັບການພິຈາລະນາໄປແລ້ວພັດມີຂໍ້ຂັດແຍ່ງໃໝ່, ສິ່ງວັດຖຸໃໝ່, ປາກົດການໃໝ່ເກີດຂຶ້ນມາແທນ, ຂໍ້ຂັດແຍ່ງລ້ວນແຕ່ປະກອບມີຄວາມເປັນເອກະພາບ ແລະ ການຕໍ່ສູ້ລະຫວ່າງບັນດາດ້ານທີ່ກົງກັນຂ້າມໄດ້ເຮັດໃຫ້ສິ່ງວັດຖຸ ແລະ ປາກົດການບໍ່ສາມາດຮັກສາອາການເດີມໄວ້ໄດ້ ຜົນໄດ້ຮັບຈາກການຕໍ່ສູ້ລະຫວ່າງດ້ານກົງກັນຂ້າມແມ່ນຂໍ້ຂັດແຍ່ງເກົ່າໝົດໄປ, ຂໍ້ຂັດແຍ່ງໃໝ່ເກີດຂຶ້ນມາແທນ.

- ການຮັບຮູ້ສາເຫດທີ່ກໍ່ໃຫ້ເກີດຂໍ້ຂັດແຍ່ງໃນທຳມະຊາດ ແລະ ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກແມ່ນສິ່ງທີ່ສຳຄັນທີ່ສຸດເພາະວ່າຈະໄດ້ຫາວິທີແກ້ໄຂໃຫ້ຖືກຈຸດ, ຂໍ້ຂັດແຍ່ງມີຫຼາຍປະເພດເຊັ່ນ: ຂໍ້ຂັດແຍ່ງພາຍໃນ ແລະ ຂໍ້ຂັດແຍ່ງພາຍນອກ, ຂໍ້ຂັດແຍ່ງພື້ນຖານ ແລະ ຂໍ້ຂັດແຍ່ງຕົ້ນຕໍ, ຂໍ້ຂັດແຍ່ງ ປໍລະປັກ ແລະ ຂໍ້ຂັດແຍ່ງບໍ່ປໍລະປັກ. ບັນດາຂໍ້ຂັດແຍ່ງເຫຼົ່ານີ້ມີທີ່ຕັ້ງ ແລະ ມີຜົນກະທົບແຕກຕ່າງກັນດັ່ງນັ້ນໃນເມື່ອເກີດຂໍ້ຂັດແຍ່ງພວກເຮົາຕ້ອງຮູ້ວິເຄາະຫາສາເຫດຂອງມັນເພື່ອແກ້ໄຂຂໍ້ຂັດແຍ່ງເຫຼົ່ານັ້ນໄດ້ຢ່າງຖືກຕ້ອງ.

- ວິທີການແກ້ໄຂຂໍ້ຂັດແຍ່ງນີ້ຕ້ອງໃຊ້ການເຈລະຈາ, ຊີ້ແຈງຢ່າງມີເຫດຜົນ, ບໍ່ໃຊ້ຄວາມຮຸນແຮງເພື່ອປາບປາມ ຫຼື ບີບບັງຄັບເຮົາຕ້ອງສົ່ງເສີມວັດທະນະທຳແຫ່ງສັນຕິພາບ, ເຫັນຄຸນຄ່າຂອງຄວາມຫຼາກຫຼາຍທາງດ້ານວັດທະນະທຳ ສຳລັບທຸກຊຸມຊົນໃນທົ່ວໂລກເພື່ອຢູ່ຮ່ວມກັນຢ່າງສັນຕິ.
- ພວກເຮົາເປັນນັກຮຽນຕ້ອງຝຶກຝົນຕົນເອງໃຫ້ມີຄຸນລັກສະນະ, ຮູ້ຈຳແນກອັນໃດຖືກ, ອັນໃດຜິດ, ຮັບຟັງເຫດຜົນ, ມີຄວາມກ້າຫານຕຳນິສິ່ງຂ່າວຄົນອື່ນ ແລະ ຕ້ານປາກົດການຫຍໍ້ທໍ້ໃນສັງຄົມ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.5
2. ເຈ້ຍນ້ອຍສຳລັບຂຽນຂໍ້ຄວາມ
3. ເຈ້ຍແຜ່ນໃຫຍ່ສຳລັບຕິດເຈ້ຍຂໍ້ຄວາມ/ສະກັອດຕິດ

## IV. ກິດຈະກຳການຮຽນການສອນ

**ຊົ່ວໂມງທີ 2**

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

- ຄູໃຫ້ນັກຮຽນສົນທະນາກ່ຽວກັບການຕໍ່ສູ້ລະຫວ່າງສິ່ງກົງກັນຂ້າມເພື່ອທົບທວນຄວາມຮູ້ທີ່ຮຽນມາຕາມຄຳຖາມລຸ່ມນີ້:

  1) ຈົ່ງອະທິບາຍການຕໍ່ສູ້ລະຫວ່າງບັນດາດ້ານທີ່ກົງກັນຂ້າມມີຄືແນວໃດ?
- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເຂົ້າໃຈ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບການຕໍ່ສູ້ລະຫວ່າງສິ່ງກົງກັນຂ້າມ.
- ຄູອາດຈະໃຊ້ວິທີອື່ນກໍໄດ້ເພື່ອເປັນການທວນຄືນຄວາມຮູ້ ຫຼື ເພື່ອທົດແທນຄວາມຮູ້ໃໝ່.

**2. ສະເໜີບົດຮຽນໃໝ່: ຂໍ້ 3. ຂໍ້ຂັດແຍ່ງແມ່ນຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ.**

**ກ. ສົນທະນາກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ (15 ນາທີ)**

- ຄູໃຫ້ນັກຮຽນຈັບຄູ່ ຫຼື ເປັນໂຕະເພື່ອສົນທະນາກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ຂໍ້ທີ 3.1, ໜ້າ 39 ໃນປຶ້ມແບບຮຽນ, ຈາກນັ້ນຄູໃຫ້ແຕ່ລະໂຕະສັງລວມຄຳຕອບໃສ່

ເຈ້ຍ ແລະ ໃຫ້ຕາງໜ້າຄູລາຍງານຢູ່ໜ້າກະດານ.

**ຄໍາຖາມຄົ້ນຄວ້າ**:

1) ຈົ່ງອະທິບາຍການແກ້ໄຂຂໍ້ຂັດແຍ່ງມີຂະບວນການຄືແນວໃດ?

2) ຈົ່ງອະທິບາຍການຕໍ່ສູ້ລະຫວ່າງບັນດາດ້ານທີ່ກົງກັນຂ້າມກັນມີຄືແນວໃດ? ຈົ່ງຍົກຕົວຢ່າງ.

- ຄູໃຫ້ເວລາຄົ້ນຄວ້າ ແລະ ໃຫ້ຜູ້ຕາງໜ້າແຕ່ລະໂຕະລາຍງານ, ນັກຮຽນຜູ້ອື່ນປະກອບຄໍາເຫັນເພີ່ມເຕີມຖ້າມີຄໍາຕອບທີ່ຕ່າງກັນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບຄໍາຕອບເພື່ອໃຫ້ຖືກຕ້ອງດັ່ງນີ້.

**ຄໍາຕອບ**:

1) ສິ່ງວັດຖຸ ແລະ ປາກົດການມີຂໍ້ຂັດແຍ່ງຫຼາຍຢ່າງທີ່ແຕກຕ່າງກັນ ສະນັ້ນ, ຂະບວນການແກ້ໄຂແມ່ນຂໍ້ຂັດແຍ່ງທີ່ໄດ້ຮັບພິຈາລະນາແກ້ໄຂໄປແລ້ວ ພັດມີຂໍ້ຂັດແຍ່ງໃໝ່, ສິ່ງວັດຖຸໃໝ່ ຫຼື ປາກົດການໃໝ່ເກີດຂຶ້ນມາແທນອີກ.

2) ການຕໍ່ສູ້ລະຫວ່າງດ້ານທີ່ກົງກັນຂ້າມນັ້ນເຮັດໃຫ້ສິ່ງວັດຖຸ ແລະ ປາກົດການບໍ່ສາມາດຮັກສາອາການເດີມໄວ້ໄດ້, ຜົນໄດ້ຮັບຈາກການຕໍ່ສູ້ລະຫວ່າງດ້ານກົງກັນຂ້າມແມ່ນຂໍ້ຂັດແຍ່ງເກົ່າໝົດໄປ, ຂໍ້ຂັດແຍ່ງໃໝ່ເກີດຂຶ້ນມາແທນ ດັ່ງນັ້ນ, ການຕໍ່ສູ້ລະຫວ່າງບັນດາດ້ານທີ່ກົງກັນຂ້າມຈຶ່ງແມ່ນຕົ້ນກໍາເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ.

**ຕົວຢ່າງ**: ການຕໍ່ສູ້ລະຫວ່າງຊົນຊັ້ນຂ້າທາດ ແລະ ເຈົ້າທາດໄດ້ເຮັດໃຫ້ຊົນຊັ້ນເຈົ້າທາດດັບສູນໄປ, ຊົນຊັ້ນສັກດີນາເກີດຂຶ້ນແທນຈາກນັ້ນກໍມີຂໍ້ຂັດແຍ່ງລະຫວ່າງສັກດີນາກັບບ່າວນາຍເກີດຂຶ້ນໃໝ່.

**ຕົວຢ່າງ**: ຂໍ້ຂັດແຍ່ງທາງດ້ານສັງຄົມລະຫວ່າງສິນທໍາກັບອະທໍາ ແລະ ລະຫວ່າງອັນຖືກກັບອັນຜິດແມ່ນຂໍ້ຂັດແຍ່ງທີ່ກົງກັນຂ້າມກັນ, ການຕໍ່ສູ້ຂອງສອງດ້ານນີ້ ແມ່ນສິນທໍາຊະນະອະທໍາ, ອັນຖືກຊະນະອັນຜິດ.

**ຂ. ສົນທະນາກ່ຽວກັບຂໍ້ຂັດແຍ່ງຕ້ອງແກ້ໄຂດ້ວຍການຕໍ່ສູ້ (20 ນາທີ)**

- ຄູໃຫ້ນັກຮຽນຈັດເປັນກຸ່ມເພື່ອສົນທະນາກ່ຽວກັບຂໍ້ຂັດແຍ່ງຕ້ອງແກ້ໄຂດ້ວຍການຕໍ່ສູ້ຂໍ້ທີ 3.2 ໜ້າ 40 ໃນປຶ້ມແບບຮຽນ.

**ຄຳຖາມຄົ້ນຄວ້າ**:

1) ຈົ່ງອະທິບາຍຫຼັກການແກ້ໄຂຂໍ້ຂັດແຍ່ງມີຄືແນວໃດ?

2) ປະເພດຂອງຂໍ້ຂັດແຍ່ງມີຫຍັງແດ່?

3) ຂໍ້ຂັດແຍ່ງປໍລະປັກແມ່ນຫຍັງ? ວິທີແກ້ໄຂຂໍ້ຂັດແຍ່ງຄວນເຮັດແນວໃດ?

4) ນັກຮຽນຄວນມີວິທີການແກ້ໄຂແນວໃດເພື່ອຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ອາດ ຈະເກີດຂຶ້ນກັບຕົນເອງ?

- ຄູໃຫ້ແຕ່ລະກຸ່ມສະຫຼຸບຄຳຕອບໃສ່ເຈ້ຍໄປຕິດໃສ່ກະດານພ້ອມທັງອະທິບາຍຕາມຄວາມເຫັນຂອງກຸ່ມຕົນນັກຮຽນກຸ່ມອື່ນປະກອບຄຳເຫັນເພີ່ມເຕີມ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ.

**ຄຳຕອບ**:

1) ການແກ້ໄຂຂໍ້ຂັດແຍ່ງ ແມ່ນການຕໍ່ສູ້ຍ້ອນວ່າຂໍ້ຂັດແຍ່ງຕ່າງໆມີສອງດ້ານທີ່ກົງກັນຂ້າມກັນ. ສະນັ້ນ, ຫຼັກການແກ້ໄຂຂໍ້ຂັດແຍ່ງຕ້ອງໃຊ້ວິທີໃຫ້ແທດເໝາະກັບສະຖານະການເຊັ່ນ: ການໄກ່ເກ່ຍ, ການເຈລະຈາ. ບໍ່ແມ່ນແກ້ໄຂແບບແຂງກະດ້າງ ຫຼື ການໃຊ້ກຳລັງຮຸນແຮງ. ທຸກສິ່ງວັດຖຸລ້ວນແຕ່ມີການພົວພັນ ແລະ ສິ່ງຜົນສະທ້ອນເຊິ່ງກັນ ແລະ ກັນ, ສິ່ງວັດຖຸມີການຂັດແຍ່ງ, ມີການຕໍ່ສູ້ ແລະ ມີການແກ້ໄຂຂໍ້ຂັດແຍ່ງເພື່ອເຮັດໃຫ້ສິ່ງວັດຖຸຂະຫຍາຍຕົວ.

2) ຂໍ້ຂັດແຍ່ງມີຫຼາຍປະເພດເຊັ່ນ: ຂໍ້ຂັດແຍ່ງພາຍໃນ ແລະ ຂໍ້ຂັດແຍ່ງພາຍນອກ, ຂໍ້ຂັດແຍ່ງພື້ນຖານ ແລະ ຂໍ້ຂັດແຍ່ງຕົ້ນຕໍ, ຂໍ້ຂັດແຍ່ງປໍລະປັກ ແລະ ຂໍ້ຂັດແຍ່ງບໍ່ ປໍລະປັກ. ບັນດາຂໍ້ຂັດແຍ່ງເຫຼົ່ານີ້ມີທີ່ຕັ້ງ ແລະ ມີຜົນກະທົບແຕກຕ່າງກັນ ດັ່ງນັ້ນ ໃນເມື່ອເກີດຂໍ້ຂັດແຍ່ງພວກເຮົາຕ້ອງເບິ່ງສາເຫດຂອງມັນເພື່ອແກ້ໄຂຂໍ້ຂັດແຍ່ງເຫຼົ່ານັ້ນໄດ້ຢ່າງຖືກຕ້ອງ. ການຮັບຮູ້ສາເຫດທີ່ກໍ່ໃຫ້ເກີດຂໍ້ຂັດແຍ່ງໃນທຳມະຊາດ ແລະ ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກແມ່ນສິ່ງທີ່ສຳຄັນທີ່ສຸດເພາະວ່າ ຈະໄດ້ຫາວິທີແກ້ໄຂໃຫ້ຖືກຈຸດ.

3) ຂໍ້ຂັດແຍ່ງປໍລະປັກກັນ ແມ່ນຄວາມຂັດແຍ້ງຊຶ່ງບັນດາກຳລັງສັງຄົມ, ບັນດາຊົນຊັ້ນທີ່ມີຜົນປະໂຫຍດກົງກັນຂ້າມກັນ, ຕໍ່ສູ້ເຊິ່ງກັນ ແລະ ກັນ. ປັດຈຸບັນສະຖານະການໂລກກໍຍັງມີຫຼາຍຂົງເຂດທີ່ມີຄວາມຂັດແຍ້ງກັນເຮັດໃຫ້ເກີດມີການປະທະກັນທາງດ້ານອາວຸດສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ ຢູ່ໃນຂົງເຂດ

ດັ່ງກ່າວ. ວິທີການແກ້ໄຂຂໍ້ຂັດແຍ່ງນີ້ຕ້ອງໃຊ້ການເຈລະຈາ, ຊີ້ແຈງເຫດຜົນບໍ່ໃຊ້ ກຳລັງຮຸນແຮງ ເພື່ອປາບປາມ ແລະ ບີບບັງຄັບ, ເຮົາຕ້ອງສົ່ງເສີມວັດທະນະທຳ ແຫ່ງສັນຕິພາບ, ເຫັນຄຸນຄ່າຂອງຄວາມຫຼາກຫຼາຍທາງດ້ານວັດທະນະທຳສຳລັບທຸກຊຸມຊົນໃນທົ່ວໂລກເພື່ອຢູ່ຮ່ວມກັນຢ່າງສັນຕິ.

4) ພວກເຮົາເປັນນັກຮຽນຕ້ອງຝຶກຝົນຕົນເອງໃຫ້ມີຄຸນສົມບັດ, ຮູ້ຈຳແນກອັນໃດຖືກ, ອັນໃດຜິດ, ຮັບຟັງເຫດຜົນ, ມີຄວາມກ້າຫານຕຳນິສິ່ງຂ່າວຄົນອື່ນ ແລະ ຕ້ານປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ.

**3. ສະຫຼຸບ (10 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບການຮຽນໃນຊົ່ວໂມງນີ້ໂດຍຫຍໍ້:

1. ຂໍ້ຂັດແຍ່ງ ແມ່ນຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ.
2. ການແກ້ໄຂຂໍ້ຂັດແຍ່ງ.
3. ຂໍ້ຂັດແຍ່ງຕ້ອງແກ້ໄຂດ້ວຍການຕໍ່ສູ້.
4. ຂໍ້ຂັດແຍ່ງມີຫຼາຍປະເພດເຊັ່ນ: ຂໍ້ຂັດແຍ່ງພາຍໃນ ແລະ ຂໍ້ຂັດແຍ່ງພາຍນອກ, ຂໍ້ຂັດແຍ່ງພື້ນຖານ ແລະ ຂໍ້ຂັດແຍ່ງຕົ້ນຕໍ, ຂໍ້ຂັດແຍ່ງປໍລະປັກ ແລະ ຂໍ້ຂັດແຍ່ງບໍ່ປໍລະປັກ. ບັນດາຂໍ້ຂັດແຍ່ງເຫຼົ່ານີ້ມີທີ່ຕັ້ງ ແລະ ມີຜົນກະທົບແຕກຕ່າງກັນ. ດັ່ງນັ້ນໃນເມື່ອເກີດຂໍ້ຂັດແຍ່ງພວກເຮົາຕ້ອງເບິ່ງສາເຫດຂອງມັນ ເພື່ອແກ້ໄຂຂໍ້ຂັດແຍ່ງເຫຼົ່ານັ້ນໄດ້ຢ່າງຖືກຕ້ອງ. ວິທີການແກ້ໄຂຂໍ້ຂັດແຍ່ງນີ້ຕ້ອງໃຊ້ການເຈລະຈາ, ຊີ້ແຈງເຫດຜົນ, ບໍ່ໃຊ້ກຳລັງຮຸນແຮງເພື່ອປາບປາມ ແລະ ບີບບັງຄັບ. ເຮົາຕ້ອງສົ່ງເສີມວັດທະນະທຳແຫ່ງສັນຕິພາບ, ເຫັນຄຸນຄ່າຂອງຄວາມຫຼາກຫຼາຍທາງດ້ານວັດທະນະທຳສຳລັບທຸກຊຸມຊົນໃນທົ່ວໂລກ ເພື່ອຢູ່ຮ່ວມກັນຢ່າງສັນຕິ.

## V. ການວັດ ແລະ ປະເມີນຜົນ

**ວັດ ແລະ ປະເມີນຈາກ**:

- ການຕອບຄຳຖາມປະລະໄນລຸ່ມນີ້:
- ນັກຮຽນຈົ່ງໝາຍ ✓ ເອົາຄຳຕອບທີ່ຖືກຕ້ອງ

1. ຍ້ອນຫຍັງຈຶ່ງມີຂໍ້ຂັດແຍ່ງເກີດຂຶ້ນ?

ກ. ຂໍ້ຂັດແຍ່ງຕ່າງໆມີ ໜຶ່ງດ້ານທີ່ກົງກັນຂ້າມກັນ.

✓ຂ. ຂໍ້ຂັດແຍ່ງຕ່າງໆມີສອງດ້ານທີ່ກົງກັນຂ້າມກັນ

ຄ. ຂໍ້ຂັດແຍ່ງຕ່າງໆມີສາມດ້ານທີ່ກົງກັນຂ້າມກັນ

ງ. ຂໍ້ຂັດແຍ່ງຕ່າງໆມີ ສີ່ດ້ານທີ່ກົງກັນຂ້າມກັນ

2. ຂໍ້ໃດບໍ່ແມ່ນການແກ້ໄຂຂໍ້ຂັດແຍ່ງ?

ກ. ການໄກ່ເກ່ຍ ຂ. ການເຈລະຈາ

ຄ. ການຊີ້ແຈງດ້ວຍເຫດຜົນ ✓ງ. ການເມີນເສີຍ

3. ຂໍ້ໃດຕໍ່ໄປນີ້ແມ່ນປະເພດຂອງຂໍ້ຂັດແຍ້ງ?

✓ກ. ຂໍ້ຂັດແຍ່ງພື້ນຖານ ແລະ ຕົ້ນຕໍ ຂ. ຂໍ້ຂັດແຍ່ງພາຍໃນ ແລະ ບໍ່ປໍລະປັກ

ຄ. ຂໍ້ຂັດແຍ່ງປໍລະປັກ ແລະ ຕົ້ນຕໍ ງ. ຂໍ້ຂັດແຍ່ງພື້ນຖານ ແລະ ພາຍນອກ

4. ຂໍ້ໃດອາດກໍ່ໃຫ້ເກີດຂໍ້ຂັດແຍ້ງ?

ກ. ຢູ່ຮ່ວມກັນຢ່າງສັນຕິ ✓ຂ. ເວົ້າໃນທາງທີ່ຍຸຍົງສົ່ງເສີມ

ຄ. ຮຽນຮູ້ວັດທະນະທຳຂອງຄົນອື່ນ ງ. ເຄົາລົບຄວາມຫຼາກຫຼາຍ

**ໝາຍເຫດ**:

- ຄູສາມາດນຳໃຊ້ກິດຈະກຳອື່ນມາໃຊ້ແທນກິດຈະກຳຂ້າງເທິງນີ້ ຖ້າຫາກເຫັນວ່າເປັນວິທີທີ່ສອດຄ່ອງ ແລະ ເໝາະສົມ.

**ເອກະສານອ້າງອີງ**:


- ປຶ້ມແບບຮຽນວິຊາການເມືອງ ພາກວິຊາວິທະຍາສາດການເມືອງ ຄະນະວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ 2007, ໜ້າ 34, 35.

# ບົດທີ 10 ຄວາມສຳນຶກກ່ຽວກັບຄຸນສົມບັດ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 1.2 ຈຳແນກຄຸນສົມບັດກັບກົດໝາຍ ແລະ ຮີດຄອງປະເພນີ

ເວລາ1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄຸນສົມບັດ, ກົດໝາຍ ແລະ ຮີດຄອງປະເພນີໃນການສ້າງສາຍພົວພັນທີ່ດີກັບຄົນທີ່ມາຈາກຫຼາຍຂົງເຂດທີ່ແຕກຕ່າງກັນ.
- ເຄົາລົບຄວາມແຕກຕ່າງກັບຄົນທີ່ມາຈາກຫຼາຍຂົງເຂດທີ່ມີຮີດຄອງປະເພນີແຕກຕ່າງກັນ.
- ແນະນຳວິທີການສ້າງສາຍພົວພັນທີ່ດີກັບຄົນທີ່ມາຈາກຫຼາຍຂົງເຂດທີ່ມີຮີດຄອງປະເພນີແຕກຕ່າງກັນ.

## II. ເນື້ອໃນ

ຄຸນສົມບັດໝາຍເຖິງແນວຄິດຈິດສຳນຶກທີ່ດີ, ມີຄຸນລັກສະນະຢູ່ໃນຕົວຂອງຄົນເຮົາໂດຍສະແດງອອກທາງຮ່າງກາຍ, ວາຈາ ຊຶ່ງເປັນທີ່ຍອມຮັບຈາກຄົນສ່ວນຫຼາຍໃນສັງຄົມ, ຄຸນສົມບັດແມ່ນລະບົບຫຼັກການ, ມາດຕະຖານສັງຄົມທີ່ຄົນເຮົາຈະຕ້ອງຕື່ນຕົວປະພຶດຕົນໃຫ້ສອດຄ່ອງກັບຜົນປະໂຫຍດຂອງຊຸມຊົນ ແລະ ສັງຄົມ.

ກົດໝາຍແມ່ນຂໍ້ກຳນົດທີ່ລັດວາງອອກ ແລະ ປະກາດໃຊ້, ມີຜົນບັງຄັບໃຊ້ສຳລັບພົນລະເມືອງທຸກຄົນ. ຮັບປະກັນສິດຜົນປະໂຫຍດລວມຂອງສັງຄົມ, ກົດໝາຍແມ່ນມາດຕະການ ໜຶ່ງທີ່ດັດປັບສາຍພົວພັນສັງຄົມ ມີກຳລັງແຮງທີ່ເຂັ້ມແຂງຂອງຊົນຊັ້ນ ແລະ ຮັບປະກັນໂດຍລັດກົດໝາຍແມ່ນແນໃສ່ດັດປັບການປະພຶດຂອງຄົນ ໃນສັງຄົມບົນພື້ນຖານການຮ່ວມມື, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ອັນເປັນພື້ນຖານຂອງຄວາມເປັນເອກະພາບ ແລະ ຄວາມເປັນປຶກແຜ່ນແໜ້ນໜາຂອງຊາດ.

ຮີດຄອງປະເພນີ ແມ່ນແບບແຜນການປະພຶດປະຕິບັດຂອງຄົນເຮົາຕາມຄວາມຊິນເຄີຍບໍ່ວ່າຊາດໃດຍ່ອມມີຮີດຄອງປະເພນີທີ່ແຕກຕ່າງກັນ ຊຶ່ງເປັນເອກະລັກຂອງຕົນເອງ ຊາດເຮົາກໍມີຮີດຄອງປະເພນີສະເພາະຂອງຕົນ ຊຶ່ງເປັນມໍລະດົກອັນລ້ຳຄ່າ ແລະ ຕິດພັນກັບການ

ດຳລົງຊີວິດຂອງຄົນລາວມາເຖິງປະຈຸບັນນີ້ ເຊັ່ນ: ບຸນປີໃໝ່ລາວ, ບຸນພະເວດ, ບຸນກິນຈຽງ, ບຸນກະເຣິ, ການແຕ່ງງານ ແລະ ປະເພນີອື່ນໆ.

ການສ້າງສາຍພົວພັນທາງດ້ານຮີດຄອງປະເພນີ ກໍຍັງມີຫຼາຍປະເທດທີ່ຈັດຄ້າຍຄືກັນ ເຫັນໄດ້ໃນທຸກໆປີຂອງງານບຸນປີໃໝ່ລາວ ຢູ່ແຕ່ລະປະເທດກໍໄດ້ຈັດງານລັກສະນະຄ້າຍຄືກັນ ເຊັ່ນ: ພຸດທະສາສະໜາປະເທດຫວຽດນາມ ຈັດງານບຸນຕ້ອນຮັບບຸນປີໃໝ່, ປະເທດໄທກໍຈັດງານສົງການຂອງໄທ, ກຳປູເຈຍ ກໍຈັດງານບຸນປີໃໝ່ເອີ້ນວ່າ: ຈໍຈະນາທະໄມ (CholChhnam Thmay) ແລະ ມຽນມາກໍຈັດງານບຸນປີໃໝ່ເອີ້ນວ່າ: ທະຢາຢານ (Thingyang) ຊຶ່ງຈະເຫັນໄດ້ໃນທຸກປີຂອງ ແຕ່ລະປະເທດຈະຈັດງານສະເຫຼີມສະຫຼອງປີໃໝ່ຂຶ້ນພ້ອມໆ ກັນໃນທຸກປີ.

ນອກຈາກນີ້ ກໍຍັງມີອີກຫຼາຍປະເທດທີ່ມີຄວາມແຕກຕ່າງທາງຮີດຄອງປະເພນີ ດັ່ງນັ້ນເຮົາຕ້ອງເຄົາລົບຄວາມແຕກຕ່າງຂອງຄົນທີ່ມາຈາກຂົງເຂດ ຊຶ່ງມີຮີດຄອງປະເພນີແຕກຕ່າງກັນ ເຊັ່ນ: ຄວາມຫຼາກຫຼາຍທາງດ້ານເຊື້ອສາຍ ເຜົ່າພັນ ແລະ ສາສະໜາ, ສະພາບພູມີສາດ, ຄວາມແຕກຕ່າງດ້ານຖິ່ນທີ່ຢູ່ອາໄສ, ຮູບແບບເສດຖະກິດ, ການຜະລິດ, ການດຳລົງຊີວິດທີ່ມີຄວາມເຊື່ອ ແລະ ຄ່ານິຍົມທີ່ແຕກຕ່າງກັນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.5
2. ປຶ້ມຄູ່ມືການແຊກຊ້ອນການສຶກສາພົນລະເມືອງໂລກ
3. ຮູບພາບປະກອບການສອນ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນບົດທີ່ຮຽນຜ່ານມາ (5 ນາທີ)**

**ກ. ສົນທະນາບົດຮຽນເກົ່າ**

- ຄູຖາມນັກຮຽນກ່ຽວກັບບົດຮຽນທີ່ໄດ້ຮຽນຜ່ານມາ:

1) ການອອກແຮງງານມີບົດບາດສຳຄັນແນວໃດຕໍ່ການພັດທະນາສັງຄົມ?

- ຄູໃຫ້ນັກຮຽນຕອບ ຫຼື ໃຫ້ອາສາສະໝັກຕອບປະມານ 1-2 ຄົນ.
- ຄູອະທິບາຍເພີ່ມເຕີມແລ້ວເຂົ້າສູ່ບົດຮຽນໃໝ່.

**2. ສະເໜີບົດຮຽນໃໝ່**

**ກ. ຄູສົນທະນາຄວາມສຳນຶກກ່ຽວກັບຄຸນສົມບັດ, ສຶກສາເນື້ອໃນບົດຮຽນ (10 ນາທີ)**

- ຄູຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄວ້າ:

1) ຄຸນສົມບັດແມ່ນຫຍັງ?

2) ຄຸນສົມບັດ ມີຄຸນລັກສະນະແນວໃດ?

- ຄູແບ່ງນັກຮຽນເປັນ 2 ກຸ່ມປະສົມຍິງຊາຍໃຫ້ນັກຮຽນຄົ້ນຄວ້າຕາມຄຳຖາມ.
- ຕາງໜ້າກຸ່ມຂຶ້ນມາສະເໜີ, ກຸ່ມອື່ນຟັງ ແລະ ປະກອບຄຳເຫັນເພີ່ມເຕີມ.
- ຄູຈົດບາງຄຳຕອບທີ່ສຳຄັນຂອງນັກຮຽນໃສ່ກະດານ.
- ຄູອະທິບາຍເພີ່ມເຕີມບາງບັນຫາທີ່ເຫັນວ່າບໍ່ທັນຄົບຖ້ວນເພື່ອໃຫ້ເຂົ້າໃຈເປັນເອກະພາບກັນ.

**ຄູສະຫຼຸບ**:

1) ຄຸນສົມບັດແມ່ນລະບົບຫຼັກການ, ມາດຖານສັງຄົມທີ່ຄົນເຮົາຈະຕ້ອງຕື່ນຕົວປະພຶດຕົນໃຫ້ສອດຄ່ອງກັບຜົນປະໂຫຍດຂອງຊຸມຊົນ ແລະ ສັງຄົມ.

2) ຄຸນສົມບັດມີລັກສະນະນາມມະທຳ ແລະ ສືບທອດຄວາມສຳນຶກທີ່ດີແມ່ນສິ່ງທີ່ບໍ່ມີຕົວຕົນ, ບໍ່ສາມາດຈັບບາຍດ້ວຍມືໄດ້ ແຕ່ສາມາດເຫັນໄດ້ດ້ວຍການສະແດງອອກທາງພຶດຕິກຳ ແລະ ອີກຢ່າງໜຶ່ງຄຸນສົມບັດໄດ້ຖືກອົບຮົມຈາກພໍ່ແມ່ ແລະ ສັງຄົມໂດຍຜ່ານການທົດສອບຈາກຂະບວນການອອກແຮງງານຕ່າງໆໃນການດຳລົງຊີວິດຕົວຈິງ.

**ຂ. ຈຳແນກຄຸນສົມບັດ, ກົດໝາຍ ແລະ ຮີດຄອງປະເພນີ (ສຶກສາເນື້ອໃນບົດຮຽນ) (20 ນາທີ)**

- ຄູແບ່ງກຸ່ມນັກຮຽນອອກເປັນ 3 ກຸ່ມ

1) ຄູໃຫ້ນັກຮຽນກຸ່ມທີ 1 ຄົ້ນຄວ້າຫົວຂໍ້ກ່ຽວກັບການຈຳແນກຄຸນສົມບັດ.

2) ຄູໃຫ້ນັກຮຽນກຸ່ມທີ 2 ຄົ້ນຄວ້າ ຫົວຂໍ້ກ່ຽວກັບການຈຳແນກກົດໝາຍ.

3) ຄູໃຫ້ນັກຮຽນກຸ່ມທີ 3 ຄົ້ນຄວ້າຫົວຂໍ້ກ່ຽວກັບການຈຳແນກຮີດຄອງປະເພນີ.

- ຄູຂີດຕາຕະລາງອອກເປັນ 3 ຫ້ອງໃສ່ກະດານ, ຈາກນັ້ນໃຫ້ນັກຮຽນແຕ່ລະກຸ່ມຂຶ້ນມາ ຂຽນການຈຳແນກແຕ່ລະຫົວຂໍ້ທີ່ໄດ້ຮັບຂຶ້ນມາຂຽນໃສ່ໃນແຕ່ລະຫ້ອງໂດຍໃຫ້ຕາງ ໜ້າກຸ່ມອອກມາຂຽນໃສ່.
- ຄູໃຫ້ນັກຮຽນຈຳນວນໜຶ່ງປະກອບຄວາມເຫັນເພີ່ມເຕີມ.

**ຄູສະຫຼຸບ:**

1) ຄຸນສົມບັດ ແມ່ນເກີດຂຶ້ນໃນຂະບວນວິວັດການອອກແຮງງານ, ຮີດຄອງປະເພນີ ແລະ ອື່ນໆ ມີລັກສະນະສືບທອດ ແລະ ປັບປຸ່ງໄປແຕ່ລະຍຸກສັງຄົມ.
2) ກົດໝາຍ ແມ່ນຂໍ້ກຳນົດທີ່ລັດວາງອອກ ແລະ ປະກາດໃຊ້, ມີຜົນບັງຄັບໃຊ້ສຳລັບພົນລະເມືອງທຸກຄົນ ຊຶ່ງແມ່ນມາດຕະການໜຶ່ງທີ່ດັດປັບສາຍພົວພັນສັງຄົມຮັບປະກັນ ໂດຍລັດ.
3) ຮີດຄອງປະເພນີ ແມ່ນແບບແຜນການປະພຶດປະຕິບັດຂອງຄົນເຮົາຕາມຄວາມຊິນເຄີຍຊຶ່ງເປັນມໍລະດົກອັນລ້ຳຄ່າ ແລະ ຕິດພັນກັບການດຳລົງຊີວິດ.

**ຄ. ສົນທະນາຖາມ-ຕອບ ກ່ຽວກັບຮູບພາບ (10 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບລຸ່ມນີ້ມີຄວາມແຕກຕ່າງກັນແນວໃດ?



ຮູບທີ 1



ຮູບທີ 2



ຮູບທີ 3



ຮູບທີ 4

- ນັກຮຽນອາສາສະໝັກຕອບ
- ຄູສັງລວມຄືນໃຫ້ນັກຮຽນ

ຮູບທີ 1 ໝາຍເຖິງການເຄົາລົບນັບຖືຄູອາຈານ.

ຮູບທີ 2 ໝາຍເຖິງການເຄົາລົບຜູ້ອາວຸໂສ.

ຮູບທີ 3 ໝາຍເຖິງບຸນປະເພນີກິນຈຽງຂອງເຜົ່າມົ້ງ.

ຮູບທີ 4 ໝາຍເຖິງບຸນປະເພນີສົງການ.

**3. ສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ.

1) ຄຸນສົມບັດ.

2) ການຈຳແນກຄຸນສົມບັດ, ກົດໝາຍ ແລະ ຮີດຄອງປະເພນີ.

ການສ້າງສາຍພົວພັນທາງດ້ານຮີດຄອງປະເພນີ ກໍຍັງມີຫຼາຍປະເທດທີ່ຈັດຄ້າຍຄືກັນເຫັນໄດ້ໃນທຸກໆປີຂອງງານບຸນປີໃໝ່ລາວ ຢູ່ແຕ່ລະປະເທດກໍໄດ້ຈັດງານລັກສະນະຄ້າຍຄືກັນ ເຊັ່ນ: ປະເທດຫວຽດນາມ ຈັດງານບຸນຕ້ອນຮັບບຸນປີໃໝ່, ປະເທດໄທກໍຈັດງານສົງກຣານຂອງໄທ, ກຳປູເຈຍ ກໍຈັດງານບຸນປີໃໝ່ເອີ້ນວ່າ: ຈໍຈະນຳທະໄມ (Choul Chhnam Thmay) ແລະ ມຽນມາກໍຈັດງານບຸນປີໃໝ່ເອີ້ນວ່າ: ທະຢາຢານ (Thingyang) ຊຶ່ງຈະເຫັນໄດ້ໃນທຸກປີຂອງແຕ່ລະປະເທດກໍຈະຈັດງານສະເຫຼີມສະຫຼອງປີໃໝ່ຂຶ້ນພ້ອມໆ ກັນໃນທຸກປີ ໂດຍອີງຕາມການນັບຖືສາສະໜາຂອງແຕ່ລະປະເທດ

ນອກຈາກນີ້ ກໍຍັງມີອີກຫຼາຍປະເທດທີ່ມີຄວາມແຕກຕ່າງທາງຮີດຄອງປະເພນີ ດັ່ງນັ້ນ ເຮົາຕ້ອງເຄົາລົບຄວາມແຕກຕ່າງຂອງຄົນທີ່ມາຈາກຂົງເຂດທີ່ມີຮີດຂອງປະເພນີແຕກຕ່າງກັນ ເຊັ່ນ: ຄວາມຫຼາກຫຼາຍທາງດ້ານເຊື້ອສາຍເຜົ່າພັນ ແລະ ສາສະໜາ, ສະພາບພູມີສາດ, ຄວາມແຕກຕ່າງດ້ານຖິ່ນທີ່ຢູ່ອາໄສ, ຮູບແບບເສດຖະກິດ, ການຜະລິດ, ການດຳລົງຊີວິດທີ່ມີຄວາມເຊື່ອ ແລະ ຄ່ານິຍົມທີ່ແຕກຕ່າງກັນ

## V. ການວັດ ແລະ ປະເມີນຜົນ

ຄູຕັ້ງຄຳຖາມເພື່ອທວນຄືນຄວາມຮູ້ຂອງນັກຮຽນກ່ຽວກັບ:

1. ເຮົາຄວນປະພຶດຕົນແນວໃດຕໍ່ຄູອາຈານ ແລະ ຜູ້ອາວຸໂສ?
2. ເປັນຫຍັງເຮົາຈຶ່ງເຄົາລົບຄວາມແຕກຕ່າງຂອງຮີດຄອງປະເພນີຂອງແຕ່ລະເຜົ່າ?

**ແຫຼ່ງທີ່ມາ**:

- https://www.tapchicongsan.org.vn/web/laos/van-hoa-xa-hoi
- https://www.eenet.org.uk/resources/docs/ilfe/lao/lao-Booklet1.pdf

# ບົດທີ 11 ພັນທະພື້ນຖານ ແລະ ຄຸນສົມບັດ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 1 ຄວາມສຳນຶກກ່ຽວກັບພັນທະ

ເວລາສອນ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍພັນທະຂອງຊາວໜຸ່ມລາວ ແລະ ພັນທະຂອງພົນລະເມືອງໃນສະພາບເງື່ອນໄຂຂອງໂລກ.
- ມີຄວາມເຄົາລົບພັນທະຂອງຊາວໜຸ່ມລາວ ແລະ ພັນທະຂອງພົນລະເມືອງໃນສະພາບເງື່ອນ ໄຂຂອງໂລກ.
- ປະຕິບັດພັນທະຂອງຊາວໜຸ່ມລາວ ແລະ ພັນທະຂອງພົນລະເມືອງໃນສະພາບເງື່ອນໄຂຂອງໂລກ.

## II. ເນື້ອໃນ

ໄວໜຸ່ມລາວແມ່ນຜູ້ທີ່ມີພາລະໜ້າທີ່ ຫຼື ພັນທະຕໍ່ຕົນເອງ, ຄອບຄົວ, ສັງຄົມ ແລະ ປະເທດຊາດ ຊຶ່ງພັນທະດັ່ງກ່າວສະແດງອອກດັ່ງນີ້:

- ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນສົມບັດມີຄວາມຕື່ນຕົວພົວພັນກັບຄົນທີ່ຢູ່ອ້ອມຂ້າງ.
- ປະກອບສ່ວນກໍ່ສ້າງສັງຄົມໃຫ້ມີຄວາມສະເໝີພາບ, ມີປະຊາທິປະໄຕ ແລະ ມີຄວາມຈະເລີນກ້າວໜ້າ.
- ເຄົາລົບນັບຖືລະບຽບກົດໝາຍ ແລະ ກົດລະບຽບຂອງຊາວໜຸ່ມປະຊາຊົນປະຕິວັດລາວ.
- ເຄົາລົບນັບຖື, ເບິ່ງແຍງ, ໃຫ້ການຊ່ວຍເຫຼືອຄອບບຄົວ, ຜູ້ຊົງຄຸນວຸດທິ ແລະ ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ.
- ປຸກລະດົມຂົນຂວາຍມະຫາຊົນເຂົ້າເປັນສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ.
- ມີຄວາມສາມັກຄີຊ່ວຍເຫຼືອຄົນອື່ນ ແລະ ສັງຄົມ.
- ດຸໝັ່ນຄົ້ນຄວ້າຮໍ່າຮຽນ, ຍົກລະດັບຄວາມຮູ້ຄວາມສາມາດ
- ກຽມພ້ອມປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາປະເທດຊາດ ແລະ ລະບອບ

ປະຊາທິປະໄຕ ປະຊາຊົນລາວ ແລະ ອື່ນໆ.

- ພົນລະເມືອງທີ່ດໍາລົງຊີວິດຢູ່ໃນປະຊາຄົມໂລກມີຄວາມຮັບຜິດຊອບທາງດ້ານສິນທໍາ, ຈັນຍາບັນ, ທາງດ້ານການເມືອງ ແລະ ເສດຖະກິດ. ພັນທະເຫຼົ່ານີ້ລວມມີ:

1) ເຂົ້າໃຈທັດສະນະຂອງຕົນເອງ ແລະ ທັດສະນະຂອງຄົນອື່ນກ່ຽວກັບບັນຫາໂລກ.
2) ເຄົາລົບຫຼັກການຂອງຄວາມຫຼາກຫຼາຍທາງດ້ານວັດທະນະທໍາ.
3) ເຊື່ອມໂຍງ, ສ້າງຄວາມສໍາພັນກັບຄົນໃນປະເທດຕ່າງໆ ແລະ ວັດທະນະທໍາອື່ນໆ.
4) ເຂົ້າໃຈວິທີການທີ່ຄົນ ແລະ ປະເທດຕ່າງໆໃນໂລກມີການເຊື່ອມຕໍ່ກັນ ເພິ່ງພາເຊິ່ງກັນ ແລະ ກັນ.
5) ເຂົ້າໃຈບັນຫາໂລກ.
6) ສະໜັບສະໜູນການຮ່ວມມືສາກົນທີ່ສໍາຄັນກັບປະເທດອື່ນໆ.
7) ຊຸກຍູ້ການປະຕິບັດບັນດາສັນຍາສາກົນ, ສົນທິສັນຍາ, ອະນຸສັນຍາທີ່ກ່ຽວຂ້ອງກັບບັນຫາທົ່ວໂລກ.
8) ສົ່ງເສີມຄວາມເທົ່າທຽມ ແລະ ຍຸຕິທໍາໃນໂລກ ໃຫ້ມີປະສິດຕິພາບຫຼາຍຂຶ້ນໃນແຕ່ລະຂົງເຂດຂອງປະຊາຄົມໂລກ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງຂັ້ນ ມ. 5
2. ປຶ້ມຫຼັກສູດແຊກຊ້ອນສຶກສາພົນລະເມືອງໂລກເຂົ້າໃນສຶກສາພົນລະເມືອງ
3. ຮູບພາບປະກອບການຮຽນການສອນ
4. ບັດຄໍາຈໍານວນ 16 ບັດ

## IV. ກິດຈະກໍາການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ສົນທະນາຖາມ-ຕອບ**

**ຄູຕັ້ງຄໍາຖາມ**:

1) ຄຸນສົມບັດແມ່ນຫຍັງ?

2) ຄົນທີ່ມີຄຸນສົມບັດສະແດງອອກາຄືແນວໃດ?

- ໃຫ້ນັກຮຽນ 2-3 ຄົນຂຶ້ນຕອບຄໍາຖາມ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຕາມຄໍາຖາມຂ້າງເທິງ.

**ຄໍາຕອບ**

1) ຄຸນສົມບັດແມ່ນແບບແຜນການດໍາລົງຊີວິດ ແມ່ນບັນດາທັດສະນະຄະຕິ ແລະ ອຸດົມການທີ່ເປັນມາດຖານຂອງມວນມະນຸດຢູ່ໃນສັງຄົມໃດໜຶ່ງ ຫຼື ຊາດໃດໜຶ່ງທີ່ຍອມຮັບໂດຍສະແດງອອກຜ່ານທາງຮ່າງກາຍ, ວາຈາ ແລະ ຈິດໃຈ.
2) ຄົນທີ່ມີຄຸນສົມບັດດີສະແດງອອກ ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ເຄົາລົບນັບຖືລະບຽບກົດໝາຍ, ເອົາໃຈໃສ່ສຶກສາຮໍ່າຮຽນ, ມີຄວາມສາມັກຄີ, ກ້າຫານ, ເອື້ອເຟື້ອເພື່ອແຜ່...

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາຖາມ-ຕອບ (5 ນາທີ)**

- ຄູແນະນໍາໃຫ້ນັກຮຽນຄົ້ນຄວ້າສົນທະນາກັບໝູ່ທີ່ຢູ່ອ້ອມຂ້າງໂຕະຂອງຕົນເອງ ຕາມ ຄໍາຖາມລຸ່ມນີ້:

1) ພັນທະແມ່ນຫຍັງ?

- ຄູໃຫ້ນັກຮຽນຈໍານວນໜຶ່ງຕອບຕາມຄໍາຖາມທີ່ຕັ້ງໄວ້.
- ຄູອະທິບາຍຕື່ມເພື່ອໃຫ້ນັກຮຽນເຂົ້າໃຈ ແລະ ເປັນເອກະພາບກັນໂດຍເນັ້ນໃຫ້ນັກຮຽນເຂົ້າໃຈວ່າ:

**ຄໍາຕອບ**:

1) ພັນທະແມ່ນຄວາມຮັບຜິດຊອບຂອງບຸກຄົນຕໍ່ກັບຄວາມຕ້ອງການຂອງຜົນປະໂຫຍດລວມຂອງຊຸມຊົນ, ສັງຄົມ, ປະເທດຊາດ ແລະ ໂລກ.

**ຂ. ສົນທະນາພັນທະພື້ນຖານຂອງໄວໜຸ່ມລາວ ແລະ ພັນທະຂອງພົນລະເມືອງໃນສະພາບເງື່ອນໄຂຂອງໂລກ (35 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບຕໍ່ໄປນີ້ວ່າມີເນື້ອໃນສະແດງເຖິງຫຍັງ?



ຮູບທີ 1



ຮູບທີ 2



ຮູບທີ 3



ຮູບທີ 4

- ນັກຮຽນຕອບຕາມຄວາມເຂົ້າໃຈ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນກ່ຽວກັບຄວາມໝາຍຂອງຮູບພາບ.

**ຄຳຕອບ**:

ຮູບທີ 1 ຊາວໜຸ່ມລາວເຂົ້າຮ່ວມກິດຈະກຳ ຄວາມສາມັກຄີຜ່ານການເປັນອາສາສະໝັກ ໃນວັນອາສາສະໝັກສາກົນ.

ຮູບທີ 2 ຊາວໜຸ່ມລາວເຂົ້າຮ່ວມເວທີສົນທະນາ ການມີສ່ວນຮ່ວມຂອງອາສາສະໝັກໃນການພັດທະນາປະເທດຊາດ.

ຮູບທີ 3: ພົນລະເມືອງໂລກໃນສະຕະວັດທີ 21.

ຮູບທີ 4: ຮູບພາບສົ່ງເສີມຄວາມເຄົາລົບຄວາມຫຼາກຫຼາຍທາງດ້ານວັດທະນະທຳ.

**ຫຼິ້ນເກມໄຈ້ແຍກບັດຄຳ**

- ຄູຈັດແບ່ງນັກຮຽນເປັນກຸ່ມຕາມຄວາມເໝາະສົມ.
- ຄູຢາຍບັດຄຳໃຫ້ນັກຮຽນແຕ່ລະກຸ່ມໄຈ້ແຍກເອົາບັດຄຳຂອງພັນທະຊາວໜຸ່ມລາວ

ແລະ ພັນທະພົນລະເມືອງຕໍ່ສະພາບເງື່ອນໄຂຂອງໂລກປັດຈຸບັນ.

- ຄູຕັດເອົາບັດຄຳໃນຕາຕະລາງລຸ່ມນີ້ ອອກເປັນ16 ບັດຕາມຈຳນວນບັດຄຳ

| | |
|---|---|
| 1. ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນສົມບັດມີຄວາມຕື່ນຕົວພົວພັນກັບຄົນທີ່ຢູ່ອ້ອມຂ້າງ | 9. ເຂົ້າໃຈທັດສະນະຂອງຕົນເອງ ແລະ ທັດສະນະຂອງຄົນອື່ນກ່ຽວກັບບັນຫາໂລກ |
| 2. ປະກອບສ່ວນກໍ່ສ້າງສັງຄົມໃຫ້ມີຄວາມສະເໝີພາບ, ມີປະຊາທິປະໄຕ ແລະ ມີຄວາມຈະເລີນກ້າວໜ້າ. | 10. ເຄົາລົບຫຼັກການຂອງຄວາມຫຼາກຫຼາຍທາງດ້ານວັດທະນະທຳ |
| 3. ເຄົາລົບນັບຖືລະບຽບກົດໝາຍ ແລະ ກົດລະບຽບຂອງຊາວໜຸ່ມປະຊາຊົນປະຕິວັດລາວ | 11. ເຊື່ອມໂຍງ, ສ້າງຄວາມສຳພັນກັບຄົນໃນປະເທດຕ່າງໆ ແລະ ວັດທະນະທຳອື່ນໆ |
| 4. ເຄົາລົບນັບຖື, ເບິ່ງແຍງ, ໃຫ້ການຊ່ວຍເຫຼືອຄອບຄົວ, ຜູ້ຊົງຄຸນວຸດທິ ແລະ ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ | 12. ເຂົ້າໃຈວິທີການທີ່ຄົນ ແລະ ປະເທດຕ່າງໆໃນໂລກມີການເຊື່ອມຕໍ່ກັນ ເພິ່ງພາເຊິ່ງກັນ ແລະ ກັນ |
| 5. ປຸກລະດົມຂົນຂວາຍມະຫາຊົນເຂົ້າເປັນສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ | 13. ເຂົ້າໃຈບັນຫາໂລກ |
| 6. ມີຄວາມສາມັກຄີຊ່ວຍເຫຼືອຄົນອື່ນ ແລະ ສັງຄົມ | 14. ສະໜັບສະໜູນການຮ່ວມມືສາກົນທີ່ສຳຄັນກັບປະເທດອື່ນໆ |
| 7. ດຸໝັ່ນຄົ້ນຄວ້າຮ່ຳຮຽນ, ຍົກລະດັບຄວາມຮູ້ຄວາມສາມາດ | 15. ຊຸກຍູ້ການປະຕິບັດບັນດາສັນຍາສາກົນ, ສົນທິສັນຍາ, ອະນຸສັນຍາທີ່ກ່ຽວຂ້ອງກັບບັນຫາທົ່ວໂລກ |
| 8. ກຽມພ້ອມປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາປະເທດຊາດ ແລະ ລະບອບປະຊາທິປະໄຕ ປະຊາຊົນລາວ ແລະ ອື່ນໆ | 16. ສົ່ງເສີມຄວາມເທົ່າທຽມ ແລະ ຍຸຕິທຳໃນໂລກ ໃຫ້ມີປະສິດຕິພາບຫຼາຍຂຶ້ນໃນແຕ່ລະຂົງເຂດຂອງປະຊາຄົມໂລກ |

- ນັກຮຽນແຕ່ລະກຸ່ມຈັດລຽງບັດຄຳໃຫ້ຖືກຕ້ອງ, ຈາກນັ້ນ, ແຕ່ລະກຸ່ມສັບປ່ຽນກັນກວດຄຳຕອບ.

- ຄູສະຫຼຸບຄຳຕອບຄືນໃຫ້ນັກຮຽນ.

**3. ສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບຄືນກ່ຽວກັບເນື້ອໃນບົດຮຽນໂດຍຫຍໍ້:

1. ພັນທະຂອງໄວໜຸ່ມລາວ.
2. ພັນທະຂອງພົນລະເມືອງໃນສະພາບເງື່ອນໄຂຂອງໂລກປັດຈຸບັນ.
3. ພັນທະແມ່ນຄວາມຮັບຜິດຊອບຂອງບຸກຄົນຕໍ່ກັບຄວາມຕ້ອງການຂອງຜົນປະໂຫຍດລວມຂອງຊຸມຊົນ, ສັງຄົມ, ປະເທດຊາດ ແລະ ໂລກ.

ພັນທະແມ່ນການປະກອບສ່ວນສ້າງສັງຄົມ, ເຄົາລົບນັບຖືລະບຽບກົດໝາຍ, ມີຄວາມສາມັກຄີຊ່ວຍເຫຼືອຄົນອື່ນ ແລະ ສັງຄົມ, ປະກອບສ່ວນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດໃຫ້ຈະເລີນຮຸ່ງເຮືອງແມ່ນພັນທະຂອງໄວໜຸ່ມລາວ.

ພົນລະເມືອງໂລກແມ່ນຜູ້ທີ່ເຫັນຕົນເອງເປັນສ່ວນໜຶ່ງຂອງຊຸມຊົນໂລກທີ່ມີຄວາມຍືນຍົງທີ່ພົ້ນເດັ່ນຂຶ້ນ, ການປະພຶດ, ປະຕິບັດຕົນທີ່ມີຄຸນຄ່າຕໍ່ຊຸມຊົນ, ສັງຄົມ, ປະເທດຊາດ ແລະ ໂລກ. ການເປັນພົນລະເມືອງໂລກບໍ່ໄດ້ໝາຍຄວາມວ່າເຈົ້າຈະຕ້ອງປະຖິ້ມສັນຊາດອື່ນທີ່ເຈົ້າມີຢູ່. ແຕ່ໝາຍຄວາມວ່າເຈົ້າມີຕົວຕົນອີກຊັ້ນໜຶ່ງ (ໃນໂລກທັງໝົດ) ເພື່ອໃຫ້ຮູ້ວ່າເຮົາເປັນໃຜ ຫຼື ວ່າຢູ່ປະເທດໃດ ແລະ ກໍມີສິດ ແລະ ຄວາມຮັບຜິດຊອບຕໍ່ໂລກ.

## V. ການວັດ ແລະ ປະເມີນຜົນ

**ວັດນັກຮຽນຈາກ**:

ການໝາຍ ✓ໃສ່ຫ້ອງຄຳຕອບທີ່ຖືກຕ້ອງດັ່ງຕາຕາລາງລຸ່ມນີ້:

| ລ/ດ | ເນື້ອໃນພັນທະພົນລະເມືອງໂລກ | ແມ່ນ | ບໍ່ແມ່ນ |
|---|---|---|---|
| 1 | ສະໜັບສະໜູນການຮ່ວມມືສາກົນທີ່ສຳຄັນກັບປະເທດອື່ນໆ | ✓ | |
| 2 | ສົ່ງເສີມຄວາມເທົ່າທຽມ ແລະ ຍຸຕິທຳໃນໂລກ ໃຫ້ມີປະສິດຕິພາບຫຼາຍຂຶ້ນໃນແຕ່ລະຂົງເຂດຂອງປະຊາຄົມໂລກ | ✓ | |
| 3 | ເຊື່ອມໂຍງ, ສ້າງຄວາມສຳພັນກັບຄົນໃນປະເທດຕ່າງໆ ແລະ ວັດທະນະທຳອື່ນໆ | ✓ | |

| | | | |
|---|---|---|---|
| 4 | ຊຸກຍູ້ການປະຕິບັດບັນດາສັນຍາສາກົນ, ສົນທິສັນຍາ, ອະນຸສັນຍາທີ່ກ່ຽວຂ້ອງກັບບັນຫາທົ່ວໂລກ | ✓ | |
| 5 | ເຂົ້າໃຈທັດສະນະຂອງຕົນເອງ ແລະ ທັດສະນະຂອງຄົນອື່ນກ່ຽວກັບບັນຫາໂລກ | ✓ | |
| 6 | ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນສົມບັດມີຄວາມຕື່ນຕົວພົວພັນກັບຄົນທີ່ຢູ່ອ້ອມຂ້າງ | | ✓ |
| 7 | ເຂົ້າໃຈວິທີການທີ່ຄົນ ແລະ ປະເທດຕ່າງໆໃນໂລກມີການເຊື່ອມຕໍ່ກັນ ເພິ່ງພາເຊິ່ງກັນ ແລະ ກັນ. | ✓ | |
| 8 | ມີຄວາມສາມັກຄີຊ່ວຍເຫຼືອຄົນອື່ນ ແລະ ສັງຄົມ | | ✓ |
| 9 | ເຂົ້າໃຈບັນຫາໂລກ | ✓ | |
| 10 | ກຽມພ້ອມປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາປະເທດຊາດ ແລະ ລະບອບປະຊາທິປະໄຕປະຊາຊົນລາວ | | ✓ |
| 11 | ເຄົາລົບຫຼັກການຂອງຄວາມຫຼາກຫຼາຍທາງດ້ານວັດທະນະທຳ | ✓ | |

**ໝາຍເຫດ:**

- ຄູສາມາດນຳໃຊ້ວິທີການສອນອື່ນມາໃຊ້ແທນ ຖ້າຫາກເຫັນວ່າເປັນວິທີທີ່ສອດຄ່ອງ ແລະ ເໝາະສົມ.

**ເອກະສານອ້າງອີງ:**

- https://www.theglobalcitizensinitiative.org/the-rights-and-responsibilities-of-global-citizenship/ By Ron Israel, Co-Founder and Director, The Global Citizens' Initiative/ July, 2015

# ບົດທີ 12 ການພັດທະນາຕົນເອງໃຫ້ສົມບູນ

## ສອນແຊກຊ້ອນຫົວຂໍ້ທີ 1.2 ການຮັບຮູ້ຕົນເອງ

ເວລາ1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມຮັບຮູ້ກ່ຽວກັບຕົນເອງ ແລະ ວິທີການພັດທະນາຕົນເອງໃຫ້ສົມບູນ.
- ພັດທະນາຕົນເອງໃຫ້ສົມບູນຕາມຄຸນຄ່າຂອງຄຸນສົມບັດສັງຄົມ.
- ປຽບທຽບພຶດຕິກຳທີ່ດີ ແລະ ບໍ່ດີ ເພື່ອການພັດທະນາຕົນເອງໃຫ້ສົມບູນ.

## II. ເນື້ອໃນ

ພຶດຕິກຳແມ່ນເປົ້າໝາຍໃນການຮຽນຮູ້ທີ່ຈະຈຳແນກລະຫວ່າງຄວາມດີ ແລະ ຄວາມຊົ່ວ. ບຸກຄົນທີ່ມີພຶດຕິກຳດີແມ່ນການສ້າງນິໄສທີ່ດີ, ການຄວບຄຸມຕົນເອງ, ມີຄວາມຮັບຜິດຊອບ, ມີລະບຽບວິໄນ, ການຮຽນຮູ້ຢ່າງຕໍ່ເນື່ອງ, ການມີເປົ້າໝາຍ, ຍອມຮັບຄຳຕຳໜິຂອງຄົນອື່ນເພື່ອພັດທະນາຕົນເອງ... ສ່ວນພຶດຕິກຳທີ່ບໍ່ດີແມ່ນບຸກຄົນທີ່ເຫັນແກ່ຕົວ, ມັກນິນທາ ແລະ ທັກຫຼັງຄົນອື່ນ, ການໃຊ້ອາລົມ, ແຂງກະດ້າງ, ຝືນຕໍ່ລະບຽບ... ໃນນັ້ນ, ຄຸນລັກສະນະຂອງພຶດຕິກຳທີ່ດີມີຄວາມເຊື່ອທີ່ມີພະລັງຊ່ວຍໃຫ້ມະນຸດສາມາດນຳເອົາທ່າແຮງອອກມາໄດ້ ແລະ ມີພະລັງແຕ່ສິ່ງທີ່ດີ.

ການຮັບຮູ້ຕົນເອງແມ່ນຮູ້ສັງເກດ, ຕີລາຄາກ່ຽວກັບຄວາມສາມາດ, ທັດສະນະທ່າທີການປະພຶດ, ວຽກງານ, ຈຸດດີ, ຈຸດອ່ອນຂອງຕົນເອງ. ຄຸນລັກສະນະຂອງພຶດຕິກຳທີ່ດີ ແລະ ຄວາມເຊື່ອທີ່ມີພະລັງຊ່ວຍໃຫ້ມະນຸດສາມາດນຳເອົາທ່າແຮງອອກມາໄດ້ ແລະ ມີພະລັງແຕ່ສິ່ງທີ່ດີຄື ມີການກຳນົດເປົ້າໝາຍ, ມີການສ້າງນິດໄສທີ່ດີ ເຊັ່ນ: ການຄວບຄຸມຕົນເອງ, ຄວາມຮັບຜິດຊອບ, ມີລະບຽບວິໄນ, ການຮຽນຮູ້ຢ່າງຕໍ່ເນື່ອງ ແລະ ອື່ນໆ. ການຮັບຮູ້ຕົນເອງແມ່ນຮູ້ສັງເກດ, ຕີລາຄາກ່ຽວກັບຄວາມສາມາດ, ທັດສະນະທ່າທີການປະພຶດ, ວຽກງານ, ຈຸດດີ, ຈຸດອ່ອນຂອງຕົນເອງ.

ການພັດທະນາຕົນເອງແມ່ນຂະບວນການຂອງການຮຽນຮູ້ສິ່ງໃໝ່ ແລະ ສ້າງທັກສະໃໝ່ເພື່ອຊ່ວຍເຮົາມີໂອກາດໄດ້ປະສົບຄວາມສຳເລັດ, ບັນລຸເປົ້າໝາຍຕົນເອງໄດ້. ທຸກຄົນສາມາດ

ປັບປຸງຕົນເອງດ້ວຍຄຸນສົມບັດທີ່ດີ ໂດຍຜ່ານຂະບວນການຝຶກອົບຮົມຢ່າງຕໍ່ເນື່ອງ ເພາະມັນຈະຊ່ວຍໃຫ້ແຕ່ລະຄົນໄດ້ຮັບການພັດທະນາດີຂຶ້ນ, ຢາກເຮັດສຳເລັດໜ້າທີ່ ແລະ ມີຄວາມກ້າວໜ້ານັ້ນຕ້ອງໝັ່ນຊອກຮູ້ຮ່ຳຮຽນ, ຮຽນນຳຄູອາຈານ, ໝູ່ເພື່ອນ, ຕຳລາ, ຈາກຕົວຈິງ ແລະ ສັງຄົມ, ຈົ່ງຮັກພັກດີຕໍ່ປະເທດຊາດ, ປະຊາຊົນ, ປະຕິບັດລະບຽບກົດໝາຍ, ຄຳສັ່ງ ແລະ ຂໍ້ກຳນົດຂອງພັກລັດວາງອອກ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນວິຊາສຶກສາພົນລະເມືອງ ຂັ້ນ ມ.5
2. ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.5

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ລະດົມສະໝອງ**

- ຄູຕັ້ງຄຳຖາມ

1) ພັນທະແມ່ນຫຍັງ?

- ຄູໃຫ້ນັກຮຽນອາສາສະໝັກຕອບ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ.

**2. ສະເໜີບົດຮຽນໃໝ່**

**ຂ. ສົນທະນາ (5 ນາທີ)**

- ຄູເວົ້າໃຫ້ນັກຮຽນວ່າ: ມື້ນີ້ພວກເຮົາຈະມາຮຽນກ່ຽວກັບການພັດທະນາຕົນເອງໃຫ້ສົມ ບູນ ໂດຍຄູຕັ້ງຄຳຖາມ.
- ຖ້າຢາກເປັນນັກຮຽນເກັ່ງຄວນປະຕິບັດຕົນແນວໃດ?
- ນັກຮຽນອາສາສະໝັກຕອບ.
- ຄູສະຫຼຸບຄືນໃຫ້ນັກຮຽນ.

**ຄ. ສົນທະນາເປັນຄູ່ (25 ນາທີ)**

- ຄູແບ່ງນັກຮຽນເປັນຄູ່ແລ້ວ ຄູຕັ້ງຄຳຖາມໃຫ້ນັກຮຽນດັ່ງລຸ່ມນີ້:

1) ຈົ່ງອະທິບາຍການຮັບຮູ້ຕົນເອງ.

2) ການພັດທະນາຕົນເອງແມ່ນພັດທະນາແນວໃດ?

3) ຍ້ອນຫຍັງຈຶ່ງມີພັດນະນາຕົນເອງໃຫ້ດີຂຶ້ນ.

4) ປຽບທຽບພຶດຕິກຳທີ່ດີ ແລະ ບໍ່ດີ ເພື່ອການພັດທະນາຕົນເອງໃຫ້ສົມບູນ.

- ນັກຮຽນຕາງໜ້າແຕ່ລະຄູ່ຂຶ້ນມາລາຍງານ ສ່ວນຄູ່ອື່ນໆແມ່ນຕິດຕາມການລາຍງານພ້ອມທັງຕິບມືຍ້ອງຍໍຊົມເຊີຍ.
- ຄູ ແລະ ນັກຮຽນສະຫຼຸບສັງລວມຮ່ວມກັນ.

1) ການຮັບຮູ້ຕົນເອງແມ່ນຮູ້ສັງເກດ, ຕີລາຄາກ່ຽວກັບຄວາມອາດສາມາດ, ທັດສະນະທ່າທີ, ການປະພຶດ, ວຽກງານ, ຈຸດດີ, ຈຸດອ່ອນຂອງຕົນເອງ.

2) ການພັດທະນາຕົນເອງແມ່ນຕ້ອງມີຄວາມພະຍາຍາມຢ່າງຕັ້ງໜ້າ, ມີຄວາມພາກພຽນ, ມີຫົວຄິດປະດິດສ້າງຊອກຮູ້ຮໍ່າຮຽນ, ຝຶກຝົນຫຼໍ່ຫຼອມ, ມີຄວາມຮັບຜິດຊອບສູງ ແລະ ເຮັດວຽກມີແຜນການ, ຕິດຕາມກວດກາ, ຮູ້ຖອດຖອນບົດຮຽນ, ແກ້ໄຂຂໍ້ຜິດພາດໃນວຽກງານຂອງຕົນເອງ ແລະ ເສີມຂະຫຍາຍຈຸດດີເພື່ອສ້າງຕົນເອງໃຫ້ເປັນຄົນດີມີຄຸນສົມບັດ, ມີຄວາມກ້າວໜ້າ ແລະ ມີຜົນປະໂຫຍດໃຫ້ແກ່ສັງຄົມ.

3) ຍ້ອນໃນໂລກປັດຈຸບັນ ສັງຄົມມີການພັດທະນາໄປເລື້ອຍໆ, ຄວາມຮຽກຮ້ອງຕ້ອງການຂອງຄົນໃນສັງຄົມນັບມື້ນັບສູງຂຶ້ນ, ທຸກຄົນຕ້ອງໄດ້ພັດທະນາຕົນເອງຢ່າງຮອບດ້ານທີ່ຈະຕ້ອງໄດ້ຍົກລະດັບຄວາມຮູ້ໃໝ່ ເພື່ອໃຫ້ເຂົ້າໃຈກັບສະພາບການປ່ຽນແປງທີ່ເກີດຂຶ້ນຢູ່ພາຍໃນປະເທດກໍຄືຢູ່ໃນໂລກ.

4) ພຶດຕິກຳທີ່ດີແມ່ນການຮູ້ຈຳແນກລະຫວ່າງຄວາມດີ ແລະ ຄວາມຊົ່ວ. ບຸກຄົນທີ່ມີພຶດຕິກຳດີແມ່ນການສ້າງນິດໄສທີ່ດີ, ການຄວບຄຸມຕົນເອງ, ມີຄວາມຮັບຜິດຊອບ, ມີລະບຽບວິໄນ, ການຮຽນຮູ້ຢ່າງຕໍ່ເນື່ອງ, ການມີເປົ້າໝາຍ, ຍອມຮັບຄຳຕຳນິຈາກຄົນອື່ນເພື່ອພັດທະນາຕົນເອງ. ສຳລັບພຶດຕິກຳທີ່ບໍ່ດີແມ່ນບຸກຄົນທີ່ເຫັນແກ່ຕົວ, ມັກນິນທາ ແລະ ທັກຫຼັງຄົນອື່ນ, ການໃຊ້ອາລົມ, ແຂງກະດ້າງ, ຝືນຕໍ່ລະບຽບ...

**ຄ. ສົນທະນາຖາມ-ຕອບ (10 ນາທີ)**

- ຄູຕັ້ງຄຳຖາມ:

1) ເພື່ອຢາກພັດທະນາຕົນເອງໃຫ້ສົມບູນຄວນມີວິທີແນວໃດ?

- ຕາງໜ້ານັກຮຽນ 2-3 ຄົນອາສາສະໝັກຕອບ.
- ຄູສະຫຼຸບຄຳຕອບໃຫ້ນັກຮຽນ.

1) ເພື່ອຢາກພັດທະນາຕົນເອງໃຫ້ສົມບູນມີຄື:

- ຕ້ອງຮັບຮູ້ຈຸດດີ, ຈຸດອ່ອນຂອງຕົນເອງເພື່ອທຽບໃສ່ບັນດາມາດຕະຖານຄຸນສົມບັດທີ່ໄດ້ປະຕິບັດຢູ່ໃນສັງຄົມ.
- ສ້າງແຜນຝຶກອົບຮົມຫຼໍ່ຫຼອມຕົນເອງຕາມແຕ່ລະໄລຍະເວລາທີ່ກຳນົດໄວ້ຢ່າງລະອຽດ.
- ກຳໄດ້ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກທີ່ຈະເກີດຂຶ້ນ ເພື່ອຫາວິທີແກ້ໄຂໃຫ້ທັນການ.
- ມີຜູ້ປຶກສາທີ່ມີຄວາມເຊື່ອໝັ້ນ ເພື່ອແນະນຳຊ່ວຍເຫຼືອໃນດ້ານຄວາມຄິດ ແລະ ການປະຕິບັດໄດ້ຮັບຜົນດີ.
- ສັງເກດຕີລາຄາແຕ່ລະໄລຍະປະຕິບັດ ແລະ ສະຫຼຸບຖອດຖອນບົດຮຽນເພື່ອປັບປຸງແກ້ໄຂໃຫ້ທັນເວລາ.
- ມີຄວາມຈິງໃຈຮັບເອົາຄຳຕຳນິຕິຊົມຈາກຄົນອື່ນ ດ້ວຍຄວາມພໍໃຈ ເພື່ອປັບປຸງແກ້ໄຂ.
- ສ້າງແນວຄິດເປັນເຈົ້າການ, ມີຄວາມຕື່ນຕົວຫ້າວຫັນ, ມີຄວາມຮັບຜິດຊອບຕໍ່ວຽກງານສ່ວນຕົວ.
- ປະກອບສ່ວນໃນການອອກແຮງງານ ແລະ ຈົ່ງຮັກພັກດີຕໍ່ປະເທດຊາດ.

**3. ສະຫຼຸບ (5 ນາທີ)**

**ສັງລວມເນື້ອໃນ**:

ການພັດທະນາຕົນເອງແມ່ນຄຸນທາດທີ່ສຳຄັນຂອງທຸກຄົນໃນສັງຄົມ, ເພາະມັນຈະຊ່ວຍໃຫ້ແຕ່ລະຄົນໄດ້ຮັບການພັດທະນາດີຂຶ້ນ, ຢາກເຮັດສຳເລັດໜ້າທີ່ ແລະ ມີຄວາມກ້າວໜ້ານັ້ນຕ້ອງພັດທະນາຕົນເອງຢ່າງຕໍ່ເນື່ອງ ເຊັ່ນ: ຊອກຮູ້ຮ່ຳຮຽນ, ຮຽນນຳຄູອາຈານ, ໝູ່ເພື່ອນ, ຕຳລາ, ຈາກຕົວຈິງ ແລະ ສັງຄົມ.

ໃນການພັດທະນາຕົນເອງແມ່ນຮູ້ຈັກຈຳແນກລະຫວ່າງສິ່ງທີ່ດີ ແລະ ບໍ່ດີຂອງຄົນ. ບຸກຄົນທີ່ມີພຶດຕິກຳດີແມ່ນສາມາດຄວບຄຸມຕົນເອງ, ມີຄວາມຮັບຜິດຊອບ, ມີລະບຽບວິໄນ, ຍອມຮັບຄຳຕຳນິຈາກຄົນອື່ນເພື່ອພັດທະນາຕົນເອງຢ່າງຕໍ່ເນື່ອງ ແລະ ອື່ນໆ. ສ່ວນພຶດຕິກຳທີ່ບໍ່ດີແມ່ນບຸກຄົນທີ່ເຫັນແກ່ຕົວ, ມັກຈົ່ມຂວັນ, ບໍ່ມີຄວາມສັດຊື່, ບໍ່ປະຕິບັດຕາມລະບຽບ ແລະ ອື່ນໆ.

## V. ການວັດ ແລະ ປະເມີນຜົນ

**ວັດ ແລະ ປະເມີນຜົນຈາກ:**

- ຄູໃຫ້ນັກຮຽນໝາຍ ✓ ໃສ່ ຫ້ອງທີ່ເປັນວ່າຖືກຕ້ອງທີ່ສຸດໃນຕາຕະລາງລຸ່ມນີ້:

| ລ/ດ | ພຶດຕິກຳ | ພຶດຕິກຳທີ່ດີ | ພຶດຕິກຳທີ່ບໍ່ດີ |
|---|---|---|---|
| 1 | ຄົນທີ່ຍອມຮັບຄຳຕຳນິຂອງຄົນອື່ນເພື່ອພັດທະນາຕົນເອງ | ✓ | |
| 2 | ຄົນທີ່ຍອມຮັບຄຳຕຳນິຂອງຄົນອື່ນ ແຕ່ບໍ່ມີການປັບປຸງຕົນເອງ | | ✓ |
| 3 | ຄົນທີ່ບໍ່ປະຕິບັດລະບຽບຂອງໂຮງຮຽນ ແຕ່ລາວເປັນນັກຮຽນເກັ່ງໃນຫ້ອງ | | ✓ |
| 4 | ຄົນທີ່ມີຄວາມຮັບຜິດຊອບ, ມີລະບຽບວິໄນ, ການຝຶກຝົນຫຼໍ່ຫຼອມຕົນເອງຢູ່ສະເໝີ | ✓ | |
| 5 | ຄົນທີ່ພັດທະນາຕົນເອງ, ຊອກຮູ້ຮ່ຳຮຽນ, ຮູ້ຈຸດດີ ແລະ ຈຸດອ່ອນຂອງຕົນ | ✓ | |
| 6 | ຄົນທີ່ມີແນວຄິດເປັນເຈົ້າການ, ມີຄວາມຕື່ນຕົວຫ້າວຫັນ, ບໍ່ສົນໃຈຄວາມຮັບຜິດຊອບຕໍ່ວຽກງານ | | ✓ |
| 7 | ຄົນທີ່ເກີດໃນຄອບຄົວທຸກຍາກ, ແຕ່ລາວຕັ້ງໃຈຮ່ຳຮຽນ, ປະຕິບັດລະບຽບໂຮງຮຽນ | ✓ | |
| 8 | ຄົນທີ່ມີຄວາມຮັບຜິດຊອບລະບຽບວິໄນ, ບໍ່ສົນໃຈການຝຶກຝົນຫຼໍ່ຫຼອມຕົນເອງ | | ✓ |
| 9 | ຄົນທີ່ມີຄວາມຈິງໃຈຮັບເອົາຄຳຕຳໜິຕິຊົມຈາກຄົນອື່ນດ້ວຍຄວາມພໍໃຈ ເພື່ອປັບປຸງຕົນເອງໃຫ້ມີຄວາມຮູ້ | ✓ | |
| 10 | ຄົນທີ່ເປັນນັກຮຽນເກັ່ງມີພຶກຕິກຳທີ່ເຫັນແກ່ຕົວ | | ✓ |

| | | | |
|---|---|---|---|
| 11 | ຄົນທີ່ມີແນວຄິດເປັນເຈົ້າການ, ມີຄວາມຕື່ນຕົວຫ້າວຫັນ, ມີຄວາມຮັບຜິດຊອບຕໍ່ວຽກງານ | ✓ | |
| 12 | ຄົນທີ່ປະກອບສ່ວນໃນການອອກແຮງງານ ແລະ ຈົ່ງຮັກພັກດີຕໍ່ປະເທດຊາດ | ✓ | |
| 13 | ຄົນທີ່ເປັນຄະນະຫ້ອງ ນຳພານັກຮຽນໃນຫ້ອງອອກແຮງງານແລ້ວພາກັນໄປຫຼິ້ນເກມຕາມຮ້ານ | | ✓ |

**ໝາຍເຫດ**:

- ກິດຈະກຳໃດທີ່ບໍ່ສອດຄ່ອງກັບສະພາບຕົວຈິງໃນທ້ອງຖິ່ນ ຄູກໍສາມາດຫາວິທີອື່ນມານຳໃຊ້ແທນໄດ້.

# ບົດທີ 14 ຊຸມຊົນ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2 ຄວາມຮັບຜິດຊອບຂອງພົນລະເມືອງຕໍ່ຊຸມຊົນ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ບົດບາດ, ຄວາມສາມັກຄີ, ຄວາມເມດຕາ ແລະ ການຢູ່ຮ່ວມກັນໂດຍສັນຕິໃນຊຸມຊົນ.
- ປະຕິບັດຕົນສ້າງຄວາມສາມັກຄີ, ຄວາມເມດຕາ ແລະ ການຢູ່ຮ່ວມກັນໂດຍສັນຕິໃນຊຸມຊົນ.
- ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄວາມສາມັກຄີ, ຄວາມເມດຕາ ແລະ ການດໍາລົງຊີວິດຢູ່ຮ່ວມກັນໂດຍສັນຕິໃນຊຸມຊົນ.

## II. ເນື້ອໃນ

ຄວາມເມດຕາເຫັນອົກເຫັນໃຈເຊິ່ງກັນ ແລະ ກັນ, ເບິ່ງແຍງ, ແບ່ງເບົາຄວາມທຸກສຸກ, ປົກປ້ອງຜົນປະໂຫຍດ, ຢູ່ຮ່ວມກັນຢ່າງສັນຕິ ແລະ ບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ກັນ. ສະນັ້ນ, ເພື່ອເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ.

ຄວາມສາມັກຄີ ແມ່ນການຢູ່ຮ່ວມກັນຂອງໝູ່ຄະນະ, ຂອງໜ່ວຍງານ, ຂອງຊຸມຊົນ, ສັງຄົມ ແລະ ຂອງຄົນໃນປະເທດ ເພື່ອປະຕິບັດກິດຈະກໍາຕ່າງໆ ໃຫ້ສໍາເລັດໄປໄດ້ດີ.

ດັ່ງນັ້ນ ນັກຮຽນທຸກຄົນຕ້ອງຝຶກຝົນຫຼໍ່ຫຼອມ ຕົນເອງໃຫ້ມີຄວາມສາມັກຄີໃນການດໍາລົງຊີວິດຢູ່ຮ່ວມກັນໂດຍສັນຕິໃນຊຸມຊົນ, ເຮົາເປັນນັກຮຽນຄວນມີຄວາມສາມັກຄີກັນໃນການຮໍ່າຮຽນ, ການປະຕິບັດເຮັດກິດຈະກໍາເປັນກຸ່ມ ຫຼື ບຸກຄົນ ທີ່ຄູມອບໝາຍກໍ່ຄືທາງໂຮງຮຽນມອບໃຫ້, ຮູ້ຮັກສາຊື່ສຽງຂອງໂຮງຮຽນ, ຮັກສາອະນາໄມບໍລິເວນຫ້ອງຮຽນ ຫຼື ບໍລິເວນໂຮງຮຽນໃຫ້ສະອາດຢູ່ສະເໝີ, ປົກປັກຮັກສາຊັບສົມບັດຂອງໂຮງຮຽນ.

ໃນຄອບຄົວຕ້ອງຮູ້ເຄົາລົບນັບຖື, ຮູ້ບຸນຄຸນ ແລະ ມີຄວາມກະຕັນຍູຕໍ່ພໍ່ແມ່, ເຖົ້າແກ່ ແລະ ອ້າຍເອື້ອຍນ້ອງ, ຮູ້ໃຫ້ອະໄພ, ຮູ້ແບ່ງເບົາຄວາມທຸກສຸກກັບຄົນອ້ອມຂ້າງ, ໝູ່ເພື່ອນ ໃນໂຮງຮຽນ ແລະ ຊຸມຊົນ, ເຄົາລົບນັບຖື, ຮູ້ບຸນຄຸນຕໍ່ນັກຮົບວິລະຊົນ ແລະ ຜູ້ມີຄຸນງາມຄວາມດີຕໍ່

ປະເທດຊາດ.

ການປະຕິບັດກິດຈະກຳຂອງບ້ານໃນຊຸມຊົນປະກອບສ່ວນເຂົ້າໃນການອອກແຮງງານລວມນຳບ້ານ, ຊາວໜຸ່ມບ້ານ ແລະ ວຽກງານອື່ນໆທີ່ທາງບ້ານຈັດຂຶ້ນຕາມຄວາມສາມາດຂອງຕົນ ເພື່ອສ້າງຄວາມສາມັກຄີກັບກຸ່ມຄົນໃນບ້ານ ແລະ ຊຸມຊົນທີ່ຕົນດຳລົງຊີວິດຢູ່ຮ່ວມກັນໂດຍສັນຕິ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.5
2. ປຶ້ມຄູ່ມືການແຊກຊ້ອນການສຶກສາພົນລະເມືອງໂລກ
3. ເຈ້ຍແຜ່ນໃຫຍ່, ນ້ອຍ, ບິກ, ສໍ, ກາວຕິດ ແລະ ອື່ນໆ ທີ່ກ່ຽວຂ້ອງກັບບົດຮຽນ

## IV. ກິດຈະກຳການຮຽນການສອນ

**ຊົ່ວໂມງທີ 2**

**1. ທົບທວນຄືນບົດທີ່ຮຽນຜ່ານມາ (5 ນາທີ)**

**ຄູຕັ້ງຄຳຖາມ**

1) ຄອບຄົວແມ່ນຫຍັງ?

- ຄູໃຫ້ນັກຮຽນແຕ່ລະຄົນຄົ້ນຄວ້າ ແລ້ວໃຫ້ອາສາສະໝັກລຸກຂຶ້ນຕອບ.

**ຄູສະຫຼຸບ**:

1) ຄອບຄົວແມ່ນສະຖາບັນສັງຄົມທີ່ສຳຄັນທີ່ສຸດ ແລະ ເປັນຫົວໜ່ວຍຕົ້ນຕໍຂອງສັງຄົມ ຊຶ່ງມີບັນດາບຸກຄົນທີ່ດຳລົງຊີວິດຢູ່ຮ່ວມກັນຢ່າງໃກ້ຊິດສະໜິດແໜ້ນ, ຄອບຄົວແມ່ນຈຸລັງໜຶ່ງຂອງສັງຄົມ ຊຶ່ງປະກອບມີຜົວ-ເມຍ, ລູກ ຫຼື ສະມາຊິກອື່ນໆ.

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາກ່ຽວກັບຊຸມຊົນ ແລະ ບົດບາດຂອງຊຸມຊົນຕໍ່ການດຳລົງຊີວິດ (20 ນາທີ)**

- ຄູແບ່ງນັກຮຽນອອກເປັນ 4 ກຸ່ມຕາມຄວາມເໝາະສົມ ພ້ອມຢາຍເຈ້ຍແຜ່ນໃຫຍ່ໃຫ້ນັກຮຽນຂຽນຄຳຕອບໃສ່ເພື່ອຂຶ້ນລາຍງານຄູ.
- ຄູຢາຍຄຳຖາມໃນປຶ້ມແບບຮຽນ ໃຫ້ແຕ່ລະກຸ່ມຄົ້ນຄວ້າ, ສະມາຊິກທຸກຄົນໃນກຸ່ມມີສ່ວນຮ່ວມໃນການຄົ້ນຄວ້າ.

**ຄຳຖາມ**:

1) ບົດບາດຂອງຊຸມຊົນຕໍ່ການດຳລົງຊີວິດແມ່ນແນວໃດ?

2) ຄວາມເມດຕາແມ່ນຫຍັງ?

3) ການຢູ່ຮ່ວມກັນໂດຍສັນຕິຄວນປະຕິບັດຄືແນວໃດ?

- ຄູໃຫ້ຕາງໜ້າກຸ່ມຂຶ້ນສະເໜີ ສ່ວນຜູ້ອື່ນຟັງ ແລະ ປະກອບຄວາມເຫັນເພີ່ມເຕີມ, ແຕ່ລະຄັ້ງທີ່ຕາງໜ້າກຸ່ມຂຶ້ນສະເໜີ ຄູຕ້ອງອະທິບາຍຄືນເນັ້ນໃຫ້ນັກຮຽນເຂົ້າໃຈເນື້ອໃນສຳຄັນ.

**ຄູສະຫຼຸບ**:

1) ການປະຕິບັດກິດຈະກຳຂອງບ້ານໃນຊຸມຊົນປະກອບສ່ວນເຂົ້າໃນການອອກແຮງງານລວມນຳບ້ານ, ຊາວໜຸ່ມບ້ານ ແລະ ວຽກງານອື່ນໆທີ່ທາງບ້ານຈັດຂຶ້ນຕາມຄວາມສາມາດຂອງຕົນ ເພື່ອສ້າງຄວາມສາມັກຄີກັບກຸ່ມຄົນໃນບ້ານ ແລະ ຊຸມຊົນທີ່ຕົນດຳລົງຊີວິດຢູ່ຮ່ວມກັນໂດຍສັນຕິ.

2) ຄວາມເມດຕາ ແມ່ນຄວາມເຫັນອົກເຫັນໃຈເຊິ່ງກັນ ແລະ ກັນ, ເບິ່ງແຍງໃນເວລາທຸກຍາກລັບລົນ, ແບ່ງເບົາຄວາມທຸກສຸກ, ປົກປ້ອງຜົນປະໂຫຍດຢູ່ຮ່ວມກັນໂດຍສັນຕິ ແລະ ບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ກັນ.

3) ຄົນເຮົາດຳລົງຊີວິດຢູ່ຮ່ວມກັນເປັນກຸ່ມ, ເປັນຊົນເຜົ່າ, ມີຄວາມສຳຄັນທາງດ້ານວັດຖຸ ແລະ ຈິດໃຈ. ການຢູ່ຮ່ວມກັນຕ້ອງປັບຕົວເຂົ້າຫາກັນເອົາໃຈໃສ່ຕໍ່ກັນ, ມີຄວາມສາມັກຄີ, ຮູ້ອະໄພເຊິ່ງກັນ ແລະ ກັນ ດຳລົງຊີວິດຢູ່ຮ່ວມກັນຢ່າງມີຄວາມສຸກ.

**ຂ. ສົນທະນາຖາມ-ຕອບ (20 ນາທີ)**

**ຄູຕັ້ງຄຳຖາມ**:

1) ນັກຮຽນຈະສ້າງຄວາມສາມັກຄີກັບໝູ່ເພື່ອນໃນຊຸມຊົນໃນການດຳລົງດີຊິດຢູ່ຮ່ວມກັນຢ່າງສັນຕິແນວໃດ?.

- ນັກຮຽນຄົ້ນຄວ້າສົນທະນາລວມໝົດຫ້ອງກ່ຽວກັບຄຳຖາມ ແລະ ຂຽນຄຳຕອບໃສ່ເຈ້ຍ ເພື່ອສົ່ງໃຫ້ຄູ.
- ຄູໃຫ້ນັກຮຽນຕອບຕາມຄວາມເຂົ້າໃຈ 2 ຫາ 3 ຄົນ ຈາກນັ້ນຄູເກັບເອົາເຈ້ຍຄຳຕອບຂອງແຕ່ລະຄົນເພື່ອໃຫ້ຄະແນນ.
- ຄູ ແລະ ນັກຮຽນຮ່ວມກັນ.

ນັກຮຽນທຸກຄົນຕ້ອງຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ມີນ້ຳໃຈຕໍ່ໝູ່ເພື່ອນ, ໃນການຮ່ຳຮຽນ,

ການອອກແຮງງານ ແລະ ປະກອບສ່ວນເຮັດວຽກງານສັງຄົມ.

**3. ຄູສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບການຮຽນໃນຊົ່ວໂມງນີ້ໂດຍຫຍໍ້:

ການສ້າງຄວາມສາມັກຄີໝູ່ເພື່ອນໃນໂຮງຮຽນ, ຊຸມຊົນ ເຮົາຕ້ອງມີຄວາມເມດຕາ, ເອື້ອເຟື້ອເພື່ອແຜ່, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ເຄົາລົບນັບຖືຄວາມແຕກຕ່າງທີ່ຫຼາກຫຼາຍທາງດ້ານພາສາ, ວັດທະນະທຳ ແລະ ຮັບຟັງຄວາມຄິດເຫັນທີ່ແຕກຕ່າງຫຼາກຫຼາຍ ໃນການດຳລົງຊີວິດໃນແຕ່ລະມື້ເພື່ອຫຼີກເວັ້ນຄວາມບໍ່ເຂົ້າໃຈກັນ, ກຽດຊັງ, ການໃຊ້ຄວາມຮຸນແຮງ ແລະ ສິ່ງອື່ນໆທີ່ບໍ່ດີຕາມມາ.

ນັກຮຽນທຸກຄົນຕ້ອງປະຕິບັດຕົນດັ່ງນີ້: ເຄົາລົບນັບຖື, ຮູ້ບຸນຄຸນ, ມີຄວາມກະຕັນຍູຕໍ່ພໍ່ແມ່, ຮູ້ໃຫ້ອະໄພຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ເຄົາລົບນັບຖືທຸກຄົນບໍ່ວ່າຄົນລາວ ຫຼື ຄົນຕ່າງຊາດທີ່ອາໄສຢູ່ໃນປະເທດ ໃຫ້ຄວາມເປັນມິດໃນການດຳລົງຊີວິດຢູ່ຮ່ວມກັນໂດຍສັນຕິ.

## V. ການວັດ ແລະ ປະເມີນຜົນ

**ວັດ ແລະ ປະເມີນຈາກການຕອບຄຳຖາມປະລະໄນລຸ່ມນີ້:**

- ນັກຮຽນຈົ່ງໝາຍ ✓ ເອົາຄຳຕອບທີ່ຖືກຕ້ອງ

1. ນັກຮຽນຮ່ວມກັນອອກແຮງງານເຮັດຄວາມສະອາດໃນຫ້ອງຮຽນສະແດງເຖິງຫຍັງ?

   ກ. ຄວາມອົດທົນ ຂ. ຄວາມເມດຕາ

   ✓ ຄ. ຄວາມສາມັກຄີ ງ. ຄວາມປອງດອງ

2. ຂໍ້ໃດເປັນການສະແດງຄວາມສາມັກຄີກັນໃນໝູ່ຄະນະ?.

   ກ. ກຽມໄປຫຼິ້ນກັບໝູ່

   ຂ. ນັກກິລາດີເດັ່ນໃນໂຮງຮຽນ

   ✓ ຄ. ຂ້ອຍ ແລະ ເພື່ອນຮ່ວມກັນອະນາໄມຫ້ອງປະຊຸມ

   ງ. ຂ້ອຍເຮັດຄວາມສະອາດຫ້ອງຮຽນ

**ໝາຍເຫດ:**

- ກິດຈະກຳໃດທີ່ບໍ່ສອດຄ່ອງກັບສະພາບຕົວຈິງໃນທ້ອງຖິ່ນ ຄູກໍສາມາດຫາວິທີອື່ນມານຳໃຊ້ແທນໄດ້.,

# ບົດທີ 16 ບາງບັນຫາຈະຕ້ອງແກ້ໄຂໃນສັງຄົມໂລກ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 1 ການເສື່ອມໂຊມ ແລະ ການປົກປັກຮັກສາສະພາບແວດລ້ອມ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍພຶດຕິກຳຂອງມະນຸດທີ່ເປັນຜົນກະທົບຕໍ່ສິ່ງແວດລ້ອມຢູ່ບ່ອນອື່ນ ແລະ ການປົກປັກຮັກສາສະພາບແວດລ້ອມທີ່ດີໃນປັດຈຸບັນ ແລະ ອະນາຄົດ.
- ມີທັດສະນະຄະຕິຕໍ່ການເປັນຢູ່ທີ່ດີໃນປັດຈຸບັນ, ໃນອະນາຄົດຂອງຄົນກັບສິ່ງແວດລ້ອມຢູ່ບ່ອນອື່ນ ແລະ ການປົກປັກຮັກສາສະພາບແວດລ້ອມ.

## II. ເນື້ອໃນ

ສິ່ງແວດລ້ອມປະກອບດ້ວຍບັນດາປັດໄຈທາງດ້ານທຳມະຊາດ ແລະ ປັດໄຈທາງດ້ານວັດຖຸທີ່ມະນຸດສ້າງຂຶ້ນ, ທັງສອງປັດໄຈມີການພົວພັນສະໜິດແໜ້ນນຳກັນ ຊຶ່ງມັນຢູ່ອ້ອມຂ້າງຄົນເຮົາຄື: ດິນ, ນໍ້າ, ອາກາດ, ບັນດາແຮ່ທາດທີ່ມີຢູ່ໃຕ້ພື້ນດິນ, ໃນນໍ້າ, ໃນປ່າ... ຊຶ່ງມີຜົນກະທົບຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ.

ໃນປັດຈຸບັນໂລກມະນຸດໄດ້ມີການພັດທະນາໄປຢ່າງວ່ອງໄວທາງດ້ານເຕັກນິກ, ວິທະຍາສາດ ເພື່ອການຊົມໃຊ້ຂອງສັງຄົມ, ອັນໄດ້ມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ສິ່ງແວດລ້ອມ ໃນຂອບເຂດອັນກວ້າງຂວາງ ເຊັ່ນ: ການກໍ່ສ້າງສະຖານທີ່ຕ່າງໆ, ບຸກເບີກເນື້ອທີ່ດິນເພື່ອດຳເນີນການຜະລິດ, ໃຊ້ຊັບພະຍາກອນທຳມະຊາດແບບຟຸມເຟືອຍ, ຖິ້ມຂີ້ເຫຍື້ອຊະຊາຍ, ປ່ອຍນໍ້າເສຍ, ມົນລະພິດຈາກໂຮງງານ, ຖາງປ່າເຮັດໄຮ່ ຈູດປ່າ ແລະ ຕັດໄມ້ຊະຊາຍ. ຖ້າພວກເຮົາຍັງສືບຕໍ່ທຳລາຍສິ່ງແວດລ້ອມໄປອີກຈະເຮັດໃຫ້ສິ່ງທີ່ມີຊີວິດໃນໂລກເຖິງຂັ້ນດັບສູນ. ສະນັ້ນ, ການປົກປັກຮັກສາສິ່ງແວດລ້ອມແມ່ນໜ້າທີ່ຂອງທຸກໆຄົນ, ທຸກໆປະເທດໃນທົ່ວໂລກ.

ການໃຊ້ວັດຖຸສິ່ງຂອງທີ່ສາມາດນຳມາໃຊ້ຊໍ້າຄືນໄດ້ແທນຖົງຢາງປາລາສະຕິກເພື່ອໃຫ້ເກີດປະໂຫຍດຢ່າງກວ້າງຂວາງ ແລະ ຄຸ້ມຄ່າ, ຄັດແຍກຂີ້ເຫຍື້ອເພື່ອບາງຢ່າງສາມາດນຳມາ

ປ່ຽນແປງສະພາບຄືນໃໝ່ ເຊັ່ນ: ປລາສະຕິກ, ກະປ໋ອງ, ໂລຫະອື່ນໆ, ໃຊ້ນ້ຳຢ່າງປະຢັດ, ຫຼຸດຜ່ອນການປ່ອຍນ້ຳເສຍຈາກໂຮງງານລົງໃສ່ແມ່ນ້ຳ, ກຳຈັດຄວັນພິດຈາກໂຮງງານ ແລະ ລົດຍົນ, ການເດີນທາງດ້ວຍລົດສາທາລະນະ, ລົດຖີບ, ຖ້າໃກ້ກໍຍ່າງ, ໃຊ້ຜະລິດຕະພັນປະຢັດໄຟເບີ 5, ໃຊ້ດອກໄຟແອວອີດີ, ປິດປັກໄຟ ແລະ ໄຕ້ໄຟສະເພາະດອກທີ່ຈຳເປັນ, ຕ້ອງມີການບູລະນະຄືນ ຫຼື ຟື້ນຟູຂຶ້ນມາທົດແທນ ເຊັ່ນ: ການປູກຕົ້ນໄມ້ໃນບ້ານ ແລະ ຊຸມຊົນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງຂັ້ນ ມ. 5
2. ປຶ້ມຫຼັກສູດແຊກຊ້ອນສຶກສາພົນລະເມືອງໂລກເຂົ້າໃນສຶກສາພົນລະເມືອງ
3. ຮູບພາບສິ່ງແວດລ້ອມຕ່າງໆໃນປຶ້ມແບບຮຽນ ຫຼື ຮູບພາບທີ່ຫາມາໄດ້
4. ຮູບພາບສາເຫດ ແລະ ວິທີຫຼຸດສະພາບອາກາດເປັນພິດຢູ່ທ້າຍບົດ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ສົນທະນາຖາມ-ຕອບ**

- ຄູຕັ້ງຄຳຖາມກ່ຽວກັບບົດຮຽນທີ່ຜ່ານມາ:

**ຄຳຖາມ**:

1) ການພັດທະນາປະເທດຊາດແມ່ນຫຍັງ?

- ຄູເອີ້ນນັກຮຽນຕອບຄຳຖາມ 1-2 ຄົນ.

**ຄຳຕອບ**:

1) ການພັດທະນາປະເທດຊາດ ແມ່ນການສືບຕໍ່ກໍ່ສ້າງປະເທດໃຫ້ໝັ້ນຄົງ, ເຂັ້ມແຂງ, ພາຊາດລາວກ້າວຂຶ້ນເລື້ອຍໆໄປ ແລະ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ, ກາຍເປັນປະເທດສັນຕິພາບ ເອກະລາດ ປະ ຊາທິປະໄຕ ເອກະພາບ ວັດທະນະຖາວອນ.

**2. ສະເໜີບົດຮຽນໃໝ່**

**ຂ. ສົນທະນາເປັນກຸ່ມກ່ຽວກັບການເສື່ອມໂຊມຂອງສະພາບແວດລ້ອມ ແລະ ການປົກປັກຮັກສາສະພາບແວດລ້ອມ (40 ນາທີ)**

- ຄູແບ່ງກຸ່ມນັກຮຽນຕາມຄວາມເໝາະສົມ.
- ຄູໃຫ້ນັກຮຽນສັງເກດຮູບການເສື່ອມໂຊມຂອງສະພາບແວດລ້ອມ.




ການເສື່ອມໂຊມ ແລະ ການປົກປັກຮັກສາຂອງສະພາບແວດລ້ອມ

**ຄຳຖາມ:**

1) ຜ່ານການເບິ່ງຮູບພາບ ນັກຮຽນເຫັນໄດ້ເຖິງຜົນກະທົບໃນປັດຈຸບັນ ແລະ ໃນອະນາຄົດແນວໃດຕໍ່ກັບໂລກຂອງພວກເຮົາ?
2) ສະພາບແວດລ້ອມມີປັດໄຈຫຍັງແດ່?
3) ຍ້ອນຫຍັງສະພາບແວດລ້ອມຈຶ່ງເສື່ອມໂຊມ?
4) ນັກຮຽນຄວນຈະປົກປັກຮັກສາສະພາບແວດລ້ອມຄືແນວໃດແດ່?
 - ຄູໃຫ້ຕາງໜ້າກຸ່ມຕອບຕາມຄຳຖາມທີ່ຕັ້ງໄວ້
 - ຄູອະທິບາຍ ແລະ ເນັ້ນຄືນຄຳຕອບໃຫ້ນັກຮຽນເຂົ້າໃຈ ແລະ ເປັນເອກະພາບກັນ

**ຄຳຕອບ:**

1) ຜ່ານການເບິ່ງຮູບພາບ ນັກຮຽນເຫັນໄດ້ເຖິງ:
 - ຜົນກະທົບໃນປັດຈຸບັນເຊັ່ນ: ການປ່ອຍນ້ຳເປື້ອນ ແລະ ຖິ້ມຂີ້ເຫຍື້ອຊະຊາຍລົງແມ່ນ້ຳກໍຈະເຮັດໃຫ້ນ້ຳເປື້ອນເປິ່ສາມາດນຳມາໃຊ້ໄດ້ ແລະ ມີຜົນກະທົບໃນໄລຍະຍາວຕໍ່ສັດນ້ຳ ແລະ ອື່ນໆ.
 - ຜົນກະທົບໃນອະນາຄົດຕໍ່ກັບໂລກຂອງພວກເຮົາແມ່ນ: ເຮັດໃຫ້ດິນຟ້າອາກາດມີການປ່ຽນແປງເຊັ່ນ: ຝົນຕົກໜັກ, ນ້ຳປ່າໄຫຼນອງ, ອາກາດເປັນພິດ ແລະ ອາກາດຂອງໂລກຮ້ອນແຮງຂຶ້ນເລື້ອຍໆ.

2) ສິ່ງແວດລ້ອມປະກອບດ້ວຍບັນດາປັດໄຈທາງດ້ານທຳມະຊາດ ແລະ ປັດໄຈທາງດ້ານວັດຖຸທີ່ມະນຸດສ້າງຂຶ້ນ, ທັງສອງປັດໄຈມີການພົວພັນສະໜິດແໜ້ນນຳກັນ, ຊຶ່ງມັນຢູ່ອ້ອມຂ້າງຄົນເຮົາຄື: ດິນ, ນ້ຳ, ອາກາດ, ບັນດາແຮ່ທາດທີ່ມີຢູ່ໃຕ້ພື້ນດິນ, ໃນນ້ຳ, ໃນປ່າ... ຊຶ່ງມີຜົນກະທົບຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ.

3) ໃນປັດຈຸບັນໂລກມະນຸດໄດ້ມີການພັດທະນາໄປຢ່າງວ່ອງໄວທາງດ້ານເຕັກນິກ, ວິທະຍາສາດເພື່ອການຊົມໃຊ້ຂອງສັງຄົມ, ອັນໄດ້ມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ສິ່ງແວດລ້ອມໃນຂອບເຂດອັນກວ້າງຂວາງ ເຊັ່ນ: ການກໍ່ສ້າງສະຖານທີ່ຕ່າງໆ, ບຸກເບີກເນື້ອທີ່ດິນ ເພື່ອດຳເນີນການຜະລິດ, ໃຊ້ຊັບພະຍາກອນທຳມະຊາດແບບຟຸມເຟືອຍ, ຖິ້ມຂີ້ເຫຍື້ອຊະຊາຍ, ປ່ອຍນ້ຳເສຍ, ມົນລະພິດຈາກໂຮງງານ, ຖາງປ່າເຮັດໄຮ່ຈູດປ່າ ແລະ ຕັດໄມ້ຊະຊາຍ. ຖ້າພວກເຮົາຍັງສືບຕໍ່ທຳລາຍສິ່ງແວດລ້ອມໄປອີກຈະເຮັດໃຫ້ສິ່ງທີ່ມີຊີວິດໃນໂລກເຖິງຂັ້ນດັບສູນ. ສະນັ້ນ, ການປົກປັກຮັກສາສິ່ງແວດລ້ອມແມ່ນໜ້າທີ່ຂອງທຸກໆຄົນ, ທຸກໆປະເທດໃນທົ່ວໂລກ.

4) ພວກເຮົາຄວນຈະປົກປັກຮັກສາສະພາບແວດລ້ອມ ຄື: ການໃຊ້ວັດຖຸສິ່ງຂອງທີ່ສາມາດນຳມາໃຊ້ຊ້ຳຄືນໄດ້ແທນຖົງຢາງປລາສະຕິກ ເພື່ອໃຫ້ເກີດປະໂຫຍດຢ່າງກວ້າງຂວາງ ແລະ ຄຸ້ມຄ່າ, ຄັດແຍກຂີ້ເຫຍື້ອເພື່ອບາງຢ່າງສາມາດນຳມາປຸ່ງແປງສະພາບຄືນໃໝ່ ເຊັ່ນ: ປລາສະຕິກ, ກະປ໋ອງ, ໂລຫະອື່ນໆ, ໃຊ້ນ້ຳຢ່າງປະຢັດ, ຫຼຸດຜ່ອນການປ່ອຍນ້ຳເສຍຈາກໂຮງງານລົງໃສ່ແມ່ນ້ຳ, ກຳຈັດຄວັນພິດຈາກໂຮງງານ ແລະ ລົດຍົນ, ການເດີນທາງດ້ວຍລົດສາທາລະນະ, ລົດຖີບ, ຖ້າໃກ້ກໍຍ່າງ, ໃຊ້ຜະລິດຕະພັນປະຢັດໄຟເບີ 5, ໃຊ້ດອກໄຟແອວອີດີ, ປິດປັກໄຟ ແລະ ໄຕ້ໄຟສະເພາະດອກທີ່ຈຳເປັນ, ຕ້ອງມີການບູລະນະຄືນ ຫຼື ພື້ນຟູຂຶ້ນມາທົດແທນ ເຊັ່ນ: ການປູກຕົ້ນໄມ້ໃນບ້ານ ແລະ ຊຸມຊົນ.

**3. ສະຫຼຸບ (5 ນາທີ)**

- ສິ່ງແວດລ້ອມປະກອບດ້ວຍບັນດາປັດໄຈທາງດ້ານທຳມະຊາດ ແລະ ປັດໄຈທາງດ້ານວັດຖຸທີ່ມະນຸດສ້າງຂຶ້ນ, ທັງສອງປັດໄຈມີການພົວພັນສະໜິດແໜ້ນນຳກັນ, ຊຶ່ງມັນຢູ່ອ້ອມຂ້າງ ຄົນເຮົາ ຄື: ດິນ, ນ້ຳ, ອາກາດ, ບັນດາແຮ່ທາດທີ່ມີຢູ່ໃຕ້ພື້ນດິນ, ໃນນ້ຳ, ໃນປ່າ...

- ສະພາບແວດລ້ອມຈຶ່ງເສື່ອມໂຊມຍ້ອນວ່າ: ການກໍ່ສ້າງສະຖານທີ່ຕ່າງໆ, ບຸກເບີກ ເນື້ອທີ່ດິນເພື່ອດຳເນີນການຜະລິດ, ໃຊ້ຊັບພະຍາກອນທຳມະຊາດແບບຟຸມເຟືອຍ, ຖິ້ມຂີ້ເຫຍື້ອຊະຊາຍ, ປ່ອຍນ້ຳເສຍ, ມົນລະພິດຈາກໂຮງງານ, ຖາງປ່າເຮັດໄຮ່ຈູດປ່າ ແລະ ຕັດໄມ້ຊະຊາຍ...
- ພວກເຮົາຄວນຈະປົກປັກຮັກສາສະພາບແວດລ້ອມ ໂດຍການໃຊ້ວັດຖຸສິ່ງຂອງທີ່ສາມາດນຳມາໃຊ້ຊ້ຳຄືນເປັນຕົ້ນແມ່ນ ປລາສະຕິກ, ກະປ໋ອງ, ໂລຫະອື່ນໆ, ໃຊ້ນ້ຳຢ່າງປະຢັດ... ຫຼຸດຜ່ອນການປ່ອຍນ້ຳເສຍຈາກໂຮງງານລົງໃສ່ແມ່ນ້ຳ...

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຜົນຈາກ:

- ນັກຮຽນຈົ່ງໝາຍ ✓ ໃສ່ຄຳຕອບທີ່ເຫັນວ່າຖືກຕ້ອງທີ່ສຸດໃນຕາຕາລາງລຸ່ມນີ້:

| ລ/ດ | ເນື້ອໃນ | ສາເຫດທີ່ພາໃຫ້ສະພາບແວດລ້ອມເສື່ອມໂຊມ | ວິທີການປົກປັກຮັກສາສະພາບແວດລ້ອມ |
|---|---|---|---|
| 1 | ການກໍ່ສ້າງສະຖານທີ່ຕ່າງໆ | ✓ | |
| 2 | ການໃຊ້ວັດຖຸສິ່ງຂອງທີ່ສາມາດນຳມາໃຊ້ຊ້ຳຄືນໄດ້ແທນຖົງຢາງປລາສະຕິກ | | ✓ |
| 3 | ບຸກເບີກເນື້ອທີ່ດິນເພື່ອດຳເນີນການຜະລິດ | ✓ | |
| 4 | ຄັດແຍກຂີ້ເຫຍື້ອເພື່ອບາງຢ່າງສາມາດນຳມາປັບປຸງສະພາບຄືນໃໝ່ | | ✓ |
| 5 | ໃຊ້ຊັບພະຍາກອນທຳມະຊາດແບບຟຸມເຟືອຍ. | ✓ | |
| 6 | ໃຊ້ນ້ຳຢ່າງປະຢັດ | | ✓ |
| 7 | ຫຼຸດຜ່ອນການປ່ອຍນ້ຳເສຍຈາກໂຮງງານລົງໃສ່ແມ່ນ້ຳ | | ✓ |
| 8 | ກຳຈັດຄວັນພິດຈາກໂຮງງານ ແລະ ລົດຍົນ | | ✓ |
| 9 | ປ່ອຍນ້ຳເສຍລົງໃສ່ແມ່ນ້ຳ | ✓ | |

| | | | |
|---|---|---|---|
| 10 | ຖາງປ່າເຮັດໄຮ່ ຈູດປ່າ ແລະ ຕັດໄມ້ຊະຊາຍ | ✓ | |
| 11 | ການເດີນທາງດ້ວຍລົດສາທາລະນະ, ລົດຖີບ, ຖ້າໃກ້ກໍຍ່າງ | | ✓ |
| 12 | ໃຊ້ຜະລິດຕະພັນປະຢັດໄຟເບີ 5, ໃຊ້ດອກໄຟ ແອວອີດີ, ຖອດໄຟ ແລະ ໄຕ້ໄຟສະເພາະດອກທີ່ຈຳເປັນ | | ✓ |
| 13 | ມົນລະພິດຈາກໂຮງງານ ແລະ ລົດຍົນ | ✓ | |
| 14 | ຕ້ອງມີການບູລະນະຄືນ ຫຼື ພື້ນຟູຂຶ້ນມາທົດແທນເຊັ່ນ: ການປູກຕົ້ນໄມ້ໃນບ້ານ ແລະ ຊຸມຊົນ | | ✓ |

**ໝາຍເຫດ**:

- ຄູສາມາດນຳໃຊ້ວິທີການສອນອື່ນມາໃຊ້ແທນ ຖ້າຫາກເຫັນວ່າເປັນວິທີທີ່ສອດຄ່ອງ ແລະ ເໝາະສົມ.

**ເອກະສານອ້າງອີງ**:

https://dmcrth.dmcr.go.th/manpro/detail/11697/

## 2. ຊັ້ນມັດທະຍົມສຶກສາ ປີທີ 6

ການແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາ ປີທີ 6 ສາມາດແຊກຊ້ອນໄດ້ 7 ບົດ ຄື: ບົດທີ 7, 8, 9, 10, 11,12 ແລະ 13.

- ບົດທີ 7 ຊົ່ວໂມງທີ 2 ຫົວຂໍ້ທີ 2.4 ຄວາມຮັບຜິດຊອບຂອງພົນລະເມືອງໃນການສ້າງເສດຖະກິດຫຼາຍພາກສ່ວນ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ ສໍາລັບຊົ່ວໂມງທີ 1 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 8 ຊົ່ວໂມງທີ 1 ຫົວຂໍ້ທີ 2) ຄຸນລັກສະນະພື້ນຖານຂອງລັດທິສັງຄົມນິຍົມໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 2 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 9 ຊົ່ວໂມງທີ 2 ຫົວຂໍ້ທີ 2.4 ພາລະບົດບາດຂອງລັດປະຊາທິປະໄຕປະຊາຊົນໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 1 ແລະ 3 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງສອນ.
- ບົດທີ 10 ຊົ່ວໂມງທີ 2 ຫົວຂໍ້ທີ 2.2 ຈຸດພິເສດແຕ່ລະດ້ານຂອງລະບອບປະຊາທິປະໄຕ ປະຊາຊົນ (ຄ) ດ້ານສັງຄົມ ວັດທະນະທໍາ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 1 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 11 ຊົ່ວໂມງທີ 2 ຫົວຂໍ້ທີ 2.2 ນະໂຍບາຍຂອງພັກ-ລັດຕໍ່ການແກ້ໄຂວຽກເຮັດງານທໍາ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 1 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 12 ຊົ່ວໂມງທີ 2 ຫົວຂໍ້ທີ 2.2 ປ້ອງກັນ, ສະກັດກັ້ນ ແລະ ພັດທະນາສິ່ງແວດລ້ອມທໍາມະຊາດແບບຍືນຍົງ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 2 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 13 ຊົ່ວໂມງທີ 3 ຫົວຂໍ້ທີ 3.3 ທິດທາງໃນການພັດທະນາວັດທະນະທໍາໃນຕໍ່ໜ້າໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 1 ແລະ 2 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.

# ບົດທີ 7 ການສ້າງເສດຖະກິດຫຼາຍພາກສ່ວນ ແລະ ເພີ່ມທະວີບົດບາດການຄຸ້ມຄອງຂອງລັດ

## ສອນແຊກຊ້ອນຫົວຂໍ້ທີ 2.4 ຄວາມຮັບຜິດຊອບຂອງພົນລະເມືອງໃນການສ້າງເສດຖະກິດຫຼາຍພາກສ່ວນ

ເວລາສອນ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ເນື້ອໃນຂອງແຕ່ລະພາກສ່ວນເສດຖະກິດ ແລະ ການຄຸ້ມຄອງເສດຖະກິດຂອງລັດ.
- ອະທິບາຍສິດທິ ແລະ ພັນທະຂອງພົນລະເມືອງໃນສະພາບເງື່ອນໄຂຂອງໂລກ.
- ປະຕິບັດສິດທິ ແລະ ພັນທະຂອງຕົນໃນຖານະເປັນພົນລະເມືອງໃນສະພາບເງື່ອນໄຂຂອງໂລກ.

## II. ເນື້ອໃນ

ພົນລະເມືອງລາວທຸກຄົນມີສິດ ແລະ ພັນທະໃນການພັດທະນາເສດຖະກິດ-ສັງຄົມ ຕາມລັດຖະທຳມະນູນກຳນົດໄວ້ຄື:

- ລັດປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບກຳມະສິດຂອງລັດ, ຂອງລວມໝູ່, ເອກະເທດ, ເອກະຊົນພາຍໃນ ແລະ ຕ່າງປະເທດທີ່ລົງທຶນຢູ່ໃນ ສປປ ລາວ (ມາດຕາ 16).

- ລັດມີສິດໃນການປົກປ້ອງສິດກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດຊີ້ຂາດ), ສິດທາງຊັບສິນບັດຂອງການຈັດຕັ້ງ ແລະ ບຸກຄົນ; ສຳລັບທີ່ດິນແມ່ນກຳມະສິດຂອງວົງຄະນະຍາດແຫ່ງຊາດ, ລັດຮັບປະກັນໂອນສິດນຳໃຊ້, ສິດໂອນ ແລະ ສິດສືບທອດ (ມາດຕາ 17)

ພົນລະເມືອງລາວທຸກຄົນມີສິດ ແລະ ພັນທະໃນການພັດທະນາເສດຖະກິດແຫ່ງຊາດ ແລະ ເສດຖະກິດຄອບຄົວຂອງຕົນຕາມຄວາມສາມາດທາງດ້ານແຮງງານ, ທຶນ, ສະຕິປັນຍາ ແລະ ວິຊາອາຊີບຂອງຕົນຢ່າງເໝາະສົມ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງຄອບຄົວດີຂຶ້ນຕາມສະພາບເງື່ອນໄຂການຂະຫຍາຍຕົວເສດຖະກິດຂອງໂລກ. ນອກນັ້ນ, ພວກເຮົາທຸກຄົນມີສິດ

ສະເໝີພາບໃນການພັດທະນາເສດຖະກິດ ເຂົ້າເຖິງຕະຫຼາດໂລກໃນຖານະຜູ້ປະກອບການ. ຕົວຢ່າງຜະລິດຕະພັນທີ່ຄົນລາວໄດ້ສົ່ງອອກ ແລະ ເປັນທີ່ຍອມຮັບ ເຊັ່ນ: ກາເຟ, ສິ້ນໄໝ, ເຄື່ອງຈັກສານ ພ້ອມນັ້ນຕ້ອງປະກອບສ່ວນຢ່າງເຕັມສ່ວນເຂົ້າໃນເສດຖະກິດໂລກ.

ສິດ ແລະ ພັນທະແມ່ນທຸກຄົນສາມາດຄິດວ່າເປັນກົດລະບຽບທີ່ແຕ່ລະຄົນຕ້ອງການ ຍ້ອນວ່າມີການພົວພັນກັບຄົນພາຍໃນຊຸມຊົນຢ່າງກວ້າງຂວາງ, ປະຊາຊົນມີສິດທິໃນການສະໜອງ ແລະ ການບໍລິການ. ໃນນັ້ນ, ການເປັນພົນລະເມືອງທົ່ວໂລກທຸກຄົນມີສິດສະເໝີພາບທີ່ເທົ່າທຽມກັນໃນຖານະເປັນພົນລະເມືອງທົ່ວໂລກຂອງປະຊາຄົມໂລກທີ່ມີປະຊາທິປະໄຕໃນທຸກລະດັບ, ປະຊາຊົນທຸກຄົນຕ້ອງໄດ້ຮັບສິດພື້ນຖານດ້ານການເມືອງ ແລະ ສິດພົນລະເມືອງ, ໂດຍສະເພາະແມ່ນສິດແຂ່ງຂັນເລືອກຕັ້ງ ແລະ ຍຸຕິທຳ ແລະ ການເຂົ້າຮ່ວມທາງການເມືອງ.

ສັງລວມແລ້ວ ເນື້ອໃນພື້ນຖານຂອງນະໂຍບາຍໂຄງປະກອບເສດຖະກິດແມ່ນການຫັນປ່ຽນຈາກໂຄງປະກອບເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າຕາມທິດສັງຄົມນິຍົມ. ດັ່ງນັ້ນ, ເສດຖະກິດຫຼາຍພາກສ່ວນແມ່ນເສດຖະກິດແຫ່ງຊາດທີ່ມີຫຼາຍລະບອບກຳມະສິດ, ຫຼາຍລະດັບ, ຫຼາຍຮູບກຳມະສິດທີ່ເຄື່ອນໄຫວ ແລະ ຄົງຕົວຢູ່ໃນພື້ນຖານເສດຖະກິດແຫ່ງຊາດ ແລະ ແມ່ນພາກສ່ວນໜຶ່ງໃນໂຄງປະກອບເສດຖະກິດແຫ່ງຊາດ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນວິຊາສຶກສາພົນລະເມືອງ ຂັ້ນ ມ.6
2. ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.6

## IV. ກິດຈະກຳການຮຽນການສອນ

### ຊົ່ວໂມງທີ 2

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ລະດົມສະໝອງ**

- ຄູຕັ້ງຄຳຖາມໃຫ້ນັກຮຽນ:

1) ພາກສ່ວນເສດຖະກິດຢູ່ໃນປະເທດເຮົາມີພາກສ່ວນໃດແດ່?

- ຄູໃຫ້ນັກຮຽນອາສາສະໝັກຕອບປະມານ 4-5 ຄົນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ.

ພາກສ່ວນເສດຖະກິດຂອງລັດ, ພາກສ່ວນເສດຖະກິດຄອບຄົວ, ພາກສ່ວນເສດຖະກິດ

ຮ່ວມມືຂອງປະຊາຊົນ, ພາກສ່ວນເສດຖະກິດຂອງເອກະຊົນ, ພາກສ່ວນເສດ ຖະກິດຫຸ້ນສ່ວນ ແລະ ພາກສ່ວນເສດຖະກິດຮ່ວມມືກັບຕ່າງປະເທດ.

**2. ສະເໜີບົດຮຽນໃໝ່ (15 ນາທີ)**

- ຄູເວົ້າກັບນັກຮຽນວ່າ: ພວກເຮົາຈະມາຮຽນກ່ຽວກັບບົດບາດໃນການຄຸ້ມຄອງເສດຖະກິດຂອງລັດ.
- ຄູໃຫ້ນັກຮຽນສັງເກດຮູບພາບລຸ່ມນີ້:



ຮູບທີ 1 ກຳມະກອນເຮັດວຽກຢູ່ໂຮງງານ



ຮູບທີ 2 ເຂື່ອນໄຟຟ້ານ້ຳຂອງ ແຂວງໄຊຍະບູລີ

- ຄູຕັ້ງຄຳຖາມນັກຮຽນສົນທະນາ.

1) ໃນຮູບ 1 ແລະ 2 ສະແດງເຖິງເສດຖະກິດຫຍັງແດ່?

- ນັກຮຽນ 3-4 ຄົນ ອາສາສະໝັກຕອບ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນຕາມຮູບພາບ.

**ກ. ສົນທະນາຖາມ-ຕອບກ່ຽວກັບບົດບາດການຄຸ້ມຄອງເສດຖະກິດຂອງລັດ**

- ຄູໃຫ້ນັກຮຽນແຕ່ລະຄົນຄົ້ນຄວ້າຕາມຄຳຖາມລຸ່ມນີ້:

1) ການຄຸ້ມຄອງຂອງລັດຕໍ່ເສດຖະກິດມີຄວາມສຳຄັນ ແລະ ຈຳເປັນແນວໃດ?
2) ລັດມີພາລະບົດບາດໃນການຄຸ້ມຄອງຕໍ່ເສດຖະກິດຄືແນວໃດ?
3) ລັດຕ້ອງເພີ່ມທະວີໃນການຄຸ້ມຄອງເສດຖະກິດຂອງລັດຄືແນວໃດ?

- ນັກຮຽນຄົ້ນຄວ້າແລ້ວອາສາສະໝັກຂຶ້ນມາລາຍງານ.
- ຄູຍ້ອງຍໍຊົມເຊີຍຜູ້ທີ່ຕອບໄດ້ດີ ຫຼັງຈາກນັ້ນ ຄູ ແລະ ນັກຮຽນສະຫຼຸບ.

1) ການຄຸ້ມຄອງເສດຖະກິດເປັນລະບົບໜຶ່ງທີ່ສຳຄັນ ຊຶ່ງປະກອບດ້ວຍຮູບການຈັດຕັ້ງການຜະລິດ, ກົນໄກຄຸ້ມຄອງເສດຖະກິດ ແລະ ກົງຈັກຄຸ້ມຄອງເສດຖະກິດ; ຖ້າບໍ່ມີການຄຸ້ມຄອງທີ່ດີກໍບໍ່ສາມາດເຮັດໃຫ້ເສດຖະກິດຂະຫຍາຍຕົວໄປຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດທີ່ວາງອອກ. ດັ່ງນັ້ນ, ເພື່ອເຮັດໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຂະຫຍາຍໄປຕາມຈຸດໝາຍສັງຄົມນິຍົມທີ່ໄດ້ກຳນົດໄວ້ ຈຶ່ງເຫັນວ່າມີຄວາມຈຳເປັນຕ້ອງມີການຄຸ້ມຄອງຂອງລັດຢ່າງເປັນເຈົ້າການ.
2) ພາລະບົດບາດຄຸ້ມຄອງຂອງລັດຕໍ່ເສດຖະກິດ ໝາຍເຖິງລັດຄຸ້ມຄອງການເຄື່ອນໄຫວຂອງບັນດາຫົວໜ່ວຍເສດຖະກິດບົນພື້ນຖານການກຳນົດຍຸດທະສາດສ້າງໂຄງປະກອບເສດຖະກິດ, ສ້າງແຜນກຳນົດໄລຍະຍາວ, ຕົກລົງການລົງທຶນໃສ່ຂະແໜງເສດຖະກິດ, ມີການເຮັດບາງຜະລິດຕະພັນຂາເຂົ້າ-ຂາອອກທີ່ຈຳເປັນ, ການຮັບ-ການຈ່າຍ ເພື່ອດັດສົມເສດຖະກິດ, ສ້າງສິ່ງແວດລ້ອມທາງດ້ານການເມືອງ-ສັງຄົມທີ່ອຳນວຍໃຫ້ບັນດາຫົວໜ່ວຍເສດຖະກິດຂະຫຍາຍຕົວ, ສ້າງບັນດາລະບຽບການ, ບັນດາຂໍ້ກຳນົດ-ກົດໝາຍ, ລະບົບມາດຕະຖານ, ກຳນົດຈຸດໝາຍທາງດ້ານເສດຖະກິດ-ເຕັກນິກ, ສ້າງ ແລະ ບຳລຸງຖັນແຖວພະນັກງານຄຸ້ມຄອງເສດຖະກິດ, ພະນັກງານເຕັກນິກວິຊາການ, ຈັດຕັ້ງການກວດກາການເຄື່ອນໄຫວຂອງທຸກຫົວໜ່ວຍເສດ

ຖະກິດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

3) ລັດເພີ່ມທະວີການຄຸ້ມຄອງເພື່ອຮັບປະກັນບາງບັນຫາທີ່ເປັນພື້ນຖານດັ່ງນີ້:

- ຮັບປະກັນການຄົງຕົວຂອງເສດຖະກິດຫຼາຍພາກສ່ວນ, ແຕ່ລະພາກສ່ວນມີຄວາມສະເໝີພາບຕໍ່ໜ້າກົດໝາຍໃນນັ້ນເສດຖະກິດຂອງລັດ ແລະ ລວມໝູ່ເປັນຫຼັກແຫຼ່ງ.
- ຮັບປະກັນການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ, ບໍ່ມີເສດຖະກິດໃດຢູ່ນອກ ແລະ ບໍ່ມີລັດໃດຢູ່ນອກເສດຖະກິດ, ລັດຂອງພວກເຮົາພັດທະນາປະເທດຊາດ ໂດຍການຫັນເອົາເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ ແລະ ຫັນເສດຖະກິດຕະຫຼາດໄປຕາມທິດສັງຄົມນິຍົມ.
- ຮັບປະກັນການສົມທົບຫຼັກການແຈກຢາຍສັງຄົມນິຍົມກັບຫຼັກການເສດຖະກິດຕະຫຼາດ, ໃນນັ້ນຖືເອົາຫຼັກການແຈກຢາຍຕາມແຮງງານເປັນພື້ນຖານ, ແຈກຢາຍຕາມທຶນ, ຕາມຜົນງານ, ຄັງສະຫວັດດີການສັງຄົມ ແລະ ອື່ນໆ.

**ຂ. ສົນທະນາກັບເພື່ອນນັ່ງຄຽງຂ້າງ (25 ນາທີ)**

- ຄູໃຫ້ນັກຮຽນຄົ້ນຄວ້າເນື້ອໃນ ແລ້ວຕອບຄຳຖາມລຸ່ມນີ້:

1) ລັດມີສິດໃນການປົກປ້ອງພົນລະເມືອງລາວຄືແນວໃດ?

2) ພົນລະເມືອງລາວທຸກຄົນມີສິດ ແລະ ພັນທະໃນການພັດທະນາເສດຖະກິດຄືແນວໃດ?

3) ເສດຖະກິດຫຼາຍພາກສ່ວນແມ່ນເສດຖະກິດແນວໃດ?

4) ສິດ ແລະ ພັນທະຂອງພົນລະເມືອງໂລກມີຄືແນວໃດ?

5) ພົນລະເມືອງໂລກມີສິດໃນການເປັນພົນລະເມືອງຄືແນວໃດ?

- ຕາງໜ້ານັກຮຽນມາລາຍງານ ສ່ວນຜູ້ອື່ນທີ່ຍັງບໍ່ທັນໄດ້ມາລາຍງານແມ່ນຕິດຕາມການລາຍງານ ແລະ ມີຄຳເຫັນເພີ່ມເຕີມ.
- ຄູສະຫຼຸບຄຳຕອບໃຫ້ນັກຮຽນ.

1) ລັດປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບກຳມະສິດຂອງລັດ, ຂອງລວມໝູ່, ເອກະເທດ, ເອກະຊົນພາຍໃນ ແລະ ຕ່າງປະເທດທີ່ລົງທຶນຢູ່ໃນ ສປປ ລາວ ຕາມ (ມາດຕາ 16). ລັດມີສິດໃນການປົກປ້ອງສິດກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດຊີ້ຂາດ), ສິດທວງຊັບສົມບັດຂອງການຈັດຕັ້ງ ແລະ ບຸກຄົນ; ສຳລັບທີ່ດິນແມ່ນກຳມະສິດຂອງວົງຄະນາຍາດແຫ່ງຊາດ, ລັດຮັບ

ປະກັນໂອນສິດນຳໃຊ້, ສິດໂອນ ແລະ ສິດສືບທອດ (ມາດຕາ 17)

2) ພົນລະເມືອງລາວທຸກຄົນມີສິດ ແລະ ພັນທະໃນການພັດທະນາເສດຖະກິດແຫ່ງຊາດ ແລະ ເສດຖະກິດຄອບຄົວຂອງຕົນຕາມຄວາມສາມາດທາງດ້ານແຮງງານ, ທຶນ, ສະຕິປັນຍາ ແລະ ວິຊາອາຊີບຂອງຕົນຢ່າງເໝາະສົມເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງຄອບຄົວດີຂຶ້ນຕາມສະພາບເງື່ອນໄຂການຂະຫຍາຍຕົວເສດຖະກິດຂອງໂລກ.

3) ເສດຖະກິດຫຼາຍພາກສ່ວນ ແມ່ນເສດຖະກິດແຫ່ງຊາດທີ່ມີຫຼາຍລະບອບກຳມະສິດ, ຫຼາຍລະດັບ, ຫຼາຍຮູບກຳມະສິດທີ່ເຄື່ອນໄຫວ ແລະ ຄົງຕົວຢູ່ໃນພື້ນຖານເສດຖະກິດແຫ່ງຊາດ ແລະ ແມ່ນພາກສ່ວນໜຶ່ງໃນໂຄງປະກອບເສດຖະກິດແຫ່ງຊາດ.

4) ສິດ ແລະ ພັນທະຂອງພົນລະເມືອງໂລກແມ່ນສິດທິທຸກຄົນສາມາດຄິດວ່າເປັນກົດລະບຽບທີ່ແຕ່ລະຄົນຕ້ອງການຍ້ອນວ່າມີການພົວພັນກັບຄົນພາຍໃນຊຸມຊົນຢ່າງກວ້າງຂວາງ, ປະຊາຊົນມີສິດທິໃນການສະໜອງ ແລະ ການບໍລິການ.

5) ການເປັນພົນລະເມືອງທົ່ວໂລກທຸກຄົນມີສິດສະເໝີພາບທີ່ເທົ່າທຽມກັນໃນຖານະເປັນພົນລະເມືອງທົ່ວໂລກທີ່ມີປະຊາທິປະໄຕ, ປະຊາຊົນທຸກຄົນຕ້ອງໄດ້ຮັບສິດພື້ນຖານດ້ານການເມືອງ ແລະ ສິດພົນລະເມືອງ, ໂດຍສະເພາະແມ່ນສິດແຂ່ງຂັນເລືອກຕັ້ງທີ່ເສລີ, ຍຸຕິທຳ ແລະ ທຸກຄົນມີສິດທີ່ຈະເຂົ້າຮ່ວມທາງດ້ານການເມືອງ.

**3. ສະຫຼຸບ (5 ນາທີ)**

ໃນຊົ່ວໂມງນີ້ນັກຮຽນມີຄວາມເຂົ້າໃຈກ່ຽວກັບຫຍັງແດ່?

- ຄວາມຈຳເປັນໃນການຄຸ້ມຄອງຂອງລັດຕໍ່ເສດຖະກິດ.
- ພາລະບົດບາດໃນການຄຸ້ມຄອງຂອງລັດຕໍ່ເສດຖະກິດ.
- ເພີ່ມທະວີບົດບາດການຄຸ້ມຄອງເສດຖະກິດຂອງລັດ.
- ຄວາມຮັບຜິດຊອບຂອງພົນລະເມືອງໃນການສ້າງເສດຖະກິດຫຼາຍພາກສ່ວນ.

ເນື້ອໃນພື້ນຖານຂອງນະໂຍບາຍໂຄງປະກອບເສດຖະກິດແມ່ນການຫັນປ່ຽນຈາກໂຄງປະກອບເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າຕາມທິດສັງຄົມນິຍົມ. ດັ່ງນັ້ນ, ເສດຖະກິດຫຼາຍພາກສ່ວນແມ່ນເສດຖະກິດແຫ່ງຊາດທີ່ມີຫຼາຍລະບອບກຳມະສິດ, ຫຼາຍລະດັບ, ຫຼາຍຮູບກຳມະສິດທີ່ເຄື່ອນໄຫວ ແລະ ຄົງຕົວຢູ່ໃນພື້ນຖານເສດຖະກິດແຫ່ງຊາດ ແລະ ແມ່ນພາກສ່ວນໜຶ່ງໃນໂຄງປະກອບເສດຖະກິດແຫ່ງຊາດກໍຄືໃນໂລກ.

ການເປັນພົນລະເມືອງໂລກ ທຸກຄົນມີສິດສະເໝີພາບທີ່ເທົ່າທຽມກັນໃນຖານະເປັນພົນລະເມືອງທົ່ວໂລກຂອງປະຊາຄົມໂລກທີ່ມີປະຊາທິປະໄຕໃນທຸກລະດັບ, ປະຊາຊົນທຸກຄົນຕ້ອງໄດ້ຮັບສິດພື້ນຖານດ້ານການເມືອງ ແລະ ສິດພົນລະເມືອງ, ໂດຍສະເພາະແມ່ນສິດແຂ່ງຂັນເລືອກຕັ້ງ ແລະ ຍຸຕິທຳ ແລະ ການເຂົ້າຮ່ວມທາງການເມືອງ.

**ວຽກບ້ານ**

ຄູໃຫ້ນັກຮຽນຂຽນບົດລາຍງານກ່ຽວກັບນະໂຍບາຍການພັດທະນາເສດຖະກິດໃນ ສປປ ລາວ, ຂອງອາຊຽນ ແລະ ຂອງໂລກໂດຍຫຍໍ້.

## V. ການວັດ ແລະ ປະເມີນຜົນ

**ວັດ ແລະ ປະເມີນຜົນຈາກ**:

- ຄູໃຫ້ນັກຮຽນໝາຍ ✓ ໃສ່ຂໍ້ທີ່ເຫັນວ່າຖືກຕ້ອງທີ່ສຸດດັ່ງລຸ່ມນີ້:

1. ຂໍ້ໃດແມ່ນເສດຖະກິດຫຼາຍພາກສ່ວນ?

   ກ. ເສດຖະກິດຄົງຕົວທີ່ມີຫຼາຍລະບອບກຳມະສິດ

   ✓ ຂ. ເສດຖະກິດແຫ່ງຊາດທີ່ມີຫຼາຍລະບອບກຳມະສິດ

   ຄ. ເສດຖະກິດຕະຫຼາດທີ່ມີຫຼາຍລະບອບກຳມະສິດ

   ງ. ເສດຖະກິດຜະລິດທີ່ມີຫຼາຍລະບອບກຳມະສິດ

2. ຂໍ້ໃດແມ່ນເສດຖະກິດຂອງປະທດລາວເຮົາ?

   ກ. ເສດຖະກິດຄົງຕົວ ✓ ຂ. ເສດຖະກິດກະສິກຳ

   ຄ. ເສດຖະກິດອຸດສາຫະກຳ ງ. ເສດຖະກິດອຸດສາຫະກຳທັນສະໄໝ

3. ເສດຖະກິດຂອງປະເທດລາວເຮົາມີການຂະຫຍາຍຕົວຄືແນວໃດ?

   ✓ ກ. ເສດຖະກິດຂອງປະເທດເຮົາຂະຫຍາຍຕົວຊ້າ

   ຂ.ເສດຖະກິດຂອງປະເທດເຮົາຂະຫຍາຍຕົວທັນສະໄໝ

   ຄ. ເສດຖະກິດຂອງປະເທດເຮົາຂະຫຍາຍຕົວທາງດ້ານອຸດສາຫະກຳ

   ງ. ເສດຖະກິດຂອງປະເທດເຮົາຂະຫຍາຍທາງດ້ານກະສິກຳ

4. ຂໍ້ໃດແມ່ນພາກສ່ວນເສດຖະກິດຂອງລັດ?

   ✓ ກ. ເສດຖະກິດທີ່ເປັນຍຸດທະສາດຂອງຊາດ

   ຂ.ເສດຖະກິດຍຸດທະສາດຂອງຊາດ

ຄ. ເສດຖະກິດທີ່ເປັນພື້ນຖານ

ງ. ເສດຖະກິດທີ່ເປັນພື້ນຖານ ແລະ ຍຸດທະສາດຂອງຊາດ

5. ຍ້ອນຫຍັງຈຶ່ງມີການຄຸ້ມຄອງເສດຖະກິດຂອງລັດ?

ກ. ເພື່ອເຮັດໃຫ້ເສດຖະກິດຂະຫຍາຍໄປຕາມແນວທາງນະໂຍບາຍຂອງພັກ

ຂ. ເພື່ອເຮັດໃຫ້ເສດຖະກິດຂະຫຍາຍດີ

✓ຄ. ເພື່ອເຮັດໃຫ້ເສດຖະກິດຂະຫຍາຍໄປຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ

ງ. ເພື່ອເຮັດໃຫ້ເສດຖະກິດຂະຫຍາຍຕົວທັນສະໄໝ

6. ລັດຖະທຳມະນູນໄດ້ກຳນົດສິດ ແລະ ພັນທະໃນການພັດທະນາເສດຖະກິດຄືແນວໃດ?

ກ. ປົກປ້ອງເອກະເທດ, ເອກະຊົນພາຍໃນ ແລະ ຕ່າງປະເທດ

ຂ. ປົກປ້ອງຂອງລວມໝູ່, ເອກະເທດ, ເອກະຊົນພາຍໃນ ແລະ ຕ່າງປະເທດ

ຄ. ປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບການກຳມະສິດ, ຂອງລວມໝູ່, ເອກະເທດ, ເອກະຊົນພາຍໃນ ແລະ ຕ່າງປະເທດ✓

ງ. ປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບການ

7. ຂໍ້ໃດແມ່ນສິດ ແລະ ພັນທະໃນການເປັນພົນລະເມືອງໂລກ?

✓ກ. ສິດສະເໝີພາບທີ່ເທົ່າທຽມກັນ

ຂ. ສິດສະເໝີພາບປະຊາທິປະໄຕ

ຄ. ສິດສະເໝີພາບເອກະພາບ

ງ. ສິດສະເໝີພາບເອກະລາດ

**ໝາຍເຫດ**:

- ກິດຈະກຳໃດທີ່ບໍ່ສອດຄ່ອງກັບສະພາບຕົວຈິງໃນທ້ອງຖິ່ນ ຄູກໍສາມາດຫາວິທີອື່ນມານຳໃຊ້ແທນໄດ້.

**ເອກະສານອ້າງອີງ**:


- https://www.open.edu/openlearncreate/mod/oucontent/view.php?id=227&section=1.3
- https://www.democracywithoutborders.org

# ພາກທີ II ຄວາມຮູ້ພື້ນຖານກ່ຽວກັບການເມືອງ, ວັດທະນະທຳ-ສັງຄົມ

## ບົດທີ 8 ລັດທິສັງຄົມນິຍົມ

### ແຊກຊ້ອນຫົວຂໍ້ທີ 2) ຄຸນລັກສະນະພື້ນຖານຂອງລັດທິສັງຄົມນິຍົມ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ຕົ້ນກຳເນີດ ແລະ ຄຸນລັກສະນະລັດທິສັງຄົມນິຍົມ.
- ຍົກໃຫ້ເຫັນຄຸນລັກສະນະພື້ນຖານຂອງລັດທິສັງຄົມນິຍົມ, ແນວຄິດຂອງຄວາມສະເໝີພາບໃນດ້ານຕ່າງໆຂອງລັດທິສັງຄົມນິຍົມ.
- ມີຄວາມເຄົາລົບຄວາມສະເໝີພາບລະຫວ່າງເພດ, ເຜົ່າ ແລະ ສາສະໜາຢູ່ປະເທດເຮົາໃນຖາ ນະທີ່ເປັນພົນລະເມືອງໂລກ.

## II. ເນື້ອໃນຕົ້ນຕໍ

ລັດທິສັງຄົມນິຍົມແມ່ນທິດສະດີທີ່ມີລັກສະນະວິທະຍາສາດກ່ຽວກັບສັງຄົມ ທັງແມ່ນພາກສ່ວນໜຶ່ງຂອງລັດທິມາກ-ເລນິນທີ່ຄົ້ນຄວ້າກ່ຽວກັບປະຫວັດສາດຂອງຊົນຊັ້ນກຳມະຊີບເພື່ອປົດປ່ອຍຕົນເອງ ແລະ ສັງຄົມ. ລັດທິສັງຄົມນິຍົມແມ່ນ ວິທະຍາສາດຄົ້ນຄວ້າກ່ຽວກັບກົດເກນການເມືອງ-ສັງຄົມຂອງການປະຕິວັດສັງຄົມນິຍົມ ແລະ ກໍ່ສ້າງລັດທິສັງຄົມນິຍົມ.

ຕົ້ນກຳເນີດ: ສັງຄົມມະນຸດຕ້ອງໄດ້ຜ່ານ 5 ລະບອບການເມືອງທີ່ແຕກຕ່າງກັນຄື: ລະບອບສະຫະຊີບປະຖົມບູຮານ, ຂ້າທາດ, ສັກດີນາ, ນາຍທຶນ ແລະ ສັງຄົມກອມມູນິດ. ສັງຄົມກອມມູນິດຕ້ອງຜ່ານ 2 ໄລຍະ ຄື: ສັງຄົມນິຍົມ ແລະ ສັງຄົມກອມມູນິດ.

ລັດທິສັງຄົມນິຍົມກຳເນີດຂຶ້ນຕົວຈິງແມ່ນເລີ່ມແຕ່ ການປະຕິວັດເດືອນຕຸລາຣັດເຊຍໃນປີ 1917 ເປັນຕົ້ນມາ.

ເປັນສັງຄົມທີ່ສ້າງປະເທດຊາດໃຫ້ເຂັ້ມແຂງ, ປະຊາຊົນຮັ່ງມີ, ສັງຄົມສີວິໄລ ແລະ ຍຸຕິທຳ, ປະຊາຊົນເປັນເຈົ້າຂອງປະເທດຊາດ, ທຸກຄົນມີຄວາມສະເໝີພາບໃນການອອກແຮງງານປະດິດສ້າງ ແລະ ໄດ້ຮັບຜົນຕອບແທນຕາມຫຼັກການເຮັດຕາມຄວາມສາມາດ, ຊົມໃຊ້ຕາມແຮງງານ. ພາຫະນະການຜະລິດມີການຂະຫຍາຍຕົວ ແລະ ຂະແໜງການຜະລິດຢູ່

ພາຍໃຕ້ກຳມະສິດຂອງລັດ ແລະ ລວມໝູ່, ມີການປັບປຸງບູລະນະກຳລັງການຜະລິດຢູ່ເລື້ອຍໆ. ທຸກຄົນໄດ້ຮັບການພັດທະນາຮອບດ້ານ, ກິນອີ່ມນຸ່ງອຸ່ນ ແລະ ມີຄວາມຜາສຸກ. ເສດຖະກິດຂະຫຍາຍຕົວສູງ, ມີວັດທະນະທຳທີ່ກ້າວໜ້າ, ທຸກເຜົ່າມີຄວາມສະເໝີພາບ, ມີຄວາມສາມັກຄີ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ພ້ອມທັງສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບສາກົນ.

ສິດສະເໝີພາບລະຫວ່າງຍິງ-ຊາຍໄດ້ຮັບການປະຕິບັດຢ່າງຖືກຕ້ອງ, ຜູ້ເຖົ້າໄດ້ຮັບການເອົາໃຈໃສ່ເບິ່ງແຍງຈາກສັງຄົມ, ເດັກນ້ອຍໄດ້ຮັບການພັດທະນາຮອບດ້ານ. ຄວາມບໍ່ສະເໝີພາບລະຫວ່າງຊົນເຜົ່າຄ່ອຍໆໄດ້ຮັບການແກ້ໄຂ, ຄວາມສາມັກຄີປອງດອງລະຫວ່າງເຜົ່ານັບມື້ນັບໄດ້ຮັບການປັບປຸງເພີ່ມທະວີ. ບຸກຄົນໄດ້ຮັບການພັດທະນາຮອບດ້ານ, ທຸກຄົນມີເງື່ອນໄຂເສີມຂະຫຍາຍລັກສະນະຕັ້ງໜ້າຂອງຕົນໃນການສ້າງສັງຄົມໃໝ່ ແລະ ແບບດຳລົງຊີວິດໃໝ່. ປະຊາຊົນບັນດາເຜົ່າມີສິດເປັນເຈົ້າ, ມີຄວາມສາມັກຄີເປັນເອກະພາບ ແລະ ມີຄວາມຕື່ນຕົວດ້ານການເມືອງສູງ. ຂະນົບທຳນຽມປະເພນີ ແລະ ວັດທະນະທຳແຫ່ງຊາດກໍຄືຂອງແຕ່ລະເຜົ່າໄດ້ຮັບການອະນຸລັກເສີມຂະຫຍາຍໃຫ້ກ້າວໜ້າ ແລະ ມີສີສັນອັນເປັນເອກະລັກ, ປະຊາຊົນໄດ້ມີໂອກາດໄດ້ຮັບການສຶກສາ, ມີການພົວພັນມິດຕະພາບ ແລະ ການຮ່ວມມືກັບບັນດາປະຊາຊາດເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ມີປະຊາທິປະໄຕ, ເພື່ອໃຫ້ທຸກຊັ້ນຄົນ, ທຸກເຜົ່າໃນທົ່ວປະເທດເປັນພົນລະເມືອງໂລກ ແລະ ຢູ່ຮ່ວມກັນຢ່າງສັນຕິ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.6
2. ເຈ້ຍແຜ່ນໃຫຍ່ສຳລັບຕິດເຈ້ຍຂໍ້ຄວາມ/ສະກັອດຕິດເຈ້ຍ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນບົດຮຽນທີ່ຜ່ານມາ (5 ນາທີ)**

**ກ. ສົນທະນາຖາມ-ຕອບ**

- ຄູຕັ້ງຄຳຖາມທວນຄືນບົດຮຽນເກົ່າ.

**ຄຳຖາມ**:

1) ຈົ່ງອະທິບາຍເສດຖະກິດຫຼາຍພາກສ່ວນ?

- ນັກຮຽນອາສາສະໝັກຕອບຄໍາຖາມ.
- ຄູສະຫຼຸບຄືນຄໍາຕອບ

1) ເສດຖະກິດຫຼາຍພາກສ່ວນ ແມ່ນເສດຖະກິດແຫ່ງຊາດທີ່ມີຫຼາຍລະບອບກໍາມະສິດ, ຫຼາຍລະດັບ, ຫຼາຍຮູບການກໍາມະສິດທີ່ເຄື່ອນໄຫວ ແລະ ຄົງຕົວຢູ່ໃນພື້ນຖານເສດຖະກິດແຫ່ງຊາດ.

**2. ສະເໜີບົດຮຽນໃໝ່**

- ມື້ນີ້ຈະຮຽນຫົວຂໍ້ 1. ຄວາມສໍານຶກກ່ຽວກັບລັດທິສັງຄົມນິຍົມ

**ກ. ສົນທະນາຄວາມໝາຍ ແລະ ຕົ້ນກໍາເນີດຂອງລັດທິສັງຄົມນິຍົມ (10 ນາທີ)**

- ຄູໃຫ້ນັກຮຽນຄົ້ນຄວ້າເປັນລາຍບຸກຄົນກ່ຽວກັບເນື້ອໃນ ຂໍ້ທີ 1 ໜ້າ 54 ແລະ 55 ໃນ ປຶ້ມແບບຮຽນ, ພ້ອມທັງສັງລວມຄໍາຕອບໃສ່ເຈ້ຍແລ້ວກຽມລາຍງານ.

**ຄໍາຖາມຄົ້ນຄວ້າ.**

1) ຈົ່ງອະທິບາຍຄວາມໝາຍຂອງລັດທິສັງຄົມນິຍົມມີຄືແນວໃດ?
2) ຈົ່ງອະທິບາຍຕົ້ນກໍາເນີດຂອງລັດທິສັງຄົມນິຍົມມີຫຍັງແດ່?
3) ສັງຄົມກອມມູນິດຜ່ານຈັກໄລຍະ ຄືໄລຍະໃດແດ່? ຈົ່ງອະທິບາຍ.

- ຄູໃຫ້ເວລາຄົ້ນຄວ້າ ແລະ ກຽມຕອບຄໍາຖາມ.
- ນັກຮຽນແຕ່ລະຄົນອາສາສະໝັກຕອບຄໍາຖາມ, ສ່ວນຜູ້ອື່ນປະກອບຄໍາເຫັນເພີ່ມເຕີມຖ້າມີຄໍາຕອບທີ່ຕ່າງກັນ.
- ຄູ ແລະ ນັກຮຽນສະຫຼຸບຄໍາຕອບຂອງແຕ່ລະຄົນຮ່ວມກັນ.

1) ລັດທິສັງຄົມນິຍົມ ແມ່ນທິດສະດີທີ່ມີລັກສະນະວິທະຍາສາດກ່ຽວກັບສັງຄົມທັງເປັນພາກສ່ວນໜຶ່ງຂອງລັດທິມາກ-ເລນິນ ທີ່ຄົ້ນຄວ້າກ່ຽວກັບປະຫວັດສາດຂອງຊົນຊັ້ນກໍາມາຊີບເພື່ອປົດປ່ອຍຕົນເອງ ແລະ ສັງຄົມ. ລັດທິສັງຄົມນິຍົມ ແມ່ນວິທະຍາສາດຄົ້ນຄວ້າກ່ຽວກັບກິດເກນການເມືອງ-ສັງຄົມຂອງການປະຕິວັດສັງຄົມນິຍົມ ແລະ ກໍ່ສ້າງລັດທິສັງຄົມນິຍົມ.
2) ຕົ້ນກໍາເນີດ: ສັງຄົມມະນຸດຕ້ອງໄດ້ຜ່ານ 5 ລະບອບການເມືອງທີ່ແຕກຕ່າງກັນຄື: ລະບອບສະຫະຊີບປະຖົມບູຮານ, ຂ້າທາດ, ສັກດີນາ, ນາຍທຶນ ແລະ ສັງຄົມກອມມູນິດ.

3) ສັງຄົມກອມມູນິດຕ້ອງຜ່ານ 2 ໄລຍະຄື: ສັງຄົມນິຍົມ ແລະ ສັງຄົມກອມມູນິດ.

- ສັງຄົມນິຍົມ ແມ່ນໄລຍະຕົ້ນຂອງສັງຄົມກອມມູນິດຊຶ່ງເປັນໄລຍະຂອງການພັດທະນາກຳລັງການຜະລິດ ເພື່ອຮັບປະກັນໃຫ້ສັງຄົມປະຕິບັດຕາມຫຼັກການເຮັດຕາມຄວາມສາມາດ, ຊົມໃຊ້ຕາມແຮງງານ.
- ສັງຄົມກອມມູນິດ (ສັງຄົມສົມບູນແບບ ຫຼື ສັງຄົມສີວິໄລ) ເປັນໄລຍະຂອງການພັດທະນາການຜະລິດສັງຄົມໃຫ້ເຂັ້ມແຂງ ຊຶ່ງແມ່ນການພັດທະນາກຳລັງການຜະລິດທີ່ມີສະມັດຖະພາບຂອງງານສູງ ແລະ ເຕີບໃຫຍ່ຂະຫຍາຍຕົວໄປເລື້ອຍໆ. ລັດທິສັງຄົມນິຍົມກຳເນີດຂຶ້ນຕົວຈິງແມ່ນເລີ່ມແຕ່ການປະຕິວັດເດືອນຕຸລາ ຣັດເຊຍໃນປີ 1917 ເປັນຕົ້ນມາ.

**ຂ. ສົນທະນາກ່ຽວກັບຄຸນລັກສະນະພື້ນຖານຂອງລັດທິສັງຄົມນິຍົມ (30 ນາທີ)**

- ຄູໃຫ້ໃຫ້ນັກຮຽນຄົ້ນຄວ້າກັບເພື່ອນນັ່ງຂ້າງກ່ຽວກັບເນື້ອໃນຂໍ້ທີ 2 ໜ້າທີ 55 ໃນປຶ້ມແບບຮຽນ.
- ຄູຕັ້ງຖາມໃຫ້ນັກຮຽນຄົ້ນຄວ້າ, ຈາກນັ້ນໃຫ້ຂຽນຄຳຕອບໃສ່ເຈ້ຍນ້ອຍໄປຕິດໃສ່ກະດານແລ້ວ ໃຫ້ນັກຮຽນແຕ່ລະຄົນອອກໄປອ່ານຄຳຕອບຂອງຜູ້ອື່ນເພື່ອແລກປ່ຽນຄວາມຮູ້.

**ຄຳຖາມຄົ້ນຄວ້າ**:

1) ຈົ່ງອະທິບາຍຄຸນລັກສະນະພື້ນຖານຂອງລັດທິສັງຄົມນິຍົມມີຄືແນວໃດແດ່?

2) ຄຸນລັກສະນະພື້ນຖານຄວາມສະເໝີພາບລະຫວ່າງເພດ, ເຜົ່າ ແລະ ສາສະໜາຢູ່ປະເທດເຮົາໃນຖານະທີ່ເປັນພົນລະເມືອງໂລກມີຄືແນວໃດ?

- ນັກຮຽນແຕ່ລະຄົນສັງລວມຄຳຕອບໃສ່ເຈ້ຍແລ້ວໄປຕິດໃສ່ກະດານ.
- ນັກຮຽນແລກປ່ຽນກັນອ່ານຄຳຕອບຂອງແຕ່ລະຄົນ, ຜູ້ອື່ນໆປະກອບຄຳເຫັນເພີ່ມເຕີມຖ້າມີຄຳຕອບຕ່າງກັນ.
- ຄູສະຫຼຸບຄືນ ໂດຍເນັ້ນບາງເນື້ອໃນເພີ່ມເຕີມດັ່ງນີ້:

1) ຄຸນລັກສະນະພື້ນຖານຂອງລັດທິສັງຄົມນິຍົມຕໍ່ກັບຄວາມສະເໝີພາບມີດັ່ງນີ້:

- ເປັນສັງຄົມທີ່ສ້າງປະເທດຊາດໃຫ້ເຂັ້ມແຂງ, ປະຊາຊົນຮັ່ງມີ, ສັງຄົມສີວິໄລ ແລະ ຍຸຕິທຳ, ປະຊາຊົນເປັນເຈົ້າຂອງປະເທດຊາດ, ທຸກຄົນມີຄວາມສະເໝີພາບໃນການອອກແຮງງານປະດິດສ້າງ ແລະ ໄດ້ຮັບຜົນຕອບແທນຕາມຫຼັກການເຮັດ

ຕາມຄວາມສາມາດຊົມໃຊ້ຕາມແຮງງານ.

- ພາຫະນະການຜະລິດມີການຂະຫຍາຍຕົວ ແລະ ຂະແໜງການຜະລິດຢູ່ພາຍໃຕ້ກຳມະສິດຂອງລັດ ແລະ ລວມໝູ່, ມີການປັບປຸງບູລະນະກຳລັງການຜະລິດຢູ່ເລື້ອຍໆ.
- ທຸກຄົນໄດ້ຮັບການພັດທະນາຮອບດ້ານ, ກິນອີ່ມນຸ່ງອຸ່ນ ແລະ ມີຄວາມຜາສຸກ.
- ເສດຖະກິດຂະຫຍາຍຕົວສູງ, ມີວັດທະນະທຳທີ່ກ້າວໜ້າ, ທຸກເຜົ່າມີຄວາມສະເໝີພາບ, ມີຄວາມສາມັກຄີ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນພ້ອມທັງສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບສາກົນ.

2) ຄຸນລັກສະນະພື້ນຖານກ່ຽວກັບຄວາມສະເໝີພາບລະຫວ່າງເພດ, ເຜົ່າ ແລະ ສາສະໜາຢູ່ປະເທດເຮົາໃນຖານະທີ່ເປັນພົນລະເມືອງໂລກມີ ຄື:

- ຍິງ-ຊາຍມີສິດສະເໝີພາບ, ຜູ້ເຖົ້າໄດ້ຮັບການເອົາໃຈໃສ່ເບິ່ງແຍງຈາກສັງຄົມ, ເດັກນ້ອຍໄດ້ຮັບການພັດທະນາຮອບດ້ານ.
- ບຸກຄົນໄດ້ຮັບການພັດທະນາຮອບດ້ານ, ທຸກຄົນມີເງື່ອນໄຂເສີມຂະຫຍາຍລັກສະນະຕັ້ງໜ້າຂອງຕົນໃນການສ້າງສັງຄົມໃໝ່ ແລະ ແບບດຳລົງຊີວິດໃໝ່.
- ປະຊາຊົນບັນດາເຜົ່າມີສິດເປັນເຈົ້າຢ່າງເຕັມສ່ວນ, ມີຄວາມສາມັກຄີເປັນເອກະພາບ ແລະ ມີຄວາມຕື່ນຕົວດ້ານການເມືອງສູງ.
- ຂະນົບທຳນຽມປະເພນີ ແລະ ວັດທະນະທຳແຫ່ງຊາດກໍຄືຂອງແຕ່ລະເຜົ່າໄດ້ຮັບການອະນຸລັກເສີມຂະຫຍາຍໃຫ້ກ້າວໜ້າ ແລະ ມີສີສັນອັນເປັນເອກະລັກ, ປະຊາຊົນໄດ້ມີໂອກາດໄດ້ຮັບການສຶກສາ, ຮັກສາສຸຂະພາບ ແລະ ພັດທະນາດ້ານຈິດໃຈ.
- ມີການພົວພັນມິດຕະພາບ ແລະ ການຮ່ວມມືກັບບັນດາປະຊາຊາດເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ມີປະຊາທິປະໄຕ, ເພື່ອໃຫ້ທຸກຊັ້ນຄົນ, ທຸກເຜົ່າໃນທົ່ວປະເທດເປັນພົນລະເມືອງໂລກ ແລະ ຢູ່ຮ່ວມກັນຢ່າງສັນຕິ.

**3. ສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບການຮຽນໃນຊົ່ວໂມງນີ້:

1) ຄວາມໝາຍຂອງລັດທິສັງຄົມນິຍົມ.

2) ຕົ້ນກຳເນີດ ແລະ ຄຸນລັກສະນະຂອງລັດທິສັງຄົມນິຍົມ.

3) ຕົ້ນກຳເນີດ.

4) ຄຸນລັກສະນະພື້ນຖານຂອງລັດທີໃນຖານະທີ່ເປັນພົນລະເມືອງໂລກ.

- ຄຸນລັກສະນະພື້ນຖານກ່ຽວກັບຄວາມສະເໝີພາບລະຫວ່າງເພດ, ເຜົ່າ ແລະ ສາສະໜາຢູ່ປະເທດເຮົາໃນຖານະທີ່ເປັນພົນລະເມືອງໂລກມີຄື:
- ສິດສະເໝີພາບລະຫວ່າງຍິງ-ຊາຍໄດ້ຮັບການປະຕິບັດຢ່າງຖືກຕ້ອງ, ຜູ້ເຖົ້າໄດ້ຮັບການເອົາໃຈໃສ່ເບິ່ງແຍງຈາກສັງຄົມ, ເດັກນ້ອຍໄດ້ຮັບການພັດທະນາຮອບດ້ານ.
- ຄວາມບໍ່ສະເໝີພາບລະຫວ່າງເຜົ່າຄ່ອຍໆໄດ້ຮັບການແກ້ໄຂ, ຄວາມສາມັກຄີປອງດອງລະຫວ່າງເຜົ່ານັບມື້ນັບໄດ້ຮັບການປັບປຸງເພີ່ມທະວີ.
- ບຸກຄົນໄດ້ຮັບການພັດທະນາຮອບດ້ານ, ທຸກຄົນມີເງື່ອນໄຂເສີມຂະຫຍາຍລັກສະນະຕັ້ງໜ້າຂອງຕົນໃນການສ້າງສັງຄົມໃໝ່ ແລະ ແບບແຜນດຳລົງຊີວິດໃໝ່.
- ປະຊາຊົນບັນດາເຜົ່າມີສິດເປັນເຈົ້າຢ່າງເຕັມສ່ວນ, ມີຄວາມສາມັກຄີເປັນເອກະພາບ ແລະ ມີຄວາມຕື່ນຕົວດ້ານການເມືອງສູງ.
- ຮີດຄອງປະເພນີ ແລະ ວັດທະນະທຳແຫ່ງຊາດກໍຄືຂອງແຕ່ລະເຜົ່າໄດ້ຮັບການອະນຸລັກເສີມຂະຫຍາຍໃຫ້ກ້າວໜ້າ ແລະ ມີສີສັນອັນເປັນເອກະລັກ, ປະຊາຊົນໄດ້ມີໂອກາດໄດ້ຮັບການສຶກສາ, ຮັກສາສຸຂະພາບ ແລະ ພັດທະນາດ້ານຈິດໃຈ.
- ມີການພົວພັນມິດຕະພາບ ແລະ ການຮ່ວມມືກັບບັນດາປະຊາຊາດເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ມີປະຊາທິປະໄຕ, ເພື່ອໃຫ້ທຸກຊັ້ນຄົນ, ທຸກເຜົ່າໃນທົ່ວປະເທດເປັນພົນລະເມືອງໂລກ ແລະ ຢູ່ຮ່ວມກັນຢ່າງສັນຕິ.

## V. ການວັດ ແລະ ປະເມີນຜົນ

**ສັງເກດນັກຮຽນຈາກການຕອບເນື້ອໃນລຸ່ມນີ້:**

- ນັກຮຽນຈົ່ງໝາຍ ✓ ໃສ່ "ແມ່ນ" ຫຼື " ບໍ່ແມ່ນ" ກ່ຽວກັບເນື້ອໃນຄຸນລັກສະນະພື້ນຖານຂອງພົນລະເມືອງໂລກດັ່ງລຸ່ມນີ້.

| ລ/ດ | ເນື້ອໃນ | ແມ່ນ | ບໍ່ແມ່ນ |
|---|---|---|---|
| 1 | ສິດສະເໝີພາບລະຫວ່າງຍິງ-ຊາຍໄດ້ຮັບການປະຕິບັດຢ່າງຖືກຕ້ອງ | ✓ | |
| 2 | ເດັກນ້ອຍບໍ່ໄດ້ຮັບການພັດທະນາ | | ✓ |
| 3 | ປະຊາຊົນບັນດາເຜົ່າມີສິດເປັນເຈົ້າຢ່າງເຕັມສ່ວນ | ✓ | |
| 4 | ທຸກເຜົ່າໃນທົ່ວປະເທດເປັນພົນລະເມືອງໂລກ | ✓ | |
| 5 | ບໍ່ມີການພົວພັນມິດຕະພາບ ແລະ ການຮ່ວມມືກັບບັນດາປະຊາຊາດ | | ✓ |
| 6 | ປະຊາຊົນໄດ້ມີໂອກາດໄດ້ຮັບການສຶກສາ, ຮັກສາສຸຂະພາບ | ✓ | |
| 7 | ຜູ້ເຖົ້າບໍ່ໄດ້ຮັບການເອົາໃຈໃສ່ເບິ່ງແຍງຈາກສັງຄົມ | | ✓ |
| 8 | ວັດທະນະທໍາຂອງແຕ່ລະເຜົ່າໄດ້ຮັບການອະນຸລັກ | ✓ | |
| 9 | ປະເພນີຂອງແຕ່ລະເຜົ່າບໍ່ໄດ້ເຜີຍແຜ່ | | ✓ |
| 10 | ຄົນລາວບໍ່ແມ່ນພົນລະເມືອງຂອງໂລກ | | ✓ |

**ໝາຍເຫດ**:

- ຄູສາມາດນໍາໃຊ້ການສິດສອນວິທີອື່ນທີ່ສອດຄ່ອງ, ເໝາະສົມກັບຫ້ອງຮຽນຂອງຕົນມາສອນແທນໄດ້.

**ເອກະສານອ້າງອີງ**


- ຄະນະໂຄສະນາອົບຮົມສູນກາງພັກ, ມາດຕະຖານຄວາມຮູ້ດ້ານທິດສະດີ-ການເມືອງຊັ້ນຕົ້ນ, ປີ 2003, ໜ້າ 303-306.

# ບົດທີ 9 ລັດສັງຄົມນິຍົມ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2.4 ພາລະບົດບາດຂອງລັດປະຊາທິປະໄຕ ປະຊາຊົນ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍລັດປະຊາທິປະໄຕ ປະຊາຊົນລາວ ແລະ ອິດທິພົນຂອງການປະຕິບັດທີ່ເປັນທຳ/ບໍ່ເປັນທຳ, ມີຈັນຍາບັນ/ບໍ່ມີຈັນຍາບັນ.
- ເຫັນຄຸນຄ່າຂອງລັດປະຊາທິປະໄຕ ປະຊາຊົນລາວໂດຍການປະຕິບັດທີ່ເປັນທຳ ແລະ ມີຈັນຍາບັນ.
- ຍົກຕົວຢ່າງອິດທິພົນຂອງການປະຕິບັດທີ່ເປັນທຳ/ບໍ່ເປັນທຳ, ມີຈັນຍາບັນ/ບໍ່ມີຈັນຍາບັນ.

## II. ເນື້ອໃນ

2. ລັດປະຊາທິປະໄຕ ປະຊາຊົນລາວ.

2.1 ຄວາມສຳນຶກຂອງລັດປະຊາທິປະໄຕປະຊາຊົນ.

2.2 ລັດປະຊາທິປະໄຕປະຊາຊົນລາວແມ່ນລັດແຫ່ງກົດໝາຍ.

2.3 ຄົ້ນຄວ້າທາດແທ້ຂອງລັດປະຊາທິປະໄຕ ປະຊາຊົນລາວ.

2.4 ພາລະບົດບາດຂອງລັດປະຊາທິປະໄຕປະຊາຊົນລາວໄດ້ຕັ້ງໜ້າເສີມຂະຫຍາຍປະຊາທິປະໄຕ ຕໍ່ສູ້ຕ້ານອາດຍາສິດ, ສໍ້ລາດບັງຫຼວງ, ເດັດດ່ຽວປັບປຸງຈຸດອ່ອນໃຫ້ນັບມື້ເຂັ້ມແຂງ ໂດຍແນໃສ່ສ້າງລັດໃຫ້ກາຍເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ.

ໃນນັ້ນການປະຕິບັດທີ່ເປັນທຳ, ມີຈັນຍາບັນຂອງລັດປະຊາທິປະໄຕ ປະຊາຊົນລາວສະແດງອອກຢູ່ບ່ອນວ່າ:

- ມີລະບົບກົດໝາຍເພື່ອປະຕິບັດ ແລະ ປົກປ້ອງລັດ, ລະບອບປະຊາທິປະໄຕ ປະຊາຊົນລາວບັນດາເຜົ່າ.

• ເພີ່ມທະວີມິດຕະພາບ ແລະ ການຮ່ວມມືກັບບັນດາປະເທດສັງຄົມນິຍົມ.

• ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ, ບໍ່ຂົ່ມຂູ່, ບໍ່ໃຊ້ກຳລັງຮຸນແຮງເຊິ່ງກັນ ແລະ ກັນ, ແກ້ໄຂຂໍ້ຂັດແຍ້ງລະຫວ່າງປະເທດດ້ວຍສັນຕິວິທີ.

• ສະໜັບສະໜູນຂະບວນການປົດປ່ອຍຊາດ, ຂະບວນການປະຕິວັດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ.

• ຕ້ານລັດທິຈັກກະພັດ, ລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່, ຕ້ານລັດທິຈຳແນກເຊື້ອຊາດ ແລະ ຕ້ານນະໂຍບາຍການຊ່ວງຊີງກຳລັງອາວຸດ.

• ສະໜັບສະໜູນການປະກອບສ່ວນເຂົ້າໃນການຕໍ່ສູ້ຂອງປະຊາຊົນເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ

ການປະຕິບັດທີ່ບໍ່ເປັນທຳ, ບໍ່ມີຈັນຍາບັນ ອາດມີກຸ່ມຄົນຈຳນວນໜ້ອຍໜຶ່ງທີ່ມີແນວຄິດຕ້ານຕໍ່ແນວທາງຂອງລັດປະຊາທິປະໄຕປະຊາຊົນລາວ, ອາດຍາສິດ, ສໍ້ລາດບັງຫຼວງ, ການສວຍໃຊ້ສິດອຳນາດໜ້າທີ່ຕຳແໜ່ງໃນການຫາຜົນປະໂຫຍດເຂົ້າມາໃນວົງຄະນະຍາດຂອງຕົນເອງ ແລະ ອື່ນໆ; ມີກຸ່ມຄົນທີ່ຫວັງແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ, ຂົ່ມຂູ່, ໃຊ້ກຳລັງຮຸນແຮງເຊິ່ງກັນ ແລະ ກັນ, ບໍ່ວ່າຈະເປັນລັດທິຈັກກະພັດ, ລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່, ລັດທິຈຳແນກເຊື້ອຊາດ ແລະ ການຊ່ວງຊີງກຳລັງອາວຸດອື່ນໆ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງຂັ້ນ ມ. 6
2. ປຶ້ມຫຼັກສູດແຊກຊ້ອນສຶກສາພົນລະເມືອງໂລກເຂົ້າໃນສຶກສາພົນລະເມືອງ
3. ຮູບພາບປະກອບບົດຮຽນ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 2*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ສົນທະນາຖາມ-ຕອບ**

- ຄູຕັ້ງຄຳຖາມເພື່ອສົນທະນາກັບນັກຮຽນ.

  1) ລັດຂອງຊົນຊັ້ນກົດຂີ່ຂູດຮີດແບ່ງອອກເປັນຈັກປະເພດລັດ? ຄືລັດໃດແດ່?

- ຄູໃຫ້ນັກຮຽນ 2-3 ຄົນຂຶ້ນຕອບຄຳຖາມ.

- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄືນຕາມຄຳຖາມດັ່ງລຸ່ມນີ້:

**ຄຳຕອບ**:

1) ລັດຂອງຊົນຊັ້ນກົດຂີ່ຂູດຮີດແບ່ງອອກເປັນ 3 ປະເພດລັດ ຄື: ລັດເຈົ້າທາດ, ລັດສັກດີນາ ແລະ ລັດທຶນນິຍົມ.

## 2. ສະເໜີບົດຮຽນໃໝ່

### ກ. ສັງເກດຮູບພາບ (10 ນາທີ)

- ຄູເອົາຮູບພາບໃຫ້ນັກຮຽນສັງເກດ ແລ້ວຖາມວ່າ: ນັກຮຽນມີຄວາມຄິດເຫັນແນວໃດຕໍ່ກັບບັນດາຮູບເຫຼົ່ານັ້ນ?



ຮູບທີ 1




ຮູບທີ 2



ຮູບທີ 3




ຮູບທີ 4

- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບຮູບພາບ.

**ຄໍາຕອບ**

1) ຮູບທີ 1 ການສ້າງສາຍພົວພັນທີ່ດີກັບບັນດາປະເທດຊຶ່ງແມ່ນ ທ່ານນາຍົກລັດຖະມົນຕີຕ້ອນຮັບຄະນະຜູ້ແທນຕາງໜ້າພິເສດຂອງລັດຖະບານມາເລເຊຍ.

2) ຮູບທີ 2 ການສ້າງສາຍພົວພັນທີ່ດີກັບບັນດາປະເທດອ້ອມຂ້າງ ຊຶ່ງແມ່ນຜົນສຳເລັດກອງປະຊຸມຄັ້ງທີ 44 ຂອງຄະນະກຳມະການຮ່ວມມືທະວິພາຄີລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສສ ຫວຽດນາມ ປະຈຳປີ 2021.

3) ຮູບທີ 3 ການປະຕິບັດລະບຽບກົດໝາຍທີ່ມີຄວາມຍຸດຕິທຳ, ມີຄວາມສະເໝີພາບໃນທຸກດ້ານ...

4) ຮູບທີ 4 ຄວາມເປັນທຳ, ຄວາມສະເໝີພາບ, ຄວາມເທົ່າທຽມກັນ.

**ຂ. ສຶກສາເນື້ອໃນບົດຮຽນ** *(30 ນາທີ)*

- ໂດຍນຳໃຊ້ປຶ້ມແບບຮຽນ ແລະ ປຶ້ມຄູ່ມືແຊກຊ້ອນ ສພລ ຄູແບ່ງນັກຮຽນເປັນກຸ່ມຕາມຄວາມເໝາະສົມແລ້ວແບ່ງກັນຄົ້ນຄວ້າຕາມຄຳຖາມດັ່ງລຸ່ມນີ້:

**ຄຳຖາມ**:

1) ລັດປະຊາທິປະໄຕ ປະຊາຊົນລາວແມ່ນລັດແນວໃດ?

2) ເປັນຫຍັງຈຶ່ງເວົ້າວ່າລັດປະຊາທິປະໄຕ ປະຊາຊົນລາວ ແມ່ນລັດແຫ່ງກົດໝາຍ?

3) ທາດແທ້ຂອງລັດປະຊາທິປະໄຕ ປະຊາຊົນລາວ ໄດ້ສະແດງອອກຢູ່ບ່ອນໃດ?

4) ການປະຕິບັດທີ່ເປັນທຳ, ມີຈັນຍາບັນສະແດງອອກແນວໃດແດ່ແນວໃດ?

5) ຄົນທີ່ເປັນທຳ, ມີຈັນຍາບັນແມ່ນຜູ້ຄົນແນວໃດ?

6) ການປະຕິບັດທີ່ບໍ່ເປັນທຳ, ບໍ່ມີຈັນຍາບັນສະແດງອອກແນວໃດ?

- ຄູໃຫ້ຕາງໜ້າກຸ່ມຂຶ້ນສະເໜີ ພ້ອມທັງກວດຄວາມຖືກຕ້ອງໃຫ້ແຕ່ລະກຸ່ມ.
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຫຍໍ້ໃຫ້ເປັນເອກະພາບກັນ.

**ຄຳຕອບ**:

1) ລັດປະຊາທິປະໄຕ ປະຊາຊົນລາວແມ່ນ: ລັດເປັນເອກະລາດ, ປະຊາຊົນລາວເປັນເຈົ້າຂອງປະເທດ, ລັດຕັ້ງຂຶ້ນບົນພື້ນຖານພັນທະພາບຂອງຊົນຊັ້ນກຳມະກອນ-ຊາວນາ, ນັກຮຽນຮູ້ປັນຍາຊົນ... ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວເປັນລັດເອກະພາບທົ່ວປວງຊົນ, ມີສິດເສລີພາບ, ມີເອກະລັກດ້ານວັດທະນະທຳ, ຢູ່ພາຍໃຕ້ການຄຸ້ມຄອງຂອງລັດຖະທຳມະນູນ ແລະ ກົດໝາຍ, ມີລະບອບການເມືອງ, ເສດຖະກິດເປັນຂອງຕົນເອງ ເປັນລັດຂອງປະຊາຊົນລາວຢ່າງແທ້ຈິງ.

2) ລັດປະຊາທິປະໄຕ ປະຊາຊົນລາວແມ່ນລັດແຫ່ງກົດໝາຍ ຍ້ອນວ່າລັດຄຸ້ມຄອງການດຳລົງຊີວິດໃນທຸກດ້ານດ້ວຍກົດໝາຍ. ການເຄື່ອນໄຫວຂອງອົງການ, ການຈັດຕັ້ງ

ສັງຄົມ ແລະ ການຄຸ້ມຄອງພົນລະເມືອງແມ່ນຢູ່ພາຍໃຕ້ກົດໝາຍທັງໝົດ. ລັດແຫ່ງກົດໝາຍແມ່ນລັດຂອງປະຊາຊົນ, ໂດຍປະຊາຊົນ, ເພື່ອປະຊາຊົນພາຍໃຕ້ການນໍາພາຂອງພັກປະຊາຊົນປະຕິວັດລາວ.

3) ທາດແທ້ຂອງລັດປະຊາທິປະໄຕປະຊາຊົນລາວ: ລັດປະຊາທິປະໄຕ ປະຊາຊົນລາວແມ່ນລັດທີ່ມາຈາກການຕໍ່ສູ້ຢ່າງພິລະອາດຫານ ແລະ ອັນໃຫຍ່ຫຼວງຂອງປະຊາຊົນລາວ, ເປັນລັດຂອງປະຊາຊົນຢ່າງແທ້ຈິງ ຊຶ່ງສະແດງອອກຄື:

- ລັດຂອງປະຊາຊົນ: ປະຊາຊົນເປັນຜູ້ສ້າງຕັ້ງແມ່ນຜົນລວມຍອດການຕໍ່ສູ້ປົດປ່ອຍຊາດ, ລັດເກີດຈາກຊົນຊັ້ນກໍາມະກອນ, ຊາວຜູ້ອອກແຮງງານ ແລະ ກໍເປັນລັດຂອງຊົນຊັ້ນກໍາມະກອນ-ຊາວນາຜູ້ອອກແຮງງານ.
- ລັດໂດຍປະຊາຊົນ: ມີສິດຕິດຕາມ, ກວດກາ, ເບິ່ງແຍງ, ຖ້າຜູ້ໃດລະເມີດ, ປະຊາຊົນມີສິດຮ້ອງຟ້ອງຕໍ່ຜູ້ລະເມີດ ຫຼື ອົງການຕ່າງໆ.
- ລັດເພື່ອປະຊາຊົນ: ຖືເອົາຜົນປະໂຫຍດຂອງປະຊາຊົນ, ມີຈຸດປະສົງ, ມີເປົ້າໝາຍ, ບໍ່ໃຊ້ອໍານາດ, ອາດຍາສິດ ແລະ ສໍ້ລາດບັງຫຼວງ.

4) ການປະຕິບັດທີ່ເປັນທໍາ, ມີຈັນຍາບັນຂອງລັດປະຊາທິປະໄຕ ປະຊາຊົນລາວ ສະແດງອອກຢູ່ບ່ອນວ່າ:

- ມີລະບົບກົດໝາຍເພື່ອປະຕິບັດ ແລະ ປົກປ້ອງລັດ, ລະບອບປະຊາທິປະໄຕ ປະຊາຊົນລາວບັນດາເຜົ່າ.
- ເພີ່ມທະວີມິດຕະພາບ ແລະ ການຮ່ວມມືກັບບັນດາປະເທດສັງຄົມນິຍົມ.
- ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ, ບໍ່ຂົ່ມຂູ່, ບໍ່ໃຊ້ກໍາລັງຮຸນແຮງເຊິ່ງກັນ ແລະ ກັນ, ແກ້ໄຂຂໍ້ຂັດແຍ່ງລະຫວ່າງປະເທດດ້ວຍສັນຕິວິທີ.
- ສະໜັບສະໜູນຂະບວນການປົດປ່ອຍຊາດ, ຂະບວນການປະຕິວັດຂອງຊົນຊັ້ນກໍາມະກອນ ແລະ ຊາວຜູ້ອອກແຮງງານ.
- ຕ້ານລັດທິຈັກກະພັດ, ລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່, ຕ້ານລັດທິຈໍາແນກເຊື້ອຊາດ ແລະ ຕ້ານນະໂຍບາຍການຊ່ວງຊີງກໍາລັງອາວຸດ.
- ສະໜັບສະໜູນການປະກອບສ່ວນເຂົ້າໃນການຕໍ່ສູ້ຂອງປະຊາຊົນເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ

5) ຄົນທີ່ເປັນທຳ, ມີຈັນຍາບັນຈະໄດ້ຮັບການເຄົາລົບນັບຖື ແລະ ໃຫ້ກຽດຈາກຄົນອື່ນ ແລະ ສັງຄົມເປັນຄົນທີ່ມີມະໂນທຳ, ມີຄວາມເຂັ້ມແຂງທາງດ້ານວັດຖຸ ແລະ ຈິດໃຈ, ປະຕິບັດພັນທະ, ໜ້າທີ່ຂອງຕົນຕໍ່ຄົນອື່ນ ແລະ ສັງຄົມຢ່າງຖືກຕ້ອງ, ຮູ້ເຄົາລົບກົດໝາຍ, ປະຕິບັດກົດໝາຍ, ມີຄວາມຍຸຕິທຳໃນສັງຄົມ ແລະ ມີຄວາມຮັບຜິດຊອບທາງຈັນຍາບັນ ຊຶ່ງໄດ້ປະກອບເຂົ້າເປັນສ່ວນໜຶ່ງໃນພາກພື້ນ ແລະ ຫຼາຍພາກສ່ວນໃນໂລກ.

6) ການປະຕິບັດທີ່ບໍ່ເປັນທຳ, ບໍ່ມີຈັນຍາບັນ: ອາດມີກຸ່ມຄົນຈຳນວນໜ້ອຍໜຶ່ງທີ່ມີແນວຄິດຕ້ານຕໍ່ແນວທາງຂອງລັດປະຊາທິປະໄຕປະຊາຊົນລາວ, ອາດຍາສິດ, ສໍ້ລາດບັງຫຼວງ, ການສວຍໃຊ້ສິດອຳນາດໜ້າທີ່ຕຳແໜ່ງໃນການຫາຜົນປະໂຫຍດເຂົ້າມາໃນວົງຄະນະຍາດຂອງຕົນເອງ ແລະ ອື່ນໆ; ມີກຸ່ມຄົນທີ່ຫວັງແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ, ຂົ່ມຂູ່, ໃຊ້ກຳລັງຮຸນແຮງເຊິ່ງກັນ ແລະ ກັນ, ບໍ່ວ່າຈະເປັນລັດທິຈັກກະພັດ, ລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່, ລັດທິຈຳແນກເຊື້ອຊາດ ແລະ ການຊ່ວງຊີງກຳລັງອາວຸດອື່ນໆ.

**3. ສະຫຼຸບ** *(5 ນາທີ)*

- ໃນຊົ່ວໂມງນີ້ນັກຮຽນເຂົ້າໃຈເນື້ອໃນບົດຮຽນຫຍັງແດ່?

1. ຄວາມສຳນຶກຂອງລັດປະຊາທິປະໄຕ ປະຊາຊົນລາວ.
2. ລັດປະຊາທິປະໄຕ ປະຊາຊົນລາວ ແມ່ນລັດແຫ່ງກົດໝາຍ.
3. ທາດແທ້ຂອງລັດປະຊາທິປະໄຕປະຊາຊົນລາວ.
4. ພາລະບົດບາດຂອງລັດປະຊາທິປະໄຕ ປະຊາຊົນ.

ການປະຕິບັດທີ່ເປັນທຳ, ມີຈັນຍາບັນແມ່ນບັນດາຄຸນທາດຄຸນສົມບັດຂອງແຕ່ລະຄົນທີ່ມີຢູ່ໃນຕົນເອງ, ເວົ້າອີກຢ່າງໜຶ່ງ ຈັນຍາບັນແມ່ນຄຸນຄ່າຄວາມເປັນຄົນຂອງແຕ່ລະຄົນ, ແຕ່ລະອົງການຂອງພາກພື້ນ ແລະ ສາກົນ.

ຄົນທີ່ເປັນທຳ, ມີຈັນຍາບັນຈະໄດ້ຮັບການເຄົາລົບນັບຖື ແລະ ໃຫ້ກຽດຈາກຄົນອື່ນ ແລະ ສັງຄົມເປັນຄົນທີ່ມີມະໂນທຳ, ມີຄວາມເຂັ້ມແຂງທາງດ້ານວັດຖຸ ແລະ ຈິດໃຈ, ປະຕິບັດພັນທະ, ໜ້າທີ່ຂອງຕົນຕໍ່ຄົນອື່ນ ແລະ ສັງຄົມຢ່າງຖືກຕ້ອງ, ຮູ້ເຄົາລົບກົດໝາຍ, ປະຕິບັດກົດໝາຍ, ມີຄວາມຍຸຕິທຳໃນສັງຄົມ ແລະ ມີຄວາມຮັບຜິດຊອບທາງຈັນຍາບັນ ຊຶ່ງໄດ້ປະກອບເຂົ້າເປັນສ່ວນໜຶ່ງໃນພາກພື້ນ ແລະ ຫຼາຍພາກສ່ວນໃນໂລກ.

ການປະຕິບັດທີ່ບໍ່ເປັນທຳ, ບໍ່ມີຈັນຍາບັນ: ມີແນວຄິດສໍ້ລາດບັງຫຼວງ, ການສວຍໃຊ້ສິດອຳນາດໜ້າທີ່ຕຳແໜ່ງໃນການຫາຜົນປະໂຫຍດເຂົ້າມາໃນວົງຄະນະຍາດຂອງຕົນເອງ ແລະ ອື່ນໆ; ມີກຸ່ມຄົນທີ່ຫວັງແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ, ຂົ່ມຂູ່, ໃຊ້ກຳລັງຮຸນແຮງເຊິ່ງກັນ ແລະ ກັນ, ບໍ່ວ່າຈະເປັນລັດທິຈັກກະພັດ, ລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່, ລັດທິຈຳແນກເຊື້ອຊາດ ແລະ ການຊ່ວງຊີງກຳລັງອາວຸດອື່ນໆ.

## V. ການວັດ ແລະ ປະເມີນຜົນ

- ນັກຮຽນຈົ່ງໝາຍ ✓ ເອົາຄຳຕອບທີ່ເຫັນວ່າຖືກຕ້ອງທີ່ສຸດ.

1. ລັດປະຊາທິປະໄຕ ປະຊາຊົນລາວແມ່ນລັດແນວໃດ?
   - ກ) ແມ່ນລັດທິສັງຄົມນິຍົມ
   - ✓ຂ) ແມ່ນລັດຊົນຊັ້ນກຳມະກອນ-ຊາວນາ
   - ຄ) ແມ່ນລັດທິທຶນນິຍົມ
   - ງ) ແມ່ນລັດສັກດີນາ
2. ຍ້ອນຫຍັງ ລັດປະຊາທິປະໄຕ ປະຊາຊົນລາວ ແມ່ນລັດແຫ່ງກົດໝາຍ?
   - ✓ກ) ການຄຸ້ມຄອງພົນລະເມືອງແມ່ນຢູ່ພາຍໃຕ້ກົດໝາຍທັງໝົດ
   - ຂ) ປະຊາຊົນເປັນຜູ້ກຳນົດກົດໝາຍທັງໝົດ
   - ຄ) ກົດໝາຍແມ່ນຂໍ້ບັງຄັບໃຊ້ກັບຊົນຊັ້ນຊາວນາ
   - ງ) ປະຊາຊົນບໍ່ເປັນເຈົ້າປະເທດຊາດ
3. ທາດແທ້ຂອງລັດປະຊາທິປະໄຕປະຊາຊົນລາວສະແດງອອກຄືແນວໃດ?
   - ກ) ລັດຂອງທະຫານຕຳຫຼວດ
   - ຂ) ລັດຂອງພະນັກງານລັດຖະກອນ
   - ຄ) ລັດຂອງພໍ່ຄ້າຊາວຂາຍ
   - ✓ງ) ລັດຂອງປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນ
4. ການປະຕິບັດທີ່ເປັນທຳ, ມີຈັນຍາບັນແນວໃດ?
   - ກ) ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ
   - ຂ) ການຊ່ວງຊີງກຳລັງອາວຸດ
   - ✓ຄ) ບໍ່ໃຊ້ກຳລັງຮຸນແຮງ ເຊິ່ງກັນ ແລະ ກັນ
   - ງ) ແກ້ໄຂຂໍ້ຂັດແຍ່ງດ້ວຍກຳລັງ

5. ການປະຕິບັດທີ່ບໍ່ເປັນທຳ, ບໍ່ມີຈັນຍາບັນໝາຍຄວາມວ່າແນວໃດ?

ກ. ມີສິດເສລີພາບໃນການອອກຄຳຄິດເຫັນ

✓ຂ. ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ

ຄ. ຕ້ານລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່

ງ. ບໍ່ໃຊ້ກຳລັງຮຸນແຮງ ເຊິ່ງກັນ ແລະ ກັນ

**ໝາຍເຫດ**:

- ຄູສາມາດນຳໃຊ້ວິທີການສອນອື່ນມາໃຊ້ແທນ ຖ້າຫາກເຫັນວ່າເປັນວິທີທີ່ສອດຄ່ອງ ແລະ ເໝາະສົມ.

ເອກະສານອ້າງອີງ:


- http://www.laogov.gov.la/activities/pages/news.aspx?ItemID=1567&CateID=5

# ບົດທີ 10 ສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2.2 ຈຸດພິເສດແຕ່ລະດ້ານຂອງລະບອບປະຊາທິປະໄຕ ປະຊາຊົນ (ຄ) ດ້ານສັງຄົມ ວັດທະນະທຳ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍກ່ຽວກັບຄວາມໝາຍ, ທາດແທ້, ຈຸດໝາຍ ແລະ ຈຸດພິເສດໃນແຕ່ລະດ້ານຂອງລະບອບປະຊາທິປະໄຕປະຊາຊົນ.
- ເຂົ້າໃຈການບູລະນະລະບອບ, ການສ້າງບັນດາປະຖົມປັດໄຈເພື່ອກ້າວຂຶ້ນສັງຄົມນິຍົມ.
- ເຄົາລົບ, ປົກປ້ອງເອກະລັກສະເພາະທີ່ຫຼາກຫຼາຍ, ໃນການໄຈ້ແຍກກ່ຽວກັບຊົນເຜົ່າ, ວັດທະນະທຳ, ສາສະໜາ, ພາສາ, ເພດ, ອາຍຸ ແລະ ປັດໄຈອື່ນ ເພື່ອການດຳລົງຊີວິດຮ່ວມກັນ.

## II. ເນື້ອໃນ

ຄວາມໝາຍ, ຄວາມເຂົ້າໃຈ, ທາດແທ້ຂອງລະບອບປະຊາທິປະໄຕ ປະຊາຊົນແມ່ນ:

- ຄວາມໝາຍຂອງປະຊາທິປະໄຕ ແມ່ນການຖືສຽງຂ້າງຫຼາຍເປັນໃຫຍ່ ລະບອບການປົກຄອງທີ່ຖືມະຕິປວງຊົນສ່ວນໃຫຍ່ ພາຍໃຕ້ລະບອບລວມສູນປະຊາທິປະໄຕ.
- ຄວາມໝາຍຂອງລະບອບປະຊາທິປະໄຕປະຊາຊົນ ແມ່ນລະບອບການເມືອງທີ່ໄດ້ມາຈາກການຕໍ່ສູ້ ແລະ ຄວາມເສຍສະຫຼະອັນໃຫຍ່ຫຼວງຂອງປະຊາຊົນລາວ, ແມ່ນລະບອບທີ່ປະຊາຊົນເປັນເຈົ້າຂອງປະເທດຊາດ ແລະ ເປັນເຈົ້າຕົນເອງຢ່າງແທ້ຈິງ.
- ທາດແທ້ຂອງລະບອບປະຊາທິປະໄຕ ປະຊາຊົນແມ່ນ: ລົບລ້າງບັນດາຮ່ອງຮອຍທີ່ຫຼ້າຫຼັງ ຝຶກປະຕິວັດຂອງລະບອບລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ທີ່ຍັງຄ້າງໄວ້ຢ່າງສິ້ນເຊີງ, ປະຕິບັດນະໂຍບາຍປະຕິຮູບທີ່ດິນ ເພື່ອຮັບປະກັນໃຫ້ຊາວກະສິກອນມີເນື້ອທີ່ດິນເຮັດການຜະລິດ, ປະຕິບັດສິດເສລີພາບປະຊາທິປະໄຕ, ສິດເປັນເຈົ້າປະເທດຊາດຂອງປະຊາຊົນບັນດາເຜົ່າໃຫ້ນັບມື້ສູງຂຶ້ນ, ການດຳລົງຊີວິດຂອງກຸ່ມຄົນ, ຊົນຊັ້ນ ແລະ ຊັ້ນຄົນໃນສັງຄົມໄດ້ຮັບການອະນຸລັກຮັກສາ ແລະ ພັດທະນາຊັບພະຍາກອນ

ມະນຸດໃຫ້ມີຄວາມຮູ້, ຄວາມສາມາດເພື່ອຄວບຄຸມ ແລະ ຂະຫຍາຍກຳລັງການຜະລິດ, ຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ສູງຂຶ້ນ.

ເງື່ອນໄຂ, ຈຸດພິເສດ ແຕ່ລະດ້ານຂອງການສ້າງລະບອບປະຊາທິປະໄຕປະຊາຊົນແມ່ນຂັ້ນຕອນເບື້ອງຕົ້ນຊຶ່ງມີ 7 ຄຸນລັກສະນະ ຊຶ່ງໃນນັ້ນເຮົາຈະເວົ້າເຖິງຂະນົບທຳນຽມປະເພນີ ແລະ ວັດທະນະທຳຂອງຊາດ, ຂອງເຜົ່າຕ່າງໆ ໄດ້ຮັບການອະນຸລັກຮັກສາ ແລະ ເສີມຂະຫຍາຍໃຫ້ກ້າວໜ້າຂຶ້ນເລື້ອຍໆ, ເຜົ່າຕ່າງໆມີຄວາມສະເໝີພາບ, ມີຄວາມສາມັກຄີປອງດອງ ແລະ ເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນພ້ອມກັນກ້າວໜ້າ, ດຳລົງຊີວິດດ້ວຍຄວາມສັນຕິໃນວົງຄະນາຍາດແຫ່ງຊາດ.

ນອກຈາກນີ້, ປັດໄຈອື່ນມີຜົນຕໍ່ຄວາມສາມາດໃນການດຳລົງຊີວິດຮ່ວມກັນ. ໃນການປົກປ້ອງເອກະລັກສະເພາະທີ່ຫຼາກຫຼາຍ (ຊົນເຜົ່າ, ວັດທະນະທຳ, ສາສະໜາ, ພາສາ, ເພດ, ອາຍຸ).

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນວິຊາສຶກສາພົນລະເມືອງ ຂັ້ນ ມ.6
2. ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.6
3. ເອກະສານ ແລະ ຮູບພາບທີ່ກ່ຽວຂ້ອງ

## IV. ກິດຈະກຳການຮຽນການສອນ

**ຊົ່ວໂມງທີ 2**

**1. ທົບທວນຄືນບົດຮຽນໃນຊົ່ວໂມງຜ່ານມາ (5 ນາທີ)**

- ຄູສົນທະນາກ່ຽວກັບປະຊາທິປະໄຕ ໂດຍການຖາມນັກຮຽນ .

  1) ປະຊາທິປະໄຕແມ່ນຫຍັງ? ລະບອບປະຊາທິປະໄຕແມ່ນລະບອບແນວໃດ?

- ນັກຮຽນອາສາສະໝັກຕອບ.

  **ຄູສະຫຼຸບ**:

  1) ແມ່ນການຖືສຽງຂ້າງຫຼາຍເປັນໃຫຍ່, ລະບອບການປົກຄອງທີ່ຖືມະຕິປວງຊົນສ່ວນໃຫຍ່ພາຍໃຕ້ລະບອບລວມສູນປະຊາທິປະໄຕ, ລະບອບການເມືອງທີ່ໄດ້ມາຈາກການຕໍ່ສູ້ ແລະ ຄວາມເສຍສະຫຼະອັນໃຫຍ່ຫຼວງຂອງປະຊາຊົນລາວ, ແມ່ນລະບອບທີ່ປະຊາຊົນເປັນເຈົ້າຂອງປະເທດຊາດ ແລະ ເປັນເຈົ້າຕົນເອງຢ່າງແທ້ຈິງ.

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາຖາມ-ຕອບ (10 ນາທີ)**

- ຄູຕັ້ງຄຳຖາມໃຫ້ນັກຮຽນແຕ່ລະຄົນດັ່ງລຸ່ມນີ້:

  1) ຈຸດໝາຍການສ້າງລະບອບປະຊາທິປະໄຕປະຊາຊົນແມ່ນຫຍັງ?

- ນັດຮຽນແຕ່ລະຄົນອາສາສະໝັກຕອບຕາມຄວາມເຂົ້າໃຈ.
- ຄູ ແລະ ນັກຮຽນສະຫຼຸບຕາມເນື້ອໃນປຶ້ມແບບຮຽນ.

**ຂ. ສຶກສາເນື້ອໃນບົດຮຽນ (30 ນາທີ)**

- ຄູແບ່ງນັກຮຽນອອກເປັນ 3 ກຸ່ມ ແລະ ຫົວໜ້າກຸ່ມຖາມຄວາມຄິດເຫັນແຕ່ລະຄົນໃຫ້ມີສ່ວນຮ່ວມໃນການຄົ້ນຄວ້າ ຕາມຫົວຂໍ້ດັ່ງນີ້:

  **ຄຳຖາມ.**

  1) ຈົ່ງອະທິບາຍດ້ານການເມືອງຂອງລະບອບປະຊາທິປະໄຕ ປະຊາຊົນ.

  2) ການຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າແມ່ນແນວໃດ? ຍົກຕົວຢ່າງ.

  3) ການພັດທະນາຄົນມີຄວາມສຳຄັນຕໍ່ການພັດທະນາເສດຖະກິດສັງຄົມແນວໃດ?

- ນັກຮຽນແຕ່ລະກຸ່ມຂຶ້ນມາລາຍງານ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ.
- ຄູສະຫຼຸບ: ດ້ານສັງຄົມ-ວັດທະນະທຳ ແມ່ນໃຫ້ຄວາມສຳຄັນແກ່ການພັດທະນາສັງຄົມໄປຄຽງຄູ່ກັບການພັດທະນາເສດຖະກິດ ຊຶ່ງໃນນີ້ແມ່ນຖືເອົາການພັດທະນາຄົນເປັນໃຈກາງ, ຖືເອົາການສ້າງຄວາມສີວິໄລທາງຈິດໃຈ ແລະ ຖືເອົາການສ້າງຄວາມຈະເລີນທາງດ້ານວັດຖຸເປັນສຳຄັນ, ນອກຈາກນີ້ເຮົາຍັງຕ້ອງໄດ້ສືບສານທາງດ້ານສັງຄົມ ແລະ ວັດທະນະທຳກັບບັນດາເຜົ່າຊົນຕ່າງໆທາງດ້ານພາສາ, ເພດ, ອາຍຸ ແລະ ປັດໄຈອື່ນ ເພື່ອການດຳລົງຊີວິດຮ່ວມກັນ.

**3. ສະຫຼຸບ (5 ນາທີ)**

- ຄູສັງລວມເນື້ອໃນຫຍໍ້ ໂດຍຄັດຈ້ອນຈາກເນື້ອໃນຂອງປຶ້ມແບບຮຽນ.

1. ຈຸດໝາຍຂອງການສ້າງປະຊາທິປະໄຕປະຊາຊົນ.
2. ຈຸດພິເສດແຕ່ລະດ້ານຂອງລະບອບປະຊາທິປະໄຕ.

## V. ການວັດ ແລະ ປະເມີນຜົນ

- ຄູປະເມີນຄວາມຮູ້ນັກຮຽນ ໂດຍໃຊ້ຄຳຖາມລຸ່ມນີ້:

  1. ຈຸດພິເສດໃນແຕ່ລະດ້ານຂອງລະບອບ ປະຊາທິປະໄຕປະຊາຊົນມີຫຍັງແດ່?.
  2. ບັນດາປະຖົມປັດໄຈ ເພື່ອກ້າວຂຶ້ນສັງຄົມນິຍົມມີຫຍັງແດ່?.
  3. ການດຳລົງຊີວິດຮ່ວມກັນເຮົາຄວນເຄົາລົບຄວາມຫຼາກຫຼາຍໃນດ້ານໃດແດ່?

  (ນັກຮຽນແຕ່ລະຄົນຕອບແລ້ວຄູເກັບໄປກວດເພື່ອໃຫ້ຄະແນນ).

**ໝາຍເຫດ**:

- ກິດຈະກຳໃດທີ່ບໍ່ສອດຄ່ອງກັບສະພາບຕົວຈິງໃນທ້ອງຖິ່ນ ຄູກໍສາມາດຫາວິທີອື່ນມາ ນຳໃຊ້ແທນໄດ້.

**ເອກະສານອ້າງອີງ**:

- https://www.tapchicongsan.org.vn/web/laos/home
- https://www.tapchicongsan.org.vn/web/laos/van-hoa-xa-hoi
- http://www.laogov.gov.la/Pages/Cultural.aspx?ItemID=11&CateID=8

# ບົດທີ 11 ນະໂຍບາຍດ້ານປະຊາກອນ ແລະ ການແກ້ໄຂວຽກເຮັດງານທຳ

## ສອນແຊກຊ້ອນຫົວຂໍ້ທີ 2.2 ນະໂຍບາຍຂອງພັກ-ລັດຕໍ່ການແກ້ໄຂວຽກເຮັດງານທຳ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍສະພາບການ ແລະ ນະໂຍບາຍຂອງພັກ-ລັດຕໍ່ການແກ້ໄຂວຽກເຮັດງານທຳ.
- ອະທິບາຍເນື້ອໃນນະໂຍບາຍການແກ້ໄຂວຽກເຮັດງານທຳ ແລະ ບັນຫາທີ່ສຳຄັນພາຍໃນຊຸມຊົນ.
- ເຫັນຄຸນຄ່າຂອງການແກ້ໄຂວຽກເຮັດງານທຳ ແລະ ບັນຫາທີ່ສຳຄັນພາຍໃນຊຸມຊົນ.

## II. ເນື້ອໃນ

### 1. ສະພາບທົ່ວໄປກ່ຽວກັບວຽກເຮັດງານທຳ

ວຽກງານແຮງງານ ແລະ ສະຫວັດດີການສັງຄົມໄດ້ຮັບການປັບປຸງ ແລະ ໄປຄຽງຄູ່ກັບການພັດທະນາສີມືແຮງງານ, ການຈັດຫາວຽກເຮັດງານທຳ, ກຳລັງແຮງງານລາວໃນລະບົບການຈັດຕັ້ງໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຕາມລະບຽບຫຼັກການ.

ບັນຫາການພັດທະນາແຮງງານລາວໄດ້ມີການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ. ສະພາບທົ່ວໄປກ່ຽວກັບວຽກເຮັດງານທຳ.

### 2. ນະໂຍບາຍຂອງພັກ-ລັດຕໍ່ການແກ້ໄຂວຽກເຮັດງານທຳ

ຍ້ອນເຫັນໄດ້ຄວາມສຳຄັນຂອງການແກ້ໄຂວຽກເຮັດງານທຳ ແລະ ບັນຫາສະຫວັດດີການສັງຄົມ, ພັກຈຶ່ງວາງນະໂຍບາຍສັງຄົມ ຊຶ່ງມີເນື້ອໃນດັ່ງລຸ່ມນີ້:

- ນະໂຍບາຍສັງຄົມ, ເສດຖະກິດປົກປ້ອງໂດຍກົງ.
- ປະຕິບັດສິດທິມະນຸດ, ສິດທິພື້ນຖານຂອງພົນລະເມືອງ.
- ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນເທື່ອລະກ້າວ.

- ກຳນົດສິດ ແລະ ສ້າງເງື່ອນໄຂໃຫ້ທຸກຄົນໄດ້ພັດທະນາຕົນເອງຮອບດ້ານ.
- ພັດທະນາປະຊາຊົນໃຫ້ເປັນເຈົ້າຕົນເອງ, ເປັນເຈົ້າປະເທດຊາດ, ມີປະຊາທິປະໄຕ, ມີຄວາມຍຸຕິທຳ ແລະ ມີຄວາມສະເໝີພາບໃນສັງຄົມ.

ກ. ຊຸກຍູ້ການຜະລິດພາຍໃນ ແລະ ພາຍນອກ

ຂ. ສົ່ງເສີມການແລກປ່ຽນແຮງງານ

ຄ. ນຳໃຊ້ແຫຼ່ງທຶນໃຫ້ຖືກເປົ້າໝາຍ

ກົດໝາຍວ່າດ້ວຍແຮງງານສາກົນ ແມ່ນຮ່າງກົດລະບຽບກົດໝາຍສາກົນລະຫວ່າງລັດ ແລະ ເອກະຊົນທີ່ກ່ຽວຂ້ອງເຖິງສິດ ແລະ ໜ້າທີ່ຂອງພະນັກງານ, ນາຍຈ້າງ, ສະຫະພັນການຄ້າ ແລະ ລັດຖະບານໃນການຄຸ້ມຄອງວຽກງານ (ກິດຈະກຳມະນຸດ) ແລະ ບ່ອນເຮັດວຽກ. ອົງການແຮງງານສາກົນ ແລະ ອົງການການຄ້າໂລກແມ່ນອົງການສາກົນຕົ້ນຕໍທີ່ກ່ຽວຂ້ອງເຖິງການປະຕິຮູບຕະຫຼາດແຮງງານ.

ມາດຕະຖານແຮງງານສາກົນໝາຍເຖິງສົນທິສັນຍາທີ່ໄດ້ຕົກລົງກັນໂດຍບັນດາອົງການສາກົນ ຊຶ່ງໄດ້ຮັບຜົນຈາກການພິຈາລະນາຄຸນຄ່າ, ກຳນົດໄວ້ເພື່ອປົກປ້ອງສິດແຮງງານຂັ້ນພື້ນຖານ, ເພີ່ມທະວີຄວາມໝັ້ນຄົງດ້ານວຽກເຮັດງານທຳຂອງຜູ້ອອກແຮງງານ ເພື່ອຮັບປະກັນການສະໜອງສິດທິໃນບ່ອນເຮັດວຽກ ເຊັ່ນ: ຕ້ານການຮຸກຮານໃນບ່ອນເຮັດວຽກ, ການຂົ່ມເຫັງ, ການຈຳແນກ ແລະ ຄວາມບໍ່ສະເໝີພາບ.

## III. ສື່ການຮຽນການສອນ

1. ປື້ມແບບຮຽນວິຊາສຶກສາພົນລະເມືອງ ຂັ້ນ ມ.6
2. ປື້ມຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.6
3. ຮູບພາບຂອງກຳມະກອນທີ່ເຮັດວຽກຢູ່ຕາມໂຮງງານຕ່າງໆ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 2*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ສົນທະນາຖາມ-ຕອບບົດຮຽນເກົ່າ**

- ຄູຕັ້ງຄຳຖາມໃຫ້ນັກຮຽນ:

1) ປະຊາກອນໝາຍເຖິງຫຍັງ?

2) ສາເຫດໃດທີ່ເຮັດໃຫ້ປະຊາກອນເພີ່ມຂຶ້ນ?

- ຄູໃຫ້ນັກຮຽນອາສາສະໝັກຕອບປະມານ 3-4 ຄົນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບລວມ.

1) ປະຊາກອນ ໝາຍເຖິງຈຳນວນຂອງພົນລະເມືອງທີ່ອາໄສຢູ່ໃນພື້ນແຜ່ນດິນໃດໜຶ່ງ ຫຼື ໃນອານາເຂດໃດໜຶ່ງ ແລະ ຢູ່ໃນໂລກ.

2) ການເພີ່ມຂຶ້ນຂອງປະຊາກອນມີຫຼາຍສາເຫດ ເຊັ່ນ: ປັດໄຈທາງດ້ານເສດຖະກິດສັງຄົມ, ການແຕ່ງງານ, ການເຄື່ອນຍ້າຍຊອກວຽກເຮັດງານທຳ, ການຈະເລີນພັນ, ອັດຕາການເກີດ ແລະ ອັດຕາການຕາຍ. .

**2. ສະເໜີບົດຮຽນໃໝ່ ໂດຍການສັງເກດຮູບພາບ (5 ນາທີ)**

- ຄູຍົກເອົາຮູບພາບໃຫ້ນັກຮຽນສັງເກດ.



ຮູບທີ 1ການເຮັດວຽກຢູ່ໂຮງງານຕັດຫຍິບແຫ່ງໜຶ່ງ



ຮູບທີ 2 ການຫຍິບເຄື່ອງຢູ່ໂຮງງານຕັດຫຍິບແຫ່ງໜຶ່ງ

- ຄູຕັ້ງຄຳຖາມນັກຮຽນວ່າ ຮູບທີ 1 ແລະ ຮູບທີ 2 ນີ້ ສະແດງໃຫ້ເຫັນເຖິງການຄຸ້ມຄອງໃນການໃຊ້ແຮງງານແນວໃດ?
- ນັກຮຽນຕອບຕາມຄວາມເຂົ້າໃຈ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນ.

**ກ. ສົນທະນາຖາມ-ຕອບກ່ຽວກັບນະໂຍບາຍແກ້ໄຂວຽກເຮັດງານທຳ (15 ນາທີ)**

- ຄູສະເໜີໃຫ້ນັກຮຽນອ່ານຫົວຂໍ້ 2.1 ສະພາບທົ່ວໄປກ່ຽວກັບວຽກເຮັດງານທຳແລ້ວຄູຕັ້ງຄຳຖາມລຸ່ມນີ້:

1) ຈົ່ງອະທິບາຍສະພາບການພັດທະນາຂອງແຮງງານລາວມີຄືແນວໃດ?

- ຄູໃຫ້ນັກຮຽນແຕ່ລະຄົນຄົ້ນຄວ້າແລ້ວອາສາສະໝັກຂຶ້ນມາລາຍງານພ້ອມທັງຍ້ອງຍໍຊົມເຊີຍ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນ.

1) ການຈັດຫາວຽກເຮັດງານທຳ, ກຳລັງແຮງງານລາວໃນລະບົບການຈັດຕັ້ງໄດ້ຮັບ

ການປົກປ້ອງສິດ ແລະ ຜົນປະໂຫຍດຕາມລະບຽບຫຼັກການ. ບັນຫາການພັດທະນາແຮງງານລາວໄດ້ມີການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

**ຄ. ສົນທະນາກຸ່ມກ່ຽວກັບນະໂຍບາຍຂອງພັກ-ລັດຕໍ່ການແກ້ໄຂວຽກເຮັດງານທຳ (20 ນາທີ)**

- ຄູແບ່ງນັກຮຽນອອກເປັນ 3 ກຸ່ມແລ້ວ ໃຫ້ນັກຮຽນຂຽນບົດລາຍງານໃນຫົວຂໍ້ລຸ່ມນີ້:

1) ນະໂຍບາຍຂອງພັກ-ລັດຕໍ່ການແກ້ໄຂວຽກເຮັດງານທຳມີເນື້ອໃນຄືແນວໃດ?
2) ຈົ່ງຍົກໃຫ້ເຫັນກົດໝາຍວ່າດ້ວຍແຮງງານສາກົນມີຄືແນວໃດ?
3) ມາດຕະຖານແຮງງານສາກົນໝາຍເຖິງຫຍັງ?

- ຕາງໜ້ານັກຮຽນແຕ່ລະກຸ່ມຂຶ້ນມາລາຍງານ.
- ກຸ່ມອື່ນໆຊ່ວຍປະກອບຄຳຄິດເຫັນເພີ່ມເຕີມ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນ.

1) ນະໂຍບາຍຂອງພັກ-ລັດຕໍ່ການແກ້ໄຂວຽກເຮັດງານທຳຢູ່ໃນລາວເຮົາມີເນື້ອໃນ ຄື:
   - ເຫັນໄດ້ຄວາມສຳຄັນຂອງການແກ້ໄຂວຽກເຮັດງານທຳ ແລະ ບັນຫາສະຫວັດດີການສັງຄົມ, ພັກຈຶ່ງໄດ້ກຳນົດນະໂຍບາຍສັງຄົມ, ເສດຖະກິດປົກປ້ອງໂດຍກົງ.
   - ການປະຕິບັດສິດທິມະນຸດ, ສິດທິພື້ນຖານຂອງພົນລະເມືອງ.
   - ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນເທື່ອລະກ້າວ.
   - ກຳນົດສິດ ແລະ ສ້າງເງື່ອນໄຂໃຫ້ທຸກຄົນໄດ້ພັດທະນາຕົນເອງຮອບດ້ານ.
   - ພັດທະນາປະຊາຊົນໃຫ້ເປັນເຈົ້າຕົນເອງ, ເປັນເຈົ້າປະເທດຊາດ, ມີປະຊາທິປະໄຕ, ມີຄວາມຍຸຕິທຳ ແລະ ມີຄວາມສະເໝີພາບໃນສັງຄົມ.
   - ຊຸກຍູ້ການຜະລິດພາຍໃນ ແລະ ພາຍນອກ.
   - ສົ່ງເສີມການແລກປ່ຽນແຮງງານ.
   - ນຳໃຊ້ແຫຼ່ງທຶນໃຫ້ຖືກເປົ້າໝາຍ.
2) ກົດໝາຍວ່າດ້ວຍແຮງງານສາກົນແມ່ນຮ່າງກົດໝາຍລະບຽບກົດໝາຍສາກົນລະຫວ່າງລັດ ແລະ ເອກະຊົນທີ່ກ່ຽວຂ້ອງເຖິງສິດ ແລະ ໜ້າທີ່ຂອງພະນັກງານ, ນາຍຈ້າງ, ສະຫະພັນການຄ້າ ແລະ ລັດຖະບານໃນການຄຸ້ມຄອງວຽກງານ (ກົດຈະກຳມະນຸດ) ແລະ ບ່ອນເຮັດວຽກ. ອົງການແຮງງານສາກົນ ແລະ ອົງການການຄ້າໂລກແມ່ນ

ອົງການສາກົນຕົ້ນຕໍທີ່ກ່ຽວຂ້ອງເຖິງການປະຕິຮູບຕະຫຼາດແຮງງານ.

3) ມາດຕະຖານແຮງງານສາກົນ ໝາຍເຖິງສົນທິສັນຍາທີ່ໄດ້ຕົກລົງກັນໂດຍບັນດາອົງການສາກົນ ຊຶ່ງໄດ້ຮັບຜົນຈາກການພິຈາລະນາຄຸນຄ່າ, ກຳນົດໄວ້ເພື່ອປົກປ້ອງສິດແຮງງານຂັ້ນພື້ນຖານ, ເພີ່ມທະວີຄວາມໝັ້ນຄົງດ້ານວຽກເຮັດງານທຳຂອງຜູ້ອອກແຮງງານ ເພື່ອຮັບປະກັນການສະໜອງສິດທິໃນບ່ອນເຮັດວຽກ ເຊັ່ນ: ຕ້ານການຮຸກຮານໃນບ່ອນເຮັດວຽກ, ການຂົ່ມເຫັງ, ການຈຳແນກ ແລະ ຄວາມບໍ່ສະເໝີພາບ.

**3. ສະຫຼຸບ (5 ນາທີ)**

**ສັງລວມເນື້ອໃນ**:

1. ສະພາບທົ່ວໄປກ່ຽວກັບວຽກເຮັດງານທຳ
2. ນະໂຍບາຍຂອງພັກ-ລັດຕໍ່ການແກ້ໄຂວຽກເຮັດງານທຳ

ກ. ຊຸກຍູ້ການຜະລິດພາຍໃນ ແລະ ພາຍນອກ

ຂ. ສົ່ງເສີມການແລກປ່ຽນແຮງງານ

ຄ. ນຳໃຊ້ແຫຼ່ງທຶນໃຫ້ຖືກເປົ້າໝາຍ

ກົດໝາຍວ່າດ້ວຍແຮງງານສາກົນ ແມ່ນຮ່າງກົດໝາຍລະບຽບກົດໝາຍສາກົນລະຫວ່າງລັດ ແລະ ເອກະຊົນທີ່ກ່ຽວຂ້ອງເຖິງສິດ ແລະ ໜ້າທີ່ຂອງພະນັກງານ, ນາຍຈ້າງ, ສະຫະພັນການຄ້າ ແລະ ລັດຖະບານໃນການຄຸ້ມຄອງວຽກງານ (ກິດຈະກຳມະນຸດ) ແລະ ບ່ອນເຮັດວຽກ. ອົງການແຮງງານສາກົນ ແລະ ອົງການການຄ້າໂລກແມ່ນອົງການສາກົນຕົ້ນຕໍທີ່ກ່ຽວຂ້ອງເຖິງການປະຕິຮູບຕະຫຼາດແຮງງານ.

ມາດຕະຖານແຮງງານສາກົນໝາຍເຖິງສົນທິສັນຍາທີ່ໄດ້ຕົກລົງກັນໂດຍບັນດາອົງການສາກົນ ຊຶ່ງໄດ້ຮັບຜົນຈາກການພິຈາລະນາຄຸນຄ່າ, ກຳນົດໄວ້ເພື່ອປົກປ້ອງສິດແຮງງານຂັ້ນພື້ນຖານ, ເພີ່ມທະວີຄວາມໝັ້ນຄົງດ້ານວຽກເຮັດງານທຳຂອງຜູ້ອອກແຮງງານ ເພື່ອຮັບປະກັນການສະໜອງສິດທິໃນບ່ອນເຮັດວຽກ ເຊັ່ນ: ຕ້ານການຮຸກຮານໃນບ່ອນເຮັດວຽກ, ການຂົ່ມເຫັງ, ການຈຳແນກ ແລະ ຄວາມບໍ່ສະເໝີພາບ.

## V. ການວັດ ແລະ ປະເມີນຜົນ

**ວັດ ແລະ ປະເມີນຜົນຈາກ:**

- ຄູໃຫ້ນັກຮຽນໝາຍ ✓ ໃສ່ຂໍ້ທີ່ເຫັນວ່າຖືກຕ້ອງທີ່ສຸດດັ່ງລຸ່ມນີ້:

1. ພັກ-ລັດເຮົາໄດ້ຊຸກຍູ້ວຽກເຮັດງານທຳໃຫ້ແຮງງານລາວຄືແນວໃດ?

   ✓ ກ. ຊຸກຍູ້ໃຫ້ພາຍໃນ ແລະ ພາຍນອກເຂົ້າມາລົງທຶນ

   ຂ. ຊຸກຍູ້ໃຫ້ພາຍນອກເຂົ້າມາລົງທຶນ

   ຄ. ຊຸກຍູ້ໃຫ້ພາຍໃນລົງທຶນ

   ງ. ຊຸກຍູ້ໃຫ້ແຮງງານເຮົາໄປອອກແຮງງານນອກປະເທດ

2. ລັດມີນະໂຍບາຍໃນການຈ້າງງານຄືແນວໃດ?

   ກ. ມີສິດສະເໝີພາບໂດຍ ຈຳແນກເຊື້ອຊາດ, ສີຜິວ, ເພດ, ສາສະໜາ

   ✓ **ຂ.** ມີສິດສະເໝີພາບໂດຍ ບໍ່ຈຳແນກເຊື້ອຊາດ, ສີຜິວ, ເພດ, ສາສະໜາ

   ຄ. ບໍ່ສະເໝີພາບໂດຍ ບໍ່ຈຳແນກເຊື້ອຊາດ, ສີຜິວ, ເພດ, ສາສະໜາ

   ງ. ບໍ່ສະເໝີພາບໂດຍ ຈຳແນກເຊື້ອຊາດ, ສີຜິວ, ເພດ, ສາສະໜາ

**ໝາຍເຫດ:**

- ກິດຈະກຳໃດທີ່ບໍ່ສອດຄ່ອງກັບສະພາບຕົວຈິງໃນທ້ອງຖິ່ນ ຄູກໍສາມາດຫາວິທີອື່ນມານຳໃຊ້ແທນໄດ້.

**ເອກະສານອ້າງອີງ:**

- https://www.open.edu/openlearncreate/mod/oucontent/view.php?id=227&section=1.3
- https://www.democracywithoutborders.org

# ບົດທີ 12 ນະໂຍບາຍດ້ານຊັບພະຍາກອນ ແລະ ການປົກປັກຮັກສາ ສິ່ງແວດລ້ອມ

## ສອນແຊກຊ້ອນຫົວຂໍ້ທີ 2.2 ປ້ອງກັນ, ສະກັດກັ້ນ ແລະ ພັດທະນາສິ່ງແວດລ້ອມທຳມະຊາດແບບຍືນຍົງ.

ເວລາ 1 ຊົ່ວໂມງ

### I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍເນື້ອໃນນະໂຍບາຍຊັບພະຍາກອນ ແລະ ການປົກປັກຮັກສາສິ່ງແວດລ້ອມ.
- ສົ່ງເສີມການປ້ອງກັນ, ສະກັດກັ້ນ ແລະ ພັດທະນາສິ່ງແວດລ້ອມທຳມະຊາດແບບຍືນຍົງຢູ່ໃນລະດັບໂລກ.

### II. ເນື້ອໃນ

2.1 ເພີ່ມທະວີວຽກຄຸ້ມຄອງຂອງລັດ

ການປົກປັກຮັກສາສິ່ງແວດລ້ອມແມ່ນທຸກການເຄື່ອນໄຫວທີ່ປະກອບສ່ວນເຂົ້າໃນການຮັກສາສິ່ງແວດລ້ອມບໍ່ໃຫ້ຖືກທຳລາຍ ເຮັດໃຫ້ສິ່ງແວດລ້ອມປອດໃສ, ປາສະຈາກມົນລະພິດ, ບໍ່ສົ່ງຜົນກະທົບບໍ່ດີຕໍ່ສຸຂະພາບຂອງຄົນ, ສັດພືດ ແລະ ຄວາມດຸ່ນດ່ຽງຂອງລະບົບນິເວດ.

ພັກ-ລັດເຮົາໄດ້ວາງຫຼັກການພື້ນຖານໃຫ້ບຸກຄົນຕ້ອງປະຕິບັດຕົນຄື:

- ເອົາການປ້ອງກັນສິ່ງແວດລ້ອມເປັນວຽກຕົ້ນຕໍ, ເອົາການແກ້ໄຂ ແລະ ບູລະນະຟື້ນຟູສິ່ງແວດລ້ອມເປັນວຽກທີ່ສຳຄັນ.
- ພົນລະເມືອງທຸກຄົນທຸກອົງການຈັດຕັ້ງຢູ່ໃນປະເທດຕ້ອງມີພັນທະໃນການປົກປັກຮັກສາສິ່ງແວດລ້ອມ.
- ຜູ້ກໍ່ຄວາມເສຍຫາຍຕໍ່ສິ່ງແວດລ້ອມຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ.
- ຮູ້ນຳໃຊ້ຊັບພະຍາກອນທຳມະຊາດ, ວັດຖຸດິບ ແລະ ພະລັງງານຢ່າງປະຢັດ.
- ຫຼຸດຜ່ອນບັນດາມົນລະພິດສິ່ງເສດເຫຼືອເພື່ອການພັດທະນາແບບຍືນຍົງ.

2.2 ປ້ອງກັນ, ສະກັດກັ້ນ ແລະ ພັດທະນາສິ່ງແວດລ້ອມທຳມະຊາດແບບຍືນຍົງ.

ການປ້ອງກັນສິ່ງແວດລ້ອມແມ່ນການເຄື່ອນໄຫວສະກັດກັ້ນທຸກເຫດການທີ່ຈະເກີດຂຶ້ນ

ແລະ ພວມເກີດຂຶ້ນ ເຊິ່ງເປັນສາເຫດເຮັດໃຫ້ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຖືກທຳລາຍ ແລະ ເສື່ອມໂຊມລົງ. ການແກ້ໄຂບັນຫາສິ່ງແວດລ້ອມແມ່ນການສະກັດກັ້ນ ແລະ ຕ້ານການທີ່ເກີດຂຶ້ນໄປຄຽງຄູ່ກັບການປົວແປງ ແລະ ບູລະນະສິ່ງທີ່ໄດ້ຮັບຜົນສະທ້ອນຈາກເຫດການດັ່ງກ່າວໃຫ້ສູ່ສະພາບເດີມ.

ໃນໂຄງການສິ່ງແວດລ້ອມຂອງສະຫະປະຊາຊາດ (UNEP) ໄດ້ຖືກພິຈາລະນາຢ່າງກວ້າງຂວາງວ່າເປັນອົງການສິ່ງແວດລ້ອມສາກົນທີ່ອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືສາກົນ ໃນຂົງເຂດສິ່ງແວດລ້ອມ; ປັດຈຸບັນທະນາຄານໂລກໄດ້ຮັບຮອງເອົານະໂຍບາຍດ້ານສິ່ງແວດລ້ອມໃໝ່ ແລະ ເພີ່ມພະນັກງານດ້ານສິ່ງແວດລ້ອມ. ແນວທາງຂອງສະຖາບັນການເງິນສາກົນ ຍັງສືບຕໍ່ເນັ້ນໜັກເຖິງການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມຈາກໂຄງການທີ່ອອກແບບບໍ່ດີ ແລະ ບໍ່ເໝາະສົມ ໃຫ້ຊອກຫາວິທີການຊຸກຍູ້ໃນການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມໃຫ້ຍືນຍົງ.

2.3 ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຂຸດຄົ້ນ ແລະ ການຈຳກັດຂີ້ເຫຍື້ອ, ມົນລະພິດ.

ໃນການຜະລິດ, ການດຳເນີນທຸລະກິດຕ້ອງນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າແທດເໝາະກັບສະພາບຄວາມເປັນຈິງທາງດ້ານເສດຖະກິດສັງຄົມ, ຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດປະຕິບັດໃຫ້ໄດ້ຕາມມາດຕະຖານເຕັກນິກທີ່ຂະແໜງການກ່ຽວຂ້ອງວາງອອກຢ່າງເຂັ້ມງວດ. ການນຳເຂົ້າ ແລະ ການຖ່າຍທອດເຕັກໂນໂລຊີທີ່ພົວພັນເຖິງການປົກປັກຮັກສາສິ່ງແວດລ້ອມຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

2.4 ເປີດກວ້າງການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ແລະ ການຮ່ວມມືສາກົນ.

ລັດສົ່ງເສີມການຮ່ວມມືກັບຕ່າງປະເທດ ແລະ ບັນດາອົງການຈັດຕັ້ງສາກົນກ່ຽວກັບວຽກງານປົກປັກຮັກສາສິ່ງແວດລ້ອມ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອ, ການແລກປ່ຽນບົດຮຽນ, ກໍ່ສ້າງ ແລະ ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານກ່ຽວກັບການຄົ້ນຄວ້ານຳໃຊ້ວິທະຍາສາດເຕັກໂນໂລຊີທີ່ກ້າວໜ້າ, ເຂົ້າຮ່ວມໃນການເຄື່ອນໄຫວສາກົນກ່ຽວກັບການປ້ອງກັນ ແລະ ແກ້ໄຂບັນຫາສິ່ງແວດລ້ອມຢ່າງເຂັ້ມງວດ.

## III. ສື່ການຮຽນການສອນ

1. ປື້ມແບບຮຽນວິຊາສຶກສາພົນລະເມືອງ ຂັ້ນ ມ.6
2. ປື້ມຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.6
3. ຮູບພາບຜົນກະທົບຂອງສິ່ງແວດລ້ອມ
4. ຮູບພາບອະນາໄມຢູ່ແຄມແມ່ນ້ຳ
5. ຮູບພາບການປົກປັກຮັກສາສິ່ງແວດລ້ອມ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 2*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ລະດົມສະໝອງ**

- ຄູຕັ້ງຄຳຖາມໃຫ້ນັກຮຽນ:

1) ຊັບພະຍາກອນແມ່ນຫຍັງ?

2) ສິ່ງແວດລ້ອມແມ່ນຫຍັງ?

- ຄູໃຫ້ນັກຮຽນອາສາສະໝັກຕອບປະມານ 4-5 ຄົນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄືນ ຫຼັງຈາກນັ້ນ, ຄູສະເໜີກິດຈະກຳໃໝ່.

**2. ສະເໜີບົດຮຽນໃໝ່**

**ກ. ລະດົມສະໝອງ ໂດຍການໃຫ້ນັກຮຽນສັງເກດຮູບພາບ (5 ນາທີ)**

- ພວກເຮົາຈະມາຮຽນກ່ຽວກັບນະໂຍບາຍຊັບພະຍາກອນ ແລະ ປົກປັກຮັກສາສິ່ງແວດລ້ອມ.
- ຄູໃຫ້ນັກຮຽນສັງເກດຮູບພາບລຸ່ມນີ້:





ຮູບທີ 1 ແລະ 2 ຜົນກະທົບຂອງສິ່ງແວດລ້ອມ



ຮູບທີ 3 ການອະນາໄມແຄມແມ່ນ້ຳ



ຮູບທີ 4 ການປົກປັກຮັກສາສິ່ງແວດລ້ອມ




ຮູບທີ 5 ການທຳລາຍສິ່ງແວດລ້ອມ

- ຄູຕັ້ງຄຳຖາມໃຫ້ນັກຮຽນສົນທະນາ.

1) ໃນຮູບພາບ 1, 2, 3, 4 ແລະ 5 ມີຄວາມໝາຍແນວໃດ?

- ນັກຮຽນ 3-4 ຄົນ ອາສາສະໝັກຕອບ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນຕາມຮູບພາບ.

**ຂ. ສົນທະນາເປັນຄູ່ກັບເພື່ອນັ່ງຂ້າງ (25 ນາທີ)**

- ຄູໃຫ້ນັກຮຽນແຕ່ລະຄູ່ສົນທະນາເນື້ອໃນບົດຮຽນຂໍ້ທີ 2.1 ເພີ່ມທະວີງການຄຸ້ມຄອງຂອງລັດ ແລະ ຂໍ້ 2.2 ປ້ອງກັນ, ສະກັດກັ້ນ ແລະ ພັດທະນາສິ່ງແວດລ້ອມທຳມະຊາດແບບຍືນຍົງ ດັ່ງຄຳຖາມລຸ່ມນີ້:
- ຄູໃຫ້ນັກຮຽນແຕ່ລະຄູ່ເປັນກຸ່ມແລ້ວ ໃຫ້ແຕ່ລະກຸ່ມຂຽນບົດລາຍງານດັ່ງຄຳຖາມລຸ່ມນີ້:

1) ການປົກປັກຮັກສາສິ່ງແວດລ້ອມແມ່ນຫຍັງ?
2) ພັກ-ລັດເຮົາໄດ້ວາງຫຼັກການພື້ນຖານໃຫ້ບຸກຄົນປະຕິບັດແນວໃດ?
3) ການປ້ອງກັນສິ່ງແວດລ້ອມແມ່ນຫຍັງ?
4) ການຄຸ້ມຄອງສິ່ງແວດລ້ອມແບບຍືນຍົງຄວນເຮັດແນວໃດ?
5) ສະຫະປະຊາຊາດໄດ້ພິຈາລະນາສິ່ງແວດລ້ອມຄືແນວໃດ?
6) ໃນປັດຈຸບັນທະນາຄານໂລກໄດ້ມີນະໂຍບາຍດ້ານສິ່ງແວດລ້ອມໃໝ່ຄືແນວໃດ?

ນັກຮຽນແຕ່ລະຄູ່ຄົ້ນຄວ້າແລ້ວຕາງໜ້າຂຶ້ນມາລາຍງານ.

- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນ.

**ສະຫຼຸບ**:

1) ການປົກປັກຮັກສາສິ່ງແວດລ້ອມແມ່ນທຸກການເຄື່ອນໄຫວທີ່ປະກອບສ່ວນເຂົ້າໃນການຮັກສາສິ່ງແວດລ້ອມບໍ່ໃຫ້ຖືກທຳລາຍ ເຮັດໃຫ້ສິ່ງແວດລ້ອມປອດໃສ, ປາສະຈາກມົນລະພິດ, ບໍ່ສົ່ງຜົນກະທົບບໍ່ດີຕໍ່ສຸຂະພາບຂອງຄົນ, ສັດພືດ ແລະ ຄວາມດຸ່ນດ່ຽງຂອງລະບົບນິເວດ.
2) ພັກ-ລັດເຮົາໄດ້ວາງຫຼັກການພື້ນຖານໃຫ້ບຸກຄົນປະຕິບັດຄື:
   - ເອົາການປ້ອງກັນສິ່ງແວດລ້ອມເປັນວຽກຕົ້ນຕໍ, ເອົາການແກ້ໄຂ ແລະ ບູລະນະຟື້ນຟູສິ່ງແວດລ້ອມເປັນວຽກທີ່ສຳຄັນ.
   - ພົນລະເມືອງທຸກຄົນທຸກອົງການຈັດຕັ້ງຢູ່ໃນປະເທດຕ້ອງມີພັນທະໃນການປົກປັກຮັກສາສິ່ງແວດລ້ອມ.
   - ຜູ້ກໍ່ຄວາມເສຍຫາຍຕໍ່ສິ່ງແວດລ້ອມຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ.
   - ຮູ້ນຳໃຊ້ຊັບພະຍາກອນທຳມະຊາດ, ວັດຖຸດິບ ແລະ ພະລັງງານຢ່າງປະຢັດ.
   - ຫຼຸດຜ່ອນບັນດາມົນລະພິດສິ່ງເສດເຫຼືອເພື່ອການພັດທະນາແບບຍືນຍົງ.
3) ການປ້ອງກັນສິ່ງແວດລ້ອມແມ່ນການເຄື່ອນໄຫວສະກັດກັ້ນທຸກເຫດການທີ່ຈະເກີດຂຶ້ນ ແລະ ພວມເກີດຂຶ້ນ ຊຶ່ງເປັນສາເຫດເຮັດໃຫ້ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຖືກທຳລາຍ ແລະ ເສື່ອມໂຊມລົງ.
4) ການຄຸ້ມຄອງສິ່ງແວດລ້ອມແບບຍືນຍົງແມ່ນການພັດທະນາທີ່ມີການວາງແຜນຢ່າງລະອຽດ ໂດຍເອົາການປົກປັກຮັກສາສິ່ງແວດລ້ອມໄປພ້ອມກັບການສ້າງສາພັດທະນາເສດຖະກິດ-ສັງຄົມ, ມີການນຳໃຊ້ຊັບພະຍາກອນທຳມະຊາດຢ່າງລະມັດລະວັງຈຳກັດຜົນກະທົບຕໍ່ລະບົບນິເວດໃຫ້ໜ້ອຍທີ່ສຸດ ແລະ ໃຫ້ນຳໃຊ້ໄດ້ຢ່າງຍາວນານ.
5) ໃນໂຄງການສິ່ງແວດລ້ອມຂອງສະຫະປະຊາຊາດ (UNEP) ໄດ້ຖືກພິຈາລະນາຢ່າງກວ້າງຂວາງວ່າເປັນອົງການສິ່ງແວດລ້ອມສາກົນທີ່ອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືສາກົນໃນຂົງເຂດສິ່ງແວດລ້ອມ.
6) ໃນປັດຈຸບັນທະນາຄານໂລກ ໄດ້ຮັບຮອງເອົານະໂຍບາຍດ້ານສິ່ງແວດລ້ອມໃໝ່

ແລະ ເພີ່ມພະນັກງານດ້ານສິ່ງແວດລ້ອມ, ສະຖາບັນການເງິນສາກົນ ຍັງສືບຕໍ່ເນັ້ນໜັກເຖິງການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມຈາກໂຄງການທີ່ອອກແບບບໍ່ດີ ແລະ ບໍ່ເໝາະສົມ ໃຫ້ຊອກຫາວິທີການຊຸກຍູ້ໃນການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມໃຫ້ຍືນຍົງ.

**ຄ. ສົນທະນາຖາມ-ຕອບ (10 ນາທີ).**

- ຄູໃຫ້ນັກຮຽນອ່ານເນື້ອໃນຂໍ້ທີ 2.3 ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຂຸດຄົ້ນ ແລະ ການຈຳກັດຂີ້ເຫຍື້ອ, ມົນລະພິດ. ແລະ ຂໍ້ 2.4 ເປີດກວ້າງການຄົ້ນຄວ້າວິທະ ຍາສາດ-ເຕັກໂນໂລຊີ ແລະ ການຮ່ວມມືສາກົນ ໃຫ້ສຳເລັດ ໂດຍຄູຕັ້ງຄຳຖາມລຸ່ມນີ້:

1) ຈົ່ງອະທິບາຍການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຂຸດຄົ້ນ ແລະ ການຈຳກັດຂີ້ເຫຍື້ອ, ມົນລະພິດ.
2) ການເປີດກວ້າງການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ແລະ ການຮ່ວມມືສາກົນມີຫຍັງແດ່?

- ຕາງໜ້ານັກຮຽນ 5-6 ຄົນໃຫ້ຄຳຄິດເຫັນ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນ.

1) ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຂຸດຄົ້ນ ແລະ ການຈຳກັດຂີ້ເຫຍື້ອ, ມົນລະພິດມີ ຄື: ໃນການຜະລິດ, ການດຳເນີນທຸລະກິດຕ້ອງນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າແທດເໝາະກັບສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ, ຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດປະຕິບັດໃຫ້ໄດ້ຕາມມາດຕະຖານເຕັກນິກທີ່ຂະແໜງການກ່ຽວຂ້ອງວາງອອກຢ່າງເຂັ້ມງວດ. ການນຳເຂົ້າ ແລະ ການຖ່າຍທອດເຕັກໂນໂລຊີທີ່ພົວພັນເຖິງການປົກປັກຮັກສາສິ່ງແວດລ້ອມຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.
2) ການເປີດກວ້າງການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ແລະ ການຮ່ວມມືສາກົນມີ ຄື: ລັດສົ່ງເສີມການຮ່ວມມືກັບຕ່າງປະເທດ ແລະ ບັນດາອົງການຈັດຕັ້ງສາກົນກ່ຽວກັບວຽກງານປົກປັກຮັກສາສິ່ງແວດລ້ອມ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອ, ການແລກປ່ຽນບົດຮຽນ, ກໍ່ສ້າງ ແລະ ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກ

ງານກ່ຽວກັບການຄົ້ນຄວ້ານຳໃຊ້ວິທະຍາສາດເຕັກໂນໂລຊີທີ່ກ້າວໜ້າ, ເຂົ້າຮ່ວມໃນການເຄື່ອນໄຫວສາກົນກ່ຽວກັບການປ້ອງກັນ ແລະ ແກ້ໄຂບັນຫາສິ່ງແວດລ້ອມເຂັ້ມງວດ.

**3. ສະຫຼຸບ (5 ນາທີ)**

**ສັງລວມເນື້ອໃນ**:

2.1 ເພີ່ມທະວີການຄຸ້ມຄອງຂອງລັດ

2.2 ປ້ອງກັນ, ສະກັດກັ້ນ ແລະ ພັດທະນາສິ່ງແວດລ້ອມທຳມະຊາດແບບຍືນຍົງ.

2.3 ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຂຸດຄົ້ນ ແລະ ການຈຳກັດຂີ້ເຫຍື້ອ, ມົນລະພິດ.

2.4 ເປີດກວ້າງການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ແລະ ການຮ່ວມມືສາກົນ.

ໃນໂຄງການສິ່ງແວດລ້ອມຂອງສະຫະປະຊາຊາດ (UNEP) ໄດ້ຖືກພິຈາລະນາຢ່າງກວ້າງຂວາງວ່າເປັນອົງການສິ່ງແວດລ້ອມສາກົນທີ່ອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືສາກົນໃນຂົງເຂດສິ່ງແວດລ້ອມ; ປັດຈຸບັນທະນາຄານໂລກໄດ້ຮັບຮອງເອົານະໂຍບາຍດ້ານສິ່ງແວດລ້ອມໃໝ່ ແລະ ເພີ່ມພະນັກງານດ້ານສິ່ງແວດລ້ອມ. ແນວທາງຂອງສະຖາບັນການເງິນສາກົນ ຍັງສືບຕໍ່ເນັ້ນໜັກເຖິງການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມຈາກໂຄງການທີ່ອອກແບບບໍ່ດີ ແລະ ບໍ່ເໝາະສົມ ໃຫ້ຊອກຫາວິທີການຊຸກຍູ້ໃນການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມໃຫ້ຍືນຍົງ.

## V. ການວັດ ແລະ ປະເມີນຜົນ

**ວັດ ແລະ ປະເມີນຜົນຈາກ**:

- ນັກຮຽນຈົ່ງໝາຍ ✓ ໃສ່ເນື້ອໃນທີ່ເຫັນວ່າສອດຄ່ອງ ແລະ ຖືກຕ້ອງລຸ່ມນີ້:

| ລ/ດ | ເນື້ອໃນ | ການປົກປັກຮັກສາ | ຜົນກະທົບ |
|---|---|---|---|
| 1 | ການຖາງປ່າເຮັດໄຮ່ | | ✓ |
| 2 | ການປູກຕົ້ນໄມ້ | ✓ | |
| 3 | ການສ້າງມົນລະພິດທາງອາກາດ | | ✓ |

| | | | |
|---|---|---|---|
| 4 | ການຄັດແຍກຂີ້ເຫຍື້ອ | ✓ | |
| 5 | ໃຊ້ຊັບພະຍາກອນທຳມະຊາດແບບຟຸມເຟືອຍ | | ✓ |
| 6 | ການປ່ອຍນ້ຳເປື້ອນລົງສູ່ແມ່ນ້ຳ | | ✓ |
| 7 | ສ້າງຄວາມດຸ່ນດ່ຽງຂອງລະບົບນິເວດ | ✓ | |
| 8 | ການຖິ້ມຂີ້ເຫຍື້ອຊະຊາຍ | | ✓ |
| 9 | ການໃຊ້ສານເຄມີເຂົ້າໃນການກະສິກຳ | | ✓ |

**ໝາຍເຫດ**:

- ກິດຈະກຳໃດທີ່ບໍ່ສອດຄ່ອງກັບສະພາບຕົວຈິງໃນທ້ອງຖິ່ນ ຄູກໍສາມາດຫາວິທີອື່ນມານຳໃຊ້ແທນໄດ້.

**ເອກະສານອ້າງອີງ**:


- Environment - ASEAN Main Portal
- https://sdgresources.relx.com/articles/soil-amendments-immobilization-potentially-toxic-elements-contaminated-soil

# ບົດທີ 13 ນະໂຍບາຍການສຶກສາ, ວິທະຍາສາດເຕັກໂນໂລຊີ ແລະ ວັດທະນະທຳ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 3.3 ທິດທາງໃນການພັດທະນາວັດທະນະທຳໃນຕໍ່ໜ້າ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ຄວາມສຳຄັນ, ຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍດ້ານວັດທະນະທຳສັງຄົມ.
- ເຄົາລົບຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍດ້ານວັດທະນະທຳສັງຄົມ.
- ສົ່ງເສີມ ແລະ ປົກປ້ອງຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍດ້ານວັດທະນະທຳສັງຄົມ.

## II. ເນື້ອໃນ

ທິດທາງໃນການພັດທະນາວັດທະນະທຳໃນຕໍ່ໜ້າ:

- ປົກປັກຮັກສາ, ສ້າງ ແລະ ເສີມຂະຫຍາຍຄຸນຄ່າຂອງວັດທະນະທຳແຫ່ງຊາດ.
- ສະກັດກັ້ນກະແສວັດທະນະທຳທີ່ສ້າງຄວາມເສື່ອມເສຍໃຫ້ແກ່ວັດທະນະທຳອັນດີງາມຂອງຊາດເຮົາ.
- ສົ່ງເສີມມະຫາຊົນເຂົ້າຮ່ວມໃນພາລະກິດວັດທະນະທຳຢ່າງກວ້າງຂວາງ ເພື່ອປະກອບສ່ວນສ້າງອະລິຍະທຳລວມຂອງມວນມະນຸດ.
- ເປີດກວ້າງການແລກປ່ຽນວັດທະນະທຳກັບນານາຊາດ ແລະ ເຜີຍແຜ່ຜົນສຳເລັດຂອງການກໍ່ສ້າງວັດທະນະທຳໃນລະບອບໃໝ່ໃຫ້ຊາວໂລກຮັບຮູ້ .
- ເລືອກເຟັ້ນ ແລະ ຮັບເອົາວັດທະນະທຳຂອງປະເທດຕ່າງໆ.
- ຟື້ນຟູບູລະນະ, ນຳໃຊ້ຄຸນຄ່າມໍລະດົກວັດທະນະທຳ ແລະ ສິ່ງທີ່ສວຍງາມຂອງທຳມະຊາດເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.
- ສົ່ງເສີມການປະດິດສ້າງສິລະປະວັດທະນະທຳ, ການປະດິດຄິດແຕ່ງ, ການຮຽນ, ການພິມຈຳໜ່າຍ ແລະ ສິ່ງພິມຕ່າງໆ ເພື່ອພັດທະນາຄວາມຮູ້ຂອງສັງຄົມ.

- ເພີ່ມທະວີວຽກງານສື່ມວນຊົນ ແລະ ຂະຫຍາຍພື້ນຖານວັດຖຸ-ເຕັກນິກໃຫ້ມີຄວາມທັນສະໄໝ.

ຄວາມຫຼາກຫຼາຍທາງດ້ານວັດທະນະທຳແມ່ນຄວາມແຕກຕ່າງກັນ ຫຼື ຄວາມຄ້າຍຄືກັນຂອງວັດທະນະທຳ ເຊັ່ນ: ພາສາ, ສາສະໜາ, ການນຸ່ງຖື, ການຕັ້ງຖິ່ນຖານ ແລະ ອື່ນໆ. ສະນັ້ນເຮົາຄວນເຄົາລົບຈຸດພິເສດ ແລະ ຄວາມແຕກຕ່າງຂອງກັນ ແລະ ກັນ ຢູ່ໃນທ້ອງຖິ່ນ, ປະເທດແລະ ໃນໂລກ.

ວັນຄວາມຫຼາກຫຼາຍທາງດ້ານວັດທະນະທຳໂລກສຳລັບການປຶກສາຫາລື ແລະ ການພັດທະນາໄດ້ຖືກສ້າງຕັ້ງຂຶ້ນໃນເດືອນພະຈິກ 2001 ໂດຍກອງປະຊຸມໃຫຍ່ສະຫະປະຊາຊາດຂອງອົງການ UNESCO ປະຕິບັດຕາມຖະແຫຼງການສາກົນກ່ຽວກັບຄວາມຫຼາກຫຼາຍທາງດ້ານ ວັດທະນະທຳຂອງອົງການ UNESCO.[3] ຈຸດປະສົງແມ່ນເພື່ອສົ່ງເສີມຄວາມຫຼາກຫຼາຍດ້ານວັດທະນະທຳ, ການສົນທະນາ ແລະ ການພັດທະນາ ຊຶ່ງມັນໄດ້ຖືກສະຫຼອງໃນວັນທີ 21 ເດືອນພຶດສະພາ ຂອງທຸກໆປີ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງຂັ້ນ ມ. 6
2. ປຶ້ມຫຼັກສູດແຊກຊ້ອນສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ
3. ຮູບພາບທີ່ກ່ຽວກັບວັດທະນາທຳຕ່າງໆ
4. ຮູບການນຸ່ງຖື ແລະ ຄຳທັກທາຍຂອງບັນດາປະເທດອາຊຽນ
5. ຮູບພາບກ່ຽວກັບປະເພນີ: ການເຮັດບຸນ, ບາສີສູ່ຂວັນ, ງານດອງ ແລະ ອື່ນໆ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 3*

**1. ທົບທວນບົດທີ່ຮຽນຜ່ານມາ** *(5 ນາທີ)*

**ກ. ສົນທະນາຖາມ-ຕອບ**

- ຄູຕັ້ງຄຳຖາມກ່ຽວກັບບົດຮຽນທີ່ຜ່ານມາ.

**ຄຳຖາມ**:

1) ການສຶກສາແມ່ນຫຍັງ?

- ຄູເອີ້ນນັກຮຽນຕອບຄຳຖາມ 1-2 ຄົນ.

**ຄຳຕອບ:**

1) ການສຶກສາ ແມ່ນຂະບວນວິວັດແຫ່ງການຮຽນຮູ້, ສຶກສາອົບຮົມທາງດ້ານການເມືອງ, ແນວຄິດ, ຄຸນສົມບັດ, ສະຕິປັນຍາ, ສິລະປະ, ພະລະ ແລະ ການອອກແຮງງານ ຊຶ່ງມີໜ້າທີ່ຕົ້ນຕໍໃນການບໍລິການສາທາລະນະດ້ານຄວາມຮູ້, ຄວາມສາມາດຢ່າງຮອບດ້ານແກ່ປະຊາຊົນລາວບັນດາເຜົ່າຢ່າງຕໍ່ເນື່ອງ ເພື່ອສ້າງເງື່ອນໄຂໃຫ້ພົນລະເມືອງລາວທຸກຄົນໄດ້ພັດທະນາຕົນເອງຢູ່ໃນສັງຄົມຢ່າງມີປະສິດທິພາບຕາມສິດ ແລະ ພັນທະຂອງຕົນ.

## 2. ສະເໜີບົດຮຽນໃໝ່

### ກ. ສົນທະນາລວມກ່ຽວກັບວັດທະນະທຳ *(15 ນາທີ)*

- ຄູຍົກຮູບພາບການນຸ່ງຖື ແລະ ຄຳທັກທາຍຂອງບັນດາປະເທດອາຊຽນ ໃຫ້ນັກຮຽນສັງເກດເພື່ອປະກອບຄວາມເຫັນຕາມຮູບ




ຮູບທີ 1: ຊຸດປະຈຳຊາດ ແລະ ຄຳທັກທາຍຂອງບັນດາປະເທດອາຊຽນ

- ນັກຮຽນຕອບຕາມຄວາມເຂົ້າໃຈ, ຄູສະຫຼຸບກ່ຽວກັບຮູບພາບ: ເຖິງວ່າຄົນເຮົາຈະຢູ່ຄົນລະປະເທດ, ມີວັດທະນາທຳຮີດຄອງປະເພນີ, ສາສະໜາ, ພາສາທີ່ແຕກຕ່າງ

ກັນແຕ່ ພວກເຮົາກໍສາມາດລວມຕົວຢູ່ຮ່ວມກັນໄດ້ເປັນໜຶ່ງດຽວຄືດັ່ງບັນດາປະເທດສະມາຊິກອາຊຽນ ແລະ ອື່ນໆ.

**ຄໍາຖາມ**:

1) ວັດທະນະທໍາແມ່ນຫຍັງ?

2) ວັດທະນະທໍາມີຄວາມສໍາຄັນແນວໃດ?

- ນັກຮຽນຄົ້ນຄວ້າ ແລະ ປະກອບຄວາມເຫັນ.
- ຄູສະຫຼຸບໂດຍເນັ້ນໃຫ້ນັກຮຽນເຂົ້າໃຈວ່າ:

**ຄໍາຕອບ**:

1) ວັດທະນະທໍາແມ່ນບັນດາຄຸນຄ່າລວມຍອດຂອງຜະລິດຕະພັນຕ່າງໆທາງດ້ານວັດຖຸ ແລະ ຈິດໃຈທີ່ມວນມະນຸດເປັນຜູ້ປະດິດຄິດສ້າງຂຶ້ນມາໃນຂະບວນວິວັດຂອງປະຫວັດສາດ ແລະ ມີບົດບາດອັນສໍາຄັນໃນການປະກອບສ້າງມະນຸດໃຫ້ກາຍເປັນຄົນກ້າວໜ້າສີວິໄລຢ່າງຕໍ່ເນື່ອງໃນການຂະຫາຍຕົວຂອງປະຫວັດສາດກໍຄືຂອງສັງຄົມມະນຸດ.

2) ວັດທະນະທໍາມີຄວາມສໍາຄັນຫຼາຍຕໍ່ແນວທາງການດໍາລົງຊີວິດຂອງມະນຸດ ເພາະວັດທະນະທໍາເປັນຕົວຊີ້ບອກເຖິງຄວາມເປັນຊາດ ວັດທະນະທໍາແຫ່ງຊາດແມ່ນມໍລະດົກ ອັນລໍ້າຄ່າ, ເປັນພື້ນຖານດ້ານຈິດໃຈຂອງສັງຄົມ ແລະ ເປັນປັດໄຈສໍາຄັນຄໍ້າປະກັນໃນການຍືນຍົງຄົງຕົວຂອງຊາດລາວເຮົາ ຊຶ່ງບໍ່ວ່າເວລາໃດກໍເອກອ້າງທະນົງໃຈ ແລະ ຫວງແຫນວັດທະນະທໍາປະຈໍາຊາດຂອງຕົນ, ປົກປັກຮັກສາ ແລະ ເສີມຂະຫຍາຍໃຫ້ຄົງຢູ່ຕະຫຼອດໄປ. ສະນັ້ນ, ຈຶ່ງເວົ້າໄດ້ວ່າ: “ມີວັດທະນະທໍາຈຶ່ງມີຊາດ ເສຍ ວັດທະນະທໍາກໍຄືເສຍຊາດ”.

**2) ສົນທະນາທິດທາງໃນການພັດທະນາວັດທະນະທໍາ (25 ນາທີ)**

- ຄູຍົກເອົາຮູບທີ 1 ແລະ ຮູບທີ 2 ຂຶ້ນມາໃຫ້ນັກຮຽນສັງເກດເບິ່ງແລ້ວສົນທະນາກ່ຽວ ກັບຮູບລຸ່ມນີ້:



ຮູບທີ 1




ຮູບທີ 2 ແຜນທີ່ປະເທດທີ່ຖືກຈັດອັນດັບຕາມລະດັບຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແລະ ວັດທະນະທຳ (James Fearon, 2003)[1]

- ຄູຕັ້ງຄຳຖາມ ຖາມນັກຮຽນ:

1) ພວກເຂົາເຮັດກິດຈະກຳຫຍັງໃນຮູບທີ 1

2) ນັກຮຽນຊີ້ບອກຮູບທີ 2 ວ່າ ເຂດໃດທີ່ມີລະດັບຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແລະ ວັດທະນະທຳສູງສຸດ ແລະ ຕ່ຳສຸດ?

- ນັກຮຽນອາສາສະໝັກຂຶ້ນຕອບແຕ່ລະຮູບພາບ.

- **ຄູສະຫຼຸບ.**

1) ຮູບທີ 1 ແມ່ນພວກເຂົາເຮັດກິດຈະກຳກ່ຽວກັບວັນສະເຫຼີມສະຫຼອງຄວາມຫຼາກຫຼາຍທາງດ້ານວັດທະນະທຳຂອງປະເທດອິດສະຕຣາລີ.

2) ຮູບທີ 2 ສັງເກດເບິ່ງເຂດປະເທດທີ່ເປັນສີນ້ຳຕານເຂັ້ມແມ່ນເຂດທີ່ມີຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແລະ ວັດທະນະທຳຫຼາຍທີ່ສຸດ.

- ຄູແນະນຳໃຫ້ນັກຮຽນຄົ້ນຄວ້າສົນທະນາກັບໝູ່ທີ່ຢູ່ໂຕະຂອງຕົນເອງຕາມຄຳຖາມລຸ່ມນີ້:

**ຄຳຖາມ**:

1) ພັກເຮົາໄດ້ມີທິດທາງໃນການພັດທະນາວັດທະນະທຳແນວໃດ?

2) ອະທິບາຍຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍດ້ານວັດທະນະທຳສັງຄົມ ມີຄືແນວໃດ?

- ຄູໃຫ້ນັກຮຽນຈຳນວນໜຶ່ງຕອບຕາມຄຳຖາມທີ່ຕັ້ງໄວ້.
- ຄູຈົດຄຳຕອບຂອງນັກຮຽນໃສ່ກະດານ, ຈາກນັ້ນຄູອະທິບາຍຕື່ມ ເພື່ອໃຫ້ນັກຮຽນເຂົ້າ ໃຈ ແລະ ເປັນເອກະພາບກັນ.

**ຄຳຕອບ**:

1) ພັກເຮົາໄດ້ມີທິດທາງໃນການພັດທະນາວັດທະນະທຳຄື:

- ປົກປັກຮັກສາ, ສ້າງ ແລະ ເສີມຂະຫຍາຍຄຸນຄ່າຂອງວັດທະນະທຳແຫ່ງຊາດ.
- ສະກັດກັ້ນກະແສວັດທະນະທຳທີ່ສ້າງຄວາມເສື່ອມເສຍໃຫ້ແກ່ວັດທະນະທຳອັນດີງາມຂອງຊາດເຮົາ.
- ສົ່ງເສີມມະຫາຊົນເຂົ້າຮ່ວມໃນພາລະກິດວັດທະນະທຳຢ່າງກວ້າງຂວາງ ເພື່ອປະກອບສ່ວນສ້າງອະລິຍະທຳລວມຂອງມວນມະນຸດ .
- ເປີດກວ້າງການແລກປ່ຽນວັດທະນະທຳກັບນານາຊາດ ແລະ ເຜີຍແຜ່ຜົນສຳ

ເລັດ ຂອງການກໍ່ສ້າງວັດທະນະທຳໃນລະບອບໃໝ່ໃຫ້ຊາວໂລກຮັບຮູ້

- ເລືອກເຟັ້ນ ແລະ ຮັບເອົາວັດທະນະທຳຂອງປະເທດຕ່າງໆ.
- ຟື້ນຟູບູລະນະ, ນຳໃຊ້ຄຸນຄ່າມໍລະດົກວັດທະນະທຳ ແລະ ສິ່ງທີ່ສວຍງາມຂອງທຳມະຊາດເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.
- ສົ່ງເສີມການປະດິດສ້າງສິລະປະວັດທະນະທຳ, ການປະດິດຄິດແຕ່ງ, ການຮຽນ, ການພິມຈຳໜ່າຍ ແລະ ສິ່ງພິມຕ່າງໆ ເພື່ອພັດທະນາຄວາມຮູ້ຂອງສັງຄົມ.
- ເພີ່ມທະວີວຽກງານສື່ມວນຊົນ ແລະ ຂະຫຍາຍພື້ນຖານວັດຖຸ-ເຕັກນິກໃຫ້ມີຄວາມທັນສະໄໝ.

2) ຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍດ້ານວັດທະນະທຳສັງຄົມມີຄື:

- ຄວາມຫຼາກຫຼາຍທາງດ້ານວັດທະນະທຳແມ່ນຄວາມແຕກຕ່າງກັນ ຫຼື ຄວາມຄ້າຍຄືກັນຂອງວັດທະນະທຳ ເຊັ່ນ: ພາສາ, ສາສະໜາ, ການນຸ່ງຖື, ການຕັ້ງຖິ່ນຖານ ແລະ ອື່ນໆ. ສະນັ້ນ, ເຮົາຄວນເຄົາລົບຈຸດພິເສດ ແລະ ຄວາມແຕກຕ່າງຂອງກັນ ແລະ ກັນຢູ່ໃນທ້ອງຖິ່ນ, ປະເທດ ແລະ ໃນໂລກ.
- ຄວາມຫຼາກຫຼາຍທາງດ້ານວັດທະນະທຳໂລກສຳລັບການປຶກສາຫາລື ແລະ ການພັດທະນາໄດ້ຖືກສ້າງຕັ້ງຂຶ້ນໃນເດືອນພະຈິກ 2001 ໂດຍກອງປະຊຸມໃຫຍ່ສະຫະປະຊາຊາດຂອງ ອົງການ UNESCO ປະຕິບັດຕາມຖະແຫຼງການສາກົນກ່ຽວກັບຄວາມຫຼາກຫຼາຍທາງດ້ານ ວັດທະນະທຳຂອງອົງການ UNESCO.[3] ຈຸດປະສົງແມ່ນເພື່ອສົ່ງເສີມຄວາມຫຼາກຫຼາຍດ້ານວັດທະນະທຳ, ການສົນທະນາ ແລະ ການພັດທະນາ ຊຶ່ງມັນໄດ້ຖືກສະຫຼອງໃນວັນທີ 21 ເດືອນ ພຶດສະພາຂອງທຸກໆປີ.

**3. ສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບເນື້ອໃນບົດຮຽນທີ່ຮຽນທັງໝົດໃນ 1 ຊົ່ວໂມງເຊັ່ນວ່າ:

1. ຄວາມໝາຍຂອງວັດທະນະທຳ
2. ຄວາມສຳຄັນຂອງວັດທະນະທຳ
3. ທິດທາງໃນການພັດທະນາວັດທະນະທຳຂອງພັກລັດເຮົາໃນຕໍ່ໜ້າ
4. ຄວາມຫຼາກຫຼາຍທາງດ້ານວັດທະນະທຳແມ່ນຄວາມແຕກຕ່າງກັນ ຫຼື ຄວາມຄ້າຍຄືກັນຂອງວັດທະນະທຳ ເຊັ່ນ: ພາສາ, ສາສະໜາ, ການນຸ່ງຖື, ການຕັ້ງຖິ່ນຖານ ແລະ

ອື່ນໆ.

ສະນັ້ນ, ເຮົາຄວນເຄົາລົບຈຸດພິເສດ ແລະ ຄວາມແຕກຕ່າງຂອງກັນ ແລະ ກັນຢູ່ໃນທ້ອງຖິ່ນ, ປະເທດ ແລະ ໃນໂລກ.

## V. ການວັດ ແລະ ປະເມີນຜົນ

**ວັດນັກຮຽນຈາກການຕອບຄຳຖາມລຸ່ມນີ້:**

1. ຈົ່ງຍົກໃຫ້ເຫັນວ່າວັດທະນະທຳຂອງຄົນເຮົາສະແດງອອກແນວໃດແດ່?

**ຄຳຕອບ:**

1. ແຕ່ລະປະເທດໃນໂລກໄດ້ມີວັດທະນະທຳທີ່ແຕກຕ່າງກັນຊຶ່ງວັດທະນະທຳຂອງຄົນເຮົາສະແດງອອກໃນການໃຊ້ພາສາ, ສາສະໜາ, ບຸນປະເພນີ, ພິທີການແຕ່ງງານ, ເອກະລັກການນຸ່ງຖື, ອາຫານການກິນ, ສິລະປະດົນຕີ ແລະ ອື່ນໆ.

**ໝາຍເຫດ:**

- ຄູສາມາດນຳໃຊ້ວິທີການສອນອື່ນມາໃຊ້ແທນ ຖ້າຫາກເຫັນວ່າເປັນວິທີທີ່ສອດຄ່ອງ ແລະ ເໝາະສົມ.

**ແຫຼ່ງຂໍ້ມູນຈາກ:**


- James Fearon (2003). “Ethnic and Cultural Diversity by Country” .Journal of Economic Growth.8(2): 195222. doi:10.1023/A:1024419522867. S2CID 152680631.
- Roberto Blancarte Pimentel, Robert Charles Elliot, Robert Holton, Religion, culture and sustainable development -volume II, EOLSS Publications, USA, 2010, p. 340

## 3. ຊັ້ນມັດທະຍົມສຶກສາ ປີທີ 7

ການແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາ ປີທີ 7 ສາມາດແຊກຊ້ອນໄດ້ 5 ບົດ ຄື: ບົດທີ 2, 4, 5, 6 ແລະ 8.

- ບົດທີ 2 ຊົ່ວໂມງທີ 3-4 ຫົວຂໍ້ທີ 2.2 ຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 1, 2, 5, 6 ແລະ 7 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 4 ຊົ່ວໂມງທີ 7-8 ຫົວຂໍ້ທີ 3.3 ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາວັດ ທະນະທຳ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 1 ຫາ 6 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 5 ຊົ່ວໂມງທີ 4-5 ຫົວຂໍ້ທີ 3.2 ສົນທິສັນຍາສາກົນກ່ຽວກັບສັນຕິພາບ, ມິດຕະພາບ ແລະ ການຮ່ວມມືສາກົນ. ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 1 ຫາ 4 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 6 ຊົ່ວໂມງທີ 1-2 ຫົວຂໍ້ທີ 1.2/ ຂໍ້ ຄ. ສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 3 ຫາ 7 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.
- ບົດທີ 8 ຊົ່ວໂມງທີ 3-4 ຫົວຂໍ້ທີ 2.2 ບັນດາສາສະໜາໃນລາວ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 1-2 ແລະ 5 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງສອນ.

# ບົດທີ 2 ການປະຕິບັດກົດໝາຍ

## ສອນແຊກຊ້ອນຫົວຂໍ້ທີ 2.2 ຄວາມຮັບຜິດຊອບຕໍ່ໜ້າກົດໝາຍ

ເວລາ 2 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍການລະເມີດກົດໝາຍ ແລະ ຄວາມຮັບຜິດຊອບຕໍ່ກົດໝາຍ.
- ສະເໜີບັນຫາຄວາມຍຸຕິທໍາໃນສັງຄົມ ແລະ ຄວາມຮັບຜິດຊອບທາງຈັນຍາບັນຢູ່ຫຼາຍພາກສ່ວນໃນໂລກ ແລະ ຕໍ່ຄວາມເຊື່ອ, ຄຸນຄ່າ ແລະ ປັດໄຈທີ່ສົ່ງຜົນກະທົບຕໍ່ສິ່ງດັ່ງກ່າວ.

## II. ເນື້ອໃນ

ການລະເມີດກົດໝາຍເປັນການປະພຶດທີ່ຂັດກັບກົດໝາຍຂອງຜູ້ກໍ່ຄວາມເສຍຫາຍ ຊຶ່ງກົດໝາຍອາຍາໄດ້ຄຸ້ມຄອງບຸກຄົນກະທໍາຜິດທີ່ມີຄວາມຮັບຜິດຊອບທາງກົດໝາຍອາຍາ. ຄວາມຍຸຕິທໍາທາງສັງຄົມແມ່ນແນວຄວາມຄິດຂອງຄວາມຍຸຕິທໍາໃນທຸກຂົງເຂດຂອງສັງຄົມ ຊຶ່ງເປັນຄວາມຍຸຕິທໍາທາງສັງຄົມທີ່ສາມາດຕີຄວາມໝາຍໄດ້ຫຼາຍຄວາມໝາຍ. ບັນຫາຄວາມຍຸຕິທໍາທາງສັງຄົມ ເປັນທັງບັນຫາປັດຊະຍາທີ່ມີຄວາມສໍາຄັນດ້ານການເມືອງ, ສາສະໜາ ແລະ ສັງຄົມ. ເຖິງຢ່າງໃດກໍຕາມ, ແຕ່ລະຄົນອາດຈະມີອຸດົມການກ່ຽວກັບ "ຄວາມຍຸຕິທໍາທາງສັງຄົມ" ທີ່ແຕກຕ່າງກັນ. ດັ່ງນັ້ນ, ການແກ້ໄຂບັນຫາຄວາມຍຸຕິທໍາສັງຄົມໃນດ້ານລະບຽບກົດໝາຍ, ສິດທິມະນຸດ ແລະ ສະຫວັດດີການສັງຄົມ, ເພດ, ເຊື້ອຊາດ, ສາສະໜາທີ່ກ່ຽວຂ້ອງກັບຊີວິດຂອງຄົນໃນກຸ່ມຕ່າງໆ.

ຄວາມຮັບຜິດຊອບຕໍ່ກົດໝາຍແມ່ນຜົນສະທ້ອນທາງລົບທາງດ້ານກົດໝາຍຕໍ່ກັບເຈົ້າກໍາທີ່ຈະໄດ້ຮັບ ຊຶ່ງສະແດງອອກໂດຍຜ່ານການຖືກມາດຕະການບັງຄັບຂອງລັດທີ່ລະບຸໄວ້ໃນການວາງໂທດຕາມກົດໝາຍ. ຄວາມຮັບຜິດຊອບຕໍ່ກົດໝາຍເວລາໃດກໍຕິດພັນກັບບັນດາມາດຕະການບັງຄັບຂອງລັດທີ່ໄດ້ກໍານົດໄວ້ໃນການວາງໂທດຕາມກົດໝາຍ.

ຈັນຍາບັນ ແມ່ນບັນດາຄຸນທາດຄຸນສົມບັດຂອງແຕ່ລະຄົນທີ່ຢູ່ໃນຕົນເອງ, ເວົ້າອີກຢ່າງໜຶ່ງຈັນຍາບັນແມ່ນຄຸນຄ່າຄວາມເປັນຄົນຂອງແຕ່ລະຄົນ, ແຕ່ລະອົງການຂອງພາກພື້ນ

ແລະ ສາກົນ.

ບຸກຄົນທີ່ມີຈັນຍາບັນແມ່ນຄົນທີ່ໄດ້ຮັບການເຄົາລົບນັບຖື ແລະ ໃຫ້ກຽດຄົນອື່ນ ແລະ ສັງຄົມ, ເປັນຄົນທີ່ມີມະໂນທຳ, ມີຄວາມເຂັ້ມແຂງທາງດ້ານວັດຖຸ ແລະ ຈິດໃຈປະຕິບັດພັນທະໜ້າທີ່ຂອງຕົນຕໍ່ຄົນອື່ນ ແລະ ສັງຄົມຢ່າງຖືກຕ້ອງ, ຮູ້ເຄົາລົບກົດໝາຍ, ປະຕິບັດກົດໝາຍ ມີຄວາມຍຸຕິທຳໃນສັງຄົມ ແລະ ມີຄວາມຮັບຜິດຊອບຕໍ່ຈັນຍາບັນ ຊຶ່ງໄດ້ປະກອບເຂົ້າເປັນສ່ວນໜຶ່ງໃນພາກພື້ນ ແລະ ຫຼາຍພາກສ່ວນໃນໂລກ.

ຄວາມຮັບຜິດຊອບທາງຈັນຍາບັນສະແດງອອກ ຄື: ການເຂົ້າຮ່ວມໃນການຮັກສາສິ່ງແວດລ້ອມ, ການປູກປ່າ, ການອະນຸລັກວັດທະນະທຳ, ການໃຫ້ສັດຕະຍະບັນຕໍ່ກັນ, ສົນທິສັນຍາສາກົນ ແລະ ການເຮັດຂໍ້ຕົກລົງຮ່ວມກັນໃນພາກພື້ນ ແລະ ສາກົນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນວິຊາສຶກສາພົນລະເມືອງ ຂັ້ນ ມ.7
2. ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.7
3. ຮູບພາບການລ່ວງລະເມີດກົດຈະລາຈອນ
4. ຮູບພາບການປະຕິບັດຕາມກົດຈະລາຈອນ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 3-4*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ສົນທະນາຖາມ-ຕອບ**

- ຄູຕັ້ງຄຳຖາມໃຫ້ນັກຮຽນ:

1) ກົດໝາຍແມ່ນຫຍັງ?

2) ສະພາແຫ່ງຊາດ (ອົງການນິຕິບັນຍັດ) ແມ່ນຫຍັງ?

3) ລັດຖະບານແມ່ນຫຍັງ?

- ຄູໃຫ້ນັກຮຽນອາສາສະໝັກຕອບປະມານ 4-5 ຄົນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ.

**2. ສະເໜີບົດຮຽນໃໝ່**

- ຄູເວົ້າກັບນັກຮຽນວ່າ: ມື້ນີ້ພວກເຮົາຈະຮຽນກ່ຽວກັບການລະເມີດກົດໝາຍ ແລະ

ຄວາມຮັບຜິດຊອບຕໍ່ກົດໝາຍ.

- ຄູໃຫ້ນັກຮຽນສັງເກດຮູບພາບທີ 1, 2, 3, 4 ແລະ 5 ຄູຖາມນັກຮຽນວ່າ:



ຮູບທີ 1 ການຂັບຂີ່ລົດບໍ່ຖືກຕາມກົດຈະລາຈອນ



ຮູບທີ 2 ການເກີດອຸບັດຕິເຫດ



ຮູບທີ 3 ການແຊງຂຶ້ນໜ້າທີ່ຖືກກົດຈະລາຈອນ



ຮູບທີ 4 ການຍ່າງຕາມທາງມ້າລາຍທີ່ຖືກຕ້ອງຕາມກົດຈະລາຈອນ



ຮູບທີ 5 ການແຊງຂຶ້ນໜ້າທີ່ບໍ່ຖືກຕ້ອງ ທີ່ມີລົດຫຼາຍຄັນກຳລັງພວມແລ່ນ

1) ເຫດການທີ່ເກີດຂຶ້ນໃນແຕ່ລະຮູບພາບມີຫຍັງແດ່?

- ນັກຮຽນຕອບຕາມຄວາມເຂົ້າໃຈ.
- ຄູສະຫຼຸບຕາມເນື້ອໃນຮູບພາບ.

**ຂ. ສົນທະນາລວມໝົດຫ້ອງ (15 ນາທີ)**

- ຄູຕັ້ງຄຳຖາມ.

1) ການລະເມີດກົດໝາຍ ໝາຍເຖິງຫຍັງ?

2) ເຄື່ອງໝາຍຂອງການກະທຳຜິດປະກອບມີຫຍັງແດ່?

- ນັກຮຽນແຕ່ລະຄົນອາສາສະໝັກຕອບ.
- ຄູ ແລະ ນັກຮຽນສະຫຼຸບສັງລວມຮ່ວມກັນຕາມເນື້ອໃນບົດຮຽນ.

1) ການລະເມີດກົດໝາຍໝາຍເຖິງ ການປະພຶດທີ່ຂັດກັບກົດໝາຍຂອງຜູ້ກໍ່ຄວາມເສຍຫາຍ ຊຶ່ງເປັນການປະພຶດທີ່ຂັດກັບກົດໝາຍອາດຈະແມ່ນການກະທຳ ຫຼື ບໍ່ກະທຳ (ການເມີນເສີຍ) ຂອງບຸກຄົນທີ່ມີພັນທະ ແລະ ການທີ່ບຸກຄົນໃດຫາກໄດ້ ນຳໃຊ້ສິດຂອງຕົນເກີນຄວນ ໂດຍເຈດຕະນາບຸກຄົນນັ້ນຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ໃຊ້ສິດເກີນຄວນນັ້ນ.
2) ເຄື່ອງໝາຍຂອງການກະທຳຜິດມີດັ່ງນີ້:

- ຕ້ອງແມ່ນການກະທຳ (ຫຼື ການເມີນເສີຍ) ຂອງຄົນ, ຖ້າຫາກວ່າມີແຕ່ຄິດຢູ່ໃນໃຈ ແຕ່ບໍ່ໄດ້ສະແດງອອກພາຍນອກແມ່ນຍັງບໍ່ສາມາດເອີ້ນວ່າ ການລະເມີດກົດໝາຍໄດ້.
- ຕ້ອງມີຄຸນລັກສະນະຜິດຕໍ່ກົດໝາຍ ໝາຍຄວາມວ່າ ການກະທຳທີ່ລະເມີດຕໍ່ກົດໝາຍທີ່ໄດ້ກຳນົດໄວ້ໃນນິຕິກຳຕ່າງໆຂອງບ້ານເມືອງ.

**ຄ. ສົນທະນາເປັນຄູ່ (25 ນາທີ)**

- ຄູໃຫ້ນັກຮຽນຄົ້ນຄວ້າເປັນຄູ່ຕາມຄຳຖາມລຸ່ມນີ້:

1) ຈົ່ງອະທິບາຍຄວາມຍຸຕິທຳທາງສັງຄົມ.
2) ຄວາມຮັບຜິດຊອບຕໍ່ກົດໝາຍແມ່ນຫຍັງ?
3) ຈັນຍາບັນແມ່ນຫຍັງ?
4) ຄວາມບໍ່ຍຸຕິທຳໃນສັງຄົມສະແດງອອກແນວໃດ?
5) ຄວາມຮັບຜິດຊອບທາງຈັນຍາບັນຢູ່ຫຼາຍພາກສ່ວນໃນໂລກສະແດງອອກແນວໃດ?

- ແຕ່ລະຄູ່ຕາງໜ້ານັກຮຽນຂຶ້ນລາຍງານ.
- ຄູສະຫຼຸບຄຳຕອບຂອງນັກຮຽນຕາມຄຳຖາມທີ່ຕັ້ງໄວ້ ແລະ ເພີ່ມເຕີມບາງຈຸດທີ່ບໍ່ຖືກຕ້ອງ.

1) ຄວາມຍຸຕິທຳທາງສັງຄົມ ແມ່ນແນວຄວາມຄິດຂອງຄວາມຍຸຕິທຳໃນທຸກຂົງເຂດຂອງສັງຄົມ ຊຶ່ງເປັນຄວາມຍຸຕິທຳທາງສັງຄົມທີ່ສາມາດຕີຄວາມໝາຍໄດ້ຫຼາຍຄວາມ

ໝາຍ. ບັນຫາຄວາມຍຸຕິທຳທາງສັງຄົມ ເປັນທັງບັນຫາປັດຊະຍາທີ່ມີຄວາມສຳຄັນດ້ານການເມືອງ, ສາສະໜາ ແລະ ສັງຄົມ. ເຖິງຢ່າງໃດກໍຕາມ, ແຕ່ລະຄົນອາດຈະມີອຸດົມການກ່ຽວກັບ "ຄວາມຍຸຕິທຳທາງສັງຄົມ" ທີ່ແຕກຕ່າງກັນ. ດັ່ງນັ້ນ, ການແກ້ໄຂບັນຫາຄວາມຍຸຕິທຳສັງຄົມໃນດ້ານລະບຽບກົດໝາຍ, ສິດທິມະນຸດ ແລະ ສະຫວັດດີການສັງຄົມ, ເພດ, ເຊື້ອຊາດ, ສາສະໜາທີ່ກ່ຽວຂ້ອງກັບຊີວິດຂອງຄົນໃນກຸ່ມຕ່າງໆ.

2) ຄວາມຮັບຜິດຊອບຕໍ່ກົດໝາຍ ແມ່ນຜົນສະທ້ອນທາງລົບທາງດ້ານກົດໝາຍຕໍ່ກັບເຈົ້າກຳທີ່ຈະໄດ້ຮັບ ຊຶ່ງສະແດງອອກໂດຍຜ່ານການຖືກມາດຕະການບັງຄັບຂອງລັດທີ່ລະບຸໄວ້ໃນການວາງໂທດຕາມກົດໝາຍ. ຄວາມຮັບຜິດຊອບຕໍ່ກົດໝາຍເວລາໃດກໍຕິດພັນກັບບັນດາມາດຕະການບັງຄັບຂອງລັດທີ່ໄດ້ກຳນົດໄວ້ໃນການວາງໂທດຕາມກົດໝາຍ.

3) ຈັນຍາບັນ ແມ່ນບັນດາຄຸນທາດຄຸນສົມບັດຂອງແຕ່ລະຄົນທີ່ຢູ່ໃນຕົນເອງ, ເວົ້າອີກຢ່າງໜຶ່ງແມ່ນຄຸນຄ່າຄວາມເປັນຄົນຂອງແຕ່ລະຄົນ, ແຕ່ລະອົງການຂອງພາກພື້ນ ແລະ ສາກົນ. ບຸກຄົນທີ່ມີຈັນຍາບັນແມ່ນຄົນທີ່ໄດ້ຮັບການເຄົາລົບນັບຖື ແລະໃຫ້ກຽດຄົນອື່ນ ແລະ ສັງຄົມ, ເປັນຄົນທີ່ມີມະໂນທຳ, ມີຄວາມເຂັ້ມແຂງທາງດ້ານວັດຖຸ ແລະ ຈິດໃຈ ປະຕິບັດພັນທະໜ້າທີ່ຂອງຕົນຕໍ່ຄົນອື່ນ ແລະ ສັງຄົມຢ່າງຖືກຕ້ອງ, ຮູ້ຄວາມເຄົາລົບກົດໝາຍ, ປະຕິບັດກົດໝາຍ ມີຄວາມຍຸຕິທຳໃນສັງຄົມ ແລະ ມີຄວາມຮັບຜິດຊອບຕໍ່ຈັນຍາບັນ ຊຶ່ງໄດ້ປະກອບເຂົ້າເປັນສ່ວນໜຶ່ງໃນພາກພື້ນ ແລະ ຫຼາຍພາກສ່ວນໃນໂລກ.

4) ຄວາມຮັບຜິດຊອບທາງຈັນຍາບັນສະແດງອອກ ຄື: ການເຂົ້າຮ່ວມໃນການຮັກສາສິ່ງແວດລ້ອມ, ການປູກປ່າ, ການອະນຸລັກວັດທະນະທຳ, ການໃຫ້ສັດຕະຍະບັນຕໍ່ກັນ, ສົນທິສັນຍາສາກົນ ແລະ ການເຮັດຂໍ້ຕົກລົງຮ່ວມກັນໃນພາກພື້ນ ແລະ ສາກົນ.

**໑. ສົນທະນາເປັນກຸ່ມ (45 ນາທີ)**

- ຄູຈັດນັກຮຽນເປັນ 2 ກຸ່ມແລ້ວ ແຕ່ລະກຸ່ມອ່ານຫົວຂໍ້ທີ່ຄູກຳນົດໃຫ້ແລ້ວມາຄົ້ນຄວ້າຕາມຄຳຖາມລຸ່ມນີ້:

**ກຸ່ມທີ 1 ອ່ານຫົວຂໍ້ ການລະເມີດກົດໝາຍອາຍາ**

1) ການກະທຳຜິດທາງອາຍາສະແດງອອກຄືແນວໃດ?

2) ການກະທຳຜິດມີເຄື່ອງໝາຍສະເພາະຄືແນວໃດ?

3) ກົດໝາຍອາຍາແຫ່ງ ສປປ ລາວ ໄດ້ແບ່ງການກະທຳຜິດອອກເປັນຈັກສະຖານຄື ສະຖານໃດແດ່? ຈົ່ງອະທິບາຍແຕ່ລະສະຖານ.

**ກຸ່ມທີ 2 ອ່ານຫົວຂໍ້ ຄວາມຮັບຜິດຊອບທາງກົດໝາຍອາຍາ.**

1) ຄວາມຮັບຜິດຊອບຕໍ່ກົດໝາຍໄດ້ສະແດງອອກຄືແນວໃດ?

2) ຄວາມຮັບຜິດຊອບພື້ນຖານທາງອາຍາປະກອບດ້ວຍເຄື່ອງໝາຍຫຍັງແດ່?

- ຄູໃຫ້ນັກຮຽນຕາງໜ້າກຸ່ມຂຶ້ນມາສະເໜີ.
- ຄູຍ້ອງຍໍຊົມເຊີຍກຸ່ມທີ່ສະເໜີໄດ້ດີ.
- ຄູສະຫຼຸບເນື້ອໃນໃຫ້ນັກຮຽນ.

**ສະຫຼຸບຂອງກຸ່ມທີ 1**:

1) ຄວາມຮັບຜິດຊອບຕໍ່ກົດໝາຍສະແດງອອກ ຄື: ແມ່ນການປະພຶດ (ການກະທຳ ຫຼື ການເມີນເສີຍ) ທີ່ແຕະຕ້ອງເຖິງສາຍພົວພັນສັງຄົມ ຊຶ່ງກົດໝາຍອາຍາໄດ້ຄຸ້ມຄອງເອົາໄວ້ ແລະ ຖືກຮັບຮູ້ໂດຍກົດໝາຍອາຍາວ່າເປັນການກະທຳຜິດ, ສ່ວນການປະພຶດທີ່ສ້າງຄວາມເສຍຫາຍພຽງແຕ່ເລັກນ້ອຍແກ່ສັງຄົມ ຈະບໍ່ຖືວ່າເປັນການກະທຳຜິດ.

2) ການກະທຳຜິດມີເຄື່ອງໝາຍສະເພາະ ຄື: ແມ່ນການປະພຶດທີ່ເປັນອັນຕະລາຍຕໍ່ສັງຄົມ, ການປະພຶດທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາພາກສະເພາະ ແລະ ການປະພຶດທີ່ເກີດຈາກຄວາມຜິດຂອງບຸກຄົນຜູ້ເປັນເຈົ້າຂອງ.

3) ກົດໝາຍອາຍາແຫ່ງ ສປປ ລາວ ໄດ້ແບ່ງການກະທຳຜິດເປັນ 3 ສະຖານ ຄື:

- ສະຖານລະຫຸໂທດ: ແມ່ນການກະທຳຜິດທີ່ກົດໝາຍອາຍາໄດ້ກຳນົດໂທດຕຳນິວິຈານຕໍ່ໜ້າມະຫາຊົນ.
- ສະຖານໂທສານຸໂທດ: ແມ່ນການກະທຳຜິດທີ່ກົດໝາຍອາຍາໄດ້ກຳນົດໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ, ໂທດປັບໄໝ, ໂທດຕັດອິດສະຫຼະພາບແຕ່ 3 ເດືອນ ຫາ 10 ປີ.
- ສະຖານຄະຣຸໂທດ: ແມ່ນການກະທຳຜິດທີ່ກົດໝາຍອາຍາໄດ້ກຳນົດໂທດຕັດອິດສະຫຼະພາບແຕ່ 5 ປີ ຂຶ້ນໄປຮອດປະຫານຊີວິດ.

**ສະຫຼຸບກຸ່ມທີ 2:**

1) ຄວາມຮັບຜິດຊອບທາງກົດໝາຍໄດ້ສະແດງອອກ ຄື: ແມ່ນການຕຳນິບຸກຄົນຜູ້ເປັນເຈົ້າຂອງການປະພຶດອັນແນ່ນອນໃດໜຶ່ງໂດຍອີງການທີ່ມີສິດອຳນາດ (ສານປະຊາຊົນ) ພາຍຫຼັງທີ່ໄດ້ຕີລາຄາການປະພຶດດັ່ງກ່າວຂອງບຸກຄົນນັ້ນວ່າ ເປັນການກະທຳຜິດ. ພາຍຫຼັງທີ່ຮັບຮູ້ວ່າ ບຸກຄົນໃດໜຶ່ງເປັນຜູ້ກະທຳຜິດແລ້ວ ບຸກຄົນນັ້ນຕ້ອງໄດ້ຮັບຜິດຊອບທາງອາຍາຕໍ່ການກະທຳຜິດຂອງຕົນ (ໄດ້ຮັບໂທດ).
2) ຄວາມຮັບຜິດຊອບພື້ນຖານທາງອາຍາແມ່ນບັນດາເຄື່ອງໝາຍທີ່ຊີ້ບອກວ່າບຸກຄົນໃດໜຶ່ງເປັນຜູ້ກະທຳຜິດ ແລະ ຕ້ອງໄດ້ຖືກຕຳນິໃນລະດັບອັນແນ່ນອນ ແລະ ເດັດຂາດ.
3) ບັນດາເຄື່ອງໝາຍປະກອບມີ:
   - ການປະພຶດຕົວຈິງທີ່ມີອົງປະກອບຂອງການກະທຳຜິດຢ່າງຄົບຖ້ວນ ຈາກການໄຕ່ສວນຕໍ່ໜ້າສານປະຊາຊົນແລ້ວພາໃຫ້ລົງຄຳວິນິດໄສໄດ້ວ່າການປະພຶດດັ່ງກ່າວແມ່ນການກະທຳຜິດທາງກົດໝາຍອາຍາ.
   - ອົງປະກອບຂອງການກະທຳຜິດ ເປັນປັດໄຈອັນສຳຄັນກວ່າໝູ່ ແລະ ກະທົບເຖິງລະດັບຄວາມຮັບຜິດຊອບທາງອາຍາ ແມ່ນຄວາມຜິດຊຶ່ງອາດຈະສະແດງອອກໃນຮູບຂອງການເຈຕະນາ ຫຼື ຄວາມບໍ່ລະມັດລະວັງ ໂດຍອີງໃສ່ຄວາມຮັບຜິດຊອບຂອງບຸກຄົນທີ່ກ່ຽວຂ້ອງສານຈະກຳນົດຂອບເຂດຄວາມຮັບຜິດຊອບທາງອາຍາຂອງຜູ້ກະທຳຜິດອອກຢ່າງຈຳເພາະເຈາະຈົງ.
   - ການລົງຄຳຕັດສິນຂອງສານເປັນການກະທຳຜິດແລ້ວສານຈະຕ້ອງວິນິດໄສອີກວ່າຜູ້ເປັນເຈົ້າຂອງການປະພຶດຈະຕ້ອງຖືກລົງໂທດ ຫຼື ບໍ່, ຖ້າເຫັນວ່າຕ້ອງລົງໂທດຜູ້ກ່ຽວຈະຕ້ອງໄດ້ຮັບໂທດປະເພດໃດ ແລະ ໃນລະດັບໃດ. ໃນນັ້ນ, ບັນດາເຄື່ອງໝາຍເຫຼົ່ານັ້ນຈຶ່ງເວົ້າໄດ້ວ່າ ຄຳຕັດສິນຂອງສານແມ່ນສູນລວມຂອງບັນດາເຄື່ອງໝາຍ ແລະ ເປັນພື້ນຖານອັນເດັດຂາດຂອງຄວາມຮັບຜິດຊອບທາງອາຍາຕໍ່ຄວາມຮັບຜິດຊອບທາງອາຍາ ໝາຍຄວາມວ່າບຸກຄົນໃດໜຶ່ງຈະໄດ້ຮັບຜິດຊອບທາງອາຍາຕໍ່ການປະພຶດຂອງຕົນ ກໍຕໍ່ເມື່ອມີການຕັດສິນຂອງສານ ຊຶ່ງຈະລະບຸຄວາມຮັບຜິດຊອບນັ້ນຢ່າງລະອຽດ, ຈະແຈ້ງ ແລະ ຖືກຕ້ອງ.

### 3. ສະຫຼຸບ (5 ນາທີ)

ການລະເມີດກົດໝາຍເປັນການປະພຶດທີ່ຂັດກັບກົດໝາຍຂອງຜູ້ກໍ່ຄວາມເສຍຫາຍ ຊຶ່ງກົດໝາຍອາຍາໄດ້ຄຸ້ມຄອງບຸກຄົນກະທຳຜິດທີ່ມີຄວາມຮັບຜິດຊອບທາງກົດໝາຍອາຍາ. ຄວາມຍຸຕິທຳທາງສັງຄົມທຸກຄົນໃນສັງຄົມລ້ວນແຕ່ມີຄວາມຕ້ອງການຄວາມຍຸຕິທຳຢູ່ໃນທຸກ ຂົງເຂດຂອງສັງຄົມກໍຄືໃນໂລກ. ສະນັ້ນ, ທຸກບັນຫາຄວາມຍຸຕິທຳທາງສັງຄົມທີ່ຈຳເປັນຕ້ອງ ປະຕິບັດດ້ານລະບຽບກົດໝາຍເພື່ອແກ້ໄຂດ້ານສິດທິມະນຸດ ແລະ ສະຫວັດດີການສັງຄົມ, ເພດ, ເຊື້ອຊາດ, ສາສະໜາທີ່ກ່ຽວຂ້ອງກັບຊີວິດຂອງຄົນໃນສັງຄົມ. ໃນນັ້ນທຸກຄົນມີຄວາມ ຮັບຜິດຊອບຕໍ່ກົດໝາຍເມື່ອກະທຳຜິດ ຫຼື ບໍ່ປະຕິບັດແມ່ນມີຜົນສະທ້ອນທາງລົບທາງດ້ານ ກົດໝາຍຕໍ່ກັບຜູ້ກະທຳ ຊຶ່ງສະແດງອອກໂດຍຜ່ານການຖືກມາດຕະການບັງຄັບຂອງລັດທີ່ ລະບຸໄວ້ໃນການວາງໂທດຕາມກົດໝາຍ. ດັ່ງນັ້ນ ທຸກຄົນຄວາມມີຈັນຍາບັນຂອງຕົນເອງ, ເວົ້າອີກຢ່າງໜຶ່ງຈັນຍາບັນແມ່ນຄຸນຄ່າຄວາມເປັນຄົນຂອງແຕ່ລະຄົນ, ຄວນເຄົາລົບນັບຖື ແລະ ໃຫ້ກຽດຄົນອື່ນ ແລະ ສັງຄົມ, ເປັນຄົນທີ່ມີມະໂນທຳ, ມີຄວາມເຂັ້ມແຂງທາງດ້ານວັດຖຸ ແລະ ຈິດໃຈ, ປະຕິບັດພັນທະໜ້າທີ່ຂອງຕົນຕໍ່ຄົນອື່ນ ແລະ ສັງຄົມຢ່າງຖືກຕ້ອງຂອງແຕ່ລະ ອົງການຂອງພາກພື້ນ ແລະ ສາກົນ.

## V. ການວັດ ແລະ ປະເມີນຜົນ (5 ນາທີ)

ຄູປະເມີນນັກຮຽນຈາກການຕອບຄຳຖາມ:

1) ຜ່ານການຮຽນໃນ 2 ຊົ່ວໂມງນີ້ນັກຮຽນເຂົ້າໃຈບັນຫາຫຍັງແດ່?

- ນັກຮຽນອາສາສະໝັກຕອບປະມານ 2-3 ຄົນ.

(ການລະເມີດກົດໝາຍ, ຄວາມຮັບຜິດຊອບຕໍ່ກົດໝາຍ, ປະເພດຂອງການລະເມີດ ກົດໝາຍ).

**ໝາຍເຫດ**:

- ກິດຈະກຳໃດທີ່ບໍ່ສອດຄ່ອງກັບສະພາບຕົວຈິງໃນທ້ອງຖິ່ນ ຄູກໍສາມາດຫາວິທີອື່ນ ມານຳໃຊ້ແທນໄດ້.

**ເອກະສານອ້າງອີງ**:

- Teaching For Social Justice? – thaiciviceducation.org

# ບົດທີ 4 ກົດໝາຍຕໍ່ກັບການພັດທະນາປະເທດຊາດ
## ແຊກຊ້ອນຫົວຂໍ້ທີ 3.3 ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາວັດທະນະທຳ

ເວລາ 2 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍການປະຕິບັດສິດ ແລະ ພັນທະຂອງພົນລະເມືອງຕໍ່ການພັດທະນາປະເທດຊາດໃນດ້ານການເມືອງ, ເສດຖະກິດ, ສິ່ງແວດລ້ອມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
- ອະທິບາຍການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາວັດທະນະທຳໃນທ້ອງຖິ່ນ, ຂອງຊາດ ເພື່ອເຜີຍແຜ່ມູນມໍລະດົກຂອງຊາດໃຫ້ຊາວໂລກຮັບຮູ້.
- ສະໜັບສະໜູນການພັດທະນາວັດທະນະທຳ, ການມີສ່ວນຮ່ວມໃນການພັດທະນາວັດທະນະທຳໃນທ້ອງຖິ່ນ ແລະ ຂອງຊາດ.

## II. ເນື້ອໃນຕົ້ນຕໍ

ສິດພື້ນຖານຂອງພົນລະເມືອງ: ທຸກຄົນມີສິດສະເໝີພາບຕໍ່ໜ້າກົດໝາຍ, ມີສິດສະເໝີພາບລະຫວ່າງຍິງ-ຊາຍ, ມີສິດປ່ອນບັດເລືອກຕັ້ງ ແລະ ຮັບສະໝັກເລືອກຕັ້ງ, ສິດສະເໝີພາບ ໃນການຕັ້ງພູມລຳເນົາ, ເຄົາລົບລັດຖະທຳມະນູນ ແລະ ກົດໝາຍ, ການເສຍພາສີອາກອນຕາມລະບຽບກົດໝາຍ ແລະ ມີພັນທະປົກປັກຮັກສາປະເທດຊາດ, ປ້ອງກັນຄວາມສະຫງົບ.

ສິດ ແລະ ພັນທະຕໍ່ການພັດທະນາເສດຖະກິດ: ແມ່ນການເຄື່ອນໄຫວເຮັດການຜະລິດ, ທັງເປັນວຽກງານ ແລະ ການແລກປ່ຽນສິນຄ້າແນໃສ່ໄດ້ຮັບຜົນກຳໄລຊຶ່ງແມ່ນສິດຂອງພົນລະເມືອງທີ່ໄດ້ເລືອກເຟັ້ນຮູບແບບການຈັດຕັ້ງທາງດ້ານເສດຖະກິດ.

ສິດ ແລະ ພັນທະຕໍ່ການພັດທະນາວັດທະນະທຳ: ວັດທະນະທຳແມ່ນທຸກສິ່ງທຸກຢ່າງທີ່ມະນຸດສ້າງຂຶ້ນ ແລະ ມີການພັດທະນາ, ປ່ຽນແປງ, ປັບປຸງ, ເສີມຂະຫຍາຍໃຫ້ກວ້າງຂວາງຢ່າງມີວິທະຍາສາດ ແລະ ເປັນແບບແຜນທີ່ດີໃນຊີວິດສັງຄົມ. ພວກເຮົາຕ້ອງຄົ້ນຫາຄຸນຄ່າ

ທີ່ດີໃນວັດທະນະທຳຂອງເຜົ່າຕ່າງໆ ແລະ ສິ່ງທີ່ປະກອບເປັນວັດທະນະທຳລວມຂອງວົງຄະນະຍາດແຫ່ງຊາດເພື່ອສົ່ງເສີມໃຫ້ເຂົ້າຮ່ວມໃນພາລະກິດວັດທະນະທຳລວມຂອງມວນມະນຸດ. ເປີດກວ້າງການແລກປ່ຽນທາງດ້ານວັດທະນະທຳກັບນານາຊາດດ້ວຍຫຼາຍຮູບການ, ພ້ອມທັງ ໂຄສະນາເຜີຍແຜ່ໃຫ້ນັກທ່ອງທ່ຽວໃນພາກພື້ນ ແລະ ໃນທົ່ວໂລກ ໃຫ້ມາທ່ຽວຊົມຄວາມສວຍງາມມໍລະດົກວັດທະນະທຳແຫຼ່ງທ່ອງທ່ຽວຂອງແຕ່ລະແຂວງ ພ້ອມທັງຊຸກດັນແຫຼ່ງທ່ອງທ່ຽວໃຫ້ຖືກຮັບຮອງເຂົ້າໃນບັນຊີມໍລະດົກວັດທະນະທຳຂອງອາຊຽນ ແລະ ຂອງໂລກ.

ສິດ ແລະ ພັນທະຕໍ່ການພັດທະນາສິ່ງແວດລ້ອມ: ແມ່ນການປ້ອງກັນ, ປັບປຸງ, ບູລະນະ, ຄວບຄຸມ, ຕິດຕາມ ແລະ ກວດກາສິ່ງແວດລ້ອມຕາມລະບຽບກົດໝາຍ.

ສິດ ແລະ ພັນທະຕໍ່ການພັດທະນາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ແມ່ນໜ້າທີ່ຕົ້ນຕໍ ແລະ ມີກຽດອັນສູງສົ່ງຂອງພົນລະເມືອງລາວທຸກຄົນ ເພື່ອປົກປັກຮັກສາເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ປົກປັກຮັກສາຊີວິດ ແລະ ຊັບສິນຂອງປະຊາຊົນບັນດາເຜົ່າ.

## III. ສື່ການຮຽນການສອນ

1. ປື້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.7
2. ຮູບກ່ຽວກັບການເລືອກຕັ້ງ, ການເສຍພາສີ, ວັດທະນະທຳຂອງເຜົ່າ, ຂອງຊາດ, ຂອງໂລກ...
3. ເຈ້ຍແຜ່ນນ້ອຍສຳລັບຂຽນຂໍ້ຄວາມ
4. ເຈ້ຍແຜ່ນໃຫຍ່ສຳລັບຕິດເຈ້ຍຂໍ້ຄວາມ/ສະກັອດຕິດ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 7-8*

**1. ທວນຄືນບົດຮຽນທີ່ຜ່ານມາ (10 ນາທີ)**

**ຄູຕັ້ງຄຳຖາມ**

1) ຈົ່ງເວົ້າເນື້ອໃນກົດໝາຍຕໍ່ການພັດທະນາປະເທດຊາດມີດ້ານໃດແດ່?

- ນັກຮຽນຕອບຄຳຖາມ, ຄູສະຫຼຸບຄືນ ແລະ ເຂົ້າສູ່ບົດຮຽນໃໝ່.

**ຄຳຕອບ**

1) ເນື້ອໃນກົດໝາຍຕໍ່ການພັດທະນາປະເທດຊາດມີ ຄື: ກົດໝາຍຕໍ່ການພັດທະນາ

ດ້ານການເມືອງ, ກົດໝາຍຕໍ່ການພັດທະນາດ້ານເສດຖະກິດ, ກົດໝາຍຕໍ່ການພັດທະນາດ້ານວັດທະນະທຳ, ກົດໝາຍຕໍ່ການພັດທະນາດ້ານສັງຄົມ, ກົດໝາຍຕໍ່ການພັດທະນາດ້ານສິ່ງແວດລ້ອມ, ກົດໝາຍຕໍ່ການພັດທະນາດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**2. ຄູສະເໜີບົດຮຽນໃໝ່**

**ກ. ສົນທະນາຫົວຂໍ້ 3 ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງຕໍ່ການພັດທະນາປະເທດຊາດ (40 ນາທີ)**

- ຄູໃຫ້ນັກຮຽນປະຕິບັດເປັນຄູ່ ຫຼື ເປັນໂຕະ ເພື່ອສັງເກດຮູບພາບ ແລະ ສົນທະນາເນື້ອໃນ ຂໍ້ທີ 3.1 ແລະ 3.2 ໜ້າ 70 ແລະ 71 ໃນປຶ້ມແບບຮຽນ, ຈາກນັ້ນຄູໃຫ້ສັງລວມຄຳຕອບໃສ່ເຈ້ຍ ໄປຕິດໃສ່ກະດານ.
- ຄູເອົາຮູບພາບຢູ່ທ້າຍບົດຮຽນໃຫ້ນັກຮຽນສັງເກດ.
- ຮູບທີ່ນັກຮຽນສັງເກດແມ່ນກ່ຽວກັບການປະຕິບັດສິດ ແລະ ພັນທະດ້ານໃດແດ່?

**ຄູຕັ້ງຄຳຖາມ ໃຫ້ຄົ້ນຄວ້າ**:

1) ສິດ ແລະ ພັນທະພື້ນຖານຂອງພົນລະເມືອງມີຫຍັງແດ່?

2) ຈົ່ງເວົ້າການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາເສດຖະກິດມີຄືແນວໃດ?

- ຄູໃຫ້ເວລາຄົ້ນຄວ້າ ແລະ ຂຽນຄຳຕອບໃສ່ເຈ້ຍໄປຕິດໃສ່ກະດານ.
- ຄູໃຫ້ແຕ່ລະຄົນອອກໄປອ່ານຄຳຕອບຂອງແຕ່ລະໂຕະເພື່ອແລກປ່ຽນບົດຮຽນກັນ.
- ຄູສະຫຼຸບ ຄຳຕອບແຕ່ລະຄົນ ແລະ ສະເໜີເນື້ອໃນແຕ່ລະຂໍ້ເພີ່ມເຕີມ:

**ຄຳຕອບ**:

1) ສິດ ແລະ ພັນທະພື້ນຖານຂອງພົນລະເມືອງມີຄື:

**ສິດຂອງພົນລະເມືອງ**

- ພົນລະເມືອງທຸກຄົນລ້ວນແຕ່ມີສິດສະເໝີພາບຕໍ່ໜ້າກົດໝາຍ.
- ສິດໃນການປ່ອນບັດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.
- ສິດສະເໝີພາບລະຫວ່າງຍິງ-ຊາຍ.
- ສິດໄດ້ຮັບການຮໍ່າຮຽນ, ຍົກສູງຄວາມກ້າວໜ້າ.
- ສິດໃນການເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຂັດກັບກົດໝາຍ.
- ສິດເສລີພາບໃນການຕັ້ງພູມລຳເນົາ ແລະ ໄປມາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

- ສິດຮ້ອງຟ້ອງ ແລະ ສະເໜີຄວາມຄິດເຫັນຕໍ່ອົງການທີ່ກ່ຽວຂ້ອງ, ພົວພັນເຖິງສິດ ແລະ ຜົນປະໂຫຍດຂອງຕົນ.
- ສິດບໍ່ມີໃຜລ່ວງລະເມີດໄດ້ທາງດ້ານຮ່າງກາຍ, ກຽດສັກສີ ແລະ ເຄຫາສະຖານ, ຍົກເວັ້ນ ແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ.
- ສິດໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາ.
- ສິດໃນການປາກເວົ້າ, ຂີດຂຽນ, ຈັດຕັ້ງສະມາຄົມ, ເດີນຂະບວນທີ່ບໍ່ຂັດກັບລະບຽບກົດໝາຍ.
- ສິດໃນການຄົ້ນຄວ້າ ແລະ ນຳໃຊ້ຄວາມກ້າວໜ້າດ້ານວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ປະດິດສ້າງສິລະປະວັນນະຄະດີ ແລະ ດຳເນີນການເຄື່ອນໄຫວວັດທະນະທຳທີ່ບໍ່ຂັດກັບລະບຽບກົດໝາຍ.
- ລັດປົກປ້ອງສິດ ແລະ ຜົນປະໂຫຍດອັນຖືກຕ້ອງຕາມກົດໝາຍຂອງພົນລະເມືອງລາວທີ່ຢູ່ຕ່າງປະເທດ.

**ພັນທະຂອງພົນລະເມືອງ**

- ເຄົາລົບລັດຖະທຳມະນູນ ແລະ ກົດໝາຍ (ໃນການເຄື່ອນໄຫວດຳລົງຊີວິດ).
- ເສຍພາສີ ແລະ ສ່ວຍສາອາກອນຕາມລະບຽບກົດໝາຍ.
- ປົກປັກຮັກສາປະເທດຊາດ ແລະ ປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

2) ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາເສດຖະກິດ:

ແມ່ນການເຄື່ອນໄຫວເຮັດການຜະລິດ, ທັງເປັນວຽກງານ ແລະ ການແລກປ່ຽນສິນຄ້າ ແນໃສ່ໄດ້ຮັບຜົນກຳໄລຊຶ່ງແມ່ນສິດຂອງພົນລະເມືອງທີ່ໄດ້ເລືອກເຟັ້ນຮູບແບບການຈັດຕັ້ງທາງດ້ານເສດຖະກິດ, ຂະແໜງການ ແລະ ຂະໜາດຂອງວິສາຫະກິດ ເຊັ່ນ: ເລືອກຂະແໜງການ ແລະ ຂະໜາດຂອງທຸລະກິດ, ສາມາດເລືອກຮູບແບບ, ວິທີລົງທຶນ, ນຳໃຊ້ ແລະ ຈ້າງພະນັກງານ ໂດຍມີພັນທະດັ່ງນີ້:

- ແຈ້ງການລົງທຶນເຂົ້າໃນທຸລະກິດຖືກຕາມຂະແໜງການທີ່ໄດ້ອະນຸມັດ.
- ສິນຄ້າຕ້ອງໄດ້ຮັບຄຸນນະພາບ ແລະ ປະຕິບັດຕາມຂໍ້ກຳນົດກົດໝາຍ.
- ປະຕິບັດການເສຍພາສີ ແລະ ພັນທະອື່ນໆໃຫ້ແກ່ລັດ.

**ຂ. ສົນທະນາກ່ຽວກັບການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາວັດທະນະທຳ, ສິ່ງແວດລ້ອມ ແລະ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ (50 ນາທີ)**

- ຄູໃຫ້ປະຕິບັດເປັນກຸ່ມ ຫຼື ເປັນໂຕະເພື່ອສັງເກດຮູບພາບ ແລະ ຄົ້ນຄວ້າເນື້ອໃນຂໍ້ 3.3 ໜ້າ 71, ຂໍ້ 3.4 ໜ້າ 72 ແລະ ຂໍ້ 3.5 ໜ້າ 74 ໃນປຶ້ມແບບຮຽນ, ຄູຕັ້ງຖາມໃຫ້ຄົ້ນຄວ້າ, ຈາກນັ້ນໃຫ້ຂຽນຄຳຕອບໃສ່ເຈ້ຍແລ້ວອອກລາຍງານຢູ່ໜ້າກະດານ. ນັກຮຽນຕິດຕາມ ແລະ ກຽມຖາມຄືນ ຫຼື ຕອບເພີ່ມເຕີມຖ້າມີຄຳຕອບທີ່ແຕກຕ່າງກັນ.




ຮູບທີ 1: ການກຳນົດວັນໄປໃຊ້ສິດເລືອກຕັ້ງ.



ຮູບທີ 2: ເຂື່ອນໄຟຟ້ານ້ຳງື່ມ 1



ຮູບທີ 3: ລົດໄຟຄວາມໄວສູງລາວ-ຈີນ



ຮູບທີ 4: ການບິນທະບາດຂອງພະສົງ






ຮູບທີ 5: ວັດຊຽງທອງນະຄອນຫຼວງພະບາງ     ຮູບທີ 6: ວັນສ້າງຕັ້ງກອງທັບປະຊາຊົນລາວ

**ຄູຕັ້ງຄຳຖາມສົນທະນາ.**

1) ຮູບທີ່ນັກຮຽນສັງເກດກ່ຽວຂ້ອງກັບດ້ານວັດທະນະທຳແມ່ນຮູບໃດແດ່?

2) ຈົ່ງອະທິບາຍການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາວັດທະນະທຳມີຄືແນວໃດ?

3) ຈົ່ງຍົກໃຫ້ເຫັນການພັດທະນາວັດທະນະທຳໃນທ້ອງຖິ່ນ, ຂອງຊາດ ເພື່ອເຜີຍແຜ່ໃຫ້ຊາວໂລກຮັບຮູ້ມີຫຍັງແດ່?

4) ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາສິ່ງແວດລ້ອມມີຄືແນວໃດ?

5) ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີຄືແນວໃດ?

- ຄູໃຫ້ເວລາແຕ່ລະກຸ່ມຄົ້ນຄວ້າ ແລະ ອອກລາຍງານຄຳຕອບຢູ່ໜ້າກະດານ.
- ນັກຮຽນແຕ່ລະຄົນຕິດຕາມເພື່ອກຽມຖາມ ຫຼື ປະກອບຄຳເຫັນເພີ່ມເຕີມເພື່ອແລກປ່ຽນຄວາມຮູ້.

**ຄູສະຫຼຸບຄຳຕອບແຕ່ລະກຸ່ມ ແລະ ເນັ້ນບາງເນື້ອໃນເພີ່ມເຕີມດັ່ງນີ້:**

1) ຮູບທີ່ນັກຮຽນສັງເກດກ່ຽວຂ້ອງກັບດ້ານວັດທະນະທຳແມ່ນຮູບ..........

2) ວັດທະນະທຳແມ່ນມະນຸດກຳນົດຂຶ້ນແລ້ວໄດ້ຮັບການພັດທະນາປ່ຽນແປງ, ມີການເສີມຂະຫຍາຍໃຫ້ກວ້າງຂວາງຢ່າງມີວິທະຍາສາດ ແລະ ເປັນແບບແຜນທີ່ດີໃນຊີວິດສັງຄົມ. ວັດທະນະທຳເປັນພື້ນຖານແຫ່ງການຢືນຍົງຄົງຕົວຂອງຊາດ, ແມ່ນກຳລັງຊຸກດັນສັງຄົມໃຫ້ມີການຂະຫຍາຍຕົວ, ແມ່ນຈຸດໝາຍຂອງການພັດທະນາສັງຄົມ ແລະ ສ້າງຄວາມສີວິໄລທາງດ້ານຈິດໃຈ ຊຶ່ງເຮັດໃຫ້ຄົນໃນສັງຄົມມີໂລກະທັດ, ມີຄ່ານິຍົມທີ່

ຖືກຕ້ອງ, ເພື່ອສ້າງ ແລະ ເສີມຂະຫຍາຍວັດທະນະທຳທີ່ມີລັກສະນະຊາດ, ລັກສະນະປະຊາຊົນ ແລະ ກ້າວໜ້າ.

3) ການພັດທະນາວັດທະນະທຳແມ່ນການປົກປັກຮັກສາ ແລະ ເສີມຂະຫຍາຍຄຸນຄ່າຂອງວັດທະນະທຳແຫ່ງຊາດ ການມີສ່ວນຮ່ວມ ແມ່ນການຄົ້ນຫາຄຸນຄ່າທີ່ດີໃນວັດທະນະທຳຂອງເຜົ່າຕ່າງໆພາຍໃນທ້ອງຖິ່ນ ແລະ ສິ່ງທີ່ປະກອບເປັນວັດທະນະທຳລວມຂອງວົງຄະນະຍາດແຫ່ງຊາດ ເພື່ອສົ່ງເສີມໃຫ້ເຂົ້າຮ່ວມໃນພາລະກິດວັດທະນະທຳລວມຂອງມວນມະນຸດ. ເປີດກວ້າງການແລກປ່ຽນທາງດ້ານວັດທະນະທຳກັບນານາຊາດດ້ວຍຫຼາຍຮູບການ, ເຜີຍແຜ່ຜົນສຳເລັດຂອງການກໍ່ສ້າງວັດທະນະທຳໃນລະບອບໃໝ່ໃຫ້ຊາວໂລກຮັບຮູ້. ເລືອກເຟັ້ນ ແລະ ຮັບເອົາວັດທະນະທຳຂອງປະເທດຕ່າງໆ, ສະກັດກັ້ນແນວຄິດວັດທະນະທຳ ແລະ ຄ່ານິຍົມທີ່ເປື່ອຍເຍື່ອຍເສື່ອມຊາມ. ປົກປັກຮັກສາ, ຟື້ນຟູບູລະນະ ແລະ ນຳໃຊ້ຄຸນຄ່າມໍລະດົກວັດທະນະທຳ ແລະ ສິ່ງສວຍງາມຂອງທຳມະຊາດ (ນ້ຳຕົກຕາດ, ຖ້ຳ, ພູຜາປ່າໄມ້, ແມ່ນ້ຳ, ສັດປ່ານານາຊະນິດ...) ເຂົ້າໃນການພັດທະນາການທ່ອງທ່ຽວ ແລະ ພັດທະນາເສດຖະກິດ-ສັງຄົມ ພ້ອມທັງໂຄສະນາເຜີຍແຜ່ໃຫ້ນັກທ່ອງທ່ຽວໃນພາກພື້ນ ແລະ ໃນທົ່ວໂລກໃຫ້ມາທ່ຽວຊົມຄວາມສວຍງາມມໍລະດົກວັດທະນະທຳແຫຼ່ງທ່ອງທ່ຽວຂອງແຕ່ລະແຂວງ ພ້ອມທັງຊຸກດັນແຫຼ່ງທ່ອງທ່ຽວໃຫ້ຖືກຮັບຮອງເຂົ້າໃນບັນຊີມໍລະດົກວັດທະນະທຳຂອງອາຊຽນ ແລະ ຂອງໂລກ.

4) ນຳໃຊ້ຊັບພະຍາກອນທຳມະຊາດຢ່າງປະຢັດ, ສົມເຫດສົມຜົນ ແລະ ຍືນຍົງ, ປະເມີນຜົນກະທົບ, ປ້ອງກັນ ຫຼື ຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນຕໍ່ສິ່ງແວດລ້ອມ, ບໍ່ລະເມີດສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອື່ນໃນການນຳໃຊ້ຊັບພະຍາກອນທຳມະຊາດ, ແກ້ໄຂຜົນກະທົບ ແລະ ບູລະນະຟື້ນຟູເຂດທີ່ໄດ້ຮັບຜົນກະທົບຈາກການນຳໃຊ້ຊັບພະຍາກອນທຳມະຊາດ, ປະກອບສ່ວນ ແລະ ເຂົ້າຮ່ວມຢ່າງເປັນເຈົ້າການໃນຂະບວນການປົກປັກຮັກສາຊັບພະຍາກອນທຳມະຊາດ.

5) ການປະຕິບັດສິດ ແລະ ພັນທະຕໍ່ການປ້ອງກັນຊາດແມ່ນໜ້າທີ່ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແມ່ນພັນທະຂອງການຈັດຕັ້ງ ແລະ ພົນລະເມືອງລາວທຸກຄົນຕ້ອງໄດ້ປະກອບສ່ວນ ເພື່ອເຮັດໃຫ້ປະເທດຊາດ ມີສະຖຽນລະພາບ ແລະ ຄວາມສະຫງົບສຸກ. ນັກຮຽນ ແລະ ໄວໜຸ່ມມີໜ້າທີ່ປະກອບສ່ວນປ້ອງກັນ

ຊາດ-ປ້ອງກັນຄວາມສະຫງົບດັ່ງນີ້: ຕັ້ງໃຈຮໍ່າຮຽນ, ຝຶກຝົນຫຼໍ່ຫຼອມຄຸນສົມບັດ, ສົນທໍາປະຕິວັດ ແລະ ເປັນພົນລະເມືອງດີຂອງຊາດ, ຮັກສາສຸຂະພາບ ແລະ ປະກອບສ່ວນເປັນທະຫານພັນທະ, ມີລະບຽບວິໄນຢູ່ໃນຄອບຄົວ, ໂຮງຮຽນ ແລະ ສັງຄົມ, ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ ຕາມຄວາມສາມາດຂອງຕົນ.

**3. ສະຫຼຸບ (10 ນາທີ)**

**ຄູ ແລະ ນັກຮຽນສະຫຼຸບການຮຽນໃນ 2 ຊົ່ວໂມງນີ້:**

1. ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງຕໍ່ການພັດທະນາປະເທດຊາດ.
2. ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາການເມືອງ.
3. ສິດພື້ນຖານຂອງພົນລະເມືອງ.
4. ພັນທະພື້ນຖານ.
5. ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາເສດຖະກິດ.
6. ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາວັດທະນະທໍາ.
7. ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາສິ່ງແວດລ້ອມ.
8. ການປະຕິບັດສິດ ແລະ ພັນທະຕໍ່ການພັດທະນາການປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ.
9. ເປີດກວ້າງການແລກປ່ຽນ ທາງດ້ານວັດທະນະທໍາກັບນານາຊາດດ້ວຍຫຼາຍຮູບການເລືອກເຟັ້ນ ແລະ ຮັບເອົາວັດທະນະທໍາຂອງປະເທດຕ່າງໆ, ສະກັດກັ້ນແນວຄິດວັດທະນະທໍາ ແລະ ຄ່ານິຍົມທີ່ເປື່ອຍເຍື່ອຍເສື່ອມຊາມ. ປົກປັກຮັກສາ, ຟື້ນຟູບູລະນະ ແລະ ນໍາໃຊ້ຄຸນຄ່ານໍລະ ດົກວັດທະນະທໍາ ແລະ ສິ່ງສວຍງາມຂອງທໍາມະຊາດ (ນໍ້າຕົກຕາດ, ຖໍ້າ, ພູຜາປ່າໄມ້, ແມ່ນໍ້າ, ສັດປ່ານາໆຊະນິດ...) ເຂົ້າໃນການພັດທະນາການທ່ອງທ່ຽວ ແລະ ພັດທະນາເສດຖະກິດ-ສັງຄົມພ້ອມທັງໂຄສະນາເຜີຍແຜ່ໃຫ້ນັກທ່ອງທ່ຽວໃນພາກພື້ນ ແລະ ໃນທົ່ວໂລກ ໃຫ້ມາທ່ຽວຊົມຄວາມສວຍງາມມໍລະດົກວັດທະນະທໍາແຫຼ່ງທ່ອງທ່ຽວຂອງແຕ່ລະແຂວງ ພ້ອມທັງຊຸກດັນແຫຼ່ງທ່ອງທ່ຽວໃຫ້ຖືກຮັບຮອງເຂົ້າໃນບັນຊີມໍລະດົກວັດທະນະທໍາຂອງອາຊຽນ ແລະ ຂອງໂລກ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຈາກ ການຕອບຄໍາຖາມປະລະໄນລຸ່ມນີ້:

- ນັກຮຽນຈົ່ງໝາຍ ✓ ເອົາຄໍາຕອບທີ່ຖືກຕ້ອງ

1. ການປົກປັກຮັກສາ ແລະ ເສີມຂະຫຍາຍຄຸນຄ່າວັດທະນະທໍາແຫ່ງຊາດແມ່ນຫຍັງ?

   ✓ກ. ການພັດທະນາວັດທະນະທໍາ ຂ. ການຄົ້ນຄວ້າວັດທະນະທໍາ

   ຄ. ການທ່ອງທ່ຽວວັດທະນະທໍາ ງ. ການປົກປ້ອງວັດທະນະທໍາ

2. ການຄົ້ນຫາຄຸນຄ່າທີ່ດີໃນວັດທະນະທໍາຂອງເຜົ່າຕ່າງໆພາຍໃນທ້ອງຖິ່ນແມ່ນຫຍັງ?

   ກ. ການເສີມຂະຫຍາຍ ຂ. ການແລກປ່ຽນ

   ຄ. ການພົວພັນ ✓ງ. ການມີສ່ວນຮ່ວມ

3. ການສົ່ງເສີມໃຫ້ເຂົ້າຮ່ວມໃນພາລະກິດວັດທະນະທໍາລວມຂອງມວນມະນຸດແມ່ນຫຍັງ?.

   ກ. ວັດທະນະທໍາຂອງຄອບຄົວ

   ✓ຂ. ວັດທະນະທໍາລວມຂອງວົງຄະນະຍາດແຫ່ງຊາດ

   ຄ. ວັດທະນະທໍາສະເພາະຂອງທ້ອງຖິ່ນ

   ງ. ວັດທະນະທໍາຮູບປະທໍາ

4. ຢາກໃຫ້ຊາວໂລກຮັບຮູ້ຜົນສໍາເລັດຂອງການກໍ່ສ້າງວັດທະນະທໍາໃນລະບອບໃໝ່ເຮົາຕ້ອງເຮັດແນວໃດ?.

   ກ. ຜະລິດວັດທະນະທໍາ ✓ຂ. ເຜີຍແຜ່ວັດທະນະທໍາ

   ຄ. ຮຽນຮູ້ວັດທະນະທໍາ ງ. ຄົ້ນຄວ້າວັດທະນະທໍາ

5. ຢາກໃຫ້ນັກທ່ອງທ່ຽວໃນພາກພື້ນ ແລະ ໃນທົ່ວໂລກມາທ່ຽວຊົມຄວາມສວຍງາມມໍລະດົກວັດທະນະທໍາແຫຼ່ງທ່ອງທ່ຽວຂອງແຕ່ລະແຂວງເຮົາຕ້ອງເຮັດແນວໃດ?

   ✓ກ. ໂຄສະນາເຜີຍແຜ່ ຂ. ປັບປຸງບູລະນະ

   ຄ. ອະນຸລັກຫວງຫ້າມ ງ. ເປັນເຈົ້າການປົກປັກຮັກສາ

**ໝາຍເຫດ**:

- ຄູສາມາດນໍາໃຊ້ວິທີອື່ນທີ່ສອດຄ່ອງ ແລະ ເໝາະສົມກັບຫ້ອງຮຽນຂອງຕົນມາສອນແທນໄດ້.

**ເອກະສານອ້າງອີງ**

- ຄະນະໂຄສະນາອົບຮົມສູນກາງພັກ, ມາດຕະຖານຄວາມຮູ້ດ້ານທິດສະດີ-ການເມືອງຊັ້ນຕົ້ນ, ປີ 2003, ໜ້າ 384- 385 ມານໍາໃຊ້ແທນໄດ້.

# ບົດທີ 5 ກົດໝາຍຕໍ່ກັບສັນຕິພາບ ແລະ ການພັດທະນາຄວາມກ້າວໜ້າຂອງມວນມະນຸດ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 3.2 ສົນທິສັນຍາສາກົນກ່ຽວກັບສັນຕິພາບ, ມິດຕະພາບ ແລະ ການຮ່ວມມືສາກົນ

ເວລາ 2 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍສາເຫດທີ່ພາໃຫ້ເກີດຄວາມບໍ່ສະເໝີພາບ, ການໃຫ້ສິດທິພິເສດ, ເສລີພາບໃນການສະແດງອອກ, ການຮ່ວມມືສາກົນ.
- ຕ້ານແນວຄິດຄວາມບໍ່ສະເໝີພາບ, ການໃຫ້ສິດທິພິເສດ ແລະ ສະໜັບສະໜູນເສລີພາບໃນການສະແດງອອກ, ການຮ່ວມມືສາກົນ.
- ຍົກຕົວຢ່າງຄວາມບໍ່ສະເໝີພາບ, ການໃຫ້ສິດທິພິເສດ, ເສລີພາບໃນການສະແດງອອກ, ການຮ່ວມມືສາກົນ.

## II. ເນື້ອໃນ

ສາເຫດຂອງຄວາມບໍ່ສະເໝີພາບແມ່ນ: ມີຄວາມຊັບຊ້ອນບາງສ່ວນ ມີຮາກຖານມາຈາກວັດທະນະທຳບາງສ່ວນ ມີຜົນມາຈາກລັດທິອຳນາດເກົ່າ ແລະ ເສດຖະກິດທີ່ປ່ຽນໄປ.

ຄວາມບໍ່ສະເໝີພາບມີ 2 ປະເພດຄື: ຄວາມບໍ່ສະເໝີພາບຕາມເງື່ອນໄຂ ແລະ ຄວາມບໍ່ສະເໝີພາບດ້ານໂອກາດ.

ຄວາມບໍ່ສະເໝີພາບຕາມເງື່ອນໄຂແມ່ນ: ຄວາມບໍ່ສະເໝີພາບທາງດ້ານລາຍຮັບ, ຄວາມຮັ່ງມີ ແລະ ການຄອບຄອງວັດຖຸ ເຊັ່ນ: ຄົນລວຍກໍມັກຈະມີໜ້າມີຕາມີອຳນາດໃນການຕໍ່ລອງຫຼາຍກວ່າຄົນທຸກຍາກ, ມັນແມ່ນເງື່ອນໄຂໃຫຍ່ທີ່ເຮັດໃຫ້ເກີດຄວາມບໍ່ສະເໝີພາບໃນສັງຄົມ.

ຄວາມບໍ່ສະເໝີພາບດ້ານໂອກາດ: ຄືໂອກາດໃນຊີວິດທີ່ບໍ່ສະເໝີພາບກັນ ບໍ່ວ່າຈາກການສຶກສາ, ສຸຂະພາບ, ຈົນໄປເຖິງການບໍ່ໄດ້ຮັບຄວາມຍຸຕິທຳຈາກການຕັດສິນຂອງສານ ແລະ ອື່ນໆ.

ສິດທິພິເສດຂອງການຍົກເວັ້ນ ຫຼື ຜ່ອນຜັນອັດຕາພາສີຂອງການນໍາເຂົ້າສິນຄ້າ, ການໃຫ້ທຶນການສຶກສາຈາກປະເທດທີ່ພັດທະນາແລ້ວໃຫ້ແກ່ປະເທດທີ່ກໍາລັງພັດທະນາ ແລະ ອື່ນໆ.

ເສລີພາບໃນການສະແດງອອກເປັນສິດທິມະນຸດພາຍໃຕ້ກົດໝາຍ ແລະ ມາດຕະຖານສິດທິມະນຸດລະຫວ່າງປະເທດ ຊຶ່ງໝາຍເຖິງສິດທິ ທີ່ພວກເຮົາສາມາດສະແດງອອກ, ສື່ສານຄວາມຮູ້ສຶກນຶກຄິດ ຫຼື ຄວາມເຫັນຂອງພວກເຮົາທັງໂດຍການເວົ້າ, ການສະແດງທ່າທາງ ຫຼື ການສື່ສານເປັນລາຍລັກອັກສອນ ບໍ່ວ່າຈະຢູ່ໃນເຈ້ຍ ຫຼື ອອນໄລ, ນອກນີ້ຍັງມີຮູບແບບອື່ນໆ ເຊັ່ນ: ສຽງເພງ, ພາບຖ່າຍ, ພາບເຄື່ອນໄຫວ ແລະ ອື່ນໆ.

ສົນທິສັນຍາສາກົນກ່ຽວກັບສັນຕິພາບ, ມິດຕະພາບ ແລະ ການຮ່ວມມືສາກົນ

• ອົງການສະຫະປະຊາດ ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 24 ຕຸລາ 1945

• ສປປ ລາວ ໄດ້ເປັນສະມາຊິກຂອງອົງການສະຫະປະຊາດ ໃນປີ 1955

• ປະຈຸບັນອົງການສະຫະປະຊາດມີສະມາຊິກທັງໝົດ 193 ປະເທດ

ກົດບັດສະຫະປະຊາຊາດມີເປົ້າໝາຍ:

• ເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ.

• ພັດທະນາສາຍພົວພັນມິດຕະພາບລະຫວ່າງຊາດ ບົນພື້ນຖານການເຄົາລົບນັບຖືຫຼັກການສິດສະເໝີພາບຂອງບັນດາປະຊາຊາດ ແລະ ສິດຂອງປະຊາຊົນໃນການປົກຄອງຕົນເອງ .

• ເສີມສ້າງການຮ່ວມມືລະຫວ່າງຊາດດ້ວຍການແກ້ໄຂບັນຫາສາກົນດ້ານເສດຖະກິດ, ສັງຄົມ, ວັດທະນະທໍາ ຫຼື ມະນຸດສະທໍາ ໂດຍບໍ່ຈໍາແນກເຊື້ອຊາດ, ເພດ, ພາສາ ຫຼື ສາສະໜາ.

• ເພື່ອເປັນສູນກາງເຮັດໃຫ້ຄວາມພະຍາຍາມຂອງບັນດາປະຊາຊາດທັງປວງ ມີຄວາມກົມກຽວກັນເພື່ອບັນລຸຈຸດປະສົງຮ່ວມກັນ.

ສປປ ລາວ ຍັງໄດ້ຮັບຮອງກົດບັດຂອງອາຊຽນ ຊຶ່ງໄດ້ກໍານົດເປົ້າໝາຍດ້ານສັນຕິພາບ ແລະ ຄວາມໝັ້ນຄົງ ດັ່ງນີ້:

• ເພື່ອຮັກສາ ແລະ ສົ່ງເສີມສັນຕິພາບ, ຄວາມໝັ້ນຄົງ ແລະ ສະຖຽນລະພາບ ແລະ ເພື່ອຮັດແໜ້ນຄ່ານິຍົມແຫ່ງການຮັກຫອມສັນຕິພາບໃນພາກພື້ນ.

• ເພື່ອເພີ່ມທະວີຄວາມສາມາດໃນການເພິ່ງຕົນເອງຂອງພາກພື້ນ ໂດຍການສົ່ງເສີມການຮ່ວມມືທາງດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ, ສັງຄົມ ແລະ ວັດທະນະທໍາໃຫ້ກວ້າງຂວາງ.

• ເພື່ອຮັກສາໄວ້ໃຫ້ອາຊີຕາເວັນອອກສ່ຽງໃຕ້ເປັນເຂດປອດອາວຸດນິວເຄລຍ ແລະ ປາສະຈາກບັນດາອາວຸດທຳລາຍລ້າງອື່ນໆ.

• ເພື່ອຮັບປະກັນໃຫ້ປະຊາຊົນ ແລະ ບັນດາປະເທດສະມາຊິກອາຊຽນດຳລົງຄົງຕົວໃນທ່າມກາງສັນຕິພາບຮ່ວມກັບທົ່ວໂລກໃນສະພາບແວດລ້ອມທີ່ມີຄວາມເປັນທຳ, ມີປະຊາທິປະໄຕ ແລະ ມີຄວາມກົມກຽວກັນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງຂັ້ນ ມ. 7
2. ປຶ້ມຫຼັກສູດແຊກຊ້ອນສຶກສາພົນລະເມືອງໂລກເຂົ້າໃນສຶກສາພົນລະເມືອງ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 4-5*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ສົນທະນາຖາມ-ຕອບ**

- ຄູຕັ້ງຄຳຖາມກ່ຽວກັບບົດຮຽນທີ່ຜ່ານມາ.

**ຄຳຖາມ**:

1) ອີງຕາມຈຳນວນພາຄີຂອງສົນທິສັນຍາໂດຍທົ່ວໄປແບ່ງອອກເປັນຈັກລັກສະນະ?

- ຄູເອີ້ນນັກຮຽນຕອບຄຳຖາມ 1-2 ຄົນ
- ຄູອະທິບາຍຄຳຕອບເພີ່ມເຕີມດັ່ງລຸ່ມນີ້:

**ຄຳຕອບ**:

1) ອີງຕາມຈຳນວນພາຄີຂອງສົນທິສັນຍາມີ 2 ລັກສະນະ ຄື: ສົນທິສັນຍາທະວິພາຄີ ແມ່ນສົນທິສັນຍາສອງຝ່າຍ ແລະ ສົນທິສັນຍາພະຫຸພາຄີ ແມ່ນສົນທິສັນຍາຫຼາຍຝ່າຍ (ຕັ້ງແຕ່ 3 ຝ່າຍຂຶ້ນໄປ).

**2. ສະເໜີບົດຮຽນໃໝ່**

**ກ. ຄົ້ນຄວ້າກ່ຽວກັບສັນຕິພາບ, ມິດຕະພາບ ແລະ ການຮ່ວມມືສາກົນ** *(30 ນາທີ)*

- ຄູແບ່ງກຸ່ມໃຫ້ນັກຮຽນຄົ້ນຄວ້າຕາມຄຳຖາມລຸ່ມນີ້:

1) ສາເຫດຂອງຄວາມບໍ່ສະເໝີພາບມີຈັກປະເພດຄືປະເພດໃດແດ່? ຈົ່ງອະທິບາຍ.

2) ສິດທິພິເສດແມ່ນແນວໃດ?

3) ເສລີພາບໃນການສະແດງອອກແມ່ນຫຍັງ?

4) ກົດບັດສະຫະປະຊາດມີເປົ້າໝາຍແນວໃດແດ່?

5) ສປປ ລາວ ໄດ້ຮັບຮອງກົດບັດຂອງອາຊຽນທີ່ມີເປົ້າໝາຍແນວໃດແດ່?

- ຄູໃຫ້ຕາງໜ້າກຸ່ມນັກຮຽນຂຶ້ນຕອບຕາມຄຳຖາມທີ່ຕັ້ງໄວ້.
- ຄູອະທິບາຍຕື່ມເພື່ອໃຫ້ນັກຮຽນເຂົ້າໃຈ ແລະ ເປັນເອກະພາບກັນ, ແລ້ວຄູສະຫຼຸບຕາມຄຳຖາມໂດຍເນັ້ນໃຫ້ນັກຮຽນເຂົ້າໃຈວ່າ:

**ຄຳຕອບ**:

1) ສາເຫດຂອງຄວາມບໍ່ສະເໝີພາບມີ 2 ປະເພດ ຄື: ຄວາມບໍ່ສະເໝີພາບຕາມເງື່ອນໄຂ ແລະ ຄວາມບໍ່ສະເໝີພາບດ້ານໂອກາດ.

    ຄວາມບໍ່ສະເໝີພາບຕາມເງື່ອນໄຂແມ່ນ: ຄວາມບໍ່ສະເໝີພາບທາງດ້ານລາຍຮັບ, ຄວາມຮັ່ງມີ ແລະ ການຄອບຄອງວັດຖຸ ເຊັ່ນ: ຄົນລວຍກໍມັກຈະມີໜ້າມີຕາມີອຳນາດໃນການຕໍ່ລອງຫຼາຍກວ່າຄົນທຸກຍາກ, ມັນແມ່ນເງື່ອນໄຂໃຫຍ່ທີ່ເຮັດໃຫ້ເກີດຄວາມບໍ່ສະເໝີພາບໃນສັງຄົມ

    ຄວາມບໍ່ສະເໝີພາບດ້ານໂອກາດ: ຄືໂອກາດໃນຊີວິດທີ່ບໍ່ສະເໝີພາບກັນ ບໍ່ວ່າຈາກການສຶກສາ, ສຸຂະພາບ, ຈົນໄປເຖິງການບໍ່ໄດ້ຮັບຄວາມຍຸຕິທຳຈາກການຕັດສິນຂອງສານ ແລະ ອື່ນໆ.

2) ສິດທິພິເສດຂອງການຍົກເວັ້ນ ຫຼື ຜ່ອນຜັນອັດຕາພາສີຂອງການນຳເຂົ້າສິນຄ້າ ການໃຫ້ທຶນການສຶກສາຈາກປະເທດທີ່ພັດທະນາແລ້ວໃຫ້ແກ່ປະເທດທີ່ກຳລັງພັດທະນາ ແລະ ອື່ນໆ.

3) ເສລີພາບໃນການສະແດງອອກເປັນສິດທິມະນຸດພາຍໃຕ້ກົດໝາຍ ແລະ ມາດຕະຖານສິດທິມະນຸດລະຫວ່າງປະເທດ ຊຶ່ງໝາຍເຖິງ ສິດທິທີ່ພວກເຮົາສາມາດສະແດງອອກ, ສື່ສານຄວາມຮູ້ສຶກນຶກຄິດ ຫຼື ຄວາມເຫັນຂອງພວກເຮົາທັງໂດຍການເວົ້າ, ການສະແດງທ່າທາງ ຫຼື ການສື່ສານເປັນລາຍລັກອັກສອນ ບໍ່ວ່າຈະຢູ່ໃນເຈ້ຍ ຫຼື ອອນລາຍ. ນອກນີ້ ຍັງມີຮູບແບບອື່ນໆ ເຊັ່ນ: ສຽງເພງ, ພາບຖ່າຍ, ພາບເຄື່ອນໄຫວ ແລະ ອື່ນໆ.

4) ກົດບັດສະຫະປະຊາຊາດມີເປົ້າໝາຍ:

- ເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ.

- ພັດທະນາສາຍພົວພັນມິດຕະພາບລະຫວ່າງຊາດບົນພື້ນຖານການເຄົາລົບນັບຖື ຫຼັກການສິດສະເໝີພາບຂອງບັນດາປະຊາຊາດ ແລະ ສິດຂອງປະຊາຊົນໃນການປົກຄອງຕົນເອງ.
- ເສີມສ້າງການຮ່ວມມືລະຫວ່າງຊາດດ້ວຍການແກ້ໄຂບັນຫາສາກົນດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ຫຼື ມະນຸດສະທຳ ໂດຍບໍ່ຈຳແນກເຊື້ອຊາດ, ເພດ, ພາສາ ຫຼື ສາສະໜາ.
- ເພື່ອເປັນສູນກາງເຮັດໃຫ້ຄວາມພະຍາຍາມ ຂອງບັນດາປະຊາຊາດທັງປວງມີຄວາມກົມກຽວກັນເພື່ອບັນລຸຈຸດປະສົງຮ່ວມກັນ.

**5) ສປປ ລາວ ຍັງໄດ້ຮັບຮອງກົດບັດຂອງອາຊຽນ** ຊຶ່ງໄດ້ກຳນົດເປົ້າໝາຍດ້ານສັນຕິພາບ ແລະ ຄວາມໝັ້ນຄົງ ດັ່ງນີ້:

- ເພື່ອຮັກສາ ແລະ ສົ່ງເສີມສັນຕິພາບ, ຄວາມໝັ້ນຄົງ ແລະ ສະຖຽນລະພາບ ແລະເພື່ອຮັດແໜ້ນຄ່ານິຍົມແຫ່ງການຮັກຫອມສັນຕິພາບໃນພາກພື້ນ.
- ເພື່ອເພີ່ມທະວີຄວາມສາມາດໃນການເພິ່ງຕົນເອງຂອງພາກພື້ນໂດຍການສົ່ງເສີມການຮ່ວມມືທາງດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ, ສັງ ຄົມ ແລະວັດທະນະທຳໃຫ້ກວ້າງຂວາງ.
- ເພື່ອຮັກສາໄວ້ໃຫ້ອາຊີຕາເວັນອອກສ່ຽງໃຕ້ເປັນເຂດປອດອາວຸດນິວເຄລຍ ແລະປາສະຈາກບັນດາອາວຸດທຳລາຍລ້າງອື່ນໆ.
- ເພື່ອຮັບປະກັນໃຫ້ປະຊາຊົນ ແລະ ບັນດາປະເທດສະມາຊິກອາຊຽນດຳລົງຄົງຕົວໃນທ່າມກາງສັນຕິພາບຮ່ວມກັບທົ່ວໂລກໃນສະພາບແວດລ້ອມທີ່ມີຄວາມເປັນທຳ, ມີປະຊາທິປະໄຕ ແລະ ມີຄວາມກົມກຽວກັນ.

**ຂ. ສົນທະນາລວມກ່ຽວກັບການເຂົ້າຮ່ວມເສດຖະກິດໃນຂົງເຂດອາຊຽນ** *(30 ນາທີ)*

- ຄູຕັ້ງຄຳຖາມສົນທະນາຕາມກຸ່ມເກົ່າທີ່ຈັດໄວ້ໃນກ່ອນໜ້ານີ້:
- ນັກຮຽນແຕ່ລະກຸ່ມຈົ່ງສະຫຼຸບຫຍໍ້ເນື້ອໃນບົດຮຽນຕາມປື້ມແບບຮຽນ (ໜ້າທີ 87 ເຖິງ 92) ຕາມຄຳຖາມລຸ່ມນີ້:

**ຄຳຖາມ**:

1) ປະຊາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ) ມີປະຫວັດຄວາມ

ເປັນມາແນວໃດ?

2) ກາລະໂອກາດ ແລະ ສິ່ງທ້າທາຍທີ່ ສປປ ລາວ ເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ມີແນວໃດ?

- ຫຼັງຈາກທີ່ນັກຮຽນແຕ່ລະກຸ່ມສັງລວມເນື້ອໃນສຳເລັດແລ້ວ, ຄູໃຫ້ຕາງໜ້າກຸ່ມຂຶ້ນລາຍ ງານ.
- ຄູອະທິບາຍຕື່ມເພື່ອໃຫ້ນັກຮຽນເຂົ້າໃຈ ແລະ ເປັນເອກະພາບກັນ, ແລ້ວຄູສະຫຼຸບຄືນໂດຍເນັ້ນໃຫ້ນັກຮຽນເຂົ້າໃຈວ່າ:

**ຄຳຕອບ**:

1) ປະຫວັດຄວາມເປັນມາ:

+ ປະຊາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ) ຊຶ່ງເປັນອົງການຈັດຕັ້ງພາກພື້ນລະຫວ່າງລັດຖະບານໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 8 ສິງຫາ 1967 ທີ່ບາງກອກ ໂດຍມີ 5 ປະເທດສະມາຊິກກໍ່ຕັ້ງ ຄື: ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ ແລະ ໄທ.
+ ໃນໂອກາດດັ່ງກ່າວ, ຖະແຫຼງການອາຊຽນ ຫຼື ເອີ້ນວ່າ: ຖະແຫຼງການບາງກອກໄດ້ຖືກຮັບຮອງເອົາ ຫຼັງຈາກສົງຄາມອິນດູຈີນໄດ້ສິ້ນສຸດລົງໃນປີ 1975.
+ ອາຊຽນໄດ້ມີນະໂຍບາຍຂະຫຍາຍສະມາຊິກຂອງຕົນ ເພື່ອຮັບຮອງເອົາປະເທດທີ່ມີທີ່ຕັ້ງພູມສາດຢູ່ພາກເໜືອອາຊີຕາເວັນອອກສ່ຽງໃຕ້ ໂດຍໄດ້ຮັບເອົາ ບຣູໄນດາຣູສະລາມເຂົ້າອາຊຽນໃນປີ 1984, ຫວຽດນາມໃນປີ 1995, ສປປ ລາວ ແລະ ມຽນມາໃນປີ 1997 ແລະ ກຳປູເຈຍໃນປີ 1999 ລວມມີ 10 ປະເທດ.
+ ໃນປີ 2003 ອາຊຽນໄດ້ຕົກລົງສ້າງປະຊາຄົມທີ່ປະກອບດ້ວຍ 3 ເສົາຄ້ຳຄື: ປະຊາຄົມການເມືອງ-ຄວາມໝັ້ນຄົງ, ປະຊາຄົມເສດຖະກິດອາຊຽນ ແລະ ປະຊາຄົມວັດທະນະທຳ-ສັງຄົມອາຊຽນໃຫ້ສຳເລັດໃນປີ 2020.
+ ແຕ່ຍ້ອນສະພາບການພາກພື້ນ ແລະ ສາກົນໄດ້ມີການປ່ຽນແປງຢ່າງໄວວາໃນປີ 2007 ຜູ້ນຳອາຊຽນ ຈຶ່ງເຫັນຄວາມຈຳເປັນຕ້ອງເລັ່ງລັດການສ້າງປະຊາຄົມເສດຖະກິດອາຊຽນໃນທ້າຍປີ 2015.

2) ກາລະໂອກາດ ແລະ ສິ່ງທ້າທາຍທີ່ ສປປ ລາວ ເຂົ້າຮ່ວມປະຊາຄົມເສດຖະກິດອາ

ຊຽນມີ:

**ກາລະໂອກາດ**:

+ ການເຂົ້າຮ່ວມປະຊາຄົມອາຊຽນຊຶ່ງປະກາດເປັນປະຊາຄົມໃນວັນທີ 31 ທັນວາ 2015 ໄດ້ນໍາເອົາກາລະໂອກາດ ຫຼື ຜົນປະໂຫຍດສູ່ ສປປ ລາວ ໃນດ້ານການເມືອງ-ຄວາມໝັ້ນຄົງ, ເສດຖະກິດ ແລະ ວັດທະນະທໍາສັງຄົມດັ່ງນີ້:
+ ດ້ານການເມືອງ-ຄວາມໝັ້ນຄົງ: ແມ່ນປະຕິບັດນະໂຍບາຍຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື, ເຄົາລົບຫຼັກການແຫ່ງເອກະລາດ, ອະທິປະໄຕ, ຄວາມສະເໝີພາບ, ບໍ່ແຊກແຊງກິດຈະການພາຍໃນຂອງແຕ່ລະປະເທດ, ແກ້ໄຂຂໍ້ຂັດແຍ້ງໂດຍສັນຕິວິທີ; ການຍົກບົດບາດຂອງ ສປປ ລາວ ໃນເວທີພາກພື້ນ ແລະ ສາກົນໃຫ້ສູງເດັ່ນຂຶ້ນເທື່ອລະກ້າວ; ນໍາໃຊ້ການເປັນສະມາຊິກອາຊຽນເພື່ອຍາດແຍ່ງການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກພາຍນອກ ໂດຍຜ່ານການຮ່ວມມືໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ (ອະນຸພາກພື້ນ, ພາກພື້ນ ແລະ ສາກົນ) ເພື່ອພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາ.
+ ດ້ານເສດຖະກິດ: ເປັນການຂະຫຍາຍຕະຫຼາດການຄ້າເສລີກັບປະເທດຈີນ, ຍີ່ປຸ່ນ, ເກົາຫຼີ, ອິນເດຍ ແລະ ອົດສະຕຣາລີ-ນິວຊີແລນ; ເປັນການດຶງດູດການລົງທຶນ ຈາກພາຍນອກ, ເພີ່ມອໍານາດການຕໍ່ລອງກັບສາກົນ, ສ້າງໂອກາດໃຫ້ພວກເຮົາໄດ້ພັດທະນາບຸກຄະລາກອນມະນຸດ.
+ ໃຫ້ມີຄຸນນະພາບສູງເພື່ອແລກປ່ຽນທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາທີ່ທັນສະໄໝ; ປັບປຸງຄຸນນະພາບ, ປະສິດທິພາບການຜະລິດ ແລະ ການບໍລິການໃຫ້ທຽບເທົ່າກັບສາກົນ; ຜູ້ຊົມໃຊ້ມີໂອກາດເລືອກຜະລິດຕະພັນທີ່ຫຼາກຫຼາຍ ມີຄຸນນະພາບດີ ແລະ ລາຄາເໝາະສົມ.
+ ດ້ານວັດທະນະທໍາ-ສັງຄົມ: ເປັນການສົ່ງເສີມຄວາມເຂົ້າໃຈ, ຮັບຮູ້ວັດທະນະທໍາຂອງກັນ ແລະ ກັນ, ຮ່ວມກັນສົ່ງເສີມວັດທະນະທໍາຂອງບັນດາປະເທດອາຊຽນໃນພາກພື້ນອື່ນໆ; ເປັນການຍາດແຍ້ງການສະໜັບສະໜູນ ແລະ ຊ່ວຍເຫຼືອເພື່ອພັດທະນາສີມືແຮງງານຈາກບັນດາປະເທດອາຊຽນ ແລະ ຄູ່ເຈລະຈາ ເຊັ່ນ: ສິງກະໂປໄດ້ຕັ້ງສູນລາວສິງກະໂປທີ່ວຽງຈັນ ເພື່ອຝຶກອົບຮົມພາສາອັງກິດ ແລະ ວິຊາສະ

ເພາະໃຫ້ ສປປ ລາວ, ອິນເດຍສ້າງຕັ້ງສູນພັດທະນາຜູ້ປະກອບການ ແລະ ສູນຝຶກພາສາອັງກິດໃຫ້ ສປປ ລາວ, ຍີ່ປຸ່ນສ້າງສູນພັດທະນາສີມືແຮງງານໂພນພະເນົາ ແລະ ອື່ນໆ.

**ສິ່ງທ້າທາຍ**:

+ ດ້ານການເມືອງ-ຄວາມໝັ້ນຄົງ: ບັນດາປະເທດອາຊຽນແມ່ນມີຄວາມແຕກຕ່າງກັນດ້ານລະບອບການເມືອງທີ່ມີຄວາມລະອຽດອ່ອນ ເຊັ່ນ: ສິດທິມະນຸດ, ບົດບາດສັງຄົມພົນລະເຮືອນ, ການບັນເທົາທຸກໄພພິບັດ, ການຫຼຸດຜ່ອນຄວາມທຸກຍາກ, ການຄ້າມະນຸດ, ອາດຊະຍາກຳຂ້າມຊາດ, ການຄ້າຂາຍສັດປ່າຜິດກົດໝາຍ, ການປ່ຽນແປງດິນຟ້າອາກາດ ແລະ ສິ່ງແວດລ້ອມ.
+ ດ້ານເສດຖະກິດ: ບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດໃນດ້ານການຄ້າ ແລະ ເສດຖະກິດທັງໃນພາກລັດ ແລະ ພາກທຸລະກິດມີຈຳນວນຈຳກັດ, ມີຜົນກະທົບຕໍ່ການເກັບລາຍຮັບຈາກການເກັບພາສີນຳເຂົ້າ ຍ້ອນການຫຼຸດຜ່ອນ ແລະ ລົບລ້າງອັດຕາພາສີຈາກບັນດາປະເທດອາຊຽນ ແລະ ຄູ່ເຈລະຈາທີ່ມີເຂດການຄ້າເສລີກັບອາຊຽນ ເຊັ່ນ: ສປ ຈີນ, ຍີ່ປຸ່ນ, ສ.ເກົາຫຼີ, ອິນເດຍ ແລະ ອົດສະຕຣາລີ-ນິວຊີແລນ; ພື້ນຖານໂຄງລ່າງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຜະລິດ, ການຄ້າ ແລະ ການບໍລິການຍັງບໍ່ທັນພຽງພໍ ແລະ ທົ່ວເຖິງ; ລະບົບລະບຽບກົດໝາຍຂອງ ສປປ ລາວ ຍັງບໍ່ທັນເຂັ້ມແຂງຄົບຊຸດ; ປະສິດທິພາບ ແລະ ຄວາມສາມາດແຂ່ງຂັນຂອງລາວເຮົາຍັງບໍ່ສູງ, ບໍ່ທັນເຂັ້ມແຂງຄົບຊຸດ, ຫົວໜ່ວຍທຸລະກິດສ່ວນໃຫຍ່ຍັງຂາດຄວາມຮູ້ ແລະ ບໍ່ຕື່ນຕົວຕໍ່ການເຊື່ອມໂຍງເສດຖະກິດລະດັບພາກພື້ນ ແລະ ສາກົນ.
+ ດ້ານວັດທະນະທຳ-ສັງຄົມ: ບັນດາປະເທດອາຊຽນມີເປົ້າໝາຍຮ່ວມມືທຸກດ້ານກັບບັນດາປະເທດທີ່ພັດທະນາແລ້ວໂດຍສະເພາະແມ່ນສະຫະພາບເອີຣົບ, ສະຫະລັດອາເມຣິກາ, ການາດາ. ດັ່ງນັ້ນ ການນຳໃຊ້ບັນຫາສິດທິມະນຸດ, ສາສະໜາ, ເຕັກໂນໂລຊີຂໍ້ມູນຂ່າວສານ, ແມ່ຍິງ, ຊາວໜຸ່ມ, ການສຶກສາ, ໄພພິບັດ ແລະ ອື່ນໆ ຈຶ່ງສາມາດເປັນສິ່ງທ້າທາຍຕໍ່ອາຊຽນເວົ້າລວມຕໍ່ ສປປ ລາວ ເວົ້າສະເພາະ ເພື່ອບັນລຸຈຸດປະສົງດ້ານການເມືອງ ໂດຍມີນະໂຍບາຍໃຊ້ວັດທະນະທຳຂອງຕົນມາ

ສູ່ໝູ່ຊາວໜຸ່ມຂອງພວກເຮົາໂດຍຜ່ານສື່ຕ່າງໆລວມທັງລະບົບອິນເຕີເນັດ.

**ຄ. ສົນທະນາລວມກ່ຽວກັບການເຂົ້າຮ່ວມເສດຖະກິດໂລກຂອງ ສປປ ລາວ (30 ນາທີ)**

- ຄູຕັ້ງຄຳຖາມສົນທະນາຕາມກຸ່ມເກົ່າທີ່ຈັດໄວ້ໃນກ່ອນໜ້ານີ້:
- ນັກຮຽນແຕ່ລະກຸ່ມຈຶ່ງສະຫຼຸບຫຍໍ້ເນື້ອໃນບົດຮຽນຕາມປຶ້ມແບບຮຽນ (ໜ້າທີ 93 ແລະ 94) ຕາມຄຳຖາມລຸ່ມນີ້:

**ຄຳຖາມ**:

1) ອົງການການຄ້າໂລກມີປະຫວັດຄວາມເປັນມາແນວໃດ?
2) ສປປ ລາວ ໄດ້ເຂົ້າຮ່ວມອົງການການຄ້າໂລກໄດ້ແນວໃດ?

- ຫຼັງຈາກທີ່ນັກຮຽນແຕ່ລະກຸ່ມສັງລວມເນື້ອໃນສຳເລັດແລ້ວ, ຄູໃຫ້ຕາງໜ້າກຸ່ມຂຶ້ນລາຍງານ.
- ຄູອະທິບາຍຕື່ມເພື່ອໃຫ້ນັກຮຽນເຂົ້າໃຈ ແລະ ເປັນເອກະພາບກັນ, ແລ້ວຄູສະຫຼຸບໂດຍເນັ້ນໃຫ້ນັກຮຽນເຂົ້າໃຈວ່າ:

**ຄຳຕອບ**:

1) ອົງການການຄ້າໂລກ (World Trade Organization ຫຼື WTO) ເປັນອົງການທີ່ມີການພັດທະນາມາຈາກຂໍ້ຕົກລົງທົ່ວໄປກ່ຽວກັບພາສີ ແລະ ການຄ້າ (General Agreement on Tariffs and Trade, GATT) ຊຶ່ງເປັນຂໍ້ຕົກລົງທີ່ໄດ້ສ້າງຂຶ້ນພາຍຫຼັງສົງຄາມໂລກຄັ້ງທີ II ໃນປີ 1947 ແລະ ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 1948.
   - ຫຼັງຈາກນັ້ນ ກໍໄດ້ມີການເຈລະຈາເກີດຂຶ້ນເຖິງ 8 ຮອບ ແລະ ທີ່ສຳຄັນແມ່ນຮອບທີ 8 ທີ່ເຈລະຈາກ່ຽວກັບຫຼຸດອັດຕາພາສີ ແລະ ອຸປະສັກທາງການຄ້າທີ່ອູຣູໄກວ ໂດຍມີປະເທດສະມາຊິກ 120 ປະເທດເຂົ້າຮ່ວມ.
   - ເນື້ອໃນຂອງການເຈລະຈາສ່ວນໜຶ່ງແມ່ນການຍົກຖານະແກດ (GATT) ທີ່ເປັນພຽງຂໍ້ຕົກລົງລະຫວ່າງປະເທດໃຫ້ມີຖານະເປັນອົງການການຄ້າໂລກ ແລະ ໄດ້ກຳນົດເອົາວັນທີ 1 ມັງກອນ 1995 ເປັນມື້ກໍ່ຕັ້ງອົງການການຄ້າໂລກ ຊຶ່ງໂດຍມີສຳນັກງານໃຫຍ່ຕັ້ງຢູ່ທີ່ນະຄອນເຈນີວາປະເທດສະວິດເຊີແລນ.
2) ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງອົງການການຄ້າໂລກຢ່າງເປັນທາງການໃນວັນທີ 2 ກຸມພາ 2013 ຊຶ່ງເປັນສະມາຊິກລຳດັບທີ 158 ຂອງອົງກອນ. ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກນີ້ ຖືວ່າເປັນບາດກ້າວສຳຄັນຂອງ ສປປ ລາວ

ຫຼັງຈາກທີ່ໃຊ້ຄວາມພະຍາມເຈລະຈາຕໍ່ລອງເປັນເວລາຍາວນານເຖິງ 15 ປີ ຕັ້ງແຕ່ຂໍສະໝັກເຂົ້າເປັນສະມາຊິກອົງການການຄ້າໂລກຄັ້ງທໍາອິດໂດຍ ສປປ ລາວ ສໍາເລັດການເຈລະຈາຄັ້ງສຸດທ້າຍ ເດືອນມັງກອນ 2013 ພ້ອມກັບການອອກກົດໝາຍໃໝ່ກ່ຽວກັບການລົງທຶນຮ່າງກົດຂໍ້ບັງຄັບຕ່າງໆຂຶ້ນມາໃໝ່ ແລະ ກົດໝາຍທີ່ກ່ຽວກັບຊັບສິນທາງປັນຍານັບສິບສະບັບ.

**ຄູອະທິບາຍເພີ່ມເຕີມ**:

- ຜົນປະໂຫຍດທີ່ລາວຈະໄດ້ຮັບຈາກການເຂົ້າເປັນສະມາຊິກອົງການການຄ້າໂລກ ແມ່ນການກຽມຄວາມພ້ອມທັງພາກລັດ ແລະ ພາກທຸລະກິດ ເພື່ອຍາດແຍ່ງກາລະໂອກາດ, ເອົາຊະນະສິ່ງທ້າທາຍຈາກຂະບວນການເຊື່ອມໂຍງກັບການຄ້າໂລກ, ໝາຍຄວາມວ່າ ພາກທຸລະກິດເປັນຜູ້ຕັດສິນໄຊຊະນະ ບໍ່ວ່າຈະເປັນການສົ່ງອອກຕ່າງປະເທດເພີ່ມຂຶ້ນໃນຕະຫຼາດພາຍໃນ.
- ໂດຍພື້ນຖານແລ້ວການເຂົ້າເປັນສະມາຊິກອົງການການຄ້າໂລກ ບໍ່ພຽງແຕ່ເຮັດໃຫ້ຕະຫຼາດສົ່ງອອກຂອງນັກທຸລະກິດລາວກວ້າງເທົ່ານັ້ນ ຍັງເຮັດໃຫ້ສາມາດມີຫຼາຍທາງເລືອກໃນການຊື້ວັດຖຸດິບເພື່ອການຜະລິດນໍາອີກ. ໃນຂະນະດຽວກັນຜູ້ຊົມໃຊ້ກໍມີທາງເລືອກຫຼາຍຂຶ້ນໃນການເລືອກຊື້ສິນຄ້າທີ່ມີຄຸນນະພາບ ແລະ ເໝາະສົມກັບລາຄາ.

3. **ສະຫຼຸບ (5 ນາທີ)**

**ສັງລວມເນື້ອໃນ**:

- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບເນື້ອໃນບົດຮຽນທີ່ຮຽນທັງໝົດໃນ 2 ຊົ່ວໂມງ ເຊັ່ນ:

ສາເຫດຂອງຄວາມບໍ່ສະເໝີພາບແມ່ນ: ມີຄວາມຊັບຊ້ອນບາງສ່ວນ ມີຮາກຖານມາຈາກວັດທະນະທໍາບາງສ່ວນ ມີຜົນມາຈາກລັດທິອໍານາດເກົ່າ ແລະ ເສດຖະກິດທີ່ປ່ຽນໄປ.

ຄວາມບໍ່ສະເໝີພາບມີ 2 ປະເພດຄື: ຄວາມບໍ່ສະເໝີພາບຕາມເງື່ອນໄຂ ແລະ ຄວາມບໍ່ສະເໝີພາບດ້ານໂອກາດ.

ສິດທິພິເສດຂອງການຍົກເວັ້ນ ຫຼື ຜ່ອນຜັນອັດຕາພາສີຂອງການນໍາເຂົ້າສິນຄ້າ, ການໃຫ້ທຶນການສຶກສາຈາກປະເທດທີ່ພັດທະນາແລ້ວໃຫ້ແກ່ປະເທດທີ່ກໍາລັງພັດທະນາ ແລະ ອື່ນໆ.

ເສລີພາບໃນການສະແດງອອກເປັນສິດທິມະນຸດພາຍໃຕ້ກົດໝາຍ ແລະ ມາດຕະຖານສິດທິມະນຸດລະຫວ່າງປະເທດ ຊຶ່ງໝາຍເຖິງສິດທິ ທີ່ພວກເຮົາສາມາດສະແດງອອກ, ສື່ສານຄວາມຮູ້ສຶກນຶກຄິດ ຫຼື ຄວາມເຫັນຂອງພວກເຮົາທັງໂດຍການເວົ້າ, ການສະແດງທ່າທາງ ຫຼື

ການສື່ສານເປັນລາຍລັກອັກສອນ ບໍ່ວ່າຈະຢູ່ໃນເຈ້ຍ ຫຼື ອອນລາຍ, ນອກນີ້ຍັງມີຮູບແບບອື່ນໆ ເຊັ່ນ: ສຽງເພງ, ພາບຖ່າຍ, ພາບເຄື່ອນໄຫວ ແລະ ອື່ນໆ.

ສົນທິສັນຍາສາກົນກ່ຽວກັບສັນຕິພາບ, ມິດຕະພາບ ແລະ ການຮ່ວມມືສາກົນ

- ກົດບັດສະຫະປະຊາດມີເປົ້າໝາຍຫຍັງແດ່?
- ສປປ ລາວ ຍັງໄດ້ຮັບຮອງກົດບັດຂອງອາຊຽນ ຊຶ່ງໄດ້ກໍານົດເປົ້າໝາຍດ້ານສັນຕິພາບ ແລະ ຄວາມໝັ້ນຄົງແນວໃດແດ່

ການເຂົ້າຮ່ວມເສດຖະກິດໃນຂົງເຂດອາຊຽນ

ການເຂົ້າຮ່ວມເສດຖະກິດໂລກຂອງ ສປປ ລາວ.

## V. ການວັດ ແລະ ປະເມີນຜົນ

ວັດນັກຮຽນຈາກການຕອບຄໍາຖາມປະລະໄນລຸ່ມນີ້:

ຈົ່ງໝາຍ ✓ ໃສ່ຄໍາຕອບທີ່ເຫັນວ່າຖືກຕ້ອງທີ່ສຸດ

1. ຄວາມບໍ່ສະເໝີພາບມີປະເພດໃດແດ່?

   ກ. ຄວາມບໍ່ສະເໝີພາບຂອງເງື່ອນໄຂ ແລະ ຄວາມບໍ່ສະເໝີພາບດ້ານລາຍຮັບ, ຄວາມຮັ່ງມີ

   ✓ຂ. ຄວາມບໍ່ສະເໝີພາບຂອງເງື່ອນໄຂ ແລະ ຄວາມບໍ່ສະເໝີພາບຂອງໂອກາດ

   ຄ. ຄວາມບໍ່ສະເໝີພາບດ້ານການສຶກສາ ແລະ ຄວາມບໍ່ສະເໝີພາບຂອງໂອກາດ

   ງ. ຄວາມບໍ່ສະເໝີພາບດ້ານຮ່າງກາຍ, ສຸຂະພາບ ແລະ ຄວາມບໍ່ສະເໝີພາບຂອງໂອກາດ

2. ສິດທິພິເສດໝາຍເຖິງຫຍັງ?

   ກ. ໝາຍເຖິງການໃຫ້ທຶນການສຶກສາແກ່ລູກຫຼານເຈົ້ານາຍ

   ຂ. ຄົນເຈັບທີ່ເປັນພີ່ນ້ອງຂອງທ່ານໝໍແມ່ນມີສິດໄດ້ຮັບການປິ່ນປົວກ່ອນໝູ່

   ✓ຄ. ການຍົກເວັ້ນ ຫຼື ຜ່ອນຜັນອັດຕາພາສີຂອງການນໍາເຂົ້າສິນຄ້າ

   ງ. ການຈ່າຍເງິນໃຫ້ພະນັກງານແລ້ວເຮົາຈະໄດ້ຮັບສິດພິເສດກ່ອນຄົນອື່ນ

3. ອົງການສະຫະປະຊາຊາດ ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ ເດືອນ ປີໃດ?

   ✓ກ. 24 ຕຸລາ 1945 ຂ. 26 ຕຸລາ1945

   ຄ. 24 ກັນຍາ 1945 ງ. 26 ກັນຍາ 1945

4. ສປປ ລາວ ໄດ້ເປັນສະມາຊິກຂອງອົງການສະຫະປະຊາຊາດ ປີໃດ?

ກ. ໃນປີ 1945 ຂ. ໃນປີ 1946

✓ຄ. ໃນປີ 1955 ງ. ໃນປີ 1956

5. ປະຈຸບັນອົງການສະຫະປະຊາຊາດມີສະມາຊິກທັງໝົດຈັກປະເທດ?

ກ. ທັງໝົດ190 ປະເທດ ຂ. ທັງໝົດ191 ປະເທດ

ຄ. ທັງໝົດ192 ປະເທດ ✓ງ. ທັງໝົດ193 ປະເທດ

6. ເພື່ອຮັກສາ ແລະ ສົ່ງເສີມສັນຕິພາບ, ຄວາມໝັ້ນຄົງ ແລະ ສະຖຽນລະພາບ ແລະ ເພື່ອ ຮັດແໜ້ນຄ່ານິຍົມແຫ່ງການຮັກຫອມສັນຕິພາບໃນພາກພື້ນ. ນີ້ແມ່ນກົດບັດ ຫຍັງ?

✓ກ. ກົດບັດຂອງອາຊຽນ ຂ. ກົດບັດຂອງໂລກ

ຄ. ກົດບັດສະຫະປະຊາຊາດ ງ. ກົດບັດຂອງປະເທດ

7. ເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ. ນີ້ແມ່ນກົດບັດ ຫຍັງ?

ກ. ກົດບັດຂອງອາຊຽນ ຂ. ກົດບັດຂອງໂລກ

✓ຄ. ກົດບັດສະຫະປະຊາດ ງ. ກົດບັດຂອງປະເທດ

**ໝາຍເຫດ**:

- ຄູສາມາດນຳໃຊ້ວິທີການສອນອື່ນມາໃຊ້ແທນຖ້າຫາກເຫັນວ່າເປັນວິທີທີ່ສອດຄ່ອງ ແລະ ເໝາະສົມ.

**ເອກະສານອ້າງອີງ**:

- ປື້ມກົດບັດສະຫະປະຊາຊາດ ແລະ ປື້ມປະຫວັດອາຊຽນ.
- ປື້ມກົດໝາຍລະຫວ່າງຊາດ ແລະ ສົນທິສັນຍາສາກົນ.
- https://becommon.co/life/meaning-of-inequality/
- https://freedom.ilaw.or.th/freedom-of-expression-101/concept-and-history
- http://www.laogov.gov.la/Pages/international.aspx?ItemID=19

# ພາກທີ II ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ
# ບົດທີ 6 ສິດສະເໝີພາບຂອງພົນລະເມືອງໃນຂົງເຂດຊີວິດສັງຄົມ
## ແຊກຊ້ອນເຂົ້າຫົວຂໍ້ທີ 1.2/ ຂໍ້ ຄ ສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານ

ເວລາ 2 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍສິດສະເໝີພາບໃນການແຕ່ງດອງ ແລະ ຄອບຄົວ.
- ອະທິບາຍສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານໃນການຢູ່ຮ່ວມກັນຢ່າງສັນຕິສຸກ.
- ເຄົາລົບສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານໃນການຢູ່ຮ່ວມກັນຢ່າງສັນຕິສຸກ.

## II. ເນື້ອໃນ

ສິດສະເໝີພາບລະຫວ່າງຍິງ-ຊາຍ ແມ່ນຍິງ-ຊາຍມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ.

ກ່ອນນີ້ແມ່ຍິງລາວບັນດາເຜົ່າບໍ່ໄດ້ຮັບສິດ ແລະ ຜົນປະໂຫຍດຄືກັບເພດຊາຍ, ເນື່ອງຈາກຄວາມຊິນເຄີຍ, ຄວາມເຂົ້າໃຈ ແລະ ການປະຕິບັດຂອງສັງຄົມໃນເມື່ອກ່ອນ.

ນັບແຕ່ການສະຖາປະນາ ສປປ ລາວໃນປີ 1975 ເປັນຕົ້ນມາ ພັກ-ລັດໄດ້ວາງນະໂຍບາຍສົ່ງເສີມສິດທິໃຫ້ແກ່ແມ່ຍິງລາວປະຕິບັດສິດສະເໝີພາບຍິງ-ຊາຍຢ່າງເຕັມສ່ວນ.

ສິດສະເໝີພາບລະຫວ່າງຜົວເມຍແມ່ນການພົວພັນໃນດ້ານຄວາມຮັກ ແລະ ການພົວພັນດ້ານນໍລະດົກ.

ສິດສະເໝີພາບລະຫວ່າງພໍ່, ແມ່ ແລະ ລູກແມ່ນເກີດຂຶ້ນບົນພື້ນຖານການກຳເນີດຂອງເດັກທີ່ກົດໝາຍໄດ້ກຳນົດໄວ້.

ສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານແມ່ນການໃຫ້ກຽດຊຶ່ງກັນ ແລະ ກັນ, ມີຄວາມນັບຖື, ມີການຜ່ອນສັ້ນຜ່ອນຍາວ, ມີຄວາມເຂົ້າໃຈ ແລະ ມີຄວາມສາມັກ

ຄືເພື່ອຮຽນຮູ້ຢູ່ຮ່ວມກັນ ຢ່າງສັນຕິ.

ສິດສະເໝີພາບລະຫວ່າງອ້າຍ, ເອື້ອຍ ແລະ ນ້ອງໃນຄອບຄົວ ແມ່ນຄວາມສະເໝີ ພາບ ພາຍ ໃນຄອບຄົວຂອງອ້າຍ, ເອື້ອຍ ແລະ ນ້ອງ.

ຄວາມຮັບຜິດຊອບຂອງລັດໃນການປົກປ້ອງສິດສະເໝີພາບໃນການແຕ່ງດອງ ແລະ ຄອບຄົວ, ຍິງ-ຊາຍທີ່ຮອດກະສຽນອາຍຸ 18 ປີ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.7
2. ຮູບພາບການເຂົ້າພິທີແຕ່ງດອງ, ຮູບພາບຄອບຄົວໃນປຶ້ມແບບຮຽນ
3. ແຜ່ນເຈ້ຍນ້ອຍສຳລັບຂຽນຂໍ້ຄວາມ
4. ເຈ້ຍແຜ່ນໃຫຍ່ສຳລັບຕິດເຈ້ຍຂໍ້ຄວາມ/ສະກັອດຕິດ

## IV. ກິດຈະກຳການຮຽນການສອນ

### ຊົ່ວໂມງທີ 1-2

**1. ຄູຕັ້ງຄຳຖາມສົນທະນາເພື່ອລະດົມສະໝອງກ່ຽວກັບສິດສະເໝີພາບ (5 ນາທີ)**

- ຄຳຖາມສົນທະນາ.

1) ຍ້ອນຫຍັງຄົນເຮົາຈຶ່ງຕ້ອງການໃຫ້ມີສິດສະເໝີພາບກັນ?

- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເຂົ້າໃຈ.
- ຄູສະຫຼຸບຄຳຕອບນັກຮຽນ ແລະ ສະເໜີບົດຮຽນໃໝ່:

1) ສິດສະເໝີພາບກັນແມ່ນຄວາມເທົ່າທຽມກັນໃນດ້ານການເມືອງ, ດ້ານເສດຖະກິດ, ດ້ານວັດທະນະທຳ-ສັງຄົມ ແລະ ດ້ານຄອບຄົວຂອງເພດຊາຍ ແລະ ເພດຍິງຢູ່ໃນ ຄອບຄົວ, ຊຸມຊົນ ແລະ ສັງຄົມ.

**2. ສະເໜີບົດຮຽນໃໝ່ (40 ນາທີ)**

**ກ. ສົນທະນາສິດສະເໝີພາບໃນການແຕ່ງດອງ ແລະ ຄອບຄົວ**

- ຄູໃຫ້ນັກຮຽນແບ່ງເປັນ 3 ກຸ່ມເພື່ອສັງເກດຮູບພາບ ແລະ ອ່ານເນື້ອໃນສິດ ສະເໝີພາບ ໃນ ການແຕ່ງດອງ ແລະ ຄອບຄົວ, ໜ້າ 98 ແລະ ໜ້າ 99 ໃນປຶ້ມ ແບບຮຽນ, ຈາກ ນັ້ນຄູໃຫ້ແຕ່ລະກຸ່ມສັງລວມ ຄຳຕອບໃສ່ເຈ້ຍແຜ່ນນ້ອຍໄປຕິດ ໃສ່ເຈ້ຍແຜ່ນໃຫຍ່ ຫຼື ຕິດ ໃສ່ກະດານ.

- ຄູເອົາຮູບພາບຢູ່ທ້າຍບົດຮຽນໃຫ້ນັກຮຽນສັງເກດ.
- ຮູບທີ່ນັກຮຽນສັງເກດສະແດງເຖິງຫຍັງ?

**ຄູຕັ້ງຄຳຖາມໃຫ້ຄົ້ນຄວ້າ**:

1) ຈົ່ງເວົ້າສິດສະເໝີພາບລະຫວ່າງຍິງ-ຊາຍສະແດງອອກຄືແນວໃດ?
2) ຈົ່ງເວົ້າສິດຂອງແມ່ຍິງໃນເມື່ອກ່ອນມີຄືແນວໃດ?
3) ຈົ່ງເວົ້າສິດທິຂອງແມ່ຍິງລາວ ເລີ່ມແຕ່ການສະຖາປະນາ ສປປ ລາວ ປີ 1975 ມີການປ່ຽນແປງແນວໃດ?

- ຄູໃຫ້ເວລາແຕ່ລະກຸ່ມຄົ້ນຄວ້າ ແລະ ໃຫ້ຕາງໜ້າແຕ່ລະກຸ່ມຕອບຄຳຖາມ ແລະ ເອົາ ເຈ້ຍຄຳຕອບໄປຕິດໄວ້ບ່ອນທີ່ກຳນົດ.
- ນັກຮຽນແຕ່ລະກຸ່ມຍ່າງເລາະເບິ່ງຄຳຕອບແຕ່ລະກຸ່ມທີ່ຕິດຢູ່ກະດານ.
- ຄູໃຫ້ນັກຮຽນປະກອບຄຳເຫັນໃສ່ແຕ່ລະຄຳຖາມເພີ່ມເຕີມຖ້າມີຄຳຕອບທີ່ຕ່າງກັນ.
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບໂດຍເນັ້ນບາງເນື້ອໃນ.

**ຄຳຕອບ**:

1) ສິດສະເໝີພາບລະຫວ່າງຍິງ-ຊາຍແມ່ນຍິງ-ຊາຍມີສິດເທົ່າທຽມກັນທາງດ້ານ ການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ.
2) ກ່ອນນີ້ແມ່ຍິງລາວບັນດາເຜົ່າບໍ່ໄດ້ຮັບສິດ ແລະ ຜົນປະໂຫຍດຄືກັບເພດຊາຍ, ຍ້ອນຄວາມຊິນເຄີຍ, ຄວາມເຂົ້າໃຈ ແລະ ການປະຕິບັດຂອງສັງຄົມ ໃນເມື່ອກ່ອນ ແມ່ຍິງຈຶ່ງ ຖືກປ່ອຍປະລະເລີຍບໍ່ໄດ້ຮັບການເອົາໃຈໃສ່, ວຽກທຸກຢ່າງແມ່ນຂຶ້ນກັບເພດຊາຍ.
3) ນັບແຕ່ການສະຖາປານາ ສ ປປ ລາວໃນປີ 1975 ເປັນຕົ້ນມາ ພັກ-ລັດໄດ້ວາງນະໂຍບາຍສົ່ງເສີມສິດທິໃຫ້ແກ່ແມ່ຍິງລາວ ໄດ້ປະຕິບັດສິດສະເໝີພາບຍິງ-ຊາຍຢ່າງເຕັມສ່ວນໂດຍບໍ່ຈຳແນກຖານະທາງສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າລ້ວນແຕ່ມີ ຄວາມສະເໝີພາບຕໍ່ໜ້າກົດໝາຍ.

**ຂ. ສົນທະນາກ່ຽວກັບເນື້ອໃນສິດສະເໝີພາບລະຫວ່າງຜົວ-ເມຍ (40 ນາທີ)**

- ຄູໃຫ້ນັກຮຽນປະຕິບັດເປັນຄູ່ ຫຼື ເປັນໂຕະ ເພື່ອສັງເກດຮູບພາບ ແລະ ຄົ້ນຄວ້າເນື້ອ ໃນຂໍ້ ກ, ຂ, ຄ, ງ ໃນປຶ້ມແບບຮຽນ, ໜ້າທີ 99, 100, 101 ແລະ 102 ໃນປຶ້ມແບບຮຽນ, ຈາກນັ້ນໃຫ້ສັງລວມໃສ່ເຈ້ຍ ເພື່ອລາຍງານ.

**ຄູຕັ້ງຄຳຖາມສົນທະນາ.**

1) ສິດສະເໝີພາບລະຫວ່າງຜົວ-ເມຍມີການພົວພັນກັນໃນດ້ານໃດແດ່?

2) ຈົ່ງເວົ້າສິດສະເໝີພາບລະຫວ່າງພໍ່, ແມ່ ແລະ ລູກ ມີຄືແນວໃດ?

3) ສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານມີຫຍັງແດ່?

4) ຈົ່ງເວົ້າສິດສະເໝີພາບລະຫວ່າງອ້າຍ, ເອື້ອຍ ແລະ ນ້ອງໃນຄອບຄົວມີຄືແນວໃດແດ່?

5) ລັດມີຄວາມຮັບຜິດຊອບປົກປ້ອງສິດສະເໝີພາບໃນດ້ານການແຕ່ງດອງ ແລະ ຄອບຄົວແນວໃດ?

- ຄູໃຫ້ເວລາຄົ້ນຄວ້າ ແລະ ໃຫ້ຕາງໜ້າແຕ່ລະໂຕະຂຶ້ນສະເໜີຢູ່ໜ້າກະດານ.
- ຄູໃຫ້ນັກຮຽນປະກອບຄຳເຫັນໃສ່ແຕ່ລະຄຳຖາມເພີ່ມເຕີມຖ້າມີຄຳຕອບທີ່ຕ່າງກັນ.
- ຄູ ແລະ ນັກຮຽນສະຫຼຸບ ໂດຍເນັ້ນບາງເນື້ອໃນໃຫ້ນັກຮຽນເຂົ້າໃຈຕື່ມວ່າ:

**ຄຳຕອບ**:

1) ສິດສະເໝີພາບລະຫວ່າງຜົວ-ເມຍມີການພົວພັນກັນຄືດັ່ງນີ້:

- ການພົວພັນໃນດ້ານຄວາມຮັກຄອບຄົວຜົວເມຍມີຄວາມຮັກແພງຊຶ່ງກັນ ແລະ ກັນ, ເຄົາລົບນັບຖື, ເບິ່ງແຍງ, ໃຫ້ກຽດ, ຮູ້ໃຫ້ອະໄພ ແລະ ຊ່ວຍເຫຼືອກັນ, ພ້ອມກັນລ້ຽງດູ, ສຶກສາອົບຮົມລູກເຕົ້າ ແລະ ສ້າງເສດຖະກິດຂອງຄອບຄົວໃຫ້ເຂັ້ມແຂງ.
- ການພົວພັນດ້ານມໍລະດົກຜົວ-ເມຍມີສິດເທົ່າທຽມກັນໃນດ້ານມໍລະດົກ ແລະ ມີສິດນຳໃຊ້ມໍລະດົກທີ່ຫາມາໄດ້ຮ່ວມກັນ ການນຳໃຊ້ຊັບສິ່ງຂອງທີ່ເປັນມໍລະດົກນັ້ນຕ້ອງຢູ່ບົນພື້ນຖານຄວາມຖືກຕ້ອງປອງດອງກັນ.

2) ສິດສະເໝີພາບລະຫວ່າງພໍ່, ແມ່ ແລະ ລູກ ມີຄື:

- ສິດສະເໝີພາບລະຫວ່າງພໍ່, ແມ່ ແລະ ລູກ ແມ່ນເກີດຂຶ້ນບົນພື້ນຖານການກຳເນີດຂອງເດັກທີ່ກົດໝາຍໄດ້ກຳນົດໄວ້; ພໍ່ແມ່ຕ້ອງໃຫ້ຄວາມສະເໝີພາບຕໍ່ລູກສຶກສາອົບຮົມລູກໃຫ້ເປັນຄົນດີ, ມີຄວາມຮັກຊາດ, ຮັກຄວາມກ້າວໜ້າ, ມີຄວາມກະຕັນຍູ, ມີແບບແຜນການດຳລົງຊີວິດທີ່ສົດໃສ ແລະ ສ້າງເງື່ອນໄຂໃຫ້ລູກໄດ້ສຶກສາຮ່ຳຮຽນເພື່ອອະນາຄົດຂອງລູກ.
- ພໍ່ແມ່ບໍ່ຄວນໃຊ້ສິດໃນການເປັນພໍ່ແມ່ເກີນຂອບເຂດ, ບໍ່ຄວນເຮັດສິ່ງທີ່ບໍ່ຈົບງາມຕໍ່ລູກ.

- ສ່ວນລູກກໍຄວນຟັງຄຳບອກສອນຂອງພໍ່ແມ່, ເບິ່ງແຍງ, ດູແລ ແລະ ຊ່ວຍເຫຼືອພໍ່ແມ່ ໃນ ເວລາເຈັບເປັນ ແລະ ເຖົ້າແກ່, ບໍ່ດ່າວ່າພໍ່ແມ່, ບໍ່ລັງກຽດຄຽດຊັງ ແລະ ບໍ່ເຮັດໃຫ້ ພໍ່ແມ່ມີຄວາມທຸກໃຈ.

3) ສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານ ແມ່ນການເຄົາລົບນັບຖື, ມີມາລະຍາດ, ສະແດງຄວາມຮູ້ບຸນຄຸນ, ໃຫ້ກຽດ, ໃຫ້ຄວາມຮັກແພງ, ການນົບໄຫວ້, ການປາກເວົ້າສຸພາບ. ພວກເຮົາເປັນຫຼານຕ້ອງສ້າງຄວາມດີ, ໃນການເບິ່ງແຍງເອົາໃຈໃສ່ທາງດ້ານຊີວິດການເປັນຢູ່ຢ່າງມີຄວາມອົບອຸ່ນ, ໃຫ້ຄວາມສະເໝີພາບ. ສ່ວນພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າກໍຕ້ອງປະຕິບັດຕົນຄືກັນກັບລູກ ຫຼື ຫຼານປະຕິບັດຕໍ່ຕົນເອງ, ບໍ່ຮ້າຍ, ບໍ່ຈົ່ມ, ບໍ່ລັງກຽດຄຽດຊັງ ແລະ ບໍ່ເຮັດໃຫ້ລູກ, ຫຼານມີຄວາມອຸກອັ່ງ, ເກັບກົດ, ບໍ່ມີການບັງຄັບຂົ່ມຂູ່, ຕ້ອງມີການຜ່ອນສັ້ນຜ່ອນຍາວ, ຄວາມເຂົ້າໃຈ ແລະ ຄວາມສາມັກຄີເພື່ອການຮຽນຮູ້ຢູ່ຮ່ວມກັນຢ່າງສັນຕິສຸກ. ນອກນັ້ນ, ທຸກຄົນພາຍໃນຄອບຄົວ ກໍຕ້ອງເຄົາລົບສິດສະເໝີພາບກັບຄົນໃນຊຸມຊົນ, ສັງຄົມ ແລະ ໃນໂລກເພື່ອໃຫ້ມີຄວາມຖືກຕ້ອງປອງດອງກັນເພາະວ່າຢູ່ໃນໂລກມີຫຼາຍເຊື້ອຊາດ, ສາສະໜາ, ພາສາ, ເຊື້ອຊາດ, ຊົນເຜົ່າ ທີ່ແຕກຕ່າງກັນ. ດັ່ງນັ້ນ, ຕ້ອງເຄົາລົບສິດສະເໝີພາບກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມໃນຖານະທີ່ເປັນມະນຸດທີ່ຢູ່ຮ່ວມກັນໂດຍບໍ່ມີການກີດກັ້ນ ແມ່ນສິ່ງທີ່ທຸກຄົນປາຖະໜາ ເພື່ອສ້າງໃຫ້ຄອບຄົວມີຄວາມຜາສຸກ, ອຸດົມສົມບູນ, ສີວິໄລ ແລະ ກ້າວໜ້າ.

4) ສິດສະເໝີພາບລະຫວ່າງອ້າຍ, ເອື້ອຍ ແລະ ນ້ອງໃນຄອບຄົວແມ່ນຄວາມສະເໝີພາບພາຍໃນຄອບຄົວຂອງອ້າຍ, ເອື້ອຍ ແລະ ນ້ອງແມ່ນການບໍ່ເອົາລັດເອົາປຽບກັນ, ຊ່ວຍເຫຼືອເບິ່ງແຍງ, ໃຫ້ຄວາມຮັກ, ຄວາມອົບອຸ່ນຢູ່ບົນພື້ນຖານຄວາມສາມັກຄີ, ຖືກຕ້ອງ ປອງດອງກັນຢ່າງແໜ້ນແຟ້ນ. ອ້າຍ, ເອື້ອຍຕ້ອງໃຫ້ການຊ່ວຍເຫຼືອທາງດ້ານວຽກງານ, ໃຫ້ຄຳປຶກສາຫາລືດ້ານການຮ່ຳຮຽນ, ການອອກແຮງງານ, ບໍ່ຮ້າຍດ່າ, ຫຼື ໃຊ້ອຳນາດບັງຄັບນ້ອງ. ສ່ວນຜູ້ເປັນນ້ອງກໍຕ້ອງປະຕິບັດໃນສິ່ງທີ່ດີຕໍ່ອ້າຍ, ເອື້ອຍ ເຊັ່ນດຽວກັນເພື່ອໃຫ້ທຸກຄົນມີຄວາມສຸກ, ພ້ອມກັນເສີມຂະຫຍາຍມູນເຊື້ອອັນດີງາມຂອງຄອບຄົວ ແລະ ສ້າງເປັນສະຖາບັນທາງສັງຄົມໃຫ້ແໜ້ນແກ່ນ.

5) ລັດມີຄວາມຮັບຜິດຊອບປົກປ້ອງສິດສະເໝີພາບໃນດ້ານການແຕ່ງດອງ ແລະ ຄອບຄົວດັ່ງນີ້:

- ຍິງ-ຊາຍທີ່ຮອດກະສຽນອາຍຸ 18 ປີ ມີສິດເສລີພາບໃນການເລືອກຄູ່ຮັກຕາມຄວາມສະໝັກໃຈ.
- ລັດບໍ່ອະນຸຍາດໃຫ້ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງໃດໜຶ່ງບັງຄັບ ຫຼື ຂັດຂວາງການແຕ່ງດອງຂອງລູກ, ຫຼານ, ສະມາຊິກອື່ນໆໃນຄອບຄົວ, ພະນັກງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

**+ ເງື່ອນໄຂໃນການແຕ່ງດອງ**

1) ຍິງ-ຊາຍ ຕ້ອງມີອາຍຸ 18 ປີຂຶ້ນໄປ

2) ມີຄວາມມັກຮັກ, ມີການຕົກລົງ ແລະ ຄວາມສະໝັກໃຈຂອງຄູ່ບ່າວ-ສາວ.

3) ເປັນໂສດ, ເປັນຮ້າງ ຫຼື ເປັນໝ້າຍ ໂດຍມີເອກະສານຢັ້ງຢືນຢ່າງຖືກຕ້ອງ.

4) ບໍ່ເປັນບ້າເສຍຈິດ, ບໍ່ເປັນພະຍາດຮ້າຍແຮງ ຫຼື ພະຍາດຕິດແປດ.

**+ ຂໍ້ຫ້າມໃນການແຕ່ງດອງ**

ຫ້າມບຸກຄົນທີ່ເປັນເພດດຽວກັນ, ເປັນບ້າເສຍຈິດ ຫຼື ເປັນພະຍາດຮ້າຍແຮງທີ່ເປັນອັນຕະລາຍຕໍ່ຊີວິດ ຫຼື ສຸຂະພາບຂອງຜົວ, ເມຍ ຫຼື ລູກແຕ່ງດອງກັນ.

ຫ້າມບຸກຄົນທີ່ຢູ່ໃນຕະກູນຊິງຊາວດຽວກັນຂອງບາງຊົນເຜົ່າ ຫຼື ເປັນຍາດໃກ້ຊິດກັນ ຄື: ປູ່, ຍ່າ, ພໍ່ເຖົ້າກັບລູກ, ຫຼານ, ເຫຼັນຕໍ່ໆລົງມາ, ລະຫວ່າງລູກຄີງກັບລູກຄີງ ຫຼື ກັບລູກລ້ຽງ ຫຼື ກັບລູກນ້າ, ລະຫວ່າງລູກລ້ຽງກັບລູກລ້ຽງ, ລະຫວ່າງລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວກັບຫຼານ. ສໍາລັບລູກນ້າກັບລູກນ້າສາມາດເອົາກັນເປັນຜົວເມຍໄດ້ໃນກໍລະນີທີ່ ພໍ່ແມ່ໄດ້ຢ່າຮ້າງກັນແລ້ວ.

**3. ສະຫຼຸບ (5 ນາທີ)**

**ຜ່ານມາໃນ 2 ຊົ່ວໂມງນີ້ນັກຮຽນໄດ້ຮຽນຮູ້ຫຍັງແດ່?**

1. ສິດສະເໝີພາບໃນການແຕ່ງດອງ ແລະ ຄອບຄົວ
2. ສິດສະເໝີພາບລະຫວ່າງຜົວເມຍ
3. ການພົວພັນໃນດ້ານຄວາມຮັກ
4. ການພົວພັນດ້ານນໍລະດົກ
5. ສິດສະເໝີພາບລະຫວ່າງພໍ່, ແມ່ ແລະ ລູກ
6. ສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານ
7. ສິດສະເໝີພາບລະຫວ່າງອ້າຍ, ເອື້ອຍ ແລະ ນ້ອງໃນຄອບຄົວ

8. ລັດມີຄວາມຮັບຜິດຊອບປົກປ້ອງສິດສະເໝີພາບໃນດ້ານການແຕ່ງດອງ ແລະ ຄອບຄົວ
9. ເງື່ອນໄຂໃນການແຕ່ງດອງ
10. ຂໍ້ຫ້າມໃນການແຕ່ງດອງ

ນອກນັ້ນ, ທຸກຄົນພາຍໃນຄອບຄົວກໍຕ້ອງເຄົາລົບສິດສະເໝີພາບກັບຄົນໃນຊຸມຊົນ, ສັງຄົມ ແລະ ໃນໂລກເພື່ອໃຫ້ມີຄວາມຖືກຕ້ອງປອງດອງກັນເພາະວ່າຢູ່ໃນໂລກມີຫຼາຍເຊື້ອຊາດ, ສາສະໜາ, ພາສາ, ຊົນເຜົ່າທີ່ແຕກຕ່າງກັນດັ່ງນັ້ນ, ຕ້ອງເຄົາລົບສິດສະເໝີພາບກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມໃນຖານະທີ່ເປັນມະນຸດທີ່ຢູ່ຮ່ວມກັນໂດຍບໍ່ມີການີດກັ້ນແມ່ນສິ່ງທີ່ທຸກຄົນປາຖະໜາເພື່ອສ້າງໃຫ້ຄອບຄົວມີຄວາມຜາສຸກ, ອຸດົມສົມບູນ, ສີວິໄລ ແລະ ກ້າວໜ້າ.

## V. ການວັດ ແລະ ປະເມີນຜົນ (10 ນາທີ)

**ສັງເກດນັກຮຽນຈາກການຕອບເນື້ອໃນລຸ່ມນີ້:**

- ນັກຮຽນຈິ່ງໝາຍ ✓ " ຖືກຕ້ອງ" ຫຼື " ບໍ່ຖືກຕ້ອງ" ຕໍ່ເນື້ອໃນກ່ຽວກັບຄວາມສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານລຸ່ມນີ້.

| ລ/ດ | ເນື້ອໃນ | ຖືກຕ້ອງ | ບໍ່ຖືກຕ້ອງ |
|---|---|---|---|
| 1 | ສິດສະເໝີພາບລະຫວ່າງພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ແລະ ຫຼານແມ່ນການເຄົາລົບນັບຖື, ການນົບໄຫວ້, ການປາກເວົ້າສຸພາບ, ຄວາມຮັກແພງເຊິ່ງກັນ ແລະ ກັນ | ✓ | |
| 2 | ພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ບໍ່ຈຳເປັນຕ້ອງປະຕິບັດຄວາມດີຕໍ່ ລູກຫຼານ | | ✓ |
| 3 | ການຜ່ອນສັ້ນຜ່ອນຍາວ, ຄວາມເຂົ້າໃຈ ແລະ ຄວາມສາມັກຄີແມ່ນເພື່ອຢູ່ຮ່ວມກັນຢ່າງສັນຕິສຸກ | ✓ | |
| 4 | ພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ ບໍ່ຄວນຮ້າຍ, ຈົ່ມວ່າ, ລັງກຽດຄຽດຊັງລູກຫຼານ | ✓ | |
| 5 | ຜູ້ເຖົ້າຜູ້ແກ່ບໍ່ໄດ້ຮັບການເອົາໃຈໃສ່ເບິ່ງແຍງຈາກລູກຫຼານ | | ✓ |

| | | | |
|---|---|---|---|
| 6 | ຜູ້ເປັນຫຼານຕ້ອງສ້າງຄວາມດີ, ມີມາລະຍາດ, ສະແດງຄວາມຮູ້ບຸນຄຸນ, ໃຫ້ການເຄົາລົບນັບຖື, ໃຫ້ກຽດ, ໃຫ້ຄວາມຮັກແພງ, ໃຫ້ການເບິ່ງແຍງ ເອົາໃຈໃສ່ທາງດ້ານຊີວິດການເປັນຢູ່ຢ່າງມີຄວາມອົບອຸ່ນ | ✓ | |
| 7 | ຄອບຄົວມີຄວາມຜາສຸກ, ອຸດົມສົມບູນ, ສີວິໄລ ແລະ ກ້າວໜ້າ ແມ່ນສິ່ງທີ່ທຸກຄົນຕ້ອງການ | ✓ | |
| 8 | ທຸກຄົນພາຍໃນຄອບຄົວຕ້ອງເຄົາລົບສິດສະເໝີພາບກັບຄົນໃນຊຸມຊົນ, ສັງຄົມ ແລະ ໃນໂລກ | ✓ | |
| 9 | ການກີດກັ້ນຂັດຂວາງ ແມ່ນສິ່ງທີ່ທຸກຄົນປາຖະໜາ | | ✓ |
| 10 | ໃນສັງຄົມ ແລະ ໃນໂລກມີຫຼາຍເຊື້ອຊາດ, ສາສະໜາ, ພາສາ, ຊົນເຜົ່າທີ່ແຕກຕ່າງກັນ | ✓ | |

**ເອກະສານອ້າງອີງ**


- ເອກະສານຊ້ອນທ້າຍ: ອຸຍແນັດສະໂກ, ປຶ້ມແນະນຳ ການສຶກສາພົນລະເມືອງໂລກ, ກົມຮ່ວມມືກັບຕ່າງປະເທດ, ກະຊວງສຶກສາທິການ ແລະ ກິລາ ປີ 2021; ຫົວຂໍ້ 3.4 ໜ້າ 19 ຄວາມແຕກຕ່າງ ແລະ ການເຄົາລົບຄວາມຫຼາກຫຼາຍ. ຂໍ້ 3.4.2 ການເຄົາລົບຄວາມແຕກຕ່າງ.

# ບົດທີ 8 ສິດສະເໝີພາບລະຫວ່າງບັນດາຊົນເຜົ່າ ແລະ ສາສະໜາ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2.2 ບັນດາສາສະໜາໃນລາວ

ເວລາ 2 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍສິດສະເໝີພາບລະຫວ່າງສາສະໜາໃນລາວ.
- ຍົກໃຫ້ເຫັນບັນດາສາສະໜາໃນລາວ ແລະ ການສ້າງສາຍພົວພັນທາງບວກກັບກຸ່ມຄົນທີ່ມາຈາກສະຖານທີ່ຕ່າງໆໃນທົ່ວໂລກ.
- ເຄົາລົບບັນດາສາສະໜາໃນລາວ ພ້ອມທັງສະໜັບສະໜູນການສ້າງສາຍພົວພັນທາງບວກກັບກຸ່ມຄົນທີ່ມາຈາກສະຖານທີ່ຕ່າງໆໃນທົ່ວໂລກ.

## II. ເນື້ອໃນ

ສາສະໜາ ໝາຍເຖິງຄຳສອນທີ່ປະກອບດ້ວຍຫຼັກທຳ, ແນວຄວາມເຊື່ອ ແລະ ແນວທາງການປະຕິບັດຕ່າງໆຕາມຄະຕິ ແລະ ສາສະໜາ ເພື່ອໃຫ້ຄົນປະຕິບັດຕາມ, ເກີດຄວາມຈະເລີນໃນຊີວິດ, ສາສະໜາເປັນສິ່ງຍຶດໜ່ຽວຈິດໃຈ, ເປັນເຄື່ອງມືຄວບຄຸມສັງຄົມ, ເປັນບໍ່ເກີດຂອງຈະລິຍະທຳ, ວັດທະນະທຳ ແລະ ປະເພນີ, ມີຄວາມສະເໝີພາບກັນ, ມີຈຸດປະສົງ, ເປົ້າໝາຍເພື່ອສັ່ງສອນໃຫ້ເປັນຄົນດີ.

ສາສະໜາມີຜູ້ໃຫ້ກຳເນີດ, ມີຄຳສອນທີ່ມີລັກສະນະສະເພາະ, ມີນັກບວດ, ສາວົກ, ສາສາດສະດາຈານເປັນຜູ້ເຜີຍແຜ່ ແລະ ສືບທອດ, ມີສາສະນິກກະຊົນທີ່ເຊື່ອຖືສາສະໜາຂອງຕົນ, ມີ ພິທີກຳ ຫຼື ວັນບຸນທີ່ມີລັກສະນະສະເພາະຂອງສາສະໜາ.

ສາສະໜາໃນລາວປະກອບມີສາສະໜາພຸດ, ເຢຊູຄຣິດ, ບາຮາຍ ແລະ ສາສະໜາອິດສະລາມ, ການສ້າງສາຍພົວພັນທາງບວກກັບທຸກຄົນທີ່ມາຈາກສະຖານທີ່ຕ່າງໆໃນທົ່ວໂລກທີ່ນັບຖືສາສະໜາແຕກຕ່າງກັນນັ້ນພວກເຮົາຕ້ອງມີຄວາມສາມັກຄີ, ເຄົາລົບນັບຖື, ມີຄວາມເອື້ອເຟື້ອເພື່ອແຜ່ ແລະ ຕ້ອງສຶກສາຮຽນຮູ້ຂໍ້ມູນກ່ຽວກັບບັນດາສາສະໜາຕ່າງໆເຫຼົ່ານັ້ນ ໃຫ້ມີຄວາມເຂົ້າໃຈເພື່ອພົບປະແລກປ່ຽນ ແລະ ຢູ່ຮ່ວມກັນຢ່າງມີຄວາມສຸກ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງ ຂັ້ນ ມ.7
2. ຮູບພາບສັນຍະລັກທາງສາສະໜາ, ຮູບພາບບຸນປະເພນີ, ວັດວາອາຮາມ, ສາສະໜາຕ່າງໆ, ການເຮັດບຸນກິນທານຂອງຊາວພຸດໃນປຶ້ມແບບຮຽນ
3. ເຈ້ຍ A 4 ຫຼື ເຈ້ຍແຜ່ນນ້ອຍສຳລັບຂຽນຂໍ້ຄວາມ
4. ສະກັອດຕິດເຈ້ຍ

## IV. ກິດຈະກຳການຮຽນການສອນ

**ຊົ່ວໂມງທີ 3- 4**

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ສົນທະນາຖາມ-ຕອບ**

- ຄູຕັ້ງຄຳຖາມສົນທະນາຄວາມສຳນຶກກ່ຽວກັບຊົນເຜົ່າເພື່ອທວນຄືນຄວາມຮູ້ທີ່ໄດ້ຮຽນມາ.

**ຄູຕັ້ງຄຳຖາມ**:

1) ຊົນເຜົ່າໝາຍເຖິງຫຍັງ?

- ນັກຮຽນຕອບຄຳຖາມເພື່ອທວນຄືນບົດຮຽນເກົ່າ 1-3 ຄົນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບສິ່ງທີ່ໄດ້ຮຽນໃນຊົ່ວໂມງກ່ອນ.

1) ຊົນເຜົ່າ ໝາຍເຖິງກຸ່ມຄົນທີ່ມີພາສາປາກເວົ້າລວມກັນ, ມີກົກເຄົ້າປະຫວັດສາດ, ຄວາມເປັນມາຮ່ວມກັນ, ມີພື້ນຖານວັດທະນະທຳລວມກັນ ແລະ ເຊື່ອວ່າສືບເຊື້ອສາຍມາຈາກບັນພະບູລຸດດຽວກັນ.

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາຄວາມສຳນຶກ ແລະ ອົງປະກອບຂອງສາສະໜາ (40 ນາທີ)**

- ຄູໃຫ້ນັກຮຽນແຕ່ລະໂຕະອ່ານເນື້ອໃນ ຂໍ້ທີ 2.1 ໜ້າ145, 146; ຂໍ້ 2.2 ໜ້າ 147 ແລະ ສັງເກດຮູບພາບ.







ຮູບທີ 1: ເຜົ່າລາວລຸ່ມ ຮູບທີ 2: ເຜົ່າມົ້ງ ຮູບທີ 3: ການຫຼິ້ນພື້ນເມືອງເຜົ່າກຶມມຸ





ຮູບທີ 4: ສາສະໜາພຸດ ຮູບທີ 5: ພິທີລະໝາດຂອງສາສະໜາອິດສະລາມ







ຮູບທີ 6: ສາສະໜາຄຣິດ ຮູບທີ 7: ສາສະໜາພາມ-ຮິນດູ ຮູບທີ 8: ໂບດກາໂຕລິກ



ຮູບທີ 9: ທົດນ້ຳສົງພະພຸດທະຮູບ



ຮູບທີ 10: ວັດຊຽງທອງ ນະຄອນຫຼວງພະບາງ

- ຄູຕັ້ງຄຳຖາມຄົ້ນຄວ້າ:
- ຮູບພາບທີ່ນັກຮຽນສັງເກດແມ່ນກ່ຽວກັບສິ່ງໃດ?
- ນັກຮຽນອາສາສະໝັກຕອບ.
- ຄູສັງລວມຕາມເນື້ອໃນຮູບພາບ.

**ຄູຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄວ້າ:**

1) ສາສະໜາໝາຍເຖິງຫຍັງ?

2) ຈົ່ງເວົ້າອົງປະກອບຂອງສາສະໜາມີຈັກປັດໄຈ?

- ຄູໃຫ້ຕາງໜ້າແຕ່ລະໂຕະຕອບຄຳຖາມຕາມການຄົ້ນຄວ້າ, ນັກຮຽນແຕ່ລະຄົນຕິດຕາມພ້ອມທັງປະກອບຄຳເຫັນຖ້າມີຄຳຕອບທີ່ຕ່າງກັນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບຄຳຕອບແຕ່ລະຂໍ້ດັ່ງນີ້:

**ຄຳຕອບ:**

1) ສາສະໜາ ໝາຍເຖິງ ຄຳສອນທີ່ປະກອບດ້ວຍຫຼັກທຳ, ແນວຄວາມເຊື່ອ ແລະ ແນວທາງໃຫ້ຄົນປະຕິບັດຕາມເພື່ອໃຫ້ເກີດຄວາມຈະເລີນໃນຊີວິດ ແລະ ຢູ່ຮ່ວມກັນ ຢ່າງສັນຕິສຸກ. ສາສະໜາເປັນສິ່ງຍຶດໜ່ຽວຈິດໃຈ, ເປັນເຄື່ອງມືຄວບຄຸມສັງຄົມ, ເປັນບໍ່ເກີດຈະລິຍະທຳ, ວັດທະນະທຳ ແລະ ປະເພນີຕ່າງໆ.

2) ອົງປະກອບຂອງສາສະໜາປະກອບມີ 6 ປັດໄຈຄື:

- ມີຜູ້ໃຫ້ກຳເນີດ.
- ມີຄຳສອນທີ່ມີລັກສະນະສະເພາະຂອງສາສະໜາຕົນ.
- ມີນັກບວດ, ສາວົກ, ເປັນຜູ້ເຜີຍແຜ່ຄຳສອນ ແລະ ມີຜູ້ສືບທອດ.
- ມີສາສະນິກກະຊົນທີ່ເຊື່ອຖືສາສະໜາຂອງຕົນເປັນຈຳນວນຫຼວງຫຼາຍ.

- ມີປູຊະນີຍະສະຖານ ຫຼື ເຄື່ອງໝາຍເປັນສັນຍະລັກທາງສາສະໜາ.
- ມີພິທີກຳ ຫຼື ວັນບຸນທີ່ມີລັກສະນະສະເພາະສາສະໜາ.

**ຂ. ສະແດງບົດບາດສົມມຸດກ່ຽວກັບບັນດາສາສະໜາໃນລາວ (45 ນາທີ)**

- ຄູໃຫ້ນັກຮຽນແບ່ງເປັນ 5 ກຸ່ມ, ກຸ່ມລະ 4 ຄົນ ຫຼື ຕາມຄວາມເໝາະສົມຂອງນັກຮຽນ.
- ຄູໃຫ້ນັກຮຽນນັບ 1-4 ຈາກນັ້ນແຕ່ລະເລກໃຫ້ຍ່າງໄປຫາກັນເພື່ອເຂົ້າກຸ່ມ. ສ່ວນນັກ ຮຽນທີ່ເຫຼືອແມ່ນສັງເກດ ແລະ ປະກອບຄຳເຫັນ.
- ຄູຢາຍເຈ້ຍ A4 ໃຫ້ກຸ່ມລະ 4 ໃບ.
- ຄູໃຫ້ຕາງໜ້າກຸ່ມມາຈົກເອົາຊື່ປະເທດຂອງຕົນ, ຄູກຽມໄວ້ຢູ່ໜ້າກະດານ (ປະເທດລາວ, ຫວຽດນາມ, ຈີນ, ເກົາຫຼີ, ອາເມຣິກາ ).
- ຄູກຳນົດຊື່ສາສະໜາໃຫ້ນັກຮຽນ (ສາສະໜາພຸດ, ເຢຊູຄຣິດ, ບາຮາຍ, ອິດສະລາມ...)
- ແຕ່ລະກຸ່ມຂຽນຊື່ປະເທດທີ່ຈົກມາໄດ້ຂຽນໃສ່ເຈ້ຍແລ້ວຕິດໃສ່ຫຼັງເສື້ອ, ພ້ອມທັງຂຽນ ຈຸດປະສົງຂອງສາສະໜາຕົນນັບຖືໃສ່ເຈ້ຍເພື່ອແນະນຳໃຫ້ກຸ່ມປະເທດອື່ນຮັບຮູ້.
- ຄູໃຫ້ແຕ່ລະກຸ່ມຍ່າງໄປມາຢູ່ໜ້າກະດານພ້ອມທັງທັກທາຍເມື່ອພົບກັບກຸ່ມປະເທດອື່ນ, ຖາມສະບາຍດີ, ເຈົ້າມາຈາກປະເທດໃດ, ເຈົ້າແມ່ນນັກທ່ອງທ່ຽວ ຫຼື ເປັນນັກທຸລະກິດ ຫຼື ເປັນຜູ້ຊ່ຽວຊານ... ນັບຖືສາສະໜາຫຍັງ, ໂອ້ລົມແລກປ່ຽນຂອງຂວັນສໍ ຫຼື ບິກ ແລະ ອື່ນໆ, ເຈົ້າເປັນຄົນນິດໄສດີຫຼາຍ, ຂ້ອຍຢາກເປັນເພື່ອນກັບເຈົ້າ... ຫຼັງຈາກ ແຕ່ລະປະເທດໄດ້ພົບປະໂອ້ລົມກັນແລ້ວ ຄູໃຫ້ທຸກຄົນເຂົ້ານັ່ງໂຕະເພື່ອສົນທະນາແລກປ່ຽນບົດ ຮຽນເຊິ່ງກັນ ແລະ ກັນ.

**ຄູຕັ້ງຄຳຖາມສົນທະນາ**

1) ກຸ່ມນັກທ່ອງທ່ຽວພາຍໃນປະເທດລາວນັບຖືສາສະໜາຫຍັງແດ່?
2) ບັນດານັກທ່ອງທ່ຽວຈາກປະເທດຕ່າງໆນັບຖືມີສາສະໜາຫຍັງແດ່?
3) ຈຸດປະສົງຂອງແຕ່ລະສາສະໜາແມ່ນເພື່ອຫຍັງແດ່?
4) ການສ້າງສາຍພົວພັນທາງບວກກັບທຸກຄົນທີ່ມາຈາກສະຖານທີ່ຕ່າງໆໃນທົ່ວໂລກມີຜົນດີແນວໃດ?

5) ນັກຮຽນມີຄວາມຮູ້ສຶກແນວໃດຕໍ່ການສະແດງບົດບາດສົມມຸດກ່ຽວກັບເລື່ອງນີ້?
 - ຄູໃຫ້ນັກຮຽນປະກອບຄໍາເຫັນຕໍ່ການສະແດງບົດບາດສົມມຸດໃນຄັ້ງນີ້.
 - ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບການສະແດງບົດບາດສົມມຸດແຕ່ລະຄົນປະ ຕິບັດໄດ້ດີ ແລະ ຄູເນັ້ນບາງເນື້ອໃນໃຫ້ນັກຮຽນເຂົ້າໃຈຕື່ມ:

**ຄໍາຕອບ**:

ກຸ່ມນັກທ່ອງທ່ຽວພາຍໃນປະເທດລາວ ຫຼື ປະຊາຊົນລາວແມ່ນເຊື່ອຖືສາສະໜາພຸດ, ເຢຊູຄຣິດ, ບາຮາຍ, ສາສະໜາອິດສະລາມ ແລະ ອື່ນໆ.

ສາສະໜາທີ່ບັນດາກຸ່ມນັກທ່ອງທ່ຽວປະເທດເຫຼົ່ານັ້ນນັບຖືກໍຄ້າຍຄືກັບປະຊາຊົນລາວນັບຖືຄື: ເຊື່ອຖືສາສະໜາພຸດ, ເຢຊູຄຣິດ, ບາຮາຍ, ສາສະໜາອິດສະລາມ ແລະ ອື່ນໆ.

ຈຸດປະສົງຂອງແຕ່ລະສາສະໜາແມ່ນເພື່ອຢາກສອນໃຫ້ຄົນເປັນຄົນດີ ແລະ ລະເວັ້ນຈາກຄວາມຊົ່ວ.

ການສ້າງສາຍພົວພັນທາງບວກກັບທຸກຄົນທີ່ມາຈາກສະຖານທີ່ຕ່າງໆໃນທົ່ວໂລກ ແມ່ນເພື່ອເຮັດໃຫ້ທຸກຄົນມີຄວາມສາມັກຄີ, ມີຄວາມເຂົ້າໃຈທີ່ດີຕໍ່ກັນ, ມີຄວາມໂອບເອື້ອອາລີ, ມີຄວາມກະຕັນຍູ ແລະ ມີຄວາມເມດຕາເພາະວ່າທຸກຄົນທີ່ມາຈາກຫຼາຍທິດໃນທົ່ວໂລກລ້ວນແຕ່ມີຈຸດປະສົງ, ເປົ້າໝາຍທີ່ແຕກຕ່າງກັນ ແລະ ການນັບຖືສາສະໜາກໍຈະແຕກຕ່າງກັນແຕ່ວ່າທຸກສາສະໜາລ້ວນແຕ່ສອນໃຫ້ທຸກຄົນເປັນຄົນດີເພື່ອຢູ່ຮ່ວມກັນຢ່າງມີຄວາມສຸກ.

**3. ສະຫຼຸບ (5 ນາທີ)**

**ຄູໃຫ້ນັກຮຽນສະຫຼຸບການຮຽນໃນຊົ່ວໂມງນີ້ໂດຍຫຍໍ້.**

1. ສິດສະເໝີພາບລະຫວ່າງສາສະໜາໃນລາວ
2. ຄວາມສໍານຶກກ່ຽວກັບສາສະໜາ
3. ບັນດາສາສະໜາໃນລາວ
4. ການສ້າງສາຍພົວພັນທາງບວກກັບທຸກຄົນທີ່ມາຈາກສະຖານທີ່ຕ່າງໆໃນທົ່ວໂລກ ແມ່ນເພື່ອເຮັດໃຫ້ທຸກຄົນມີຄວາມສາມັກຄີ, ມີຄວາມເຂົ້າໃຈທີ່ດີຕໍ່ກັນ, ມີຄວາມໂອບເອື້ອອາລີ, ມີຄວາມກະຕັນຍູ ແລະ ມີຄວາມເມດຕາເພາະວ່າທຸກຄົນທີ່ມາ

ຈາກຫຼາຍ ທິດໃນທົ່ວໂລກລ້ວນແຕ່ມີຈຸດປະສົງ, ເປົ້າໝາຍທີ່ແຕກຕ່າງກັນ ແລະ ການນັບຖືສາສະໜາກໍຈະແຕກຕ່າງກັນ ແຕ່ວ່າທຸກສາສະໜາລ້ວນແຕ່ສອນໃຫ້ທຸກຄົນເປັນຄົນດີເພື່ອຢູ່ຮ່ວມກັນຢ່າງມີຄວາມສຸກ.

## V. ການວັດ ແລະ ປະເມີນຜົນ (5 ນາທີ)

ວັດ ແລະ ປະເມີນຈາກການຕອບຄຳຖາມປະລະໄນລຸ່ມນີ້:

- ນັກຮຽນຈົ່ງໝາຍ ✓ ເອົາຄຳຕອບທີ່ຖືກຕ້ອງ

1. ຍ້ອນຫຍັງປະຊາຊົນລາວຈຶ່ງນັບຖືສາສະໜາສາສະໜາພຸດ, ເຢຊູຄຣິດ, ບາຮາຍ, ແລະ ສາສະໜາອິດສະລາມ?

   ✓ກ. ຍ້ອນປະເທດເຮົາມີປະຊາກອນທີ່ມາຈາກສະຖານທີ່ຕ່າງໆໃນທົ່ວໂລກ

   ຂ. ຍ້ອນປະຊາຊົນມັກຫຼາຍສາສະໜາພ້ອມກັນ

   ຄ. ຍ້ອນຄວາມມັກສ່ວນຕົວ

   ງ. ຍ້ອນມີຄ່ານິຍົມຈາກຊາດອື່ນ

2. ຈຸດປະສົງຂອງແຕ່ລະສາສະໜາແມ່ນເພື່ອຫຍັງ?

   ກ. ສອນໃຫ້ຄົນຮູ້ຈັກສາສະໜາຂອງຕົນ

   ຂ. ສອນໃຫ້ມີການພັດທະນາທ້ອງຖິ່ນ

   ຄ. ສອນໃຫ້ມີການພົວພັນສັງຄົມ

   ✓ງ. ສອນໃຫ້ຄົນເປັນຄົນດີ, ລະເວັ້ນຈາກຄວາມຊົ່ວ

3. ການສ້າງສາຍພົວພັນທາງບວກກັບທຸກຄົນທີ່ມາຈາກສະຖານທີ່ຕ່າງໆໃນທົ່ວໂລກ ແມ່ນເພື່ອຫຍັງ?

   ກ.ໃຫ້ທຸກຄົນມີຄວາມຄຽດ

   ຂ. ໃຫ້ທຸກຄົນມີຄວາມສາມັກຄີ ✓

   ຄ. ໃຫ້ທຸກຄົນພັດທະນາ

   ງ. ໃຫ້ສັງຄົມເຂັ້ມແຂງ

4. ຈຸດປະສົງ, ເປົ້າໝາຍຂອງແຕ່ລະຄົນທີ່ມາຈາກຫຼາຍທິດໃນທົ່ວໂລກແມ່ນ ແນວໃດ?

   ກ. ຄືກັນ ✓ຂ. ແຕກຕ່າງກັນ

   ຄ. ເທົ່າທຽມກັນ ງ. ເຂົ້າໃຈກັນ

5. ການນັບຖືສາສະໜາຂອງແຕ່ລະຄົນທີ່ມາຈາກຫຼາຍທິດໃນທົ່ວໂລກແມ່ນແນວໃດ?

✓ກ. ແຕກຕ່າງກັນ ຂ. ຄ້າຍຄືກັນ

ຄ. ຮ່ວມມືກັນ ງ. ສາມັກຄີກັນ

**ໝາຍເຫດ**:

- ຄູສາມາດນໍາໃຊ້ວິທີການສອນອື່ນມາໃຊ້ແທນຖ້າຫາກເຫັນວ່າເປັນວິທີທີ່ສອດຄ່ອງ ແລະ ເໝາະສົມ.

**ເອກະສານອ້າງອີງ**:

- ປຶ້ມສັງຄົມສຶກສາ ສາສະໜາ ແລະ ວັດທະນະທໍາ ຊັ້ນປະຖົມປີທີ 2, ໜ້າ 3 ແລະ 13, ປີ 2551 (ປະເທດໄທ)

ສະໜັບສະໜູນການສ້າງຕົ້ນສະບັບ ໂດຍ ສູນການສຶກສາເພື່ອຄວາມເຂົ້າໃຈສາກົນໃນພາກພື້ນອາຊີ-ປາຊີຟິກ (APCEIU)

ສະໜັບສະໜູນການພິມໂດຍ..............................................

ພິມທີ່ໂຮງພິມ............................ພິມຄັ້ງທີ......... ຈຳນວນ................ຫົວ

ທະບຽນພິມເລກທີ.......................................

ຂະໜາດ 18x25 ຊມ

ສະຫງວນລິຂະສິດ